# ວັດທະນະທຳສັງຄົມລາວ - ອາຊຽນ

## ລະບົບ 12+2 ປີທີ 1













2020

# ວັດທະນະທຳສັງຄົມລາວ - ອາຊຽນ

**ສາຍສ້າງຄູອະນຸບານ**

| ລະບົບ 12+2 | ປີທີ 1 |
|---|---|


**ຮຽບຮຽງໂດຍ:**

ວັນຄຳ ຄຳມີໄຊ

ບຸນນຳ ຈິດທະປັນຍາ

**ກວດແກ້ໂດຍ:**

ຈັນທະລາ ອ່ອນນາວົງ

# ຄຳນຳ

ເພື່ອເປັນການສົ່ງເສີມວຽກງານການສຶກສາທາງດ້ານວັດທະນະທຳສັງຄົມລາວ ແລະ ອາຊຽນ ໃຫ້ມີຄວາມກ້ວາງຂວາງ ແລະ ແຜ່ຂະຫຍາຍອອກ. ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ຮຽບຮຽງປຶ້ມແບບຮຽນສະບັບນີ້ຂຶ້ນມາເພື່ອປະກອບເຂົ້າໃນການຮຽນ - ການສອນວິຊາ ວັດທະນະທຳສັງຄົມລາວ - ອາຊຽນ ລະບົບ 12+4 ສາຍຄູມັດທະຍົມ ເນື້ອໃນຂອງປຶ້ມເຫຼັ້ມນີ້ ໄດ້ຮຽບຮຽງຈາກເອກະສານຕ່າງໆ ຈາກປຶ້ມວັດທະນະທຳສັງຄົມລາວ - ອາຊຽນ ລະບົບ 11+3 , ແບບຮຽນວິຊາເທັກໂນໂລຢີການສຶກສາ, ເອກະສານກ່ຽວກັບອາຊຽນ ທີ່ເຫັນວ່າເໝາະສົມ ເພື່ອແນ່ໃສ່ເຮັດໃຫ້ນັກຮຽນຄູທີ່ຈົບຈາກສະຖາບັນສ້າງຄູມີຄວາມຮູ້ ແລະ ເຂົ້າໃຈກ່ຽວກັບຮີດຄອງປະເພນີລາວ, ຮູ້ຈັກປົກປັກຮັກສາວັດທະນະທຳອັນດີງາມຂອງລາວໄວ້ ແລະ ຮູ້ກ່ຽວກັບສັງຄົມໃນອາຊຽນປະຈຸບັນຢ່າງເລິກເຊິ່ງ ພ້ອມທັງມີຄວາມຮັບຜິດຊອບໃນການພັດທະນາອາຊີບຄູຂອງຕົນ.

ຫວັງວ່າ ປຶ້ມເຫຼັ້ມນີ້ ຄົງເປັນປະໂຫຍດ ແລະ ເປັນແນວທາງທີ່ດີສຳລັບການຮຽນ - ການສອນ ເຊິ່ງສາມາດນຳໄປມູນໃຊ້ເຂົ້າກັບການຮຽນ - ການສອນວິຊາອື່ນໆ ແລະ ສາມາດນຳໃຊ້ ເຂົ້າໃນຊີວິດປະຈຳວັນໄດ້.

ເຖິງຢ່າງໃດກໍຕາມ ໃນການຮຽບຮຽງຄັ້ງນີ້ກໍບໍ່ອາດປາສະຈາກຂໍ້ຂາດຕົກບົກຜ່ອງໄດ້ ແລະ ຫວັງວ່າບັນດາທ່ານ ຄົງຈະຊ່ວຍແກ້ໄຂປັບປຸງດ້ານຕ່າງໆໃຫ້ສົມບູນດີຂຶ້ນໃນຂັ້ນຕໍ່ໄປ.

# ສາລະບານ

ໜ້າທີ


**ບົດທີ 1 ປະຫວັດ ແລະ ຄວາມເປັນມາຂອງອາຊຽນ**

1 ປະຫວັດຄວາມເປັນມາຂອງອາຊຽນ ........ 6

2 ໂຄງຮ່າງການຈັດຕັ້ງຂອງອາຊຽນ ........ 10

3 ຖະແຫຼງການ - ສັນຍາ ........ 10

4 ບັນດາປະເທດສະມາຊິກອາຊຽນ ........ 12

**ບົດທີ 2 ມະໂນພາບກ່ຽວກັບວັດທະນະທຳລາວ ແລະ ອາຊຽນ**

1 ຄວາມສຳນຶກກ່ຽວກັບວັດທະນະທຳລາວ ແລະ ອາຊຽນ ........ 15

2 ປະເພດວັດທະນະທຳທີ່ຄົງຕົວໃນສັງຄົມລາວ ແລະ ອາຊຽນ ........ 15

3 ໂຄງສ້າງທາງດ້ານວັດທະນະທຳສັງຄົມລາວ ແລະ ອາຊຽນ ........ 16

**ບົດທີ 3 ປະເພນີລາວບູຮານ ແລະ ອາຊຽນ**

1 ຄວາມເປັນມາຂອງປະເພນີລາວ ແລະ ອາຊຽນ ........ 18

2 ຮີດຄອງປະເພນີລາວ ........ 19

**ບົດທີ 4 ມາລະຍາດໃນສັງຄົມຂອງລາວ ແລະ ອາຊຽນ**

1 ມາລະຍາດແມ່ນຫຍັງ? ........ 24

2 ມາລະຍາດໃນການທັກທາຍ ........ 24

3 ມາລະຍາດທາງດ້ານຈິດໃຈ ........ 25

4 ມາລະຍາດດ້ານການປະພຶດ ........ 26

5 ມາລະຍາດໃນການຕ້ອນຮັບແຂກ ........ 28

6 ມາລະຍາດໃນການສຳພັດມື ຈາມ ໄອ ຫາວ ........ 29

7 ມາລະຍາດໃນຫ້ອງການ ແລະ ຄອບຄົວ ........ 29

8 ມາລະຍາດທາງດ້ານຄຸນສົມບັດ ........ 30

**ບົດທີ 5 ການແຕ່ງກາຍ (ການນຸ່ງຫົ່ມຂອງສັງຄົມລາວ ແລະ ອາຊຽນ)**

1 ການແຕ່ງກາຍຂອງລາວ ........ 32

2 ການແຕ່ງກາຍຂອງຊາດຕ່າງໆໃນອາຊຽນ ........ 36

**ບົດທີ 6 ໜ້າທີ່ຂອງພົນລະເມືອງລາວຕໍ່ກັບວັດທະນະທຳ**

1 ໜ້າທີ່ການປົກປັກຮັກສາວັດທະນະທຳຮີດຄອງປະເພນີ ........ 39

2 ໜ້າທີ່ໃນການເສີມຂະຫຍາຍວັດທະນະທຳຮີດຄອງປະເພນີ ........ 40

3 ໜ້າທີ່ໃນການພັດທະນາວັດທະນະທຳ ........ 40

**ບົດທີ 7 ວັດທະນະທຳສັງຄົມລາວ ແລະ ອາຊຽນໃນປັດຈຸບັນ**

1 ລັກສະນະຂອງວັດທະນະທຳລາວ ........ 42

2 ວັດທະນະທຳຂອງຊາດອາຊຽນ ........ 45

3 ວັດທະນະທຳແບບປະສົມປະສານໃນອາຊຽນ ........ 46

**ບົດທີ 8 ການສຶກສາຂອງລາວ ແລະ ອາຊຽນ**

1 ການສຶກສາກັບການພັດທະນາຊັບພະຍາກອນມະນຸດ ........ 49

2 ການສຶກສາກັບການພັດທະນາເສດຖະກິດສັງຄົມ ........ 50

3 ການສຶກສາກັບການຂ່າວສານ ........ 50
4 ການຮ່ວມມືທາງດ້ານການສຶກສາສຳລັບຊາດອາຊຽນ........ 51
ບົດທີ 9 ການປ່ຽນແປງດ້ານຕ່າງໆ ຂອງສັງຄົມລາວທາງວັດທະນະທຳ
1 ການປ່ຽນແປງທາງດ້ານການສຶກສາ ........ 53
2 ການປ່ຽນແປງດ້ານສັງຄົມ ........ 54
3 ການປ່ຽນແປງດ້ານເສດຖະກິດ........ 55
4 ປະກົດການຫຍໍ້ທໍ້ຈາກການປ່ຽນແປງດ້ານຕ່າງໆ ........ 56
ບົດທີ 10 ການຮ່ວມມືພາຍໃນອາຊຽນ ແລະ ອາຊຽນກັບສາກົນ
1 ການຮ່ວມມືຂອງບັນດາປະເທດອາຊຽນ........ 59
2 ການແລກປ່ຽນວັດທະນະທຳ ........ 63
3 ການຮ່ວມມືກັບບັນດາປະເທດອາຊີຕາເວັນອອກ........ 64
4 ການຮ່ວມມືກັບປະເທດອື່ນໆ........ 65
ບົດທີ 11 ການພັດທະນາ ກັບ ວັດທະນະທຳປະເພນີ
1 ວິທະຍາສາດ ແລະ ເຕັກໂນໂລຊີ........ 69
2 ການພັດທະນາສັງຄົມ ........ 69
3 ວັດທະນະທຳ ແລະ ຂ່າວສານ........ 71
ບົດທີ 12 ຊີວິດທາງສາສະໜາທີ່ສຳຄັນໃນອາຊຽນ
1 ສາສະໜາພຸດ ........ 73
2 ສາສະໜາອິດສະລາມ ........ 75
3 ສາສະໜາຄຣິດ........ 77
ເອກະສານອ້າງອີງ ........ 75

# ບົດທີ 1

# ປະຫວັດ ແລະ ຄວາມເປັນມາຂອງອາຊຽນ

## 1 ປະຫວັດຄວາມເປັນມາຂອງອາຊຽນ

### 1.1 ກຸ່ມອາຊຽນ ຫຼື ເອີ້ນວ່າ ສາມະຄົມບັນດາປະຊາຊາດ ອາຊີຕາເວັນອອກສ່ຽງໃຕ້

ອົງການດັ່ງກ່າວໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 8 ສິງຫາ 1967 ທີ່ບາງກອກປະເທດໄທປະກອບມີ 5 ປະເທດເຂົ້າຮ່ວມຄື ໄທ, ມາເລເຊຍ, ອິນໂດເນເຊຍ, ສິງກະໂປ ແລະ ຟີລິບປິນ. ປະຈຸບັນມີ 10 ປະເທດເຂົ້າຮ່ວມຄື:

- ວັນທີ 8 ສິງຫາ ປີ ຄ.ສ 1984 ປະເທດ ບຣູນາຍ ໄດ້ເຂົ້າເປັນສະມາຊິກ
- ວັນທີ 8 ມັງກອນ ປີ ຄ. ສ 1995 ປະເທດ ຫວຽດນາມ ໄດ້ເຂົ້າເປັນສະມາຊິກ
- ວັນທີ 23 ກໍລະກົດ ປີ ຄ. ສ 1997 ປະເທດ ລາວ ໄດ້ເຂົ້າເປັນສະມາຊິກ
- ວັນທີ 23 ກໍລະກົດ ປີ ຄ. ສ 1997 ປະເທດ ມຽນມາ ໄດ້ເຂົ້າເປັນສະມາຊິກ
- ວັນທີ 28 ກໍລະກົດ ປີ ຄ. ສ 1999 ປະເທດ ກໍາປູເຈຍ ໄດ້ເຂົ້າເປັນສະມາຊິກ

### 1.2 ຈຸດປະສົງຂອງການສ້າງຕັ້ງອົງການອາຊີຕາເວັນອອກສ່ຽງໃຕ້ຂຶ້ນເພື່ອ:

- ເລັ່ງລັດໃນການຂະຫຍາຍຕົວທາງດ້ານເສດຖະກິດ - ສັງຄົມ ແລະ ການພັດທະນາທາງວັດທະນະທໍາໃນພາກພື້ນ.
- ເພື່ອດໍາລົງ ແລະ ຮັກສາໄວ້ຊຶ່ງສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ.
- ເພື່ອສົ່ງເສີມການຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ເປີດກວ້າງການ ຄ້າລະຫວ່າງ ປະເທດສະມາຊິກອາຊີຕາເວັນອອກສຽງໃຕ້ (ອາຊີອາຄະເນ) ແລະ ຮັກສາການຮ່ວມມືຢ່າງ ສະນິດແໜ້ນກັບອົງການລະຫວ່າງປະເທດ ແລະ ພາກພື້ນ.

ສະມາຄົມດັ່ງກ່າວນີ້ ຍັງໄດ້ຈັດຕັ້ງຄະນະກໍາມະການຖາວອນ ແລະ ຄະນະກໍາມະການພິເສດລວມມີ 13 ຄະນະຄື:

1) ຄະນະກໍາມະການຖາວອນ ວ່າດ້ວຍ ອາຫານ ແລະ ກະເສດ.
2) ຄະນະກໍາມະການຖາວອນ ວ່າດ້ວຍ ການຂົນສົ່ງສິນຄ້າທາງທະເລ.
3) ຄະນະກໍາມະການຖາວອນ ວ່າດ້ວຍ ການຂົນສົ່ງທາງອາກາດ ແລະ ພົນລະເຮືອນ.
4) ຄະນະກໍາມະການຖາວອນ ວ່າດ້ວຍ ການຂົນສົ່ງ ແລະ ໂທລະຄົມ ມະນາຄົມ.
5) ຄະນະກໍາມະການຖາວອນ ວ່າດ້ວຍ ການຄ້າ ແລະ ອຸດສາຫະກໍາ
6) ຄະນະກໍາມະການຖາວອນ ວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ.
7) ຄະນະກໍາມະການຖາວອນ ວ່າດ້ວຍ ກິດຈະກໍາສັງຄົມ ແລະ ວັດທະນະທໍາ.
8) ຄະນະກໍາມະການຖາວອນ ວ່າດ້ວຍ ການທ່ອງທ່ຽວ.
9) ຄະນະກໍາມະການຖາວອນ ວ່າດ້ວຍ ສື່ມວນຊົນ.
10) ຄະນະກໍາມະການຖາວອນ ວ່າດ້ວຍ ການຄັງ.
11) ຄະນະກໍາມະການຖາວອນ ວ່າດ້ວຍການຄົມມະນາຄົມການຈາລາຈອນທາງອາກາດ ແລະ ອຸຕຸນິຍົມ
12) ຄະນະກໍາມະການຖາວອນ ປະສານງານພິເສດ.
13) ຄະນະກໍາມະການຖາວອນ ພິເສດແຫ່ງທະນາຄານກາງ ແລະ ເຈົ້າໜ້າທີ່ການເງິນ.

**1.3 ນັບແຕ່ປີ ຄ.ສ 1967 ມາຈົນຮອດ ປີ ຄ.ສ 2017 ສະມາຄົມບັນດາປະຊາຊາດອາຊີຕາເວັນອອກສຽງໃຕ້ ໄດ້ຈັດກອງປະຊຸມສຸດຍອດອາຊຽນຂຶ້ນ ເຖິງ 30 ຄັ້ງ ຄື:**

- ກອງປະຊຸມສຸດຍອດອາຊຽນຄັ້ງປະຖົມມະລຶກໄດ້ຈັດຂຶ້ນ ທີ່ ເກາະບາຫຼີ ປະເທດອິນໂດເນເຊຍ ໃນວັນທີ 23 - 24 ກຸມພາ 1976 ເຊິ່ງໃນໂອກາດດັ່ງກ່າວປະເທດສະມາຊິກທັງ 5 ໄດ້ລົງນາມໃນ (ສົນທິສັນຍາໄມຕີຈິດ ແລະ ການຮ່ວມມືໃນອາຊີອາຄະເນ) ແລະ ໃນຖະແຫຼງການວ່າດ້ວຍຄວາມປອງດອງໃນອາຊຽນ, ທັງສອງເອກະສານໄດ້ບົ່ງເຖິງຈຸດປະສົງຂອງອາຊຽນ ແນ່ໃສ່ປົກປັກຮັກສາສັນຕິພາບ ແລະ ສະຖຽນລະພາບໃນພາກພື້ນ ຊຸກຍູ້ການເຕີບໂຕດ້ານເສດຖະກິດ - ສັງຄົມ ແລະ ເພີ່ມທະວີຄວາມປາຖະໜາຢາກ ຮ່ວມມືກັບທຸກປະຊາຊາດທີ່ຮັກຫອມສັນຕິພາບ, ກອງປະຊຸມດັ່ງກ່າວໄດ້ສ້າງ ຕັ້ງກອງເລຂາປະຈຳ ເຊິ່ງມີຂະໜາດກະທັດຮັດຂຶ້ນທີ່ຈາກາຕາ ປະເທດອິນໂດເນເຊຍ ເພື່ອເຮັດວຽກງານດ້ານບໍລິຫານ ແລະ ຊ່ວຍປະສານງານການເຄື່ອນໄຫວຕ່າງໆຂອງອາຊຽນ.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 2 ໄດ້ຖືກຈັດຂຶ້ນທີ່ ກົວລາລຳເປີ ປະເທດ ມາເລເຊຍໃນວັນທີ 4-5 ສິງຫາ 1977 ເພື່ອລະນຶກເຖິງວັນສ້າງຕັ້ງ ອາຊຽນຄົບຮອບ 10 ປີ ແລະ ຕີລາຄາຄວາມຄືບໜ້າໃນການຜັນຂະຫຍາຍມະຕິຕ່າງໆ.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 3 ໄດ້ຈັດຂຶ້ນທີ ມະນີລາ ປະເທດ ຟີລິບປິນ ໃນວັນທີ 14 -15 ທັນວາ 1987 ກອງປະຊຸມຄັ້ງນີ້ ໄດ້ມີການຊຸກຍູ້ການຮ່ວມມືທາງດ້ານເສດ ຖະກິດບັນດາປະເທດສະມາຊິກໄດ້ລົງນາມໃນຖະແຫຼງການທີ່ນະຄອນຫຼວງມະນີລາ ແລະ ໄດ້ສ້າງແຜນດຳເນີນງານຂອງອາຊຽນຂຶ້ນ, ໄດ້ມີການຮ່ວມລົງນາມໃນອະນຸສັນຍາດັດແກ້ ''ສົນທິຍັນຍາໄມຕຼີຈິດ ແລະ ການຮ່ວມມືໃນອາຊີອາຄະເນ'' ເພື່ອເປີດໂອກາດ ໃຫ້ບັນດາປະເທດທີ່ຢູ່ນອກພາກພື້ນອາຊຽນສາມາດເຂົ້າຮ່ວມເປັນພາຄີຂອງສົນທິສັນຍາດັ່ງກ່າວໄດ້.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 4 ໄດ້ຖືກຈັດຂຶ້ນທີ່ ສິງກະໂປ ໃນວັນທີ 27 - 29 ມັງກອນ 1992 ບັນດາຫົວໜ້າລັດຖະບານອາຊຽນໄດ້ຮ່ວມກັນລົງນາມໃນຖະແຫຼງການ ສິງກະໂປ 1992 ແລະ ໃນສັນ ຍາກອບ ເພື່ອເພີ່ມທະວີການຮ່ວມມືດ້ານເສດຖະກິດຂອງອາຊຽນ. ໜຶ່ງໃນຜົນສຳເລັດອັນສຳຄັນຂອງ ກອງປະຊຸມສຸດຍອດຄັ້ງນີ້ ແມ່ນການຕັດສິນໃຈສ້າງຕັ້ງ ''ເຂດການຄ້າເສລີອາຊຽນ'' ພາຍໃນກຳນົດ 15 ປີ. ບັນດາປະເທດສະມາຊິກໄດ້ຮ່ວມກັນລົງນາມໃນ ''ສັນຍາວ່າດ້ວຍອັດຕາພາສີຜ່ອນທີ່ຜົນບັງຄັບໃຊ້ຮ່ວມກັນ'' ເຊິ່ງແມ່ນເອກະສານຕົ້ນຕໍເພື່ອສ້າງຕັ້ງເຂດການຄ້າເສລີອາຊຽນ. ກອງປະຊຸມຍັງ ໄດ້ເພີ່ມທະວີບົດບາດຂອງເລຂາທິການໃຫ່ຍອາຊຽນ ແລະ ກຳນົດໜ້າທີ່ກອງ ເລຂາອາຊຽນໃຫ້ ກ້ວາງອອກກ່ວາເກົ່າ.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 5 ໄດ້ຖືກຈັດຂຶ້ນທີ່ ບາງກອກ ປະເທດໄທ ໃນວັນທີ 14 - 15 ທັນວາ 1995. ບັນດາຫົວໜ້າລັດຖະບານອາຊຽນໄດ້ອອກຖະແຫຼງການ ບາງກອກ ປີ 1995 ''ສະແດງຈຸດປະສົງຈະໃຫ້ທຸກປະເທດໃນອາຊີອາຄະເນ ເຂົ້າເປັນສະມາຊິກອາຊຽນກ້າວເຂົ້າສະຕະວັດທີ 21 ແລະ ຢືນຢັນຄວາມຕັດສິນໃຈຂອງບັນດາປະເທດສະມາຊິກທີ່ຈະເພີ່ມທະວີຮ່ວມມືດ້ານການເມືອງ - ເສດຖະກິດ ແລະ ວິຊາການ ໃນໂອກາດກອງປະຊຸມສຸດຍອດອາຊຽນຄັ້ງນີ້ ໄດ້ມີການພົບປະຄັ້ງ ປະຫັວດ ສາດລະ ຫວ່າງບັນດາປະມຸກລັດ ແລະ ຫົວໜ້າລັດຖະບານຂອງ 10 ປະເທດອາຊີອາຄະເນ ເຊິ່ງໄດ້ພ້ອມກັນລົງນາມໃນ "ສົນທິສັນຍາວ່າດ້ວຍເຂດປອດອາວຸດນິວເຄຼຍໃນອາຊີອາຄະເນ''.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 6 ໄດ້ຈັດຂຶ້ນຢູ່ທີ່ຮ່າໂນ້ຍ ສາທາລະນະລັດສັງຄົມນິຍົມຫວຽດນາມ ໃນວັນທີ 15-16 ທັນວາ 1998. ກອງປະຊຸມດັ່ງກ່າວໄດ້ຖະແຫຼງການຮ່າໂນ້ຍ ແລະ ແຜນການປະຕິບັດຮ່າໂນ້ຍ ເຊິ່ງໄດ້ເວົ້າເຖິງການລົງທຶນ ແລະ ນະໂຍບາຍອາຊຽນກ່ຽວກັບເລື່ອງຄວາມສະດວກສິນຄ້າ ແລະ ການປ່ຽນຖ່ຽວບິນຊົ່ວຄາວ, ການຕົກລົງເລື່ອງບໍລິການ ແລະ ການຮັບຮູ້ເຊິ່ງກັນ ແລະ ກັນ.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 7 ໄດ້ຖືກຈັດຂຶ້ນທີ່ເມືອງ ບານດາເຊຣີເບກາວັນປະເທດບຣູນາຍ (Bandar Ceri Begawan, Brunei) ໃນວັນທີ 5 - 6 ພະຈິກ 2001 ໃນວາລະດັ່ງກ່າວເພິ່ນໄດ້ຈັດ3ກອງປະຊຸມສຸດຍອດລວມທັງ "ASEAN + 1" ແລະ ກອງປະຊຸມ ''ASEAN + 3'' ຄັ້ງທີ 5 ຂຶ້ນ, ໄດ້ມີຖະແຫຼງການຮ່ວມກ່ຽວກັບໂລກເອດສ, ຖະແຫຼງການຮ່ວມກັນປະຕິບັດການຕ້ານການກໍ່ການຮ້າຍ ມີບົດລາຍງານຂອງກຸ່ມວິໄສທັດອາຊີຕາເວັນອອກ (East Asia Vision Group) ແລະ ນອກນີ້ກອງປະຊຸມຍັງໄດ້ສົ່ງເສີມການພົວພັນຮ່ວມມືທາງດ້ານເສດຖະກິດອາຊຽນ - ຈີນຢ່າງໃກ້ຊິດ.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 8 ຈັດຂຶ້ນທີ່ພະນົມເປັນ ປະເທດກຳປູເຈຍ. ໃນວັນທີ 4-5 ພະຈິກ 2002.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 9 ຈັດຂຶ້ນທີ່ ເກາະບາຫຼີ ປະເທດອິນໂດເນເຊຍ (Bali, Indonasia) ວັນທີ 7 - 8 ຕຸລາ 2003. ໃນກອງປະຊຸມດັ່ງກ່າວໄດ້ຈັດກອງປະຊຸມ "ASEAN+3" ຄັ້ງທີ 7 ຂຶ້ນ (ອາຊຽນ, ຈີນ, ຍີ່ປຸ່ນ ແລະ ເກົາຫຼີ) ນອກຈາກນີ້ກໍໄດ້ມີຖະແຫຼງການຮ່ວມ ແລະ ຂໍ້ຕົກລົງຮ່ວມກັນໂດຍສະເພາະລະຫວ່າງອາຊຽນກັບ ສ.ປ.ປ.ຈີນ, ຍີ່ປຸ່ນ, ເກົາຫຼີ ແລະ ອິນເດຍຕື່ມອີກ.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 10 ຈັດຂຶ້ນທີ່ວຽງຈັນ (ສ.ປ.ປ.ລາວ) ໃນລະຫວ່າງວັນທີ 29 - 30 ພະຈິກ 2004 ກອງປະຊຸມດັ່ງກ່າວໄດ້ປຶກສາຫາລືກ່ຽວກັບຄວາມໝັ້ນຄົງ, ຊຸມຊົນອາຊຽນ, ເສດຖະກິດສັງຄົມຊຸມຊົນອາຊຽນ, ການພັດທະນາກອງທຶນອາຊຽນ, ບັນຫາການຄ້າເສລີ, ການພົວພັນຮ່ວມມືລະຫວ່າງອາຊຽນກັບ ສ.ປ.ຈີນ, ອາຊຽນກັບ ຍີ່ປຸ່ນ, ອາຊຽນກັບ ອົດສະຕາລີ, ອາຊຽນກັບ ນິວຊີແລນ ແລະ ບັນຫາອື່ນໆໃນກອງປະຊຸມດັ່ງກ່າວເພິ່ນກໍໄດ້ເປີດກອງປະຊຸມ ASEAN+3 ຂຶ້ນຕື່ມອີກ.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 11 ຈັດຂຶ້ນທີ່ ກົວລາລຳເປີ ປະເທດມາເລເຊຍໃນລະຫວ່າງວັນທີ 12 - 14 ທັນວາ 2005.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 12 ຈັດຂຶ້ນທີ່ ເຊບູ ປະເທດຟີລິບປິນ ໃນລະຫວ່າງວັນທີ 11 - 14 ມັງກອນ 2007.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 13 ຈັດຂຶ້ນທີ່ ສິງກະໂປ ປະເທດສິງກະໂປ ໃນລະຫວ່າງວັນທີ 18 - 22 ພະຈິກ 2007.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 14 ຈັດຂຶ້ນທີ່ ຊະອຳ, ຫົວຫີນ ປະເທດໄທ ໃນລະຫວ່າງວັນທີ 27 ກຸມພາ - ວັນທີ 1 ມີນາ 2009 ແລະ 10 - 11 ເມສາ 2009. (ພັດທະຍາ)

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 15 ຈັດຂຶ້ນທີ່ ຊະອຳ, ຫົວຫີນ ປະເທດໄທ ໃນລະຫວ່າງວັນທີ 23 - 25 ຕຸລາ 2009.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 16 ຈັດຂຶ້ນທີ່ ຮ່າໂນ່ຍ ປະເທດຫວຽດນາມ ໃນລະຫວ່າງວັນທີ 8 - 9 ເມສາ 2010.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 17 ຈັດຂຶ້ນທີ່ ຮ່າໂນ່ຍ ປະເທດຫວຽດນາມ ໃນລະຫວ່າງວັນທີ 28 - 31 ຕຸລາ 2010.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 18 ຈັດຂຶ້ນທີ່ ຈາກາຕ້າ ປະເທດອິນໂດເນເຊຍ ໃນລະຫວ່າງ ວັນທີ 7 - 8 ພຶດສະພາ 2011.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 19 ຈັດຂຶ້ນທີ່ ບາຫລີ ປະເທດອິນໂດເນເຊຍ ໃນລະຫວ່າງວັນທີ 14 - 19 ພຶດສະພາ 2011.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 20 ຈັດຂຶ້ນທີ່ ພະນົມເປັນ ປະເທດກຳປູເຈຍ ໃນລະຫວ່າງວັນທີ

3 - 4 ເມສາ 2012.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 21 ຈັດຂຶ້ນທີ່ ພະນົມເປັນ ປະເທດກຳປູເຈຍ ໃນລະຫວ່າງວັນທີ 17 - 20 ພະຈິກ 2012.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 22 ຈັດຂຶ້ນທີ່ ບັນດາເຊີລີເບກາວັນ ປະເທດບຣູນາຍ ໃນລະຫວ່າງວັນທີ 24 - 25 ເມສາ 2013.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 23 ຈັດຂຶ້ນທີ່ ບັນດາເຊີລີເບກາວັນ ປະເທດບຣູນາຍ ໃນລະຫວ່າງວັນທີ 9 - 10 ຕຸລາ 2013.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 24 ຈັດຂຶ້ນທີ່ ກຸງເນປີດໍ່ ປະເທດພະມ້າ ໃນລະຫວ່າງວັນທີ 10 - 11 ພຶດສະພາ 2014.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 25 ຈັດຂຶ້ນທີ່ ກຸງເນປີດໍ່ ປະເທດພະມ້າ ໃນລະຫວ່າງວັນທີ 10 - 12 ພະຈິກ 2014.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 26 ຈັດຂຶ້ນທີ່ ກົວລາລຳເປີ, ເກາະລັງກາວີ ປະເທດມາເລເຊຍ ໃນລະຫວ່າງວັນທີ 26-27 ເມສາ 2015.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 27 ຈັດຂຶ້ນທີ່ ກົວລາລຳເປີ ປະເທດມາເລເຊຍ ໃນລະຫວ່າງວັນທີ 18 - 22 ພະຈິກ 2015.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 28 ຈັດຂຶ້ນທີ່ ວຽງຈັນ ປະເທດລາວ ໃນລະຫວ່າງວັນທີ 6 - 8 ກັນຍາ 2016.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 29 ຈັດຂຶ້ນທີ່ ວຽງຈັນ ປະເທດລາວ ໃນລະຫວ່າງວັນທີ 6 - 8 ກັນຍາ 2016.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 30 ຈັດຂຶ້ນທີ່ ມະນີລາ ປະເທດຟີລິບປິນ ໃນລະຫວ່າງວັນທີ 26 - 27 ເມສາ 2017.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 31 ຈັດຂຶ້ນທີ່ ປາໄຊ ປະເທດຟີລິບປິນ ໃນລະຫວ່າງວັນທີ 10-14 ພະຈິກ 2017.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 32 ຈັດຂຶ້ນທີ່ ສິງຄະໂປ ປະເທດ ສິງຄະໂປ ໃນລະຫວ່າງວັນທີ 25 - 28 ເມສາ 2018

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 33 ຈັດຂຶ້ນທີ່ ສິງຄະໂປ ປະເທດ ສິງຄະໂປ ໃນລະຫວ່າງວັນທີ 11 – 15 ພະຈິກ 2018.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 34 ຈັດຂຶ້ນທີ່ ກຸງເທບ ປະເທດ ໄທ ໃນລະຫວ່າງວັນທີ 20 - 23 ມິຖຸນາ 2019

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 35 ຈັດຂຶ້ນທີ່ ກຸງເທບ ປະເທດ ໄທ ໃນລະຫວ່າງວັນທີ 31 ຕຸລາ - 4 ພະຈິກ 2019

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ ພິເສດ ຈັດຂຶ້ນ ໃນວັນທີ 14 ເມສາ 2020 ປະຊຸມທາງໄກຜ່ານວີດີທັດ.

- ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 36 ຈັດຂຶ້ນ ໃນວັນທີ 26 ມິຖຸນາ 2020 ປະຊຸມທາງໄກຜ່ານວີດີທັດ.

## 2 ໂຄງຮ່າງການຈັດຕັ້ງຂອງອາຊຽນ

### ລະບົບການຈັດຕັ້ງຂອງສະມາຄົມປະຊາຊາດອາຊຽນປະກອບມີດັ່ງຕໍ່ໄປນີ້:

### 2.1 ຫົວໜ້າລັດຖະບານອາຊຽນ

ເປັນອົງການທີ່ມີອຳນາດສູງສຸດຂອງອາຊຽນ ແລະ ມີການປະຊຸມນຳກັນຢ່າງເປັນທາງການທຸກໆ 3 ປີ ແລະ ບໍ່ເປັນທາງການຢ່າງໜ້ອຍ 1 ຄັ້ງ ເພື່ອວາງທິດທາງ ແລະ ແຜນການເຄື່ອນໄຫວຂອງອາຊຽນ.

### 2.2 ເລຂາທິການໃຫຍ່

ມີຖານະຕຳແໜ່ງທຽບເທົ່າລັດຖະມົນຕີ, ມີໜ້າທີ່ແນະນຳ, ສົມທົບຜັນຂະຫຍາຍການເຄື່ອນໄຫວຂອງອາຊຽນ ແລະ ຮັບຜິດຊອບຕໍ່ກອງປະຊຸມບັນດາຫົວໜ້າລັດຖະບານ ແລະ ກອງປະຊຸມລັດຖະມູນຕີອາຊຽນ ຕະຫຼອດໄລຍະກອງປະຊຸມລັດຖະມົນຕີອາຊຽນ ຕະຫຼອດໄລຍະກອງປະຊຸມຂອງຄະນະປະຈຳອາຊຽນ.

ເລຂາທິການໃຫ່ຍຄົນປັດຈຸບັນຊື່ວ່າ ທ່ານ ເລເຫຼືອງມິງ ເປັນຄົນປະເທດຫວຽດນາມ, ທ່ານດຳລົງຕຳແໜ່ງໃນວັນທີ 1 ມັງກອນ 2013, ແຕ່ກ່ອນແມ່ນທ່ານ ໂຣໂດນໂຊ ຊີວີຣີໂນ (Rodolso Seveino) ເຂົ້າຮັບຕໍ່ແໜ່ງໃນວັນທີ 1 ມັງກອນ 1998 - 31 ທັນວາ 2002, ເປັນຄົນປະເທດ ຟີລິບປິນ ແລະ ທ່ານ ອົງເກັງຢອງ (Ong Keng Yong) ເຂົ້າຮັບຕຳແໜ່ງໃນວັນທີ 1 ມັງກອນ 2003, ເປັນຄົນປະເທດ ສິງກະໂປ.

### 2.3 ຄະນະປະຈຳອາຊຽນ

ແມ່ນອົງການປະຕິບັດນະໂຍບາຍ ແລະ ປະສານງານຂອງອາຊຽນ, ມີໜ້າທີ່ລາຍງານໂດຍກົງຕໍ່ກອງປະຊຸມບັນດາລັດຖະມົນຕີການຕ່າງປະເທດເຊິ່ງແມ່ນລັດຖະມົນຕີການຕ່າງປະເທດເຈົ້າພາບຈັດກອງປະຊຸມ. ນອກຈາກນີ້ຍັງມີໜ້າທີ່ທົບທວນວຽກງານຂອງຄະນະກຳມະການ ແນໃສ່ຜັນຂະຫຍາຍທິດທາງນະໂຍບາຍທີ່ກອງປະຊຸມບັນດາລັດຖະມົນຕີການຕ່າງປະເທດວາງອອກ.

### 2.4 ກອງເລຂາອາຊຽນ

ກອງເລຂາອາຊຽນໄດ້ຖືກສ້າງຕັ້ງຂຶ້ນຕາມສັນຍາທີ່ໄດ້ລົງນາມກັນ ໂດຍບັນດາລັດຖະມົນຕີການຕ່າງປະເທດອາຊຽນໃນກອງປະຊຸມສຸດຍອດບາຫຼີ ປີ 1976 ເພື່ອເພີ່ມທະວີການປະສານສົມທົ ແລະ ການຜັນຂະຫຍາຍນະໂຍບາຍໂຄງການ ແລະການເຄື່ອນໄຫວຂອງໜ່ວຍງານຕ່າງໆຂອງອາຊຽນ ແລະ ກອງເລຂາອາຊຽນໄດ້ມີການປັບປຸງໜ້າວຽກ ແລະ ຜັນຂະຫຍາຍວຽກງານໃຫ້ດີກ່ວາ.

### 2.5 ກອງເລຂາອາຊຽນແຫ່ງຊາດ

ແຕ່ລະປະເທດອາຊຽນມີກອງເລຂາແຫ່ງຊາດ ສັງກັດໃນກະຊວງການຕ່າງປະເທດມີໜ້າທີ່ຈັດຕັ້ງ ແລະ ຜັນ ຂະຫຍາຍການເຄື່ອນໄຫວວຽກງານພົວພັນກັບອາຊຽນໃນລະດັບປະເທດມີຕຳແໜ່ງເປັນຫົວໜ້າ.

## 3 ຖະແຫຼງການ - ສັນຍາ

ນັບແຕ່ມື້ແຕ່ງຕັ້ງຂຶ້ນມາຈົນຮອດປີ ຄ.ສ 2005 ສະມາຄົມອາຊຽນໄດ້ມີຖະແຫຼງການ ແລະ ສັນຍາຫຼາຍສະບັບເຊັ່ນ ຖະແຫຼງການບາງກອກ ໃນວັນທີ 8 ສິງຫາ ຄ.ສ 1967 ວ່າດ້ວຍການສ້າງຕັ້ງສະ ມາຄົມອາຊຽນ,ຖະແຫຼງການກົວລາລຳເປີ ໃນວັນທີ 27 ພະຈິກ 1971 ວ່າດ້ວຍເຂດສັນຕິພາບ,ອິດສະລະພາບ ແລະ ເປັນກາງ, ຖະແຫຼງການທີ່ ເກາະບາຫຼີ ໃນ ວັນທີ 24 ກຸມພາ ຄ.ສ 1976 ວ່າດ້ວຍຄວາມປອງດອງອາຊຽນ, ຖະແຫຼງການມະນີລາ ໃນວັນທີ່ 25 ທັນວາ ຄ.ສ 1987 ວ່າດ້ວຍການຢັ້ງຢືນຕໍ່ ,ຖະແຫຼງການວ່າດ້ວຍຄວາມປອງດອງ ກ່ຽວກັບບັນດາປະຊາຊາດຂອງອາຊຽນ,ຖະແຫຼງການເຂດສັນຕິພາບ, ຖະແຫຼງການສິງ ກະໂປ ໃນວັນທີ 28 ມັງກອນ ຄ.ສ 1992 ວ່າດ້ວຍການຮ່ວມມືທາງດ້ານການເມືອງ ແລະ ຄວາມ

ໝັ້ນຄົງຂອງອາຊຽນ, ຖະແຫຼ່ງການບາງກອກ 1995 ວ່າດ້ວຍຈຸດປະສົງ ການເຂົ້າເປັນສະມາຊິກອາຊຽນຂອງທຸກປະເທດໃນອາຊີອາຄະເນ (ອາຊີຕາເວັນອອກສຽງໃຕ້) ກ່ອນສະຕະວັດທີ 21 ແລະ ຖະແຫຼ່ງການອື່ນໆອີກໃນຕໍ່ມາ.

**ສັນຍາຂອງສະມາຄົມອາຊຽນປະກອບມີຄື** ສົນທິສັນຍາທີ່ເກາະບາຫຼີ ໃນວັນທີ່ 24 ກຸມພາ ຄ.ສ 1976 ເອີ້ນວ່າ ສົນທິສັນຍາໄມຕີຣຈິດ ແລະ ການຮ່ວມມືໃນອາຊີອາຄະເນ ອະນຸສັນຍາມະນິລາ ວັນທີ 15 ທັນວາ ຄ.ສ 1987 ວ່າດ້ວຍອະນຸສັນຍາດັດແກ້ສົນທິສັນຍາໄມຕຣີຈິດ ແລະ ການຮ່ວມມືໃນອາຊີອາຄະເນ ສົນທິສັນຍາ ຄ.ສ1995 ວ່າດ້ວຍເຂດປອດອາວຸດນິວເຄຼຍໃນອາຊີອາຄະເນ ແລະ ອື່ນໆ

**ຕົວຢ່າງ: ຖະແຫຼງການບາງກອກ ປີ 1967**

1) ສ້າງຕັ້ງສະມາຄົມເພື່ອການຮ່ວມມືໃນພາກພື້ນອາຊີອາຄະເນ (ອາຊີຕາເວັນອອກສ່ຽງໃຕ້)

2) ຈຸດປະສົງ ແລະ ເປົ້າໝາຍຂອງສະມາຄົມເລັ່ງໃສ່ການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຂະຫຍາຍຕົວທາງດ້ານວັດທະນະທຳ ແລະຄວາມກ້າວໜ້າທາງສັງຄົມ

ສົ່ງເສີມສັນຕິພາບສະຖຽນລະພາບ ໃນພາກພື້ນເຄົາລົບນັບຖືຄວາມຍຸດຕິທຳ ແລະ ການປົກຄອງດ້ວຍກົດໝາຍ ການພົວພັນລະຫວ່າງຊາດ ພ້ອມທັງເຄົາລົບນັບຖືຫຼັກການກົດບັດສະຫະປະຊາຊາດ.

- ສົ່ງເສີມການຮ່ວມມື ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນມີຜົນປະໂຫຍດຮ່ວມກັນ ທາງດ້ານເສດຖະກິດສັງຄົມ, ວັດທະນະທຳ, ເຕັກນິກ, ວິທະຍາສາດ ແລະ ການປົກຄອງ

- ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນຮູບແບບການເຝິກອົບຮົມ ແລະ ຄົ້ນຄ້ວາໃນຂົງເຂດການສຶກສາວິຊາຊີບເຕັກນິກ ແລະ ການປົກຄອງ

- ການຮ່ວມມືໃຫ້ມີປະສິດທິຜົນຍິ່ງຂຶ້ນໃນການນຳໃຊ້ກະສິກຳ ແລະ ອຸດສາຫະກຳຂອງຕົນເພື່ອຂະຫຍາຍການຄ້າ, ການຄົ້ນຄ້ວາການແລກປ່ຽນສິນຄ້າລະຫວ່າງປະເທດ, ການປັບປຸງເງື່ອນໄຂຂົນສົ່ງຄົມມະນາຄົມໃນການຍົກມາດຕະຖານຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ

- ເພື່ອສົ່ງເສີມການຄົ້ນຄ້ວາກ່ຽວກັບອາຊີອາຄະເນ

- ເພື່ອຮັກສາການຮ່ວມມືອັນໃກ້ຊິດການຮ່ວມມືກັບສາກົນ ແລະ ອົງການຈັດຕັ້ງໃນພາກພື້ນມີ ຈຸດປະສົງ ແລະ ເປົ້າໝາຍຄ້າຍຄືກັນ ແລະ ຊອກຫາຊ່ອງທາງ ເພື່ອເຮັດໃຫ້ການຮ່ວມມືກັນ ລະຫວ່າງຊາດໃກ້ຊິດກັນຍິ່ງຂຶ້ນ

3) ກົນໄກ ແລະ ວິທີການຈັດຕັ້ງເພື່ອບັນລຸຈຸດປະສົງ ແລະ ເປົ້າໝາຍຂອງສະມາຄົມ

- ກອງປະຊຸມປະຈຳປີຂອງບັນດາລັດຖະມົນຕີການຕ່າງປະເທດ ໂດຍຜັດປ່ຽນກັນເປັນເຈົ້າພາບ ເອີ້ນວ່າ ກອງປະຊຸມລັດຖະມົນຕີອາຊຽນ ຖ້າຫາກມີຄວາມຈຳເປັນກໍເປີດ ກອງປະຊຸມວິສາມັນຂອງລັດຖະ ມົນຕີການຕ່າງປະເທດກໍໄດ້.

- ຄະນະປະຈຳພາຍໃຕ້ການເປັນປະທານ ຂອງລັດຖະມົນຕີການຕ່າງປະເທດ ຂອງປະເທດເຈົ້າພາບ ຫຼືຜູ້ຕາງໜ້າຂອງຜູ້ກ່ຽວຂ້ອງ ແລະ ສະມາຊິກຂອງຄະນະປະຈຳປະກອບດ້ວຍບັນທູດຂອງປະເທດສະມາຊິກອື່ນໆທີ່ປະຈຳຢູ່ປະເທດເຈົ້າພາບ ເພື່ອຮັບຜິດຊອບວຽກງານຂອງສະມາຄົມ ໃນລະຫວ່າງກາງສະໄໝຂອງກອງປະຊຸມລັດຖະມົນຕີການຕ່າງປະເທດ

- ຄະນະກຳມະການສະເພາະກິດ ແລະ ຄະນະກຳມະການຖາວອນປະກອບດ້ວຍບັນດາວິຊາການ ແລະ ເຈົ້າໜ້າທີ່ແຕ່ລະວຽກ.

- ກອງເລຂາອາຊຽນແຫ່ງຊາດໃນແຕ່ລະປະເທດໃນແຕ່ລະປະເທດສະມາຊິກ ເພື່ອວຽກຂອງສະມາຄົມໂດຍ ຕາງໜ້າປະເທດຕົນ ແລະ ຮັບໃຊ້ກອງປະຊຸມປະຈຳປີ ຫຼື ກອງປະຊຸມວິສາມັນຂອງບັນດາລັດຖະມົນຕີການຕ່າງປະເທດ ຂອງກອງປະຊຸມປະຈຳ ແລະ ກອງປະຊຸມຄະນະກຳມະການອາດຈະສ້າງຕັ້ງຂຶ້ນ.

4) ສະມາຄົມແມ່ນເປີດໃຫ້ທຸກປະເທດ ໃນພາກພື້ນອາຊີອາຄະເນ ທີ່ມີຄວາມເຫັນດີເຫັນພ້ອມກັບຈຸດປະສົງຫຼັກການ ແລະ ເປົ້າໝາຍທີ່ກ່າວມາຂ້າງເທິງ ນັ້ນເຂົ້າເປັນສະມາຊິກໄດ້.

5) ສະມາຄົມໄດ້ສະແດງເຖິງເຈດຕະນາລວມຂອງບັນດາປະຊາຊາດອາຊີອາຄະເນ ທີ່ຈະຜູກພັນໃນມິດຕະ ພາບການຮ່ວມມື ໂດຍຜ່ານຄວາມພະຍາຍາມ ແລະການ ເສຍສະຫຼະຮ່ວມກັນ ເພື່ອຄໍ້າປະກັນ ໝາກຜົນແຫ່ງສັນຕິພາບ ອິດສະຫຼະພາບ ແລະ ວັດທະນາຖາວອນສໍາລັບປະຊາຊົນ ແລະ ລຸ້ນຄົນຕໍ່ໄປຂອງຕົນ.

# 4 ບັນດາປະເທດສະມາຊິກອາຊຽນ

## 4.1 ເນກາຣາບຣູນາຍ ດາຣຸສຊາຣາມ (BRUNEI)

| | |
|---|---|
| ນະຄອນຫຼວງ | ບານດາເຊຣີເບກາວັນ (BAIGAVANE) |
| ພື້ນທີ່ປະເທດ | 5770 ໂລແມັດມົນທົນ |
| ພົນລະເມືອງ | 350898 ຄົນ 2002 , 423,196 ຄົນ (2020) |
| ພາສາກາງ | ມາເລ |
| ຫົວໜ່ວຍເງິນຕາປະຈໍາຊາດ | ໂດລາບຣູນາຍ Bruneian dollar (BND) |
| ສິນຄ້າສົ່ງອອກຕົ້ນຕໍ | ນໍ້າມັນ, ອາຍແກັດສ໌ທໍາມະຊາດ |

## 4.2 ອິນໂດເນເຊຍ (INDONESIA)

| | |
|---|---|
| ນະຄອນຫຼວງ | ຈາກາຕາ (JAKARTA) |
| ພື້ນທີ່ປະເທດ | 1.904.569 ກິໂລແມັດມົນທົນ |
| ພົນລະເມືອງ | 245.452.739 ຄົນ (2007), 261,115,456 ຄົນ (2020) |
| ພາສາທາງການ | ພາສາບາຮາຊາອິນໂດເນເຊຍ |
| ຫົວໜ່ວຍເງິນຕາປະຈໍາຊາດ | ຣູເປຍ Indonesia rupiah (RP) |
| ສິນຄ້າສົ່ງອອກຕົ້ນຕໍ | ນໍ້າມັນອາຍແກັດສ໌, ຜະລິດຕະພັນຈາກໄມ້ ແລະ ແຜ່ນແພ |

## 4.3 ສ.ປ.ປ.ລາວ (LAO-PDR)

| | |
|---|---|
| ນະຄອນຫຼວງ | ວຽງຈັນ (Veintiane) |
| ພື້ນທີ່ປະເທດ | 236.800ກິໂລແມັດມົນທົນ |
| ພົນລະເມືອງ | 5.621.981 ຄົນ(2005), 6,758,353 ຄົນ (2020) |
| ພາສາທາງການ | ພາສາລາວ |
| ຫົວໜ່ວຍເງິນຕາປະຈໍາຊາດ | ກີບ Kip ຫຼື (K) |
| ສິນຄ້າສົ່ງອອກຕົ້ນຕໍ | ເຄື່ອງນຸ່ງຫົ່ມ, ແຜ່ນແພ, ກະແສໄຟຟ້າ, ໄມ້ທ່ອນ, ໄມ້ອັດ, ກາເຟ |

## 4.4 ມາເລເຊຍ (MALAYSIA)

| | |
|---|---|
| ນະຄອນຫຼວງ | ກົວລາລໍາເປີ (KUALUMPUR) |
| ພື້ນທີ່ປະເທດ | 329.758 ກິໂລແມັດມົນທົນ |
| ພົນລະເມືອ | 23.400.000 ຄົນ 2005, 31,187,265 ຄົນ (2020) |
| ພາສາທາງການ | ພາສາມາເລເຊຍ |
| ຫົວໜ່ວຍເງິນຕາປະຈໍາຊາດ | ຣິງກິດມາເລເຊຍ Ringgit (Myr) |
| ສິ້ນຄ້າສົ່ງອອກຕົ້ນຕໍ | ນໍ້າມັນປາມ, ນໍ້າມັນດິບ, ຜະລິດຕະພັນເຄື່ອງໄຟຟ້າ ແລະ ເອເລັກໂຕຣນິກ |

## 4.5 ມຽນມາ (MYANMAR)

ນະຄອນຫຼວງ ຢາງກຸ້ງ (yang koung)

ພື້ນທີ່ປະເທດ 678.500 ກິໂລແມັດມົນທົນ

ພົນລະເມືອງ 50.519.000 ຄົນ (2005), 52,885,223 ຄົນ (2020)

ພາສາທາງການ ມຽນມາ

ຫົວໜ່ວຍເງິນຕາປະຈຳຊາດ ຢັດ (Kyat)

ສິນຄ້າສົ່ງອອກຕົ້ນຕໍ ຜະລິດຕະພັນກະສິກຳ ແລະ ຈາກທະເລ, ໄມ້ທ່ອນ, ແຮ່ທາດ, ເພັດພອຍ, ການຄ້າຊາຍແດນ

## 4.6 ຟີລິບປິນ (PHILIPPINES - MANILA)

ນະຄອນຫຼວງ ມະນິລາ (MANIELA)

ພື້ນທີ່ປະເທດ 300.000 ກິໂລແມັດມົນທົນ

ພົນລະເມືອງ 87.000.000 ຄົນ (2003), 103,320,222 ຄົນ (2020)

ພາສາທາງການ ພາສາຟີລິບປິນໂນ ແລະ ພາສາອັງກິດ

ຫົວໜ່ວຍເງິນຕາປະຈຳຊາດ ເປໂຊຟີລິບປິນ Philippine peso

ສິ້ນຄ້າສົ່ງອອກຕົ້ນຕໍ ເຄື່ອງນຸ່ງ, ຜະລິດຕະພັນປະເພດສີ່ໄຟຟ້າ, ຜະລິດຕະພັນອຸດສາຫະກຳເອເລັກໂຕຣນິກ ແລະ ນ້ຳມັນໝາກພ້າວດິບ.

## 4.7 ສິງກະໂປ (SINGAPORE)

ນະຄອນຫຼວງ ສິງກະໂປ (SINGAPORE)

ພື້ນທີ່ປະເທດ 699 ກິໂລແມັດມົນທົນ

ພົນລະເມືອງ 4.492.150 ຄົນ (2006), 5,607,283 ຄົນ (2020)

ພາສາທາງກາງ ເມເລ, ຈີນກາງ, ຕາມິນ ແລະ ອັງກິດ

ຫົວໜ່ວຍເງິນຕາປະຈຳຊາດ ໂດລາສິງກະໂປ Singapore Dollar

ສິ້ນຄ້າສົ່ງອອກຕົ້ນຕໍ ເຄື່ອງໃຊ້ໄຟຟ້າ, ເຄື່ອງກົນຈັກ, ເຄື່ອງປະກອບ, ນ້ຳມັນເຊື້ອໄຟ

## 4.8 ໄທ (THAILANDE)

ນະຄອນຫຼວງ ບາງກອກ (BANKOK)

ພື້ນທີ່ປະເທດ 513.115 ກິໂລແມັດມົນທົນ

ພົນລະເມືອງ 65.450.000 ຄົນ (2005), 68,863,514 ຄົນ (2020)

ພາສາທາງການ ພາສາໄທ

ຫົວໜ່ວຍເງິນຕາປະຈຳຊາດ ບາດ (Bath)

ສິ້ນຄ້າສົ່ງອອກຕົ້ນຕໍ ຜະລິດຕະພັນ, ແຜ່ນແພ, ເຄື່ອງໃຊ້ໄຟຟ້າ, ຄອມພິວເຕີ.

## 4.9 ຫວຽດນາມ (VIETNAM)

ນະຄອນຫຼວງ ຮ່າໂນ້ຍ (HANOI)

ພື້ນທີ່ປະເທດ 331.689 ໂລແມັດມົນທົນ

ພົນລະເມືອງ 82.5 ລ້ານຄົນ (2003), 94,569,072 ຄົນ (2020)

ພາສາທາງການ ຫວຽດນາມ

ຫົວໜ່ວຍເງິນຕາປະຈຳຊາດ ດົງ (Dong)

ສິ້ນຄ້າສົ່ງອອກຕົ້ນຕໍ ເຂົ້າ, ນ້ຳມັນດິບ, ກຸ້ງ, ແຜ່ນແພ, ກາເຟ, ຢາງພາລາ ແລະ ເຄື່ອງນຸ່ງ.

## 4.10 ກໍາປູເຈຍ (CAMBODIA)

| | |
|---|---|
| ນະຄອນຫຼວງ | ພະນົມເປັນ (phanompen) |
| ພື້ນທີ່ປະເທດ | 181.040 ໂລແມັດມົນທົນ |
| ພົນລະເມືອງ | 12.200.000 ຄົນ (2003), 15,762,370 ຄົນ (2020) |
| ພາສາທາງການ | ຂະເໝນ |
| ຫົວໜ່ວຍເງິນຕາປະຈໍາຊາດ | ຫລຽນ (Riel) |
| ສິ້ນຄ້າສົ່ງອອກຕົ້ນຕໍ | ໄມ້ທ່ອນ, ຢາງພາລາ, ຜະລິດຕະພັນກະສິກໍາ, ຜະລິດຕະພັນ |

ຈາກເຜັດພອຍ.

**ຄໍາຖາມ:**

1. ກຸ່ມອາຊຽນມີຄວາມເປັນມາແນວໃດ ແລະ ມີສະມາຊິກທັງໝົດຈັກປະເທດ ປະເທດໃດແດ່?
2. ລະບົບການຈັດຕັ້ງຂອງອາຊຽນປະກອບມີພາກສ່ວນໃດແດ່?
3. ບັນດາຖະແຫຼງການ ແລະ ສັນຍາແຕ່ລະຄັ້ງມີແນວໃດ?

# ບົດທີ 2

## ມະໂນພາບກ່ຽວກັບວັດທະນະທຳລາວ ແລະ ອາຊຽນ

## 1 ຄວາມສຳນຶກກ່ຽວກັບວັດທະນະທຳລາວ ແລະ ອາຊຽນ

ວັດທະນະທຳ ແມ່ນຄຸນຄ່າອັນລວມຍອດຂອງບັນດາຜະລິດຕະພັນທາງດ້ານວັດຖຸ ແລະ ຈິດໃຈທີ່ມະນຸດສາມາດສ້າງຂຶ້ນມາໄດ້ໃນຂະບວນວິວັດຂອງປະເທດຊາດ ແລະ ມີພາລະບົດບາດອັນສຳຄັນໃນການປະກອບສ້າງຄົນໃຫ້ກາຍເປັນຄົນກ້າວໜ້າສີວິໄລ

ວັດທະນະທຳ ແລະ ມໍລະດົກວັດທະນະທຳຂອງບັນດາປະເທດສະມາຊິກອາຊຽນ “ວັດທະນະທຳ” ໝາຍເຖິງສິ່ງປະກອບທັງໝົດຂອງບັນດາລັກສະນະສະເພາະທາງຈິດໃຈ, ສະຕິປັນຍາ, ຄວາມຮູ້ສຶກ ແລະ ວັດຖຸທີ່ເປັນເອກະລັກໃຫ້ແກ່ສັງຄົມ ຫຼື ກຸ່ມຄົນສັງຄົມໃດໜຶ່ງ, ມັນປະກອບດ້ວຍສິລະປະ, ວັນນະຄະດີ, ແບບແຜນການດຳລົງຊີວິດ, ລະບົບຄຸນຄ່າ, ຫົວຄິດປະດິດສ້າງ, ລະບົບພູມປັນຍາ, ປະເພນີ ແລະ ຄວາມເຊື່ອຖື.

- **ມໍລະດົກວັດທະນະທຳໝາຍເຖິງ:**

- ບັນດາຄຸນຄ່າ ແລະ ຄວາມຄິດທີ່ສຳຄັນທາງດ້ານວັດທະນະທຳ.
- ບັນດາສິ່ງທີ່ກໍ່ສ້າງ ແລະ ວັດຖຸບູຮານ, ເຮືອນຢູ່, ຫໍໂຮງ, ບ່ອນປະຕິບັດທຳຄວາມເຊື່ອຖື, ສິ່ງກໍ່ສ້າງເພື່ອເປັນບ່ອນເຮັດວຽກ, ຜົນງານດ້ານຫັດຖະກຳ... (ການໄປຊົມສິລະປະ) ເຄື່ອງໃຊ້ທີ່ມີຄວາມໝາຍທາງດ້ານປະຫວັດສາດ, ສູນທອນສາດ ແລະ ວິທະຍາສາດ.
- ບູຮານສະຖານ ແລະ ບ່ອນຢູ່ຂອງມະນຸດ, ສິ່ງທີ່ຄົນເຮົາສ້າງຂຶ້ນ ຫຼື ທຳມະຊາດ ແລະ ຄົນສ້າງປະສົມປະສານກັນ, ແຫຼ່ງບູຮານຄະດີ ແລະ ສະຖານທີ່ພັກພາອາໄສຂອງຄົນທີ່ມີຄຸນຄ່າສູງໃນແງ່ປະຫວັດສາດ, ສູນທອນສາດ, ມະນຸດວິທະຍາ ແລະ ສິ່ງແວດລ້ອມ ເພາະວ່າສະຖານທີ່ດັ່ງກ່າວມີລັກສະນະທຳມະຊາດພິເສດ, ມີຄວາມສຳຄັນໃຫຍ່ຫຼວງ ເຊັ່ນ ເປັນສະຖານວັດທະນະທຳຍັງລອດເຫຼືອ ແລະ ບ່ອນທີ່ມີເອກະລັກຂອງປະເພນີສະເພາະທີ່ຍັງປະຕິບັດກັນຢູ່.
- ມໍລະດົກພື້ນເມືອງ ຫຼື ທີ່ເລົ່າຂານກັນມາ, ຂະນົບທຳນຽມຄວາມເຊື່ອຖື ແລະ ນິທານ, ພາສາ ວັນນະຄະດີ, ຜະລິດຕະພັນ, ສີໄມ້ລາຍມື ແລະ ສິລະປະພື້ນເມືອງ, ສະຖານປັດຕິຍະກຳ , ສິລະປະການສະແດງ, ການມ່ວນຊື່,ລະບົບພູມປັນຍາພື້ນເມືອງ ແລະ ທຳນຽມຕ່າງໆ, ເທບນິຍາຍ, ຮີດຄອງປະເພນີ ແລະ ພິທີຕ່າງໆ ທີ່ຍັງປະຕິບັດກັນຢູ່.
- ມໍລະດົກທີ່ຂຽນເປັນຕົວໜັງສື.
- ມໍລະດົກວັດທະນະຂອງປະຊາຊົນ, ການປະດິດສ້າງຂອງປະຊາຊົນ ໃນວັດທະນະທຳມະຫາຊົນ.

**ຕົວຢ່າງ :** ວັດວັດທະນະທຳການຄ້າ ແລະ ອຸດສາຫະກຳ, ຮູບແທ່ງການສະແດງອອກຂອງຄວາມງາມທີ່ໂດດເດັ່ນຂອງຄຸນຄ່າທາງດ້ານມະນຸດວິທະຍາ ແລະ ສັງຄົມສາດລວມທັງດົນຕີ, ນາດຕະກຳສິນ, ສິລະປະຂຽນແຕ້ມ, ເຄື່ອງນຸ່ງຫົ່ມ, ການຫຼິ້ນເກມ, ການອອກແບບອຸດສະຫະກຳ, ຮູບເງົາ, ໂທລະພາບ, ເພງ ປະກອບພາບ, ສິລະປະວີດີໂອ, ສິລະປະອອກແບບດ້ວຍຄອມພິວເຕີ. ໃນສັງຄົມຕົວເມືອງ ທີ່ມີທ່າ ອ່ຽງ ພັດທະນາຕາມເຕັກໂນໂລຊີ.

## 2 ປະເພດວັດທະນະທຳທີ່ຄົງຕົວໃນສັງຄົມລາວ ແລະ ອາຊຽນ

ສັງລວມແລ້ວວັດທະນະທຳມີ 2 ປະເພດ

### 2.1 ວັດທະນະທຳທາງດ້ານວັດຖຸ

ວັດທະນະທຳທາງດ້ານວັດຖຸ ແມ່ນພາກສ່ວນໜຶ່ງທີ່ເບິ່ງເຫັນ ແລະ ສຳຜັດໄດ້ ເຊັ່ນ ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ສອຍ, ອາຫານການກິນ, ເຄື່ອງຍິບປັກຖັກແສ່ວ, ປື້ມອ່ານ, ວາລະສານ, ໜັງສືພິມ, ການແຕ້ມ, ການສະແດງເທິງເວທີ, ການຟ້ອນ, ລະຄອນ, ຮູບເງົາ, ວິຈິດຕະກຳ, ຫັດຖະກຳ, ປະຕິມະກຳ, ສະຖາ ປັດຕະຍະກຳ, ວັນນະກຳ,ວັດຖຸບູຮານປູຊະນີຍະສະຖານ, ພິທີກຳ, ພິທີການ ແລະ ອື່ນໆ. ລວມທັງຮູບແບບການດຳລົງຊີວິດ, ການທຳມາຫາກິນ, ການຮ່ວມມືກັນດ້ານຕ່າງໆຂອງຄົນໃນສັງຄົມ.

### 2.2 ວັດທະນະທຳທາງດ້ານຈິດໃຈ

ວັດທະນະທຳທາງດ້ານຈິດໃຈເປັນພາກສ່ວນໜຶ່ງທີ່ເບິ່ງບໍ່ເຫັນ ແລະ ຈັບບາຍບໍ່ໄດ້ ເພາະວ່າມັນແມ່ນຄຸນຄ່າຫຼື ຄຸນຄ່າທາງດ້ານຈິດໃຈໄດ້ແກ່ຈິດສຳນຶກ, ຈິນຕະນາການ, ປັດຊະຍາ, ຄຸນສົມບັດ, ສັດຈະທຳ, ສິລະທຳ, ຄະຕິສັ່ງສອນ, ລະບຽບກົດໝາຍ, ການສຶກສາປາກເວົ້າ, ທິດສະດີແນວທາງ, ສຸພາສິດສອນໃຈ, ເນື້ອໃນວັນນະກຳ, ເນື້ອຮ້ອງທຳນອງເພງ, ສຽງແຄນ, ສຽງຂັບ, ສຽງດົນຕີ, ສາສະໜາ, ຄວາມເຊື່ອຖື ແລະ ອຸດົມການ.

## 3 ໂຄງສ້າງທາງດ້ານວັດທະນະທຳສັງຄົມລາວ ແລະ ອາຊຽນ

### 3.1 ໂຄງສ້າງວັດທະນະທຳລາວ

ວັດທະນະທຳທາງດ້ານວັດຖຸ ແລະ ວັດທະນະທຳທາງດ້ານຈິດໃຈ ມີພະລັງຊຸກດັນເຊິ່ງກັນ ແລະ ກັນ, ພ້ອມທັງຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ວັດທະນະທຳສອງປະເພດນີ້ ໄດ້ກຳເນີດເກີດຂຶ້ນມາຈາກໂຄງສ້າງທີ່ ມີອົງປະກອບສຳຄັນ 3 ປະການ ຄື:

- ລະບົບການຜະລິດ ຫຼື ການອອກແຮງງານ ຊອກຢູ່ກະທຳກິນຫາລ້ຽງຊີບຕົນເອງ.
- ລະບົບຢູ່ຮ່ວມສຳພັນກັນ ປະກອບດ້ວຍຄອບຄົວ, ຍາດພີ່ນ້ອງພັນກຸ່ມຊົນ, ຄວາມຜູກພັນລະ ຫວ່າງກຸ່ມຄົນ ຫຼື ຊຸມຊົນໃນສັງຄົມ.
- ລະບົບຄວາມເຊື່ອຖື ຫຼື ອຸດົມການ ອັນປະກອບດ້ວຍປັດຊະຍາ, ສາສະໜາ, ສັດຈະທຳ, ສິນລະທຳ ແລະ ພິທີກຳຕ່າງໆ.

ວັດທະນະທຳມີການປ່ຽນແປງໄປໂດຍສະເພາະເມື່ອມີການປະສານສຳພັນກັບວັດທະນະທຳອື່ນໆ ນອກນີ້ລະບົບອົງປະກອບຂອງໂຄງສ້າງທັງ 3 ປະການກໍມີຄວາມສຳພັນ ແລະ ສົ່ງຜົນກະທົບຕໍ່ກັນຕະຫຼອດເວລາ.

### 3.2 ໂຄງສ້າງວັດທະນະທຳອາຊຽນ

ຄະນະກຳມະການວັດທະນະທຳ ແລະ ຖະແຫຼງຂ່າວອາຊຽນ ໄດ້ວາງໂຄງສ້າງຂອງການຮ່ວມມືກ່ຽວກັບມໍລະດົກກ່ຽວກັບວັດທະນະທຳອາຊຽນໄວ້ດັ່ງນີ້:

- ການປົກປັກຮັກສາມໍລະດົກວັດທະນະທຳອາຊຽນໃນແຕ່ລະຊາດ ແລະ ໃນພາກພື້ນ.
- ການປົກປັກຮັກສາສົມບັດບູຮານສະຖານແຫ່ງຊາດທາງດ້ານວັດທະນະທຳ.
- ການເຊີດຊູຮີດຄອງປະເພນີອັນດີງາມ.
- ການອະນຸລັກອະດີດ ແລະ ມໍລະດົກການຄົ້ນຄ້ວາ, ສິລະປະປັນຍາ ແລະ ວັດທະນະທຳ.
- ການອະນຸລັກອະດີດມູນເຊື້ອ ແລະ ມໍລະດົກວັດທະນະທຳທີ່ຍັງຄົງຢູ່ຂອງປະຊາຊົນ.
- ການສົ່ງເສີມການສຶກສາ, ຄວາມສຳນຶກ ແລະ ຄວາມຮູ້ກ່ຽວກັບວັດທະນະທຳ.
- ການຢືນຢັນສັກສີຂອງວັດທະນະທຳອາຊຽນ.
- ການສົ່ງເສີມນະໂຍບາຍກ່ຽວກັບມໍລະດົກ ແລະ ກົດໝາຍວັດທະນະທຳ.
- ການຮັບຮູ້ລິຂະສິດຕໍ່ສົມບັດທາງປັນຍາຂອງສ່ວນລວມ.
- ການປ້ອງກັນຊັບສົມບັດທາງວັດທະນະທຳທີ່ມີການປ່ຽນເຈົ້າຄອບຄອງແບບຜິດກົດໝາຍ.
- ການນຳໃຊ້ຊັບພະຍາກອນ ແລະ ມໍລະດົກວັດທະນະທຳທາງດ້ານການຄ້າ.
- ການປະສົມປະສານຂອງວັດທະນະທຳ ແລະ ການພັດທະນາ.

- ການພັດທະນາເຄື່ອຄ່າຍລະດັບຊາດ ແລະ ລະດັບພາກພື້ນກ່ຽວກັບມໍລະດົກວັດທະນະທຳອາຊຽນ.
- ການສ້າງຊັບພະຍາກອນສຳລັບການເຄື່ອນໄຫວດ້ານມໍລະດົກວັດທະນະທຳ.
- ການພັດທະນາ ແລະ ການຈັດຕັ້ງປະຕິບັດແຜນການຂອງອາຊຽນວ່າດ້ວຍມໍລະດົກວັດທະນະທຳ.

ຖະແຫຼງການດັ່ງກ່າວນີ້ໄດ້ລົງນາມທີ່ບາງກອກ, ປະເທດໄທ ຄັ້ງວັນທີ 25 ກໍລະກົດ 2000, ໂດຍບັນດາລັດຖະມົນຕີຕ່າງປະເທດ ເຊິ່ງຜູ້ຕາງໜ້າລັດຖະບານຂອງບັນດາສະມາຊິກອາຊຽນ.

**ຄຳຖາມ :**

1. ວັດທະນະທຳແມ່ນຫຍັງ?
2. ໂຄງສ້າງວັດທະນະທຳສັງຄົມມີອົງປະກອບຈັກປະການ? ມີອັນໃດແດ່?

# ບົດທີ 3

# ປະເພນີລາວບູຮານ ແລະ ອາຊຽນ

## 1 ຄວາມເປັນມາຂອງປະເພນີລາວ ແລະ ອາຊຽນ

### 1.1 ຄວາມເປັນມາຂອງປະເພນີລາວ

ຄຳວ່າປະເພນີ ໝາຍເຖິງສິ່ງທີ່ນິຍົມຍຶດຖືປະຕິບັດກັນໃນແຕ່ ລະທ້ອງຖິ່ນເປັນ ແບບແຜນມາແຕ່ດົນນານ ເພາະ ຖືວ່າເປັນປະໂຫຍດແກ່ຄົນໃນແຕ່ລະທ້ອງຖິ່ນ, ແຕ່ກ່ອນຊາວລາວເຮົາໄດ້ຖືປະຕິບັດຕາມຮີດສິບສອງ ຫຼື ເອີ້ນອີກອັນໜຶ່ງວ່າປະເພນີ 12 ເດືອນ.

ປະເພນີລາວໄດ້ສືບທອດມາແຕ່ບູຮານນະການຢູ່ເທິງແຜ່ນດິນອັນກ້ວາງໃຫ່ຍ ແລະ ອຸດົມສົມບຸນຂອງຊາດລາວ ແລະ ກໍໄດ້ມີການສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ມາເປັນເວລາດົນນານແຕ່ສະ ໄໝບູຮານ. ຈາກນັ້ນ, ຮີດຄອງປະເພນີລາວ ການເຊື່ອຖື, ການປະຕິບັດ ກໍໄດ້ມີລັກສະນະກ້ວາງຂວາງ ແລະ ອຸດົມສົມບຸນຂຶ້ນໂດຍສະເພາະແມ່ນຢູ່ໃນສະໄໝເຈົ້າຟ້າງຸ່ມ ເຊິ່ງໄດ້ນຳເອົາສາສະໜາພຸດເຂົ້າມາເຜີຍແຜ່ ແລະ ສາສະໜາດັ່ງກ່າວນັ້ນ, ກໍໄດ້ນຳເອົາຄວາມຈະເລີນສີວິໄລທາງດ້ານ ການສຶກສາວັດທະນະທຳ ເຂົ້າມາເຜີຍແຜ່ຢູ່ໃນຜືນແຜ່ນດິນລາວ.

ວັດໄດ້ກາຍເປັນສູນກາງທາງດ້ານວັດທະນະທຳເປັນບ່ອນເຕົ້າໂຮມປະຊາຊົນ, ເປັນບ່ອນເຮັດບຸນສິນກິນທານ ເຊິ່ງມີພະສົງສາມະເນນເປັນຕົວແທນໃນການ ເຜີຍແຜ່ຄວາມຮູ້ທາງດ້ານການສຶກສາ, ຮີດຄອງປະເພນີຕ່າງໆ.

ສະນັ້ນ, ຈິ່ງເວົ້າໄດ້ວ່າຄວາມເປັນມາຂອງປະເພນີລາວແມ່ນໄດ້ ສືບທອດມາແຕ່ບູຮານນະການໄດ້ກາຍ ເປັນເອກະລັກຂອງຊາດ ແລະ ເປັນສົມບັດອັນລ້ຳຄ່າຂອງຊາດລາວເຮົາຈົນເຖິງປັດຈຸບັນ.

### 1.2 ຄວາມເປັນມາຂອງປະເພນີອາຊຽນ

ໃນບັນດາປະເທດປະຊາຊາດອາຊຽນ ໄດ້ມີຮີດຄອງປະເພນີສະເພາະຂອງແຕ່ລະປະເທດມາແຕ່ດົນນານແລ້ວ. ແຕ່ຮີດຄອງປະເພນີດັ່ງກ່າວກໍໄດ້ມີການປະສົມປະສານຂອງບັນດາປະເທດ ຕ່າງໆທີ່ເຄີຍເຂົ້າມາອິດທິພົນໃນຂົງເຂດນີ້ເຊັ່ນ ປະເທດຫວຽດນາມກໍໄດ້ນຳເອົາວັດທະນະທຳ ຮີດຄອງປະເພນີຂອງຈີນເຂົ້າມາເຮັດໃຫ້ວິທີຊີວິດຂອງຊາວຫວຽດນາມເປັນແບບລັດທິຂົງຈື້ເປັນສ່ວນຫຼາຍ. ນອກຈາກນັ້ນກໍມີຮີດຄອງແບບ ລັດທິເຕົາ, ຕໍ່ຈາກນັ້ນຍັງມີແບບສາສະໜາພຸດ ແລະ ອິດສະຣາມ ເຂົ້າມາເຜີຍແຜ່, ພ້ອມດຽວ ກັນນັ້ນ ປະຊາກອນອາຊຽນສ່ວນໜຶ່ງກໍແມ່ນມາຈາກຖິ່ນຖານອື່ນ ເຊັ່ນ ມາຈາກພາກຕາເວັນອອກສ່ຽງເໜືອຂອງອິນເດຍ, ນອກຈາກນັ້ນກໍແມ່ນມາຈາກຈີນ ຈຶ່ງເຮັດໃຫ້ມີຄວາມແຕກຕ່າງກັນທາງດ້ານຮີດຄອງປະ ເພນີ.

ສະເພາະປະເທດອິນໂດເນເຊຍ ກໍມີຮີດຄອງການເຊື່ອຖືວ່າສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດໄດ້ມີພະລັງພິເສດໃນຕົວເອງ.

ສະເພາະປະເທດ ຟີລິບປິນ ປະຊາຊົນສ່ວນໃຫຍ່ເປັນຊາວມາເລທີ່ອົບພະຍົບເຂົ້າໄປຈາກເກາະບໍ່ອກນຽວ ເຊິ່ງມີຮີດຄອງປະເພນີແບບຊາວມາເລ ແຕ່ເວົ້າລວມແລ້ວຮີດຄອງປະເພນີຂອງປະຊາຊາດອາຊຽນແມ່ນໄດ້ຮັບຈາກຫຼາຍພາກສ່ວນ ເຊັ່ນ:

ວັດທະນະທຳຮີດຄອງປະເພນີແຜ່ເຂົ້າມາໃນກຸ່ມບັນດາປະເທດອາຊຽນປະມານສະຕະວັດທີ 1 ກ່ອນ ຄ.ສ ແລະ ໃນສະຕະວັດທີ 15 ໄດ້ແຜ່ຂະຫຍາຍໄປທົ່ວພູມີພາກອາຊຽນ ໂດຍສະເພາະແມ່ນໄດ້ຮັບຈາກວັດທະນະທຳອິນເດຍ.

**ຕົວຢ່າງ :**

- ຮູບແບບການປົກຄອງແບບມີກະສັດຕາມແບບ ຮິນດູ ແລະ ພຸດ

- ພາສາ ແລະ ວັນນະກຳປະເທດໃນພູມີພາກນີ້ ໄດ້ຮັບພາສາສັນສະກິດມາປະສົມປະສານ

- ພາສາເດີມຂອງຕົນ ພາສາມາເລ ແລະ ພາສາຊາວາ ບາງຄຳມາຈາກພາສາສັນສະກິດ

- ລະບົບວັດທະນະທຳຂອງອິນເດຍ ຊາວອາຊຽນກໍໄດ້ຮັບເອົາມາ ແຕ່ເລືອກເຟັ້ນເອົາສິ່ງທີ່ປະຕິບັດໄດ້

ນອກຈາກນັ້ນຈະໄດ້ຮັບວັດທະນະທຳ ຮີດຄອງປະເພນີສ່ວນໜຶ່ງມາຈາກອິນເດຍແລ້ວ ປະຊາຊົນຊາວອາຊຽນ ກໍຍັງມີຮີດຄອງປະເພນີວັດທະນະທຳມາຈາກສາສະໜາອິດສະລາມ ແລະ ກໍຖືໄດ້ວ່າວັດທະນະທຳອິດສະຣາມມີອິດທິພົນຫຼາຍໃນພູມີພາກນີ້ ໂດຍສະເພາະ ແມ່ນບັນດາປະເທດທີ່ເປັນເກາະ

ປະເພນີໃນການປະກອບພິທີທາງສາສະໜາ, ປະເພນີໃນການແຕ່ງງານ ເວົ້າລວມແລ້ວປະເທດຕ່າງໆໃນພູມີພາກອາຊີຕາເວັນອອກສຽງໃຕ້ ເປັນພູມີພາກທີ່ມີວັດທະນະທາ, ຮີດຄອງປະເພນີ, ສະເພາະຂອງຕົນເອງຕັ້ງແຕ່ສະໄໝກ່ອນປະຫວັດສາດ ແລະ ສະໄໝປະຫວັດສາດ ເມື່ອກໍ່ຕັ້ງເປັນລັດທີ່ຈະເລີນຮຸ່ງເຮືອງຂຶ້ນໃນແບບສະບັບຂອງຕົນເອງແຕ່ເວລາທີ່ຮັບວັດທະນະທາ, ຮີດຄອງປະເພນີຕ່າງໆເຂົ້າຖິ່ນແລ້ວ ເຮັດໃຫ້ຮີດຄອງປະເພນີຂອງບັນດາປະເທດຕ່າງໆໃນພູມີພາກນີ້ມີລັກສະນະຄ້າຍຄືກັນ ແລະ ແຕກຕ່າງກັນດັ່ງນີ້

ສິ່ງທີ່ຄ້າຍຄືກັນ ໄດ້ແກ່ປະເພນີທີ່ປະຕິບັດໃນລາຊະສຳນັກຕ່າງໆ ທົ່ວທັງປະເທດທີ່ເປັນແຜ່ນດິນໃຫຍ່ ມີຮູບແບບດຽວກັນຈົນເໝືອນກັບວ່າເປັນມໍລະດົກຕົກທອດຮ່ວມກັນ ລວມທັງປະເພນີໃນການເຊື່ອຖືຕ່າງໆ ເຊັ່ນ ການນັບຖືຜີ ນັບຖືບັນພະບຸລຸດ ແລະ ປະກົດຕາມທຳມະຊາດ ຄື ດິນ ນ້ຳ ລົມ ໄຟ

ໂຄງສ້າງຂອງຄອບຄົວໃນພູມີພາກນີ້ຄ້າຍຄືກັນ ຄື ລະບົບຄອບຄົວດ່ຽວມີ ພໍ່, ແມ່, ລູກ, ລະບົບຄອບຄົວດ່ຽວເຮັດບົດບາດຂອງແມ່ຍິງໄດ້ຮັບການຍົກສູງຂຶ້ນ

ຄວາມຄ້າຍຄືກັນທາງດ້ານຄວາມເປັນມາຄືມີຄວາມຈະເລີນ ຄວາມເສື່ອມສະຫຼັບກັນໄປຫຼາຍວາລະ...ນອກຈາກນັ້ນ ທຸກປະເທດໃນພູມີພາກນີ້ເຄີຍຕົກເປັນເມືອງຂຶ້ນຂອງພວກຕາເວັນຕົກມາແລ້ວ ຕ່າງແຕ່ວ່າການຕົກເປັນເມືອງຂຶ້ນຂອງສະຫະລັດອາເມຣິກາ, ອັງກິດ, ຝຣັ່ງ ຫຼື ໂຮນລັງເທົ່ານັ້ນ ແຕ່ການໄດ້ເອກະລາດມາກໍແຕກຕ່າງກັນ ບາງປະເທດໄດ້ມາຢ່າງງ່າຍດາຍ ແຕ່ບາງປະເທດໄດ້ມາດ້ວຍການຕໍ່ສູ້ທີ່ຮຸນແຮງ.

# 2 ຮີດຄອງປະເພນີລາວ

## 2.1 ຮີດສິບສອງ, ຄອງສິບສີ່

ຄຳວ່າຮີດສິບສອງ ໝາຍເຖິງຂະນົບທຳນຽມປະເພນີທີ່ເຄີຍປະຕິບັດສືບຕໍ່ກັນມາຕາມຈຳນວນເດືອນໃນປີໜຶ່ງໆ ເຊິ່ງເອີ້ນວ່າຮີດສິບສອງຄື:

### 1) ບຸນເຂົ້າກຳ

ບຸນເຂົ້າກຳ ແມ່ນຮີດອັນໜຶ່ງຂອງພະສົງ ເຊິ່ງຈະເຂົ້າໄປຢູ່ໃນສະຖານທີ່ມີຂອບເຂດຈຳກັດ ແລະເປັນຮີດທີ່ປະຕິບັດຢູ່ໃນເດືອນຈຽງ (ເດືອນອ້າຍ) ບຸນເຂົ້າກຳນີ້ເປັນກິດຈະກຳຂອງພະສົງ ໂດຍສະເພາະພະສົງອັນໃດທີ່ປະພຶດຜິດທາງວິໄນສົງພະສົງອົງນັ້ນຕ້ອງໄດ້ເຂົ້າກຳເພື່ອບຳເພັນກຸສົນໃຫ້ພົ້ນບາບທີ່ໄດ້ກະທຳມາ. ສຳລັບຊາວບ້ານກໍມີສ່ວນຮ່ວມໃນການເຮັດບຸນໃຫ້ທານໃນພິທີກຳນີ້ຄືກັນ

### 2) ບຸນຄູນລານ

ບຸນຄູນລານ ກໍຄືການເຮັດບຸນຂວັນເຂົ້າທີ່ຟາດແລ້ວ (ຕີແລ້ວ) ຫຼື ເອີ້ນອີກຢ່າງໜຶ່ງວ່າ ແມ່ນບຸນສູ່ຂວັນລານ ເຊິ່ງປະຕິບັດຢູ່ໃນເດືອນຍີ່ (ເດືອນ 2).

### 3) ບຸນເຂົ້າຈີ່

ບຸນເຂົ້າຈີ່ ຄືເອົາເຂົ້າໜຽວປັ້ນຈີ່ໄຟໃຫ້ສຸກ ບຸນເຂົ້າຈີ່ນິຍົມປະຕິບັດຢູ່ທ້າຍເດືອນສາມ. ດັ່ງມີຄຳກອນເຄີຍເວົ້າວ່າ ເດືອນສາມ ຄ້ອຍເຈົ້າຫົວຄອຍປັ້ນເຂົ້າຈີ່ ຄັນເຂົ້າຈີ່ບໍ່ມີນ້ຳອ້ອຍຍ້ອຍ ຈົວນ້ອຍເຊັດນ້ຳຕາ.

### 4) ບຸນພະເຫວດ

ບຸນພະເຫວດ ເປັນບຸນມະຫາຊາດຟັງເທດເລື່ອງພຣະເຫວດສັນດອນຊາດົກ ປະກອບໄປດ້ວຍຄາຖາພັນຈັດ ກັນໄດ້ 13 ກັນ ນິຍົມປະຕິບັດຢູ່ໃນເດືອນ 4 ຈຶ່ງເອີ້ນອີກຢ່າງໜຶ່ງວ່າ ບຸນເດືອນ 4 ແລະ ມີວິທີປະຕິບັດຈັດແບ່ງໜັງສືເທດຈາກກັນໃຫຍ່ເປັນກັນນ້ອຍ ໃຫ້ພຣະ, ເນນໄວ້ວັດ ແລະ ຕ່າງວັດ ມາເທດປຸກຜາມ ໄວ້ຕ້ອນຮັບພຣະ ເນນ ແລະ ອອກຕົນຍາດໂຍມບ້ານອື່ນ, ຊາວບ້ານຈະເຮັດເຂົ້າ ປຸ້ນໄວ້ຕ້ອນຮັບພະເນນ ແລະ ຍາດພີ່ນ້ອງຈາກບ້ານອື່ນເວລາ 3 ໂມງ ຕີກອງລວມຊາວບ້ານທີ່ວັດ ກຽມຕົວຈັດຂະບວນ ແຫ່ໄປນິມົນພະອຸປະຄຸດ ແລ້ວສົມມຸດຄົນຜູ້ທີ່ຄວນເຄົາລົບນັບຖືໃຫ້ແຕ່ງຕົວເປັນພະເຫວດສັນດອນ ແລະ ນາງມັດທີ (ມະທີ)ໄປຢູ່ສະຖານທີ່ແຫ່ງໃດໜຶ່ງ ແລ້ວຈັດຂະບວນໄປເຊີນເອົາພະເຫວດສັນດອນເຂົ້າເມືອງ.

### 5) ບຸນສົງການ ຫຼື ບຸນກຸດສົງການ

ບຸນສົງການ ຫຼື ບຸນກຸດສົງການ ເດືອນຫ້າ ແມ່ນບຸນສັງຂານຂຶ້ນໃໝ່ຂອງລາວໄລຍະບຸນປີໃໝ່ຂອງລາວແມ່ນ ຕົກຢູ່ໃນໄລຍະເດືອນຫ້າ ຂຶ້ນ 6 ຄ່ຳ ເຖິງເດືອນຫົກ ຂຶ້ນ 5 ຄ່ຳບໍ່ຫຼຸດ ແລະ ບໍ່ເກີນໃນລະຫວ່າງນີ້ແຕ່ຈະແມ່ນມື້ໃດ ສຸດແຕ່ການຄຳນວນເລກ ອອກມາວ່າເປັນຈັກຄ່ຳກົງກັບວັນທີເທົ່າໃດ ວັນຫຍັງ ຄວາມຈິງແລ້ວປີໃໝ່ຂອງລາວເຮົາຕັ້ງແຕ່ເດີມ ແມ່ນຖືເອົາ 1 ຄ່ຳເດືອນ ຈຽງ ຫຼື ເດືອນອ້າຍ ເພາະແປວ່າກົກ ຫຼື ທຳອິດ. ເພິ່ນໃຊ້ເດືອນອ້າຍ ຫຼື ເດືອນຈຽງເປັນປີໃໝ່ຂອງລາວນັບເປັນເວລາຫຼາຍພັນປີ ແມ່ນແຕ່ຊື່ວັນຊື່ເດືອນ ຊື່ປີ ກໍບໍ່ຄື ທຸກມື້ນີ້ ໃນສະໄໝບູຮານນັ້ນ ວັນມີຢູ່ 10 ວັນ ເພິ່ນເອີ້ນວ່າແມ່ມື້ ຄື ກາບ, ຮັບ, ຮວຍ, ເມີງ, ເປີກ, ກັດ, ກົດ, ຮ້ວງ, ເຕົາ, ກາ. ເດືອນກໍມີອ້າຍ ຫຼື ວ່າເດືອນຈຽງ, ຍີ່, ສາມ, ສີ່, ຫ້າ, ຫົກ, ເຈັດ, ແປດ, ເກົ້າ, ສິບ, ສິບເອັດ, ສິບສອງ. ປີກໍມີ ໃຈ້, ເປົ້າ, ຍີ່, ເໝົ້າ, ສີ່, ໃສ້, ມົດ, ສັນ, ເຮົ້າ, ເສັດ, ໃຄ້.

ໃນເວລາຕໍ່ມາລາວເຮົາໄດ້ຖືເອົາຕາມວັດທະນະທຳມອນ, ພະມ້າ ແລະ ຂະເໝນ ຊື່ຂອງວັນເດືອນປີ ແລະ ສັກກະຫຼາດກໍເອົານຳຈົນຮອດວັນຂຶ້ນປີໃໝ່. ດັ່ງນັ້ນ, ປີໃໝ່ຂອງລາວເຮົາຈຶ່ງຕົກຢູ່ໃນລະຫວ່າງເດືອນຫ້າຂຶ້ນ 6 ຄ່ຳ ຫາເດືອນຫົກ 5 ຂຶ້ນຄ່ຳ ດັ່ງທີ່ໄດ້ກ່າວມານັ້ນ ໃນໂອກາດປີໃໝ່ນີ້ປະຊາຊົນບັນດາເຜົ່າກໍໄດ້ພາກັນມ່ວນຊື່ນສະຫຼອງ ປີໃໝ່ຂອງຕົນດ້ວຍການຫົດນ້ຳກັນ, ຫົດສົງພະພຸດທະຮູບ, ຫົດສົງບ້ານເຮືອນ, ຫົດສົງຜູ້ເຖົ້າ ແລະ ຜູ້ຊົງຄຸນນະອຸດຕະຫຼອດເຖິງການທຳໃຫ້ບຸນຕ່າງໆໂດຍສະເພາະແມ່ນບາສີສູ່ຂວັນ.

ວິທີປະຕິບັດໃນແຕ່ລະທ້ອງຖິ່ນອາດມີການແຕກຕ່າງກັນໄປແຕ່ການປະຕິບັດຄືກັນ ຄື ສົງພະພຸດທະຮູບ ແລະ ພິທີບາສີສູ່ຂວັນປີໃໝ່ບາງທ້ອງຖິ່ນກໍມີການປ່ອຍນົກ, ຈັດຕັ້ງກັນໄປອວຍພອນ ໃຫ້ແກ່ຜູ້ທີ່ມີບຸນຄຸນ...

### 6) ບຸນບັ້ງໄຟ

ແມ່ນປະຕິບັດໃນເດືອນຫົກ ຫຼື ເອີ້ນອີກຢ່າງໜຶ່ງວ່າ ບຸນເດືອນຫົກ ບັ້ງໄຟ ບັ້ງໃດໃຊ້ໝື້ໜັກ 12 ກິໂລ ກໍເອີ້ນວ່າ ບັ້ງໄຟໝື່ນ, ຖ້າບັ້ງໃດໃຊ້ໝື້ໜັກ 10 ໝື່ນ ກໍເອີ້ນວ່າ ບັ້ງໄຟແສນ.



ຮູບພາບບຸນບັ້ງໄຟ

**7) ບຸນບູຊາເທພາອາຮັກ**

ມະເຫສັກຫຼັກເມືອງ ຫຼື ເວົ້າອີກຢ່າງໜຶ່ງວ່າແມ່ນບຸນສະເດາະເຄາະຊໍາລະລ້າງສິ່ງທີ່ບໍ່ດີອອກຈາກບ້ານຈາກເມືອງ ເຊັ່ນ ບ້ານເມືອງມີຄວາມເດືອດຮ້ອນບໍ່ຢູ່ເຢັນເປັນສຸກ ເກີດມີການຂ້າຟັນລັນແທງ ຜູ້ຄົນ, ງົວ, ຄວາຍລົ້ມຕາຍ ຫຼື ບ້ານເມືອງມີໄພເດືອດຮ້ອນຕ່າງໆ ຈໍາເປັນຕ້ອງເຮັດບຸນຊໍາລະລ້າງສິ່ງຊົ່ວຮ້າຍຕ່າງໆ ບຸນດັ່ງກ່າວນີ້ປະຕິບັດຢູ່ໃນເດືອນເຈັດ ຄິດວ່າ ທໍາບຸນທໍາທານ ນີ້ແລ້ວບ້ານເມືອງຈຶ່ງຈະຢູ່ເຢັນເປັນສຸກ.

**8) ບຸນເຂົ້າພັນສາ**

ບຸນເຂົ້າພັນສາ ຖືເອົາວັນຂຶ້ນ 15 ຄໍ່າ ເດືອນແປດ ເປັນວັນທໍາບຸນ ເປັນປະເພນີທີ່ຖືມາແຕ່ດັ້ງດຶກນານ ໃນເດືອນແປດ ເພັງ ເປັນມື້ເຮັດບຸນເຂົ້າພັນສາຂອງພະສົງ, ປະຊາຊົນລາວ, ຊາວພຸດກໍໄດ້ຮ່ວມກັນ ເຮັດບຸນໃຫ້ທານ, ຟັງທໍາ ແລະ ຖວາຍຜ້າຈໍານໍາພັນສາ ຫຼື ຜ້າອາບນໍ້າຝົນແດ່ພະສົງ ຜູ້ຈະເຂົ້າຈໍາພັນສາຕະຫຼອດ 1 ໄຕມາດ (3 ເດືອນ)

**9) ບຸນຫໍ່ເຂົ້າປະດັບດິນ**

ບຸນຫໍ່ເຂົ້າປະດັບດິນ ແມ່ນເພິ່ນກໍານົດເອົາມື້ເດືອນເກົ້າດັບເປັນມື້ເຮັດບຸນ ເພື່ອອຸທິດສ່ວນກຸສົນໄປເຖິງຍາດຕິພີ່ນ້ອງ, ຜູ້ທີ່ລ່ວງລັບ (ຕາຍ) ໄປແລ້ວ. ໃນຕອນເຊົ້າມືດຂອງມື້ເຮັດບຸນນັ້ນຊາວບ້ານກໍພາກັນລົງໄປຢາຍຫໍ່ເຂົ້າຢູ່ຕາມວັດຕ່າງໆ. ຕາມຄວາມເຊື່ອຖືຂອງຄົນບູຮານເວົ້າວ່າ “ໃນຕອນເຊົ້າມື້ນັ້ນ, ພະຍາຍົມພິບານ ໄດ້ປ່ອຍສັດນາຣົກອອກມາຮັບເອົາຂອງທານທີ່ຍາດພີ່ນ້ອງໄດ້ອຸທິດໃຫ້”.

ການເຮັດບຸນຫໍ່ເຂົ້າປະດັບດິນໝາຍເຖິງການສະຫຼອງຕົ້ນເຂົ້າທີ່ຊາວນາໄດ້ປູກ (ດໍາ) ເຊິ່ງໃນຕົວຈິງການປູກ ຫຼື ດໍາໃສ່ດິນກໍແມ່ນການປະດັບດິນຄືກັນ ເພາະວ່າຊາວນາໄດ້ເອົາຕົ້ນກ້າປະດັບໃສ່ດິນນາເມື່ອສໍາເລັດກໍສະຫຼອງກັນດ້ວຍຄວາມເບີກບານມ່ວນຊື່ນ.

**10) ບຸນຫໍ່ເຂົ້າສາກ**

ໃນມື້ເດືອນສິບເພັງ ແມ່ນເຮັດບຸນຫໍ່ເຂົ້າສະຫຼາກ ຫຼື ສາກ ຊາວບ້ານໄດ້ເຮັດກວຍສະຫຼາກ ຫຼື ກວຍກະທໍຕ່າງແລ້ວເອົາເອົາເຄື່ອງກິນຂອງຄ້ຽວຕ່າງໆ ໃສ່ແລ້ວນໍາໄປຖວາຍໃຫ້ພະສົງ ໂດຍໃຫ້ພະສົງຈົກສະຫຼາກເອົາຈຶ່ງເອີ້ນວ່າ “ເຂົ້າສະຫຼາກ” ຫຼັງຈາກພະສົງຈົກສະຫຼາກໄດ້ແລ້ວ ກໍມີການອຸທິດສ່ວນບຸນກຸສົນໄປໃຫ້ຍາດຕິພີ່ນ້ອງທີ່ລວງລັບໄປແລ້ວ.

**11) ບຸນອອກພັນສາ**

ທຸກໆປີເມື່ອເຖິງເດືອນສິບເອັດເພັງມາຮອດແລ້ວ ເພິ່ນກໍພ້ອມກັນເຮັດບຸນອອກພັນສາຄື ພາຍຫຼັງທີ່ພະສົງຢູ່ຈໍາພັນສາໄດ້ຄົບໄຕມາດ 3 ເດືອນແລ້ວ, ເພິ່ນກໍມີພິທີອອກພັນສາ ສ່ວນຊາວບ້ານກໍຖືໂອກາດນີ້ທໍາບຸນໃຫ້ທານແດ່ພະສົງຜູ້ຢູ່ຈໍາພັນສາ ແລະ ພະສົງເອງກໍຈະໄດ້ຮັບອະນິສົງແຫ່ງການ ຈໍາພັນສາຕາມ ທີ່ພະພຸດທະອົງໄດ້ຊົງບັນຍັດເອົາໄວ້.

ໃນໂອກາດອອກພັນສານີ້ ກໍມີພິທີໄຕ້ນໍ້າມັນ, ໄຫຼເຮືອໄຟເປັນການບູຊາ ເຊິ່ງໄດ້ເຂົ້າມາຈາກສາສະໜາພາມ ຄື ມີການບູຊາໄຟຕໍ່ພະເຈົ້າທັງສາມໄດ້ແກ່ພະພົມ, ພະອິສວນ ແລະ ພະນາລາຍ ແຕ່ທາງພຸດສາສະໜາກໍເປັນການບູຊາແກ່ພະພຸດ, ພະທໍາ, ພະສົງ ຫຼື ຄວາມເຂົ້າໃຈຂອງຄົນບູຮານແມ່ນບູຊາ ເທວະສະຖານທີ່ເຄົາລົບບູຊາດ ນອກຈາກນີ້ແລ້ວຍັງມີປະເພນີການຊ່ວງເຮືອຍາວອີກ.

**12) ບຸນກະຖິນ**

ເດືອນສິບສອງແມ່ນປາງບຸນກະຖິນ ແລະ ບຸນໄຫ້ວພະທາດສໍາລັບບຸນກະຖິນ ນັ້ນແມ່ນ ອານິສົງຂອງ ພະສົງທີ່ຢູ່ຈໍາພັນສາຕະຫຼອດ 3 ເດືອນຈະຕ້ອງໄດ້ຮັບກະຖິນມີຈຸລະກະຖິນ, ມະຫາກະກິນ, ຊາວບ້ານຜູ້ໃດມີສັດທາສະເພາະຈະເຮັດສ່ວນຕົວກໍໄດ້ ຫຼື ວ່າເຮັດແບບກະຖິນສາມັກຄີກໍ່ແລ້ວແຕ່. ກ່ອນອື່ນໝົດຕ້ອງໄປປັກສະຫຼາກໄວ້ໃນວັດກ່ອນ ເພື່ອເປັນການບອກກ່າວລ່ວງໜ້າໃຫ້ພະສົງຮູ້ຈັກນໍາກະ ຖິນມາ

ທອດ, ສ່ວນພະສົງເມື່ອໄດ້ເຫັນສະຫຼາກແລ້ວ ກໍໄດ້ປຶກສາຫາລືກັນວ່າມີພະສົງໃດສົມຄວນຈະໄດ້ຮັບກະຖິນ. ສຳຫຼັບການປັກສະຫຼາກນັ້ນຕ້ອງປັກແຕ່ເວລາກາງພັນສາພຸ້ນ.

ຢູ່ໃນໄລຍະເດືອນສິບສອງນີ້ ນອກຈາກບຸນກະຖິນແລ້ວ ຍັງມີບຸນໄຫ້ວພະທາດອີງສຳຄັນທີ່ ເປັນປູ່ຊະນີຍະສະຖານວັດຖຸບູຮານອັນເກົ່າແກ່, ພະທາດທີ່ໄດ້ເຮັດບຸນສະຫຼອງໃນເດືອນສິບສອງ ເພິ່ງກໍມີພະ ທາດຫຼວງວຽງຈັນ, ພະທາດໝາກໂມ ຫຼື ທາດປະທຸມຢູ່ຫຼວງພະບາງ, ພະທາດອີຮັງ, ພະທາດໂພນຢູ່ສະຫ້ວນນະເຂດ. ແຕ່ມາເຖິງປັດຈຸບັນ ບຸນໄຫວ້ພະທາດບາງແຫ່ງກໍໄດ້ມີການປ່ຽນແປງ ໄປເຮັດໃນເດືອນ ອື່ນແລ້ວກໍມີ ເຊັ່ນ ພະທາດອີຮັງເປັນຕົ້ນ.



**ຮູບພາບບຸນກະຖິນ**

## 2.2 ຄອງສິບສີ່

ຄອງສິບສີ່ ອີງຕາມຮີດຄອງປະເພນີລາວເຮົາຖືວ່າເປັນໜ້າທີ່ຂອງທຸກຄົນໃນສັງຄົມທີ່ຈະຕ້ອງໄດ້ປະຕິບັດຕໍ່ກັນລະຫວ່າງຄົວເຮືອນຊານ, ຊາວບ້ານ, ວັດວາສາສະໜາ ເຊິ່ງມີຂໍ້ກຳນົດປະຕິບັດໄວ້ແຕ່ບູຮານນະການດັ່ງນີ້:

1) ເມື່ອຜົນລະປູກເປັນໝາກເປັນຮວງແລ້ວ ຜູ້ທີ່ທຳການຜະລິດບໍ່ຕ້ອງກິນກ່ອນຕ້ອງ ເອົາຜົນລະປູກ ເຫຼົ່ານັ້ນໄປຖວາຍພະສົງສາມະເນນກ່ອນ ແລ້ວຈຶ່ງບໍລິໂພກຕາມພາຍຫຼັງ.

2) ຢ່າຕົວະລ່າຍຕາຊັ່ງ ຕາຊີງ ຢ່າຕົວະຕົ້ມຫຼອກລວງ ຢ່າເວົ້າຄຳຫຍາບຊ້າຕໍ່ກັນ

3) ໃຫ້ເຮັດກຳແພງ ຫຼື ຮົ້ວອ້ອມວັດ ອ້ອມບ້ານແລ້ວປຸກຫໍເທພາອາຮັກໄວ້ສີ່ແຈຮົ້ວບ້ານ ເພື່ອຈະໄດ້ບູຊາ

4) ກ່ອນຈະຂຶ້ນເຮືອນຕ້ອງລ້າງຕີນກ່ອນຈຶ່ງຂຶ້ນ

5) ເມື່ອເຖິງວັນສິນ 8 ຄ່ຳ, 15 ຄ່ຳ ໃຫ້ສົມມາຄາລະວະກ້ອນເສົ້າ, ແມ່ຄີໄຟ, ຂັ້ນໄດ, ປະຕູບັດບ້ານເຮືອນທີ່ອາໄສ

6) ເມື່ອກ່ອນຈະນອນໃຫ້ທຳຄວາມສະອາດຮ່າງກາຍກ່ອນ ເຊັ່ນ ເອົານ້ຳສ່ວຍຕີງ ຫຼື ອາບນ້ຳ

7) ເມື່ອເຖິງວັນສິນ (ວັນພຣະ) ໃຫ້ຫາດອກໄມ້ໄປສົມມາຄາລະວະຜົວ ແລະ ຜູ້ທີ່ຕົນນັບຖື ເຖົ້າແກ່ລຸງຕາ ແລ້ວເອົາດອກໄມ້ທູບທຽນໄປຖວາຍສັງຄະເຈົ້າໃນວັນອຸໂບສົດ (ວັນສິນ)

8) ເມື່ອເຖິງວັນສິນດັບວັນສິນເພັງໃຫ້ນິມົນພະສົງມາສູດມຸງຄຸນເຮືອນ ແລະ ທຳບຸນໃສ່ບາດ ໃຫ້ປະຕິບັດທຸກໆສິນ

9) ເມື່ອເວລາພະສົງມາບິນທະບາດຕ້ອງຟ້າວໄປໃສ່ບາດບໍ່ໃຫ້ເພິ່ນຄອຍດົນ ແລະ ບໍ່ໃຫ້ມີຊຸນບາດຍາມໃສ່ບາດຫ້າມໃສ່ເກີບ, ຫ້າມອູ້ມເດັກ, ຫ້າມເອົາຜ້າປົກຫົວ ຫຼື ຖືອາວຸດທຸກຊະນິດ

10) ເມື່ອພະສົງອອກຈາກກຳ, ປະລິວາສະກຳ ໃຫ້ເອົາດອກໄມ້ ທູບທຽນໄປຖວາຍ

11) ເມື່ອພະສົງກາຍຕ້ອງນັ່ງລົງຍໍມືໄຫ້ວແລ້ວຈຶ່ງໄຕ່ຖາມ

12) ຢ່າຢຽບເງົາຂອງພະສົງສາມະເນນຜູ້ມີສິນບໍລິສຸດ

13) ຫ້າມເອົາອາຫານເຫຼືອກິນໄປທານໃຫ້ພະສົງ ຫຼື ໃຫ້ຜົວຕົນກິນເດັດຂາດ

14) ຢ່າເສບກາມະຄຸນໃນວັນສິນ ວັນເຂົ້າພັນສາ ວັນອອກພັນສາ ແລະ ວັນຂຶ້ນປີໃໝ່ ທັງໝົດນີ້ຄື ຄອງສິບສີ່ ທີ່ຊາວລາວເຄີຍປະຕິບັດສືບຕໍ່ກັນມາແຕ່ບູຮານນະການ.

## 2.3 ເຮືອນ 3 ນ້ຳສີ່

ເຮືອນ 3 ນ້ຳ 4 ແມ່ນຄຳຕັກເຕືອນຂອງ ພໍ່ ແມ່ ແລະ ເຖົ້າແກ່ຕໍ່ລູກຫຼານໃຫ້ປະຕິບັດຖ້າເຮັດໄດ້ຖືວ່າເປັນແມ່ເຮືອນທີ່ດີ ຄື:

**ກ ເຮືອນ 3**

- ເຮືອນນອນຕ້ອງໃຫ້ສະອາດ ໝັ່ນປັດກວາດຢູ່ສະເໝີ
- ເຮືອນຄົວກໍຕ້ອງໝັ່ນທຳຄວາມສະອາດໃຫ້ເປັນລະບຽບຮຽບຮ້ອຍ
- ເຮືອນຜົມ ໝາຍເຖິງຮ່າງກາຍທຸກສ່ວນຕ້ອງຮູ້ຈັກອານະໄມຮັກສາຄວາມສະອາດ, ຜົມກໍຕ້ອງສະ ແລະ ຫວີໃຫ້ຮຽບຮ້ອຍ

**ຂ ນ້ຳ 4**

- ນ້ຳໃຈຕ້ອງບໍລິສຸດສັດຊື່ກ້ວາງຂວາງ
- ນ້ຳກິນຕ້ອງໃຫ້ສະອາດ ແລະ ແຂກຄົນມາຕ້ອງເອົານ້ຳຕ້ອນຮັບ
- ນ້ຳໃຊ້ກໍຕ້ອງໃຫ້ມີຕະຫຼອດບໍ່ໃຫ້ຂາດອຸ ແລະ ແອ່ງ
- ນ້ຳເຕົ້າປູນ (ປອກປູນ) ບໍ່ຕ້ອງໃຫ້ແຫ້ງເວລາຕ້ອງການກໍຕ້ອງໃຫ້ມີ

ເວົ້າລວມແລ້ວ ຊາດລາວກໍຕ້ອງເປັນຊາດໜຶ່ງທີ່ຮີດຄອງ ປະເພນີປະຕິບັດສືບຕໍ່ກັນມາ ຕັ້ງແຕ່ບູຮານນະການ.

ສະນັ້ນ, ພວກເຮົາຕ້ອງຮູ້ຈັກປົກປັກຮັກສາ ແລະ ເສີມຂະຫຍາຍຮີດຄອງປະເພນີອັນດີງາມຂອງຊາດໄວ້ຢູ່ສະເໝີ ໃຫ້ກັບຄຳເວົ້າທີ່ວ່າ “ພາສາບອກຊາດ ມາລະຍາດບອກຕະກຸນ”

## ຄຳຖາມ:

1. ເປັນມາຂອງຮີດຄອງປະເພນີລາວມີຄືແນວໃດ?
2. ຮີດສິບສອງຄອງສິບສີ່ຂອງລາວມີແນວໃດ?

# ບົດທີ 4

# ມາລະຍາດໃນສັງຄົມຂອງລາວ ແລະ ອາຊຽນ

ມາລະຍາດໃນສັງຄົມ ແມ່ນສິ່ງທີ່ຍັ້ງຢືນເຖິງການປະພຶດປະຕິບັດ ແລະ ການເຄື່ອນໄຫວຂອງຄົນຢູ່ໃນສັງຄົມ ແລະ ມີຫຼາຍຮູບແບບ, ແຕ່ລະແບບກໍມີລັກສະນະສະເພາະຂອງໃຜລາວ ແລະ ປະສົມປະສານກັນໄປ.

## 1 ມາລະຍາດແມ່ນຫຍັງ?

ມາລະຍາດ ແມ່ນການປະພຶດປະຕິບັດທີ່ສຸພາບຮຽບຮ້ອຍຢູ່ໃນສັງຄົມສະແດງອອກທາງກາຍ, ວາຈາ ແລະ ຈິດໃຈ.

ມາລະຍາດໃນສັງຄົມທີ່ສະແດງອອກທາງກາຍ ວາຈາ ແລະ ຈິດໃຈ ເຊິ່ງມັນສະແດງເຖິງກິລິຍາມາລະຍາດການເວົ້າຈາປາໄສທີ່ມີລະບຽບຫຼັກການ ແລະ ມີຈິດໃຈບໍລິສຸດຜຸດຜ່ອງເຮັດໃຫ້ຄົນຢູ່ໃນສັງຄົມມີຄວາມສະຫງ່າລາສີແຊງກະດ້າງ ແລະ ບໍ່ເກີ້ເຂີນໃນສັງຄົມ ດັ່ງຄຳສຸພາສິດທີ່ວ່າ "ກິລິຍາບອກຊາດມາລະຍາດບອກຕະກຸນ".

## 2 ມາລະຍາດໃນການທັກທາຍ

ມາລະຍາດໃນການທັກທາຍ ແມ່ນມາລະຍາດໃນການພົບປະໂອ້ລົມ ແລະ ເວົ້າຈາປາໄສແບບໄມຕີຈິດມິດຕະພາບໃນເວລາພົບພໍ້ໝູ່ເພື່ອນ ແລະ ຄູອາຈານ ແລະ ຜູ້ຊົງຄຸນວຸດທິ.

### 2.1 ມາລະຍາດທາງດ້ານວາຈາ

ມາລະຍາດທາງດ້ານວາຈາແມ່ນການສະແດງອອກທາງດ້ານການປາກເວົ້າທີ່ມີລະບຽບຫຼັກການເຊິ່ງກຳນົດໄວ້ມີ 4 ຢ່າງ ຄື:

1) ບໍ່ເວົ້າຈາປາໄສອັນເປັນການໝິ່ນປະໝາດ ສຽດສີ ເຢີ້ຍຫຍັນ ປະຈົບປະແຈງ ຕໍ່ໜ້າດີ ລັບຫຼັງນິນທາ ກ່າວຂວັນເວົ້າພື້ນ ລ່ວງເກີນດ້ວຍຄວາມເວົ້າ ອວດອົ່ງທະນົງຕົວ ແລະ ອື່ນໆ

2) ບໍ່ເວົ້າຄວາມເສື່ອມເສຍ ອັນແຕະຕ້ອງເຖິງກຽດສັກສີ ຊາດຕະກຸນຂອງຕົນ ແລະ ຜູ້ອື່ນໆ

3) ເວົ້າແຕ່ຄວາມສຸພາບອ່ອນຫວານນິ້ມນວນ, ສ້າງສັນສັງຄົມໃນສິ່ງທີ່ເປັນປະໂຫຍດແກ່ຕົນເອງ ແລະ ຄົນອື່ນໆໂດຍຮູ້ເຖິງກາລະເທສະທີ່ຄວນເວົ້າ, ການເວົ້າຕ້ອງໃຫ້ຖືກໃຈດັ່ງຄຳສຸພາສິດວ່າ (ປາກດີມີສີແກ່ຕົວປາກຊົ່ວພາຕົວໝົ່ນໝອງ).

4) ເວົ້າແຕ່ຄວາມດີ ມີສາລະປະໂຫຍດແກ່ນສານຄືມີທັດສະນະຄະຕິດີ ໃຫ້ແນວຄິດທີ່ດີຕໍ່ຊີວິດຮູ້ຍ້ອງຍໍສັນລະເສີນດ້ວຍເຫດ ແລະ ຜົນຕາມຄວາມເປັນຈິງ.

### 2.2 ຄຳເວົ້າຄວນເອົາໃຈໃສ່ສຳລັບນັກຮຽນພວກເຮົາ ມີດັ່ງລຸ່ມນີ້:

#### ກ ຄຳເວົ້າໃນການພົບກັນ

ໃນເວລາພົບກັນນັກຮຽນຕ້ອງຮູ້ທີ່ຕ່ຳທີ່ສູງຄື ຜູ້ນ້ອຍພົບຜູ້ໃຫຍ່, ນັກຮຽນພົບຄູອາຈານ, ລູກພົບພໍ່ແມ່ ຫຼື ຄົນທົ່ວໄປຕ້ອງກ່າວຄຳວ່າ " ສະບາຍດີ " , ສະບາຍດີທ່ານຄູ, ສະບາຍດີອາຈານ, ສະບາຍດີພໍ່...

#### ຂ ຄຳເວົ້າໃນການກ່າວຄຳອຳລາຄາຈາກ

ກ່ອນຈະອຳລາຄາຈາກກັນ ສະເພາະຄູ ແລະ ນັກຮຽນຕ້ອງກ່າວຄຳວ່າ ລູກ, ຫຼານ, ນ້ອງພວກຫຼານ, ຂໍໂທດອາຈານ, ເອື້ອຍຄູ, ອ້າຍຄູ, ຫຼານຂໍອະນຸຍາດເມື່ອບ້ານ, ຕອບ, ເຊີນ, ຂໍຂອບໃຈ. ຖ້າກໍລະນີຕຳກັນຊົນກັນ ຫຼື ໃຊ້ສຽງເບື່ອງນັບລົບກວນຜູ້ອື່ນ ຫຼື ຜູ້ທັກທ້ວງ ຕ້ອງກ່າວຄຳວ່າຂໍໂທດບໍ່ໄດ້ຕັ້ງໃຈ.

**ຄ ຄຳເວົ້າໃນການໄຕ່ຖາມ**

ເວລາຜູ້ໃຫຍ່ກັບຜູ້ນ້ອຍ, ນັກຮຽນກັບຄູອາຈານ ແລະ ຜູ້ອື່ນໆ ພົບກັນໄຕ່ຖາມກັນດ້ວຍຄຳເວົ້າທີ່ວ່າ: ທ່ານລຸງ, ປ້າ, ອາວ, ອາ, ຄູອາຈານ, ສະບາຍດີບໍ? ຜູ້ຕອບກໍຕອບວ່າ: ຂອບໃຈສະບາຍດີເໝືອນເດີມ ຫຼື ເວົ້າໄດ້ວ່າ ເຈົ້າ ສະບາຍດີ. ຖ້າແມ່ນເພດບັນພະຊິດ (ພະສົງອົງຄະເຈົ້າດ້ວຍກັນ) ຖາມກັນ: ຍາທ່ານ, ຍາພໍ່, ຄູບາ, ອາຈານ ຍັງສຸກສະບາຍດີຢູ່ບໍ? ຕອບ ຂໍນະມັດສະການດ້ວຍບຸນຄຸນພໍ່ແມ່ຄູບາອາຈານ ຖ້າແມ່ນພໍ່ອອກ (ເພດຄະລືຫັດ) ກັບຄູບາອາຈານໂອ້ລົມກັນໂດຍທົ່ວໄປແມ່ນໃຊ້ຄຳວ່າ: ໂດຍຂະນ້ອຍ ຫຼື ໂດຍ.

**ງ ຄຳເວົ້າໃນການແນະນຳໃຫ້ຮູ້ຈັກກັນ**

ເວລາພວກເຮົາພົບພໍ້ກັບ ແຂກຄົນ ຫຼື ຄູອາຈານມາຢ້ຽມຢາມ ຄວນແນະນຳຕົນເອງດ້ວຍຄຳວ່າ ຂໍໂທດ, ຫຼານ, ເຮົາ, ຂ້ອຍ, ນ້ອງຊື່...ຖາມແຂກ, ຂໍໂທດທ່ານຊື່ຫຍັງ? ມາແຕ່ໃສ ທ່ານຕ້ອງການຫຍັງ? ເຊີນນັ່ງ... ເຊີນຕາມສະບາຍ.

**ຈ ຄຳເວົ້າໃນການສະແດງຄວາມດີໃຈ ແລະ ເສຍໃຈ**

ໃນເມື່ອເຮົາມີຄວາມດີຄວາມຊອບ ຫຼື ມີຜູ້ໃຫຍ່, ເພື່ອນມິດສະຫາຍມອບສິ່ງຂອງອັນໜຶ່ງໃຫ້ແກ່ຕົນເຮົາຄວນເວົ້າວ່າ: ຂອບໃຈ, ຂໍຮູ້ບຸນຄຸນຢ່າງເລິກເຊິ່ງ.

ຄຳວ່າທີ່ສະແດງຄວາມເສຍໃຈໃນພາສາລາວມີ: ຂໍໂທດ, ຂໍອາໄພ, ຂໍອາໄພຍະໂທດ, ຂໍອະໂຫສິ, ຂໍສະແດງຄວາມເສຍໃຈດ້ວຍ.

**ສ ຄຳເວົ້າໃນການຢ້ຽມຢາມຖາມຂ່າວ**

ເມື່ອແຂກຄົນ ຫຼື ອາຈານມາຢ້ຽມຢາມເຮົາ, ຄວນສະແດງຄຳເວົ້າທີ່ວ່າ ທ່ານ, ຄູ, ອາຈານ, ພໍ່ຕູ້, ແມ່ນາຍ, ສະບາຍດີບໍ? ເຊີນທ່ານນັ່ງພັກຜ່ອນ, ຂໍໂທດທ່ານມີວຽກຫຍັງ? ທ່ານມາຈາກໃສ? ທ່ານ ຕ້ອງການພົບໃຜ?

# 3 ມາລະຍາດທາງດ້ານຈິດໃຈ

ມາລະຍາດທາງ້ານຈິດໃຈ ແມ່ນມາລະຍາດທາງດ້ານສະຕິສຳປະຊັນຍະ ຄວາມຮູ້ສຶກ ຫຼື ຄວາມສຳນຶກໄດ້ກ່ຽວກັບຄວາມຜິດ, ຖືກ, ຄວາມຮ້າຍ ແລະ ອື່ນໆ ມາລະຍາດທາງດ້ານຈິດໃຈນັ້ນມີຢູ່ 3 ຢ່າງ ຄື:

1) ຄວາມເຄົາລົບດ້ວຍຄວາມຕັ້ງໃຈ, ປະຕິບັດຕາມຄຳສັ່ງສອນຄຳແນະນຳ, ຄຳຕັກເຕືອນຊີ້ນຳຂອງພໍ່ແມ່, ຄູບາອາຈານ, ເພື່ອນມິດ, ຜູ້ຊົງຄຸນວຸດທິ, ຜູ້ໃຫຍ່ທີ່ມີຄວາມຫວັງດີຕໍ່ເຮົາ.

2) ຄວາມເຄົາລົບດ້ວຍການລະນຶກເຖິງບຸນຄຸນ, ຄຸນງາມຄວາມດີຂອງພໍ່ແມ່, ຄູອາຈານ, ທ່ານຜູ້ນຳ, ພະສົງອົງຄະເຈົ້າ ແລະ ອື່ນໆ.

3) ຄວາມເຄົາລົບດ້ວຍການອຳລາອວຍພອນໄຊໃຫ້ໝູ່ເພື່ອນ, ຄູອາຈານ, ພໍ່ແມ່, ຜູ້ຊົງຄຸນວຸດທິ, ຜູ້ເຖົ້າຜູ້ແກ່ ແລະ ອື່ນໆ ດ້ວຍການອຳນວຍອວຍພອນໃຫ້ທ່ານເຫຼົ່ານັ້ນຈົ່ງມີອາຍຸໝັ້ນຍືນ ຕັ້ງໃຈເຮັດສິ່ງທີ່ດີງາມປາສະຈາກໂລກໄພຕ່າງໆ.

ມາລະຍາດທາງດ້ານຈິດໃຈມີຄວາມຈຳເປັນທີ່ສຸດ ເຊິ່ງທຸກຄົນຄວນສະແດງອອກດ້ວຍການສະແຫວງຫາສິ່ງທີ່ເປັນປະໂຫຍດເພື່ອສັງຄົມ ແລະ ມີຄວາມຈຳເປັນສຳລັບນັກຮຽນ, ນັກສຶກສາທີ່ຈະຕ້ອງຮຽນຮູ້ເຝິກຝົນຫຼໍ່ຫຼອມ ເຊິ່ງບັນຫາຕົ້ນຕໍ ໃນໂຮງຮຽນຄວນຈັດເປັນລຳດັບດັ່ງນີ້:

- ຈັດໂຮງຮຽນໃຫ້ເປັນລະບຽບ ລະບຽບການຕ່າງໆຂອງໂຮງຮຽນ ຄວນປະຕິບັດຢ່າງເຂັ້ມງວດໂດຍຈຳກັດພາບພົດຕ່າງໆໃນທາງທີ່ບໍ່ດີອອກ ໂດຍສະເພາະແມ່ນຄູອາຈານ ແລະ ນັກຮຽນ
- ໂຮງຮຽນຄວນຈັດກິດຈະກຳຕ່າງໆຂຶ້ນໃນວັນທີ່ສຳຄັນ ເຊັ່ນ ວັນຄູແຫ່ງຊາດ ວັນເດັກນ້ອຍ ວັນແມ່ຍິງ ວັນປູກຕົ້ນໄມ້ ວັນສ້າງສາສະໜາ ເພື່ອເຝິກຝົນຈິດໃຈໃຫ້ເຖິງຮູ້ບຸນຄຸນເຫຼົ່ານັ້ນ
- ຄູ - ອາຈານຕ້ອງເປັນແບບຢ່າງໃນທາງທີ່ດີ ວາງຕົວໃຫ້ສົມເປັນຄູທີ່ດີຂອງນັກຮຽນ ໃກ້ຊິດກັບເດັກ ຄູຄວນສະເໜີຈຸດພິເສດຂອງຕົນໃຫ້ນັກຮຽນຮູ້ ຄວນດັດນິໄສເດັກໃຫ້ຟັງຄວາມຄູອາຈານ ສອນໃຫ້ເດັກເປັນຄົນຮູ້ຜູ້ດີ, ມີສີລະທຳປະຈຳໃຈ.

# 4 ມາລະຍາດດ້ານການປະພຶດ

ມາລະຍາດການປະພຶດ ແມ່ນການສະແດງອອກທາງຮ່າງກາຍ, ທາງດ້ານກິລິຍາມາລະຍາດ ແລະ ວາດຊີງ ການດຳລົງຊີວິດຂອງຄົນເຮົາຢູ່ໃນສັງຄົມມັນສະແດງອອກ 2 ດ້ານຄື:

## 4.1 ມາລະຍາດທາງດ້ານອິລິຍະບົດ

ມາລະຍາດທາງດ້ານອິລິຍະບົດ ແມ່ນທ່າທີສະແດງອອກຂອງຄົນເຮົາຢູ່ໃນສັງຄົມ ເຊິ່ງຍັ້ງ ຍືນ ເຖິງແບບແຜນ, ຄຸນສົມບັດມາລະຍາດທີ່ດີ ຂອງຄົນ ແລະ ເຮັດໃຫ້ຄົນສະ ຫງ່າລາສີ, ບໍ່ເກົ້ເຂີນໃນວົງສັງຄົມ.

**ກ ການສະແດງຄວາມເຄົາລົບ ດ້ວຍການຂາບໄຫ້ວ ຫຼື ຍົກມືໄຫ້ວ**

ວິທີການນີ້ສະແດງອອກ 5 ດ້ານ ຄື:

- **ການໄຫ້ວພະພຸດທະຮູບ ແລະ ໄຫ້ວພະສົງ**

ວິທີໄຫ້ວ ແມ່ນໃຫ້ນັ່ງຄູ້ເຂົ່າແລ້ວປະນົມມືຂຶ້ນເປັນຮູບດອກບົວຢູ່ໃຈກາງເອິກ ແລ້ວບໍມືຂຶ້ນ ໃຫ້ປາຍນິ້ວຈຸຕີນຜົມ ແລ້ວກົ້ມຫົວລົງກັບພື້ນໃຫ້ນິ້ວມືແຜ່ລົງກັບພື້ນ ຫຼັງຈາກນັ້ນໃຫ້ຂາບລົງ 3 ເທື່ອ ຖ້າໃຊ້ຜ້າປູ ແລ້ວຂາບລົງນັ້ນຖືວ່າການເຄົາລົບສູງສຸດ.

ເມື່ອຂຶ້ນໄປທຳແຈກທີ່ມີພະພຸດທະຮູບ ຕ້ອງຂາບ 3 ຄັ້ງ, ກ່ອນຈະລົງກໍຕ້ອງຂາບລົງ 3 ຄັ້ງອີກ.



ຮູບພາບໄຫ້ວພະພຸດທະຮູບ ແລະ ພະສົງ

- **ການໄຫ້ວຜູ້ອາວຸໂສ ຜູ້ຊົງຄຸນວຸດທິ ຫຼື ຄູອາຈານ**

ວິທີໄຫ້ວຜູ້ອາວຸໂສ ແລະ ຄູອາຈານ ໂດຍທົ່ວໄປແລ້ວມີ 2 ຮູບແບບ ຄື ແບບທົ່ວໄປ ແລະ ແບບນັບຖືເຄົາລົບສູງສຸດ, ວິທີການໄຫ້ວແບບທົ່ວໄປ ຄື ປະນົມມືຂຶ້ນເປັນຮູບດອກບົວຢູ່ກາງໜ້າເອິກ. ແຂນທັງສອງແນບກັບເລົາຄີງແລ້ວຍໍມືຂຶ້ນໃຫ້ປາຍນິ້ວຈຸຫວ່າງຄິ້ວ ຫຼື ຈຸ ປາຍດັງ ຫຼັງຈາກນັ້ນກົ້ມຫົວລົງ.

ວິທີແບບເຄົາລົບສູງສຸດຄືໃຫ້ນັ່ງລົງແລ້ວປະນົມມືຂຶ້ນເປັນຮູບດອກບົວຢູ່ກາງໜ້າເອິກ, ແຂນທັງສອງແນບກັບເລົາຄີງ, ຍໍມືຂຶ້ນໃຫ້ພຽງຫວ່າງຄິ້ວ, ຫຼັງຈາກນັ້ນໃຫຂາບລົງກັບພື້ນ 1 ຄັ້ງ, ໂດຍບໍ່ແບມືອອກ.

ກໍລະນີພົບພໍ້ຕາມຖະໜົນຫົນທາງ ຫຼື ສະຖານທີ່ອື່ນ ທີ່ເພິ່ນຍືນ ຫຼືຍ່າງຢູ່ເຮົາຕ້ອງສະແດງຄວາມເຄົາລົບເພິ່ນ ໂດຍຄູອາຈານເຊິ່ງປຽບເໝືອນພໍ່ - ແມ່ ຜູ້ທີ່ສອງຂອງພວກເຮົາ, ເຮົາຕ້ອງເຄົາລົບເພິ່ນ ດ້ວຍການຢືນກົງ (ປົດໝວກ) ຫຼື ງັບຄັນຮົ່ມ ແລ້ວປະນົມມືຂຶ້ນພຽງຫວ່າງຄິ້ວ ກົ້ມຫົວລົງໜ້ອຍໜຶ່ງ ແລ້ວກ່າວຄຳວ່າ "ສະບາຍດີ".



ຮູບພາບການໄຫ້ວຜູ້ອາວຸໂສ

- **ການໄຫ້ວໝູ່ເພື່ອນມິດສະຫາຍ**

ວິທີການໄຫ້ວ ແມ່ນປະນົມມືຂຶ້ນເປັນຮູບດອກຝ້າຢູ່ກາງເອິກໃຫ້ປາຍນິ້ວຈຸຄາງພໍດີ.




ຮູບການໄຫ້ວໝູ່ເພື່ອນ

- **ການໄຫ້ວເດັກນ້ອຍ**

ໄຫ້ວປະນົມມືຂຶ້ນເປັນຮູບດອກບົວຢູ່ກາງເອິກພໍດີ.

- **ການໄຫ້ວສົບ (ຄົນຕາຍ)**

ຄວນຈູດທູບທຽນ 1 ຄູ່ ແລ້ວປະນົມມືຂຶ້ນເປັນຮູບດອກບົວຢູ່ກາງເອິກ, ຍໍມືຂຶ້ນໃສ່ຫົວແລ້ວລົງກັບພື້ນ 1 ຄັ້ງ (ໂດຍບໍ່ໄດ້ແບມື).

## 4.2 ມາລະຍາດ ແລະ ທ່າທາງໃນອິລິຍະບົດຕ່າງໆ

**ກ ການຢືນ**

- ຢືນຜູ້ດຽວຄວນໃຫ້ມີລັກສະນະທີ່ສຸພາບ, ສະຫງ່າ, ບໍ່ຫັນໜ້າໄປມາ, ບໍ່ແກ່ວງແຂນ ແລະ ບໍ່ຢືນຈ່າງຂາ.

- ຢືນສະເພາະເຫັນຜູ້ໃຫ່ຍ ບໍ່ຈຳເປັນບໍ່ຄວນຢືນຕໍ່ໜ້າຜູ້ໃຫ່ຍ, ຄວນຢືນຢູ່ຂ້າງຊ້າຍ ຫຼື ຂ້າງຂວາງເລັກໜ້ອຍ.

- ຢືນກົງ ຂາຊື່ ປ່ອຍເຂົ່າຫ່າງກັນເລັກໜ້ອຍ ມືທັງສອງແນບຂ້າງ

- ຢືນໃຫ້ກຽດ ເມື່ອໄດ້ຍິນສຽງເພງຊາດ ພວກເຮົາຢືນກົງຂຶ້ນຢ່າງສຸພາບແລ້ວຫັນໜ້າໄປຫາທຸງຊາດຈົນຈົບເພງ.

**ຂ ການຍ່າງ**

- **ຍ່າງຜູ້ດຽວ**

ຍ່າງຢ່າງສຸພາບ ບາດກ້າວບໍ່ໃຫ້ສັ້ນ ຫຼື ຍາວເກີນໄປ, ແກວ່ງແຂນພໍດີງາມ, ຖ້າເປັນສຸພາບສະຕີ ຄວນລະວັງກະໂພກໃຫ້ເປັນໄປຕາມປົກກະຕິ ບ່າໄຫຼ່ຕ້ອງສະເໝີບໍ່ໂຍກໄປໂຍກມາ.

- **ຍ່າງກັບຜູ້ໃຫຍ່**

ຍ່າງໄປຂ້າງຊ້າຍຂອງຜູ້ໃຫຍ່ເລັກໜ້ອຍ ແລ້ວໃຫ້ຫ່າງກັນປະມານ 1-2 ສອກ, ໃຫ້ຢູ່ໃນລັກສະນະທີ່ນອບນ້ອມ.

- **ຍ່າງເຂົ້າຫ້ອງປະຊຸມ**

ໝາຍເຖິງການຍ່າງເຂົ້າໃນຫ້ອງ ຫຼື ສະຖານທີ່ປະຊຸມທີ່ມີຄົນນັ່ງຢູ່ກ່ອນແລ້ວ ຫຼື ນັ່ງກົງກັນຂ້າມເຮົາຄວນຍ່າງຊ້າໆ ແລະ ສຸພາບດີບໍ່ໃຊ້ສຽງດັງ.

- **ການຍ່າງໃນຊຸມຊົນທີ່ນັ່ງຕັ່ງອີ້**

- ຍ່າງໄປຢ່າງສຸພາບ ບໍ່ເຮັດສຽງດັງ ແລະ ບໍ່ຊັກຊ້າ
- ເມື່ອຜ່ານຜູ້ນັ່ງຢູ່ກ່ອນ ຄວນກົ້ມຫົວລົງໜ້ອຍໜຶ່ງ ຢ່າໃຫ້ເສື້ອຜ້າໄປຖືກກັບຜູ້ອື່ນ
- ຖ້າບໍ່ມີການກຳນົດຕັ່ງອີ້ ໃຫ້ນັ່ງບ່ອນທີ່ສົມຄວນ ຢ່າລາກຕັ່ງອີ້ໃຫ້ດັງ ຫຼື ຍົກຍ້າຍຕັ່ງອີ້ໄປຕັ້ງບ່ອນໃໝ່ ເພາະຈະເຮັດໃຫ້ສຽງດັງລົບກວນ
- ຖ້າກຳນົດຕັ່ງໄວ້ກໍໄປນັ່ງບ່ອນຂອງຕົນ.

**ຄ ການສົນທະນາ**

ໃນປັດຈຸບັນນີ້ ມີຜູ້ສົນໃຈໃນເລື່ອງກິລິຍາມາລະຍາດການໃຊ້ຖ້ອຍຄຳ ເພື່ອປຶກສາຫາລືສົນທະນາກັນ, ມັນມີປະໂຫຍດຫຼາຍຕໍ່ພວກເຮົາ, ເຮົາຕ້ອງຄຳນຶງເຖິງຫຼັກການດັ່ງນີ້:

- ເຮົາກຳລັງສົນທະນາກັບໃຜ.
- ຢູ່ສະຖານທີ່ໃດ.
- ຄວນໃຊ້ຄຳເວົ້າແນວໃດ.
- ທຳນອງສຽງທີ່ໃຊ້ ຄວນໜັກເບົາເທົ່າໃດ.
- ຕ້ອງໃຫ້ຜູ້ອື່ນມີໂອກາດສົນທະນາ ແລະ ມີການອອກຄຳຄິດເຫັນດ້ວຍ.

**ງ ການກິນ**

ມາລະຍາດໃນການກິນເປັນສິ່ງສຳຄັນຢູ່ໃນສັງຄົມທີ່ຈະເລີນແລ້ວມີລະບຽບການກິນຫຼາຍຢ່າງແຕ່ສິ່ງທີ່ເຮົາຄວນຮູ້ຕ້ອງປະຕິບັດດັ່ງນີ້:

- ນັ່ງຕົວກົງດ້ວຍມາລະຍາດທີ່ສະຫງົບສະຫງ່ຽມ
- ເມື່ອຕັກອາຫານເຂົ້າປາກບໍ່ໃຫ້ມັນຕົກ
- ເວລາຫຍໍ້າອາຫານ ບໍ່ຄວນອ້າປາກກວ້າງ ແລະ ບໍ່ໃຫ້ມີສຽງດັງ
- ບໍ່ປາກ ບໍ່ເວົ້າ ໃນຂະນະທີ່ມີອາຫານຢູ່ປາກ
- ການສົນທະນາບໍ່ໃຫ້ເວົ້າຫຼາຍ ແລະ ບໍ່ຄວນເວົ້າເລື່ອງໜ້າລັງກຽດ ຫຼື ເລື່ອງໂສກເສົ້າ
- ຕ້ອງກິນອາຫານທຸກເຍື່ອງ ບໍ່ຄວນເລືອກກິນແຕ່ສິ່ງທີ່ຕົນມັກ
- ເມື່ອອີ່ມແລ້ວໃຫ້ເຂ່ຍເສດອາຫານມາຮ່ວມກັນໄວ້
- ບໍ່ອີ່ມໄວ ຫຼື ຊ້າເກີນໄປ.

# 5 ມາລະຍາດໃນການຕ້ອນຮັບແຂກ

ໃນການຕ້ອນຮັບແຂກພວກເຮົາຄວນມີມາລະຍາດຕ້ອນຮັບແຂກ, ຫຼັກການຕ້ອນຮັບແຂກ, ທີ່ເຈົ້າຂອງບ້ານຄວນປະຕິບັດດັ່ງນີ້:

- ເຈົ້າຂອງເຮືອນກ່າວຄຳວ່າ "ສະບາຍດີ" ບໍ່ຄວນຖາມແຂກວ່າມາຫາມີວຽກຫຍັງເປັນອັນຂາດກ່ອນເຊີນນັ່ງ.
- ເມື່ອແຂກມາເຮືອນກົງກັບເວລາຮັບປະທານອາຫານ ຄວນເຊີນແຂກເຂົ້າຮ່ວມຮັບປະທານດ້ວຍ.
- ຖ້າແຂກມາຂໍຄວາມຊ່ວຍເຫຼືອ ກໍຄວນຊ່ວຍຕາມສົມຄວນຖ້າຂັດຂ້ອງກໍຊີ້ແຈງຢ່າງສຸພາບ.
- ມີຂ້ອງຕ້ອນຮັບແຂກຕາມປະເພນີທີ່ນິຍົມກັນຄື ນ້ຳດື່ມ.
- ເວົ້າຈາກັບແຂກດ້ວຍໃບໜ້າຍິ້ມແຍ້ມແຈ່ມໃສ.
- ບໍ່ຮ້າຍຄົນໃນເຮືອນຕໍ່ໜ້າແຂກ.
- ບໍ່ຄວນເບິ່ງໂມງເລື້ອຍໆ.
- ຕ້ອງເຂົ້າໃຈວ່າຜູ້ເປັນແຂກມາເຮືອນ ຖືວ່າມີກຽດຫຼາຍທີ່ສຸດ.

# 6 ມາລະຍາດໃນການສຳພັດມື, ຈາມ, ໄອ, ຫາວ

- ເວລາຍື່ນມືອອກໄປສຳພັດ ຄວນຈັບເບົາໆພ້ອມກັບຍິ້ມໃຫ້ຜູ້ທີ່ເຮົາສຳພັດມືນັ້ນຢ່າງສຸພາບບໍ່ຄວນກົ້ມຫົວ ຫຼື ຫັນໜ້າທາງໄປອື່ນ.
- ເມື່ອຢູ່ຮ່ວມກັນຫຼາຍຄົນ ເວລາມີອາການໄອ, ຈາມ ຫຼື ຫາວ ຄວນເອົາແພມົນບັງ ຫຼື ເອົາມືບັງປາກໄວ້ ຫຼື ຫັນໜ້າໄປທາງອື່ນ ບໍ່ຄວນໄອ, ຈາມ, ຫາວ ໂດຍບໍ່ມີແພບັງປາກເອົາໄວ້ ຫຼື ຕ້ອງຫັນໜ້າໄປທາງອື່ນ.

# 7 ມາລະຍາດໃນຫ້ອງການ ແລະ ຄອບຄົວ

## 7.1 ມາລະຍາດໃນຫ້ອງການ

- ຜູ້ໃຫ່ຍຕ້ອງເປັນແບບຢ່າງໃນການນຸ່ງຫົ່ມ, ແຕ່ງຕົວ, ການເວົ້າຈາປາໄສ, ການໄປມາລາຄອບ ແລະ ພຶດຕິກຳຕ່າງໆ.
- ພິຈາລະນາຫາເຫດຜົນກ່ອນ ຈຶ່ງຄ່ອຍຕຳນິວິຈານ, ຕຳນິຕິຊົມ ຜູ້ຢູ່ໃຕ້ບັງຄັບບັນຊາ.
- ບໍ່ເວົ້າຈາສິ່ງທີ່ລາມົກອະນາຈານ, ກໍ່ຄວາມແຕກແຍກ ແລະ ສິ່ງທີ່ໄຮ້ສາລະປະໂຫຍດ.
- ຮັກສາຄວາມເປັນລະບຽບຮຽບຮ້ອຍໃນໂມງການ.
- ບໍ່ຕິດສິນນິນທາໃສ່ຮ້າຍປ້າຍສີເຊິ່ງກັນ ແລະ ກັນ.
- ເມື່ອເຂົ້າໃນຫ້ອງການຄວນປົດໝວກ ແລະ ບໍ່ຄວນໃຊ້ສຽງດັງ.
- ຖ້າມີເພດຍິງຢູ່ຮ່ວມຫ້ອງບໍ່ຄວນສູບຢາ.
- ນັ່ງ ແລະ ວາງຕົວຢູ່ໃນຫ້ອງການໃຫ້ຖືກລັກສະນະ.

## 7.2 ມາລະຍາດໃນຄອບຄົວ

- ບໍ່ຊອກຫາຄວາມບໍ່ດີໃສ່ຄອບຄົວ.
- ບໍ່ສະແດງອາການກິລິຍາແຂງກະດ້າງ, ກ່າວຄຳຫຍາບຊ້າເຊິ່ງກັນ ແລະ ກັນ.
- ຫຼີກເວັ້ນການໃຊ້ອາລົມ, ຊອກຫາເຫດຜົນເພື່ອແກ້ໄຂບັນຫາ.
- ຄວາມໃນບໍ່ໃຫ້ນຳອອກຄວາມນອກບໍ່ໃຫ້ນຳເຂົ້າມາເຮືອນ.
- ປົດໝວກ, ຖອດແວ່ນຕາດຳ, ງັບຄັນຮົ່ມແລ້ວຈຶ່ງຂຶ້ນເທິງເຮືອນ.

## 7.3 ມາລະຍາດໃນການຮຽນ

- ນັກຮຽນເຄົາລົບຄູອາຈານດ້ວຍການລຸກຂຶ້ນ, ຍົກມືໄຫ້ວ, ປົດໝວກ, ກົ້ມຫົວຄຳນັບແລ້ວຖາມສະບາຍດີ.
- ນັກຮຽນຕ້ອງນັ່ງຕໍ່ກ່ວາຄູອາຈານ.
- ຄູອາຈານຖາມບັນຫາຄວນລຸກຂຶ້ນ ຂໍອະນຸຍາດແລ້ວຈຶ່ງຕອບ, ກ່ອນຈະນັ່ງລົງກົ້ມຫົວລົງໜ້ອຍໜຶ່ງ
- ຕັ້ງໃຈຟັງຄູອະທິບາຍ ແລະ ຈົດເອົາບັນຫາທີ່ສຳຄັນ.

- ເວລານັ່ງຮຽນບໍ່ຄວນງວກຊ້າຍ, ຫຼຽວຂວາ, ບໍ່ລົບກວນ, ບໍ່ເຫົງານອນ.

- ເຂົ້າ ແລະ ອອກຫ້ອງກົງເວລາ ຖ້າເຂົ້າຫ້ອງຊ້າຕ້ອງຂໍອະນຸຍາດນໍາຄູຈຶ່ງເຂົ້າ.

- ບໍ່ຄວນດື່ມ ແລະ ກິນອາຫານ ໃນຊົ່ວໂມງຮຽນ, ມີກິດທຸລະອັນໃດ ຄວນໄດ້ຮັບອະນຸຍາດກ່ອນຈຶ່ງອອກຫ້ອງ.

# 8 ມາລະຍາດທາງດ້ານຄຸນສົມບັດ

ຄຸນສົມບັດ ແມ່ນຄວາມດີຍິ່ງ, ບໍລິບູນດ້ວຍຄວາມດີ ຫຼື ເວົ້າອີກຢ່າງໜຶ່ງວ່າຄຸນສົມບັດແມ່ນມາດຖານການປະພຶດດ້ວຍຄວາມສາມັກຄີ່ນຕົວຂອງຄົນຢູ່ໃນການພົວພັນລະຫວ່າງຄົນກັບຄົນ ແລະ ຄົນກັບສັງຄົມ.

**ກ ຄຸນສົມບັດຂອງຜູ້ນໍາ**

- ມີຈິດໃຈເພື່ອແຜ່ອະນຸເຄາະ ຫຼື ຊ່ວຍເຫຼືອຜູ້ທີ່ຢູ່ໃຕ້ຄວາມບັງຄັບບັນຊາ.
- ມີຄວາມຊື່ສັດ
- ບໍ່ລືຈາກຊັບສ່ວນຕົວເພື່ອສາທາລະນະປະໂຫຍດຂອງສັງຄົມ
- ກົງໄປກົງມາບໍ່ເຂົ້າຂ້າງອອກຂາ
- ເວົ້າຈາສຸພາບອ່ອນຫວານ, ບໍ່ໂຕ້, ບໍ່ແຂງກະດ້າງ, ເຝິກຝົນຕົນເອງໃນທາງທີ່ດີ
- ບໍ່ສ້າງຄວາມເດືອດຮ້ອນໃຫ້ແກ່ຄົນອື່ນ ໂດຍທາງກົງ ແລະ ທາງອ້ອມ
- ບໍ່ມີຄວາມອິດສາບັງບຽດຕໍ່ບຸກຄົນອື່ນ
- ມີຄວາມອົດທົນ ແລະ ປະພຶດຕົນຢູ່ໃນກົດໝາຍ ແລະ ລະບຽບຕ່າງໆ

**ຂ ນິດໄສຂອງຫົວໜ້າ**

- ມີສາຍຕາເປັນທໍາ ຮູ້ແນມເບິ່ງເບື້ອງລຸ່ມ ແລະ ແນມເບື້ອງເທິງ
- ມີຈິດໃຈໜັກແໜ້ນ ບໍ່ເປັນຄົນຫູເບົາເອົາຄວາມງ່າຍ
- ທໍາຕົວເປັນຂ້ອນໃຈຂອງປວງຊົນ ຄືເຄົາລົບສິດທິຂອງປະຊາຊົນ
- ມີຄວາມຮູ້ ມີຄວາມສາມາດ ມີຄວາມສະຫຼາດຕໍ່ທຸກບັນຫາ
- ມີກິລິຍາມາລະຍາດ ແລະ ເປັນທີ່ໄວ້ວາງໃຈຂອງປວງຊົນ
- ຮູ້ເຕົ້າໂຮມຄວາມສາມັກຄີ ແລະ ມີຄວາມໜັກແໜ້ນ
- ມີຄວາມຊື່ສັດສຸດຈະລິດຕໍ່ຊາດ ຕໍ່ປະຊາຊົນ
- ເປັນແບບຢ່າງຂະຫຍັນຂັນແຂງ ເອົາການເອົາງານ
- ເຄົາລົບກົດໝາຍບ້ານເມືອງຢ່າງເຂັ້ມງວດ
- ຮູ້ຜ່ອນສັ້ນຜ່ອນຍາວ ແລະ ຮູ້ບຸນຄຸນຕໍ່ຊາດ ຕໍ່ປະຊາຊົນ

**ຄ ຄຸນນະທໍາຂອງຄົນດີ**

- ບໍ່ຂົ່ມເຫັງຜູ້ອ່ອນແອ ແລະ ຜູ້ດ້ອຍໂອກາດ
- ຮັກສາຊື່ສຽງກຽດ ແລະ ສັກສີ
- ບໍ່ຮັບສິນບົນ ແລະ ເວົ້າຄວາມບໍ່ຈິງ ໃສ່ຮ້າຍຄົນອື່ນ
- ສະຫງ່ຽມຄຽມຄົມ ແລະ ສຸພາບຮຽບຮ້ອຍ
- ອ່ອນນ້ອມຖ່ອມຕົວແຕ່ມັກສະຫງວນຫາຮໍ່າຮຽນ
- ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຢ້ານກົວຕໍ່ການກະທໍາຄວາມຜິດ

**ງ ຄຸນສົມບັດຂອງພົນລະເມືອງ**

- ຮັກປະເທດຊາດ ບ້ານເກີດເມືອງນອນ ຮັກສະພາບແວດລ້ອມໃນພູມປະເທດຂອງຕົນ
- ຮັກທ່ານຜູ້ນໍາ ຮັກລັດຖະບານ, ພໍ່ແມ່ບັງເກີດ, ຄູອາຈານ, ພະສົງ, ປູຊະນີຍະສະຖານ, ວັດຖຸບູຮານ
- ຮັກການສຶກສາ, ຄົ້ນຄ້ວາຮໍ່າຮຽນ, ຮັກອະນາຄົດອັນກ້າວໜ້າ, ພັດທະນາຕົນເອງ ແລະ ສັງຄົມໃຫ້ຈະເລີນຮຸ່ງເຮືອງ.

- ຮັກການອອກແຮງງານ, ສ້າງອະນາຄົດອັນສົດຊື່ນແຈ່ມໃສ
- ຮັກອະນາໄມ 3 ສະອາດ ເພື່ອປາສະຈາກໂລກໄພຕ່າງໆ
- ຮັກລະບຽບວິໄນ, ຄິດ ແລະ ເຮັດອັນໃດໃນທາງທີ່ຊອບ ປະກອບກິດຈະກຳໃຫ້ຖືກກັບກົດໝາຍ ແລະ ລະບຽບ.

**ຈ ຄຸນສົມບັດຂອງຜູ້ດີທີ່ຄວນເອົາໃຈໃສ່**

- ຊັງສັດຕູຂອງຊາດທີ່ຕ້ານປະຊາຊົນ.
- ຊັງຄວາມກຽດຄ້ານມັກງ່າຍ ບໍ່ຍຸດຕິທຳ.
- ຊັງຄວາມເປິະ, ເປື້ອນ ສົກກະປົກ ຮົກເຮື້ອ ໝົ່ນໝອງບໍ່ມີລະບຽບອັນຈົບງາມ.
- ມີຄວາມກ້າຫານ, ອົດທົນ, ຈິດໃຈເຢືອກເຢັນ ສຸຂຸມຮອບຄອບ.
- ມີຄວາມເມດຕາ, ເອື້ອເຟື້ອເພື່ອແຜ່.
- ສັດຊື່ສຸດຈະລິດ, ຢຶດໝັ້ນອຸດົມຄະຕິຊີວິດທີ່ດີ.

## ຄຳຖາມ :

1. ມາລະຍາດແມ່ນຫຍັງ?
2. ມາລະຍາດທາງດ້ານວາຈາມີຈັກຢ່າງ? ອະທິບາຍ.
3. ມາລະຍາດທາງດ້ານຈິດໃຈແມ່ນຫຍັງ? ມີຈັກຢ່າງ (ອະທິບາຍແຕ່ລະຢ່າງ)

# ບົດທີ 5

# ການແຕ່ງກາຍ (ການນຸ່ງຫົ່ມຂອງຄົນລາວ ແລະ ອາຊຽນ)

ການແຕ່ງກາຍ ແມ່ນມາລະຍາດອັນໜຶ່ງຂອງຄົນໃນສັງຄົມ ທີ່ບົ່ງບອກເຖິງວັດທະນະທຳ. ຄວາມມີລະບຽບ ແບບແຜນຂອງ ຄົນໃນຊາດໜຶ່ງໆ ສຳລັບອາຊຽນອາຊຽນພວກເຮົາແລ້ວ ແຕ່ລະຊາດກໍມີລະບຽບແບບແຜນ ຫຼື ມາລະຍາດໃນການແຕ່ງກາຍທີ່ເປັນເອກະລັກຂອງໃຜລາວມາແຕ່ບູຮານນະການ ແລະ ມີການປັບປຸງໃຫ້ສອດຄ່ອງກັບຍຸກສະໄໝ ແຕ່ໃນຄະນະດຽວກັນນັ້ນ ກໍອະນຸລັກຮັກສາໄວ້ເຊິ່ງຂະນົບທຳນຽມການນຸ່ງຖືແບບດີງາມຂອງຊາດໄວ້.

## 1 ການແຕ່ງກາຍຂອງລາວ

### 1.1 ການນຸ່ງຫົ່ມຢູ່ໃນເຮືອນ

**ກ ເພດຊາຍ**

ຜູ້ອາວຸໂສ ຜູ້ມີຄອບຄົວນຸ່ງຖື ມີຄວາມແຕກຕ່າງກັນ ນຸ່ງຜ້າສະໂຫຼ່ງໄໝ ຫຼື ຝ້າຍ, ໂສ້ງຂາສັ້ນ ຫຼື ໂສ້ງຂາສາມສ່ວນ, ນຸ່ງເສື້ອຊາວນາ, ຄໍມົນ, ຄໍຈອຍ, ຄໍເຊີດ ຫຼື ເສື້ອຢືດ, ໂສ້ງ ແລະ ເສື້ອ ສ່ວນຫຼາຍ ຍ້ອມດ້ວຍສີທຳມະຊາດ ຍ້ອມນ້ຳສີ ຫຼື ຍ້ອມນ້ຳຄາມ.

**ຂ ເພດຍິງ**

ເຖົ້າແກ່ຜູ້ມີລູກມີຜົວ, ໄວກາງຄົນ, ນຸ່ງສິ້ນມີຫົວ, ມີຕີນສິ້ນຝ້າຍ ຫຼື ສິ້ນໄໝ, ສິ້ນມັດໝີ່, ນຸ່ງເສື້ອແຂນສັ້ນ ຫຼື ແຂນສາມສ່ວນ, ເສື້ອຄໍມົນ ຫຼື ເສື້ອໝາກກະແຫຼ່ງ.

### 1.2 ການນຸ່ງຫົ່ມໃນງານປະເພນີ

**ກ ເພດຊາຍ**

ເຖົ້າແກ່ອະວຸໂສ ນຸ່ງຜ້າສະໂຫຼ່ງໄໝ ຫຼື ນຸ່ງໂສ້ງຂາຍາວ, ນຸ່ງເສື້ອແຂນຖ່ອງສີຂາວ ຫຼື ສີລາຍລຽບ, ໃສ່ເກີບຊັ້ງດ່ານ ຫຼື ໂອຊີກ.



( ການນຸ່ງຫົ່ມຂອງເພດຊາຍ)

**ຂ ເພດຍິງ**

- ຜູ້ເຖົ້າອາຍຸ 50 - 60 ປີຂຶ້ນໄປ ນຸ່ງສິ້ນຝ້າຍ ຫຼື ສິ້ນໄໝມີຫົວມີຕີນ, ນຸ່ງເສື້ອສີຂາວ, ເສື້ອລາຍ ຫຼື ສີເຫຼືອງອ່ອນ ແຂນສັ້ນ ຫຼືແຂນຍາວ

- ອາຍຸ 50 ປີລົງມາ ນຸ່ງສິ້ນຝ້າຍ ຫຼື ສິ້ນໄໝ ມີຫົວມີຕີນ, ນຸ່ງເສື້ອແຂນຖ່ອງສີຂາວ, ສີເຫຼືອງອ່ອນ, ສີລາຍລຽບ.



( ການນຸ່ງຫົ່ມເພດຍິງ)

## 1.3 ການນຸ່ງຫົ່ມໃນພິທີທາງການ (ພິທີລັດຖະການ)

ການນຸ່ງຫົ່ມໃນພິທີທາງການ ມີ 2 ປະເພດຄື:

**ກ ພິທີທາງສາສະໜາ (ງານຮີດຄອງປະເພນີ)**

ງານນີ້ ມີພິທີສູ່ຂວັນ, ບຸນປີໃໝ່, ບຸນຊ່ວງເຮືອ, ທອດກະຖິນ, ເຮັດບຸນສິນກິນທານ ແລະ ອື່ນໆ ການແຕ່ງຕົວແມ່ນນຸ່ງຜ້າກ່ອມ ຫຼື ນຸ່ງໂສ້ງຂາຍາວສີດຳ ຫຼື ສີຟ້າ, ເສື້ອແຂນສັ້ນ, ແຂນຖ່ອງ ຫຼື ໃສ່ຊຸດສາກົນ (ຊຸດແວັດ) ໃສ່ເກີບໂອຊິກ ຫຼື ເກີບສຸບ, ໃສ່ແພບ່ຽງບ້າຍ ຫຼື ບາງພິທີທີ່ສຳຄັນທາງລັດຖະກອນ ເຊັ່ນ ທະຫານ, ຕຳຫຼວດ, ຕ້ອງຕິດຫຼຽນກຽດຕິຍົດ, ຫຼຽນໄຊ, ຫຼຽນກາຕ່າງໆ.



(ຮູບ ການນຸ່ງຫົ່ມພິທີທາງສາສະໜາ)

**ຂ ພິທີການທີ່ບໍ່ກ່ຽວຂ້ອງກັບສາສະໜາ**

ພິທີການທີ່ບໍ່ກ່ຽວຂ້ອງກັບສາສະໜາມີບຸນວັນຊາດ, ວັນກອງທັບ, ງານຊຸມມິດຕິ້ງ, ແລະ ງານສະເຫຼີມສະຫຼອງວັນສຳຄັນຕ່າງໆ

- **ເພດຊາຍ**

ຜູ້ເຖົ້າ ຜູ້ທີ່ມີອາຍຸໄວກາງຄົນ ແລະ ຊາວໜຸ່ມຈະນຸ່ງໂສ້ງຂາຍາວສີດຳ, ສີຟ້າ, ສີຕ່າງໆ ນຸ່ງເສື້ອຂາວ

ແຂນສັ້ນ ຫຼື ແຂນຍາວ, ເສື້ອກຸຍເຮັງ, ຊຸດສາກົນ, ເອົາເສື້ອເຂົ້າໃນ, ໃສ່ເກີບສຸບ ຫຼື ເກີບໂອຊິກ, ມັດກາລະວັດ.

- ເພດຍິງ

ຜູ້ເຖົ້າຜູ້ທີ່ມີອາຍຸໄວກາງຄົນນຸ່ງສິ້ນຝ້າຍ, ສິ້ນໄໝ, ມີຫົວ ມີຕີນ, ນຸ່ງເສື້ອແຂນຍາວ ຫຼື ເສື້ອແຂນສັ້ນ ເສື້ອສີຕ່າງໆ ຫຼື ນຸ່ງເຄື່ອງແບບທາງລັດຖະການ.




ພິທີການທີ່ບໍ່ກ່ຽວຂ້ອງກັບສາສະໜາ

## 1.4 ການນຸ່ງຫົ່ມໃນງານແຕ່ງດອງ

### ກ ເພດຊາຍ (ເຈົ້າບ່າວ)

ນຸ່ງຜ້າກ່ອມ, ນຸ່ງຜ້າສະໂຫຼ່ງໄໝ, ຝ້າຍ ຫຼື ນຸ່ງໂສ້ງຂາຍາວສີດຳ, ສີຟ້າ, ນຸ່ງເສື້ອຄໍປິດ ຫຼື ຄໍເຊີດສີຂາວແຂນສັ້ນ ຫຼື ແຂນຍາວ, ໃສ່ເກີບໂອຊິກ, ຖົງຕີນສີຂາວ ແລະ ແພບ່ຽງບ້າຍ.



(ການນຸ່ງຫົ່ມໃນພິທີງານແຕ່ງດອງ)

### ຂ ເພດຍິງ (ເຈົ້າສາວ)

ນຸ່ງສິ້ນໄໝ ຫຼື ສິ້ນຝ້າຍທີ່ມີຫົວມີຕີນ, ນຸ່ງສິ້ນລາຍດອກ, ດອກຄຳ, ເກົ້າຜົມ ແພບ່ຽງ ໃສ່ເກີບທຳມະດາ

## 1.5 ການນຸ່ງຫົ່ມ ແລະ ການແຕ່ງກາຍຂອງນັກຮຽນ

ນັກຮຽນເພດຊາຍ ແລະ ເພດຍິງ ຈະແຕ່ງຕົວຕາມຊັ້ນຮຽນດັ່ງນີ້

### ກ ຊັ້ນອະນຸບານ ຫາ ຊັ້ນປະຖົມສົມບູນ

- **ເພດຊາຍ :** ນຸ່ງໂສ້ງຂາສັ້ນ ຫຼື ຂາຍາວສີດຳ, ສີຟ້າ, ເສື້ອແຂນສັ້ນ ຫຼື ຍາວສີຂາວໃສ່ເກີບຜ້າ, ຖົງຕີນສີຂາວ ຫຼື ໃສ່ເກີບສຸພາບທຳມະດາ.

- **ເພດຍິງ :** ນຸ່ງສິ້ນສີຟ້າ, ສີດຳ, ເສື້ອແຂນສັ້ນ ຫຼື ກະໂປ່ງສີດຳ ຫຼື ສີຟ້າ, ໃສ່ເກີບແຜ່ນ ຫຼື ເກີບສຸບທຳມະດາ.



**(ຮູບ ການນຸ່ງຫົ່ມຂອງນັກຮຽນຊັ້ນປະຖົມ)**

### ຂ ຊັ້ນມັດທະຍົມສົມບູນ

- **ເພດຊາຍ:** ນຸ່ງໂສ້ງຂາຍາວສີດຳ, ສີຟ້າ, ເສື້ອຂາວແຂນສັ້ນ ຫຼື ແຂນຍາວ ຕິດປ້າຍໂຮງຮຽນໃສ່ປາກຖົງເສື້ອເບື້ອງຊ້າຍ, ໃສ່ເກີບສຸບ, ເກີບແຜ່ນຜ້າ, ເກີບຊັງດານ ຫຼື ໂອຊິກສີດຳ, ຖົງຕີນສີຂາວ, ຕັດຜົມເປີດ ຫຼື ຈອນບາງ
- **ເພດຍິງ :** ນຸ່ງສິ້ນສີດຳ, ສີຟ້າຕໍ່ຕີນຕາມແບບ, ຕັດສຳເລັດ, ບໍ່ເຂີນ, ບໍ່ເຂີນ ຫຼື ລ່າມໂພດ, ນຸ່ງເສື້ອຂາວ ແຂນສັ້ນ ຫຼືແຂນຍາວ ມີຢ່ວງບ່າ, (ຜົມ) ເກົ້າ, ເປຍ ຫຼື ມັດລົງຫາງຫຼັງ, ໃສ່ເກີບສຸບ ຫຼື ເກີບແຜ່ນຖົງຕີນສີຂາວ.



**(ຮູບ ການນຸ່ງຫົ່ມຂອງນັກຮຽນຊັ້ນມັດທະຍົມ)**

### ຄ ໂຮງຮຽນວິຊາຊີບ, ສ້າງຄູ ແລະ ມະຫາວິທະຍາໄລ

- **ເພດຊາຍ :** ນຸ່ງໂສ້ງຂາຍາວສີດຳ, ສີຟ້າ, ເສື້ອຂາວມີຢ່ວງບ່າແຂນສັ້ນ ຫຼື ແຂນຍາວຕິດປ້າຍຊື່ໂຮງຮຽນໃສ່ກົກແຂນເບື້ອງຊ້າຍ, ປ້າຍຊື່ຕິດໃສ່ປາກຖົງເສື້ອເບື້ອງຊ້າຍ, ຕັດຜົມຈອນບາງ.
- **ເພດຍິງ :** ນຸ່ງສິ້ນສີດຳ, ສີຟ້າ, ເສື້ອສີຂາວແຂນສັ້ນ ຫຼື ແຂນຍາວມີຢ່ວງບ່າ, ໃສ່ເກີບສຸບ, ໃສ່ຖົງຕີນສີຂາວ, ເກົ້າຜົມ, ເປຍ ຫຼື ມັດປ່ອຍລົງຫາງຫຼັງ, ຕິດປ້າຍຊື່ໂຮງຮຽນໃສ່ກົກແຂນເສື້ອເບື້ອງຊ້າຍ, ຕິດປ້າຍຊື່ໃສ່ປາກຖົງເສື້ອ ທີ່ໜ້າເອິກເບື້ອງຊ້າຍ, ໃສ່ເກີບສຸບ, ໃສ່ຖົງຕີນ.

- ສັງລວມແລ້ວ ວັດທະນະທຳຮີດຄອງປະເພນີ ແມ່ນມໍລະດົກອັນລ້ຳຄ່າທີ່ປູ່ຍາຕາຍາຍຂອງລາວເຮົາໄດ້ສ້າງໄວ້ຢູ່ກັບຊາດລາວ, ຄົນລາວ, ໃນນັ້ນ ມາລະຍາດໃນດ້ານການແຕ່ງກາຍ, ນຸ່ງຫົ່ມ, ຂອງຄົນລາວກໍແມ່ນເອກະລັກອີກອັນໜຶ່ງ ທີ່ບົ່ງບອກເຖິງຄວາມລະອຽດອ່ອນ, ປານີດ, ຄວາມສວຍສົດງົດງາມ, ເປັນເອກະລັກສະເພາະຕົວຂອງຄົນລາວ, ຊາດລາວ.

# 2 ການແຕ່ງກາຍຂອງຊາດຕ່າງໆໃນອາຊຽນ

ປະເພນີແຕ່ງກາຍຂອງປະຊາຊາດອາຊຽນ ແມ່ນມີຄວາມແຕກຕ່າງກັນຫຼາຍ ແລະ ມັນກໍໄດ້ກາຍເປັນສີສັນອັນສວຍງາມແຫ່ງວັດທະນະທຳອາຊຽນ, ໃນບົດນີ້ຈະນຳສະເໜີປະເພນີການແຕ່ງກາຍຂອງບາງປະເທດອາຊຽນດັ່ງລຸ່ມ:

## 2.1 ການແຕ່ງກາຍຂອງຄົນອິນໂດເນເຊຍ

### ກ ເພດຊາຍ

- ຜູ້ຊາຍ ນຸ່ງໂສ້ງຂາຍາວສີດຳ ຫຼື ສີຕ່າງໆ ເສື້ອຄໍເຊີດສີຕ່າງໆ ໃນພິທີທາງການເພດຊາຍຈະນຸ່ງຜ້າສະໂຫຼ່ງ ຫຼື ຊຸດເຄນບາຕິກ, ເສື້ອແຈັກເກັດເຄບາຢາ ຕາມດ້ວຍຜ້າພັນຄໍເຊເລັນດັງ ແຕ່ສຳລັບຄົນໜຸ່ມ ສ່ວນຫຼາຍຈະບໍ່ນິຍົມກັນນຸ່ງການແຕ່ງກາຍແບບນີ້ໃນພິທາງການທີ່ສຳຄັນຕ່າງ ເຊັ່ນ ພິທີແຕ່ງດອງ, ພິທີການບຸນວັນຊາດ. ການແຕ່ງກາຍໃນພິທີການແຕ່ງງານເຈົ້າບ່າວໃສ່ຊຸດລິນໂຕບາໂຣ ຄູ່ກັບໂສ້ງຂາຍາວສີດຳຕົກແຕ່ງໃຫ້ເຂົ້າກັບຜ້າມັດແອວ ເກນຊອງເກັດ, ໝວກສີດຳ, ໃສ່ເກີບສຸບສີດຳ.



(ຮູບ ຊຸດແຕ່ງກາຍປະເພນີ ຂອງອິນໂດເນເຊຍ)

### ຂ ເພດຍິງ

ນຸ່ງກະໂປ່ງເຄບາຢາ, ໃສ່ເສື້ອເຊີດແຂນສັ້ນ ຫຼື ແຂນຍາວ, ສີຂາວ, ສີລາຍລຽບໆ, ໃສ່ຜ້າປະຄົດແອວ ຕາມດ້ວຍຜ້າສະບຽງ (ສະໄບ) ຫຼື ຜ້າພັນຄໍເຊເລັນດັງ, ໃສ່ປະຫຼັກແຂນ, ສ້ອຍຄໍ, ຕຸ້ມຫູ, ແຫວນມື, ໃສ່ເກີບສຸບທຳມະດາ. ສຳລັບປະເພນີແຕ່ງງານ ເຈົ້າສາວໃສ່ຊຸດດຳ ໂຣບາໂຣ ທີ່ມີການຕົກແຕ່ງໃຫ້ເຂົ້າກັນກັບຊຸດບາຈີ, ໂສ້ງຂາຍາວສີດຳ, ສາຍແອວ, ຈາປັງ ແລະ ເຄື່ອງແຕ່ງກາຍອື່ນໆ ເຊັ່ນ ມົງກຸດປາຕາມດອຍ ແລະ ສາຍຄໍຊະນິດອື່ນໆປະປົນກັນໄປ.

## 2.2 ການແຕ່ງກາຍຂອງຟີລິບປິນ

### ກ ເພດຊາຍ

- ນຸ່ງໂສ້ງຝ້າຍຂາຍາວ ເສື້ອຄໍເຊີດແຂນຍາວ ເສື້ອຫຼົ່ມໆສີຂາວ ສີລາຍຂີດຍາວໆ ຫຼື ສີອື່ນໆໃສ່ເກີບສຸບ ຫຼື ເກີບໂອຊິກ (ການນຸ່ງຖືຂອງຜູ້ຊາຍທາງພູເຂົາ)

- ທາງພາກໃຕ້ ນຸ່ງຜ້າສະໂຫຼ່ງ ຫຼື ບຣົ່ງຕາກະລ້ອກ ແລະ ເສື້ອແຈັກເກັດແຂນຍາວ ເຊິ່ງເປັນນິຍົມຂອງຜູ້ຊາຍ ແລະ ແມ່ຍິງ

**ຂ ເພດຍິງ**

- ຊຸດປາຕາດີອິງ ກະກອບດ້ວຍກະໂປ່ງ ແລະ ເສື້ອແຂນສັ້ນ, ໃສ່ຜ້າພັນພາດບ່າ.

- ແມ່ຍິງຢູ່ເກາະລູຊອນ ທາງພາກເໜືອນຸ່ງສະເກີດ ຫຼື ກະໂປ່ງ ນຸ່ງເສື້ອແຈັກເກັດ ຕາມດ້ວຍສາຍປະຄັດແອວ ແລະ ແພພັນຫົວໃນນັ້ນ, ຜູ້ຊາຍ ແລະ ແມ່ຍິງ ຟີລິບປິນຍັງນິຍົມການແຕ່ງກາຍແບບຕາເວັນຕົກ.

## 2.3 ການແຕ່ງກາຍຂອງໄທ

**ກ ເພດຊາຍ**

- ນຸ່ງໂສ້ງຂາຍາວສີດຳ, ເສື້ອຄໍເຊີດຫຼືມງ, ສີຕ່າງໆ, ໃສ່ໝວກໃນເວລາອອກແຮງງານ, ນຸ່ງຜ້າສະໂຫຼ່ງໃນເວລາບໍ່ເຮັດວຽກ.

- ຊົນເຜົ່າເຂດພູເຂົາຂອງໄທ ມີປະເພນີການແຕ່ງກາຍທີ່ແຕກຕ່າງກັນ ຄື ນຸ່ງໂສ້ງຂາຍາວ, ເສື້ອແຂນສັ້ນ ຫຼື ແຂນຍາວສີດຳ, ສີຕ່າງໆ, ໃສ່ສາຍແອວ ຕາມດ້ວຍຊຸດປະເພນີຊາວໄທພູເຂົາມັກໃສ່ແຫວນ ສ້ອຍຄໍ, ຕ່ອງໂສ້ ແລະ ສາຍແອວເງິນ, ໃສ່ເກີບໂອຊິກ ຫຼື ເກີບຊັງດານ.

**ຂ ເພດຍິງ**

- ນຸ່ງສິ້ນຝ້າຍ ຫຼື ສິ້ນໄໝ, ເສື້ອແຂນສັ້ນ ຫຼື ແຂນຍາວ, ໃສ່ແພສະໄບ, ໃສ່ແຫວນ, ສ້ອຍຄໍ, ຕຸ້ມຫູ, ໃສ່ເກີບສຸບທຳມະດາ.

- ການແຕ່ງຕົວຂອງໄທ ແມ່ນແຕກຕ່າງກັນໄປຕາມພາກຕ່າງໆຂອງໄທ ເຊັ່ນ ພາກເໜືອ, ພາກກາງ, ພາກຕາເວັນອອກສ່ຽງເໜືອ ຫຼື ຕ່າງກັນໄປຕາມແຂວງເຊັ່ນ ຊຽງໃໝ່, ອີ່ສານ...ຂອງໄທ ມີປະເພນີການແຕ່ງກາຍຕ່າງກັນ.



(ຮູບ ການແຕ່ງກາຍຂອງຄົນໄທ)

## 2.4 ການແຕ່ງກາຍຂອງມຽນມາ

ເຄື່ອງນຸ່ງພື້ນບ້ານຂອງມຽນມາເອີ້ນວ່າ ລອງຍີ (L0nggi) ຜ້າສະໂຫຼ່ງເປັນເຄື່ອງນຸ່ງສຳລັບຊາຍ ແລະ ຍິງ. ຕາມປະເພນີແລ້ວ ເພດຊາຍນຸ່ງເສື້ອແຈັກເກັດບໍ່ມີຄໍ ປົກຄຸມດ້ວຍເສື້ອເຊີດແຂນສັ້ນສີຂາວ, ເພດຍິງນຸ່ງຜ້າຄຸມບ່າ ແລະ ເສື້ອຜູ້ຍິງທຳມະດາ.



(ຮູບ ການແຕ່ງກາຍຂອງຊາວມຽນມາ)

**ຄຳຖາມ :**

1. ວັດທະນະທຳການແຕ່ງກາຍຂອງສັງຄົມລາວເຮົາຄວນປະຕິບັດແນວໃດ ເພື່ອໃຫ້ເໝາະສົມກັບສະພາບແວດລ້ອມ ?
2. ການແຕ່ງກາຍຂອງຄົນໃນສັງຄົມອາຊຽນມີຄວາມແຕກຕ່າງກັນແນວໃດ ?

# ບົດທີ 6

# ໜ້າທີ່ຂອງພົນລະເມືອງລາວຕໍ່ກັບວັດທະນະທຳ

ວັດທະນະທຳຮີດຄອງປະເພນີ ແມ່ນມູນມໍລະດົກອັນລ້ຳຄ່າທີ່ປູ່ຍ່າຕາ ຍາຍຂອງລາວເຮົາ ໄດ້ສ້າງ ສົມເອົາໄວ້ຄູ່ກັບຄົນລາວ, ວັດທະນະທຳຮີດຄອງປະເພນີດັ່ງກ່າວ ແມ່ນມີສ່ວນຜູກພັນສະໜິດແໜ້ນຢູ່ກັບການດຳລົງຊີວິດ ແລະ ສັງຄົມລາວ ມາເຖິງປັດຈຸບັນນີ້ ເຫັນວ່າມູນມໍລະດົກອັນປະເສີດ ລ້ຳມີຈຳນວນບໍ່ໜ້ອຍທີ່ໄດ້ຖືກຫຼົງລືມ ແລະ ສູນເສຍໄປຕາມກາລະເວລາຢ່າງໜ້າເສຍດາຍ.

ດັ່ງນັ້ນ, ພົນລະເມືອງລາວທຸກຄົນຄວນຮູ້ໜ້າທີ່ຂອງຕົນເອງຕໍ່ກັບການປົກປັກຮັກສາ, ເສີມຂະຫຍາຍ ແລະ ພັດທະນາວັດທະນະທຳຮີດຄອງປະເພນີອັນດີງາມ ໃຫ້ຄົງຢູ່ຄູ່ກັບຄົນລາວຕະຫຼອດໄປ.

## 1 ໜ້າທີ່ການປົກປັກຮັກສາວັດທະນະທຳຮີດຄອງປະເພນີ

ວັດທະນະທຳຮີດຄອງປະເພນີກັບປະເທດຊາດ ເປັນສິ່ງທີ່ແຍກອອກຈາກກັນບໍ່ໄດ້ ເມື່ອໃດຊາດຫຼົ້ມຈົມວັດທະນະທຳກໍເສົ້າໝອງເສຍສີສັນ ແລະ ໄປສູ່ຄວາມສູນສະຫຼາຍ ເມື່ອໃດຊາດຖືກທຳລາຍວັດທະນະທຳກໍສູນຫາຍເມື່ອໃດວັດທະນະທຳອັນຖືກກືນກິນຊາດຂອງຕົນຊາດນັ້ນກໍສູນເສຍເອກະລັກໄປຢ່າງບໍ່ຕ້ອງສົງໄສ.

ຫາກວັດທະນະທຳລາວຖືກວັດທະນະທຳອື່ນແຊກຊຶມ, ດູດກືນ ແລະ ກີດກັ້ນຢ່າງເລືອດເຢັນ ຫຼື ຖືກຮຸກຮານຢ່າງຮ້າຍແຮງ ເປີດແປນແລ້ວບໍ່ເຫິງປານໃດຄົນເຮົາກໍຈະປ່ອຍປະລະຖິ້ມ ແລະ ວັດທະນະ ທຳຮີດຄອງອື່ນເຂົ້າມາແທນບ່ອນທັນທີ, ເວລາວັດທະນະທຳອື່ນຢັ່ງຮາກລົງເລິກ ແລະ ເຊື່ອມຊຶມເຂົ້າສູ່ຈິດວິນຍານ ແລະ ຈິນຕະນາການຂອງຄົນລາວເຮົາແລ້ວແນ່ນອນມັນຈະສົ່ງຜົນສະທ້ອນໃຫ້ຊາດລາວເຮົາທີ່ເຄີຍມີຄວາມຮຸ່ງເຮືອງສີວິໄລ, ມີອະລິຍະທຳ ແລະ ວັດທະນະທຳອັນລືຊາຜາກົດໃນປະຫັວດ ສາດອັນຍາວນານມານັ້ນຕ້ອງເສຍເອກະລັກຂອງຕົນໄປຢ່າງໜ້າເສົ້າສະຫຼົດໃຈ. ທ່ານອະດີດປະທ່ານພັກປະຊາຊົນປະຕິວັດລາວໄດ້ເຕືອນໄວ້ຢ່າງແຫຼມເລິກທັງມີລັກສະນະຕັດສິນວ່າ: **(ການຖືກຮຸກຮານທາງດ້ານວັກທະນະທຳຈະພາໃຫ້ຊາດເສຍໄດ້)** ເມື່ອເບິ່ງຄືນບາງວຽກງານວັດທະນະທຳຮີດຄອງປະເພນີຂອງລາວເຮົາ ມີບາງໄລ່ຍະຖືກປະປ່ອຍໃຫ້ເປັນໄປຕາມມີຕາມເກີດ, ມີບາງໄດ້ຍະກໍໄດ້ຮັບເອົາໃຈໃສ່ທາງນະໂຍບາຍ ແລະ ທາງດ້ານການຈັດຕັ້ງໂດຍສະເພາະແມ່ນພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ, ວຽກງານວັດທະນະທຳຮີດຄອງປະເພນີ, ສິລະປະວັນນະຄະດີໄດ້ມີການຂະຫຍາຍຕົວໄວວາ ແລະ ມີຄວາມຟົດຟື້ນຢ່າງກ້ວາງຂວາງ. ແຕ່ເຖິງຢ່າງໃດກໍຕາມໃນພາກປະຕິບັດຕົວຈິງແລ້ວ, ຂະບວນການປົກປັກຮັກສາວັດທະນະທຳຮີດຄອງ ປະເພນີຍັງມີລັກສະນະຂາດການເອົາໃຈໃສ່ຢ່າງຕັ້ງໜ້າ, ມີການຮັບເອົາວັດທະນະທຳຕ່າງຊາດເຂົ້າມາຢ່າງບໍ່ເປັນລະບຽບ, ບໍ່ບໍ່ມີການເລືອກເຟັ້ນ ເປັນຕົ້ນໃນດ້ານພາສາ, ແບບແຜນການດຳລົງຊີວິດ, ຂະນົບທຳນຽມຮີດຄອງປະເພນີສິລະປະວັນນະຄະດີ ແລະ ອື່ນໆ ເຊັ່ນ ມີການໃຊ້ສອຍການຈັດຕັ້ງ ແລະ ຂະຫຍາຍຮ້ານການກິນດື່ມ, ໂຮງແຮມ, ສະຖານທີ່ບັນເທີງຕ່າງໆ ເປັນບ່ອນນັດພົບ, ຄ້າຂາຍປະເວນີ, ເປັນບ່ອນເຜີຍແຜ່ວັດທະນະທຳຂອງຕ່າງປະເທດທີ່ລາມົກອານາຈານ ແລະ ເຊື່ອມຊາມ.

ດັ່ງນັ້ນ, ພວກເຮົາຜູ້ເປັນພົນລະເມືອງລາວ, ເປັນຜູ້ທີ່ຮັກ ແລະ ຫວງແຫນຊາດລາວ ຕ້ອງຄຳ ນຶງ ເຖິງພາລະໜ້າທີ່ໃນການປົກປັກຮັກສາຂະນົບທຳນຽມຮີດຄອງປະເພນີອັນດີງາມຂອງລາວເອົາໄວ້ ເຊັ່ນ:

- ມີຄວາມຮູ້ສຶກຕື່ນຕົວເຫັນໄດ້ຄວາມສຳຄັນ ແລະ ຄວາມຈຳເປັນໃນການປົກປັກຮັກສາ, ຂະນົບ ທຳນຽມ, ຮີດຄອງປະເພນີອັນດີງາມຂອງລາວເຮົາ.
- ສະກັດກັ້ນ ແລະ ຕີຖອຍທຸກປາກົດການຂອງວັດທະນະທຳທີ່ເຊື່ອມຊາມໃຫ້ໝົດໄປຈາກປະເທດລາວ.
- ຊ່ວຍກັນທະນຸບຳລຸງເອກະລັກວັດທະນະທຳ, ຮີດຄອງປະເພນີ, ແບບແຜນການດຳລົງຊີວິດອັນຈົບງາມໃຫ້ມີຄວາມຈະເລີນສີວິໄລ.

## 2 ໜ້າທີ່ໃນການເສີມຂະຫຍາຍວັດທະນະທຳຮີດຄອງປະເພນີ

ຄົນລາວເຮົາເປັນຄົນທີ່ຍຶດໝັ້ນໜັກແໜ້ນໃນການປະຕິບັດຕາມຮີດຄອງຢ່າງມີເຫດມີຜົນ, ເປັນຄົນທີ່ນິ້ມນວນອ່ອນຫວານ, ຖະຫ່ອມຕົວ, ບໍ່ແຂງກະດ້າງ, ມີຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ນອກຈາກນີ້ຄົນລາວຍັງຮູ້ເຄົາລົບໃຫ້ກຽດ ແລະ ຊ່ວຍເຫຼືອຜູ້ທີ່ອ່ອນແອກ່ວາ, ຮູ້ນັບຖືຜູ້ເຖົ້າ ຜູ້ອາວຸໂສທີ່ມີບຸນຄຸນຕໍ່ຊາດ ແລະ ຕົນເອງ. ເນື່ອງໃນບຸນປະເພນີຕ່າງໆ ເຊັ່ນການແຕ່ງດອງ, ອອກກຳ, ກ່ອນເດີນໄປເຮັດວຽກທາງໄກ, ພີ່ນ້ອງທາງໄກມາຢຽມຢາມ, ການພົ້ນໂທດໂພຍໄພອັນຕະລາຍຕ່າງໆ ແລະ ຊີວິດອັນສຳຄັນອື່ນໆກໍຈະມີຈັດພິທີພູກແຂນສູ່ຂັວນອວຍພອນໄຊອັນປະເສີດໃຫ້ແກ່ກັນ ແລະ ກັນອັນເປັນທີ່ແປກປະຫຼາດສຳລັບຊາວຕ່າງຊາດ ແລະ ເປັນທີ່ນິຍົມຊົມຊອບສຳລັບຊາວຕ່າງປະເທດ. ນອກຈາກນີ້ຍັງເປັນສັນຍາລັກປະຈຳຊາດຄື ພຽງຫຼຽວເຫັນຝ້າຍຜູກແຂນ, ເກົ້າຜົມນຸ່ງສິ້ນໄໝກໍ່ເຂົ້າໃຈໂລດ ວ່ານັ້ນແມ່ນຄົນລາວ ຊາດລາວ ແລະ ບໍ່ມີໃຜຊາດໃດມີຄືແບບນີ້.

ເພື່ອປັບປຸງສິ່ງເສີມໃຫ້ກ້າວໜ້າໄປສູ່ຄວາມຈະເລີນຮຸ່ງເຮືອງເໝືອນດັ່ງເຄີຍເປັນມາໃນສະໄໝປະຫວັດສາດນັ້ນ, ປັດໃຈຕົ້ນຕໍກໍແມ່ນລາວ, ມີສາຍຕາເບິ່ງກ້ວາງເຫັນໄກ, ມີຄວາມສະຫຼຽວໄວ, ມີຄວາມຮູ້, ຄວາມສາມາດ ແລະ ມີອຸດົມຄະຕິຮັກຊາດຢ່າງດູດດື່ມ, ເປັນຜູ້ຕັ້ງໜ້າຟື້ນຟູຄືນ, ສິ່ງເສີມວັດທະນະ ທຳແຫ່ງຊາດທີ່ມີຢູ່ແລ້ວ ແລະ ສາມັກຄີກັນປະດິດສ້າງສິ່ງເສີມໃໝ່ ບົນຮາກຖານວັດ ທະນະທຳອັນເກົ່າ ແກ່ຂອງຊາດຕົນ ແລະ ຕັດຖິ້ມຮີດຄອງປະເພນີແກ່ຫຼ້າຫຼັງ. ບາງສິ່ງບາງຢ່າງທີ່ເຫັນວ່າບໍ່ສອດຄ່ອງກັບສະພາວະການ ປ່ຽນແປງໃໝ່ ແລະ ຍຸກສະໄໝ. ພ້ອມດຽວກັນນັ້ນ ກໍຕ້ອງມີການໂຄສະນາເຜີຍແຜ່ໃຫ້ທຸກຄົນຮັບຮູ້ຂະນົບທຳນຽມຮີດຄອງປະເພນີອັນດີງາມຕະຫຼອດເຖິງເອກະລັກທີ່ສະແດງເຖິງຄວາມເປັນລາວ.

## 3 ໜ້າທີ່ໃນການພັດທະນາວັດທະນະທຳ

ພົນລະເມືອງນອກຈາກຈະມີໜ້າທີ່ໃນການເສີມຂະຫຍາຍວັດທະນະທຳຮີດຄອງປະເພນີແລ້ວ ຍັງຈະຕ້ອງມີໜ້າທີ່ໃນການພັດທະນາວັດທະນະທຳອີກ ການພັດທະນາຕ້ອງອີງໃສ່ນະໂຍບາຍຂອງພັກ - ລັດຕໍ່ ກັບການພັດທະນາວັດທະນະທຳ

- ຫັນເອົາແນວທາງນະໂຍບາຍວ່າດ້ວຍວັດທະນະທຳຂອງພັກ ແລະ ລັດໃຫ້ທົ່ວປວງຊົນເຂົ້າຮ່ວມ ແລະ ເປັນເຈົ້າການພັດທະນາວັດທະນະທຳຢ່າງພ້ອມພຽງ.
- ວັດທະນະທຳເປັນກຳລັງແຮງ ແລະ ເຄື່ອງມືອັນສຳຄັນ ສຳລັບຍູ້ດັນໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມ ແລະ ການເມືອງ. ຕາມຄວາມເປັນຈິງແລ້ວປະເທດຊາດໃດໜຶ່ງຈະພັດທະນາເສດຖະກິດ ແລະ ສັງຄົມກໍຕ້ອງພັດທະນາຄົນໃຫ້ມີຄວາມຮູ້ຄວາມສາມາດ ແລະ ຕ້ອງໄດ້ພັດທະນາດ້ານຄຸນສົມບັດຂອງຄົນເຮົາໃຫ້ເປັນຄົນທີ່ມີຄຸນນະທຳອັນດີແລ້ວການພັດທະນາວັດທະນະທຳໃນຕົວມັນເອງກໍຄືພັດທະນາຊາດ.
- ການພັດທະນາວັດທະນະທຳຕ້ອງເນັ້ນໜັກ ແລະ ໃຫ້ຄວາມສຳຄັນຕໍ່ແນວຄິດຫຼື ອຸດົມຄະຕິວ່າ: ຕ້ອງພັດທະນາຈາກພື້ນຖານປະຊາຊົນ ຫຼື ຈາກຈຸລັງຕົ້ນຕໍຂອງສັງຄົມອັນໄດ້ແກ່ຄອບຄົວ, ຍາດວົງພົງພັນຂອງຄອບຄົວ, ຊາວບ້ານ ແລະ ຊຸມຊົນໂດຍແມ່ນເຈົ້າຂອງວັດທະນະທຳ ຄື ປະຊາຊົນລາວເອງ. ສ່ວນພັກ - ລັດ ຫຼື ອົງການກ່ຽວຂ້ອງນັ້ນມີບົດບາດໃນການຊີ້ນຳ ສິ່ງເສີມໃຫ້ການສະໜັບສະໜູນ.
- ການພັດທະນາວັດທະນະທຳຕ້ອງພັດທະນາທັງສອງດ້ານໄປພ້ອມໆກັນ ຄື:

- ວັດທະນະທຳທີ່ເບິ່ງເຫັນ ແລະ ສຳພັດໄດ້ ໄດ້ແກ່ວັດທະນະທຳທາງດ້ານວັດຖຸ.
- ວັດທະນາທຳທີ່ເບິ່ງບໍ່ເຫັນດ້ວຍຕາ ແລະ ຈັບຕ້ອງບໍ່ໄດ້ ວັດທະນະທຳທີ່ເປັນຄຸນຄ່າທາງດ້ານຈິດໃຈຕ້ອງພັດທະນາວັດທະນະທຳທັງສອງສ່ວນນີ້ໄປພ້ອມໆກັນ ບໍ່ຈຳແນກແຈກແບ່ງວັດທະນະທຳອອກເປັນສ່ວນຍ່ອຍ ຫຼື ຕ່ອນນ້ອຍຕ່ອນໃຫ່ຍຄືດັ່ງໄດ້ແຍກຮ່າງກາຍອອກຈາກຈິດໃຈ ຫຼື ແຍກ ວັດຖຸສິ່ງຂອງອອກຈາກຄຸນຄ່າທີ່ຊາວບ້ານມີຕໍ່ສິ່ງນັ້ນ.

- ການພັດທະນາວັດທະນະທຳ ຈະຕ້ອງດຳເນີນໄປບົນຈິດໃຈ ຂະບວນການຄົ້ນຄ້ວາຕີລາຄາ ວັດທະ

ນະທຳອັນດີງາມທີ່ຍັງຄົງຕົວຢູ່ໃນຊີວິດຂອງຄົນລາວເຮົາ ໂດຍນຳໃຊ້ມາດຖານພາຍໃນວັດທະນະທຳອັນດີງາມເປັນຕົວວັດແທກຄວາມດີ ແລະ ຊີ້ສະແດງໃຫ້ເຫັນຄວາມບໍ່ດີ ບໍ່ແມ່ນເອົາມາດຖານ ພາຍນອກ ຫຼື ຂອງຕ່າງປະເທດມາວັດແທກ.

ຈາກນັ້ນ ແລ້ວຈຶ່ງຟື້ນຟູສິ່ງທີ່ດີທີ່ໄດ້ຖືກຫຼົງລືມຖິ້ມປະນັ້ນມາໃໝ່ ຫຼື ນຳມາປະຍຸກໂດຍການຕີລາຄາ ຫຼື ໂດຍອີງໃສ່ຮາກຖານເດີມທີ່ມີຢູ່ແລ້ວ ຫຼື ປະສົມປະສານເຂົ້າກັບວັດທະນະທຳອັນເປັນສິ່ງຍອດຍິ່ງຈາກວັດທະນະທຳຂອງມະນຸດທີ່ໄດ້ຜ່ານການກັ່ນຕອງ ແລະ ເລືອກເຟັ້ນມາແລ້ວ.

ໃນກໍລະນີນີ້ອາດໃຊ້ຮູບແບບພາຍນອກທີ່ເປັນຮູບແບບວັດທະນະທຳສາກົນ ແຕ່ເອົາຄຸນຄ່າເດີມຈາກວັດທະນະທຳຂອງຊາດເຂົ້າໃສ່ຄະຕິທີ່ວ່າ: "ນ້ຳເຜີ້ງເກົ່າໃສ່ໃນແກ້ວໃໝ່" .

ບຸກຄົນທີ່ຈະຕ້ອງເຂົ້າຮ່ວມໃນໂຄງການພັດທະນາວັດທະນະທຳມີດັ່ງນີ້:

1) ຊາວບ້ານ ຫຼື ປະຊາຊົນທີ່ເປັນເຈົ້າຂອງໃນວັດທະນະທຳ ແລະ ເຂົ້າໃຈວັດທະນະທຳ ເຊັ່ນ ຜູ້ເຖົ້າ, ຜູ້ ແກ່, ທິດ, ຈານ, ໝໍລຳ, ນັກຮ້ອງ, ນັກແຕ່ງກອນລຳ, ຊາວບ້ານຜູ້ທີ່ຊົງຄຸນວຸດທິ, ອາວຸໂສ ແລະ ສິລະປິນທ້ອງຖິ່ນ.

2) ພະສົງມີຄວາມສຳຄັນຢ່າງຫຼວງຫຼາຍໃນການສົ່ງເສີມແລະເຜີຍແຜ່ວັດທະນະທຳ ເພາະ ເພິ່ນເປັນຜູ້ນຳພາທາງດ້ານຄວາມເຊື່ອຖື ແລະ ພິທີກຳຕ່າງໆ.

3) ລັດຖະບານ ອົງການຂອງລັດຖະບານຈະຕ້ອງລົງທຶນໃສ່ໂຄງການພັດທະນາວັດທະນະທຳດ້ວຍການຈັດງົບປະມານເປັນຫຼັກ ເພື່ອໃຫ້ໂຄງການໄດ້ຮັບການດຳເນີນໄປຢ່າງສະດວກຄຽງຄູ່ກັບວຽກງານຄຸ້ມຄອງສົ່ງເສີມ ແລະ ພັດທະນາວັດທະນະທຳນັ້ນ ລັດຄວນເຄົາລົບຄວາມເປັນເຈົ້າຕົນເອງ ຂອງປະຊາຊົນ ຕ້ອງກະຕຸກຊຸກຍູ້ເຂົາເຈົ້າໄດ້ສະແດງອອກເຖິງປະຊາທິປະໄຕຢ່າງເລິກເຊິ່ງ ແລະ ແທ້ຈິງ.

4) ປັນຍາຊົນທ້ອງຖິ່ນ ປັນຍາຊົນ, ນັກຮຽນ, ຜູ້ຊົງຄຸນນະວຸດທິ ທີ່ມີຄວາມເຂົ້າໃຈ ມີຄວາມຮູ້ວັດທະນະທຳສາກົນ ຮູ້ປະສົມປະສານ ຮູ້ຟື້ນຟູວັດທະນະທຳຕົນເອງ ຮູ້ປະດິດຄິດຄົ້ນສິ່ງໃໝ່ໆອອກມາ ເພື່ອຈະຊ່ວຍໃຫ້ລະດັບຊີວິດທາງດ້ານວັດທະນະທຳຂອງຄອບຄົວມີໂສມໜ້າໃໝ່ດີຂຶ້ນກວ່າເກົ່າ

5) ນັກວິຊາການ ຄູ - ອາຈານ, ນັກປະພັນ, ນັກກະວີ, ສະມາຄົມນັກປະພັນ, ສະມາຄົມນັກສິລະປິນ, ນັກປາດ, ອາຈານ ແລະ ຜູ້ອື່ນໆ ເປັນຜູ້ມີໜ້າທີ່ໂຄສະນາ ເຜີຍແຜ່ວັດທະນະທຳອັນດີງາມຂອງຊາດໃຫ້ຢືນຢົງຄົງຕົວສືບຕໍ່ໄປ.

6) ນັກພັດທະນາ ນັກພັດທະນາທັງຫຼາຍ ຕ້ອງເປັນຜູ້ທີ່ມີໄຫວພິບ, ສະຫຼາດສະຫຼຽວແຫຼມຄົມໃນການທີ່ຈະຄົ້ນເອົາມໍລະດົກທາງພູມປັນຍາຂອງຊາວບ້ານ ຫຼື ປະຊາຊົນອອກມາສົ່ງເສີມ ໂດຍການຮ່ວມເຄື່ອນໄຫວ, ຮ່ວມມື, ຮ່ວມຄິດ, ຮ່ວມປະຕິບັດໂຄງການ, ຄຽງຄູ່ກັນນັ້ນກໍຄວນຮູ້ຈັກຍ້ອງຍໍສັນລະເສີນເຄົາລົບນັບຖື ແລະ ໃຫ້ກຽດແກ່ເຂົາເຈົ້າໂດຍຍຶດເອົາຫຼັກໝັ້ນທີ່ວ່າ "ຝັງຮາກຖານປະສານງານ, ປະສານວຽກ, ປະສານແນວຄິດຈິດໃຈໃຫ້ເລິກເຊິ່ງ ແໜ້ນແຟ້ນ ແລະ ເປັນອັນໜຶ່ງອັນດຽວກັນກັບປະຊາຊົນ"

## ຄຳຖາມ :

1. ເພື່ອເຮັດໃຫ້ວັດທະນະທຳຮີດຄອງປະເພນີລາວເຮົາຍືນຍົງຢູ່ຄູ່ສັງຄົມລາວໄປຕະຫຼອດພວກເຮົາຈະມີໜ້າທີ່ໃນການປົກປັກຮັກສາໄວ້ຄືແນວໃດ ?

2. ເພື່ອເຮັດໃຫ້ການພັດທະນາວັດທະນະທຳຮີດຄອງປະເພນີລາວໄດ້ດີຄວນໃຫ້ພາກສ່ວນໃດແດ່ເຂົ້າຮ່ວມໃນວຽກງານດັ່ງກ່າວ ?

# ບົດທີ 7

## ວັດທະນະທຳສັງຄົມລາວ ແລະ ອາຊຽນໃນປັດຈຸບັນ

ລາວ ເປັນຊາດໜຶ່ງທີ່ມີປະຫັວດສາດຄວາມເປັນມາອັນຍາວນານ ຕັ້ງແຕ່ຍຸກຫີນເກົ່າຈົນຮອດປັດຈຸບັນ ເຊິ່ງປະກອບມີຫຼາຍເຜົ່າຊົນທີ່ມີຮີດຄອງຄະນິບທຳນຽມປະເພນີທີ່ມີເອກະລັກສະເພາະພື້ນຖານຂອງສັງຄົມລາວເປັນສັງຄົມການກະສິກຳ ແລະ ໄດ້ຮັບອິດທິພົນຈາກອະລິຍະທຳພຸດທະສາສະໜາຢ່າງເລິກເຊິ່ງ ຈົນສາມາດເວົ້າໄດ້ວ່າ ພຸດທະສາສະໜາເປັນຫົວໃຈຂອງສັງຄົມວັດທະນະທຳປະພີລາວ. ຈາກພື້ນທີ່ດັ່ງກ່າວນີ້ ມັນຈຶ່ງມີສ່ວນຫຼໍ່ຫຼອມໃຫ້ຄົນລາວເປັນຄົນທີ່ມີເມດຕາທຳ, ມີຈິດໃຈເອື້ອເຟື້ອເພື່ອແຜ່. ເຖິງແມ່ນວ່າສັງຄົມລາວຈະມີການປ່ຽນແປງໄປຕາມສະພາບຂອງກາລະເວລາ ແຕ່ຄົນລາວກໍຍັງຮັກສາໄວ້ເຊິ່ງຄວາມນອບນ້ອມ, ຖະໜອມຖ່ອມຕົວ,ຄວາມມີເມດຕາຈິດ, ຄວາມມີນ້ຳໃຈກ້ວາງຂວາງຕໍ່ແຂກຄົນທີ່ມາຢາມ ແລະ ຮີດຄອງປະເພນີອັນດີງາມຂອງຊາດໄວ້ຢ່າງໝັ້ນຄົງ.

ໃນທີ່ນີ້ກ່ອນຈະກ້າວເຖິງ
ບາງຮີດຄອງປະເພນີວັດທະນະທຳສະເພາະຂອງເຜົ່າລາວນັ້ນກ່ອນອື່ນຈະຕ້ອງໄດ້ເຂົ້າໃຈກ່ຽວກັບຄວາມເປັນມາຂອງວັດທະນະທຳລາວໂດຍສັງເຂບ.

## 1 ລັກສະນະຂອງວັດທະນະທຳລາວ

ລັກສະນະ ຂອງວັດທະນະທຳລາວ ມີຄວາມຄ້າຍຄືກັນກັບບັນດາປະເທດໃນ ແຖບອາຊຽນຕາເວັນອອກສຽງໃຕ້. ວັດທະນະທຳລາວເປັນວັດທະນະທຳ ທີ່ມີປະສົມປະສານລະຫວ່າງວັດທະນະທຳຂອງກຸ່ມ ຊົນດັ່ງເດີມ ໃນທ້ອງຖິ່ນຮວມກັນກັບອະລິຍະທຳພາຍນອກ ທີ່ແຜ່ກະຈາຍເຂົ້າມາໃນແຕ່ລະຊ່ວງເວລາ ແລະ ເປັນວັດທະນະທຳທີ່ຮຽບງ່າຍ, ບໍ່ຊັບຊ້ອນ, ມີຈຸດມຸ່ງໝາຍເພື່ອຜົນປະໂຫຍດ ໃນການຢູ່ຮ່ວມກັນຢ່າງມີຄວາມສຸກ ໃນຊຸມຊົນເປັນສຳຄັນ, ເປັນວັດທະນະທຳທີ່ກ່ຽວພັນກັບການທຳມາຫາກິນ ຄື ການປູກຝັງ ແລະ ຄະຕິຄວາມເຊື່ອທາງປະເພນີທີ່ປະສົມປະສານກັບພຸດທະສາສະໜາ.

ໂດຍທົ່ວໄປແລ້ວ ໂຄງສ້າງທາງດ້ານວັດທະນະທຳຂອງລາວໃນປັດຈຸບັນ ຍັງຄົງຮັກສາຕາມຮູບເດີມ ແລະ ມີການປະສົມປະສານໄປກັບຄ່ານິຍົມ ຂອງການຍອມຮັບເອົາສິ່ງໃໝ່ທີ່ເອີ້ນວ່າ: “ ທັນສະໄໝ ” .

### 1.1 ວັດທະນະທຳການທັກທາຍ

ການສະແດງຄວາມເຄົາລົບໃນເວລາພົບພໍ້ ແລະ ທັກທາຍກັນໃນປັດຈຸບັນມີລັກສະນະປະ ສົມປະສານ ກັນລະຫວ່າງການນົບ ໄຫວ້ກັບການຈັບມືໃນປະເພນີສາກົນນິຍົມ. ແຕ່ເຖິງຢ່າງໃດກໍຕາມ ການ ນົບໄຫວ້ ແບບປະນົບມືກໍຍັງນິຍົມໃຊ້ກັນໃນລັກສະນະກວ້າງຂວາງ, ພ້ອມນັ້ນກໍຍັງໃຊ້ເປັນມາດຕະການສຶກ ສາເຢົາວະຊົນໃນແຕ່ລະຄັບການສຶກສາໃຫ້ປະພຶດປະຕິບັດ.

ຈາກການປະຕິບັດນີ້ ມັນບົ່ງບອກເຖິງລັກສະນະອຸປະນິໄສທີ່ເປັນພື້ນຖານຂອງຄົນລາວເຊັ່ນ ຄົນລາວເປັນຄົນລາວເປັນຄົນໃຈດີ ສຸພາບຮຽບຮ້ອຍ ຖະໜອມຖ່ອມຕົວ ມີຈິດໃຈກວ້າງຂວາງ ເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຮັບແຂກແພງຄົນ ຊື່ສັດສຸດຈະລິດ ມີສິນທຳ ແລະ ມີນ້ຳໃຈຮັກ ເຊື້ອແພງຊາດຄົນລາວຈຶ່ງເປັນມິດກັບທຸກຄົນ ແລະ ເປັນທີ່ເພິ່ງພໍໃຈຂອງແຂກບ້ານແຂກເມືອງ ທີ່ມາຢ້ຽມຢາມ ແລະ ພົບເຫັນ.

### 1.2 ວັດທະນະທຳການນຸ່ງຖື

ຄົນລາວມີວັດທະນະທຳການນຸ່ງຖືທີ່ເປັນເອກະລັກສະເພາະຕົນມາແຕ່ບູຮານນະການ ແລະ ກໍມີຫຼາຍຮູບຫຼາຍສີແຕກຕ່າງກັນ ເພາະວ່າໃນແຕ່ລະຊົນເຜົ່າກໍມີເອກະລັກສະ ເພາະທາງດ້ານ ການນຸ່ງ ຖືຂອງໃຜລາວ ການນຸ່ງຫົ່ມຂອງໃຜລາວ ການນຸ່ງຫົ່ມຂອງຄົນລາວມີການປ່ຽນແປງ ປັບປຸງໃຫ້ສອດຄ່ອງກັບຍຸກສະ

ໄໝ, ປົກກະຕິໃນຊີວິດປະຈໍາວັນ ຄົນລາວສ່ວນໃຫຍ່ໃນປັດຈຸບັນມີການນຸ່ງຖືຄ້າຍໆກັບຊາວຕ່າງປະເທດຍົກເວັ້ນແຕ່ແມ່ຍິງທີ່ຍັງຄົງຮັກສາການນຸ່ງຖືທີ່ເປັນເອກະລັກຂອງຕົນມາຢູ່ສະເໝີ.

**1.2.1 ການນຸ່ງຫົ່ມແບບຜູ້ຊາຍລາວ**

**1) ຕາມຮີດຄອງເດີມ**

ການນຸ່ງຫົ່ມຂອງຜູ້ຊາຍລາວມີຫຼາຍລັກສະນະຂຶ້ນຢູ່ກັບກາລະເທສະ

**2) ເວລາເຮັດວຽກ**

ຜູ້ຊາຍນຸ່ງໂສ້ງ - ເສື້ອສີດໍາຈະເປັນແຂນຍາວ ຫຼື ແຂນສັ້ນກໍສຸດແລ້ວແຕ່ຜູ້ມັກ

**3) ເວລາພັກຜ່ອນໃນເຮືອນ**

ຜູ້ຊາຍສ່ວນຫຼາຍມັກນຸ່ງ ຜ້າສະໂຫຼ່ງ ຈະແມ່ນແພ່ໄໝ ຫຼື ແພຝ້າຍຢູ່ກັບຖານະທາງເສດຖະກິດຂອງຄອບຄົວສ່ວນເສື້ອແມ່ນບໍ່ຈໍາກັດສີ

**4) ໃນພິທີການງານບຸນຕ່າງໆ**

ຜູ້ຊາຍຈະຕ້ອງນຸ່ງຜ້າໄໝຍາວເນັບຕ່ຽວ ນຸ່ງເສື້ອສີຂາວຄໍມົນແຂນຍາວ, ຄາດຜ້າບ່ຽງໄໝທີ່ມີສີສັນຕ່າງໆຢ່າງຈົບງາມ, ຮັດສາຍແອວໜັງແລະໃສ່ເກີບໜັງສີດໍາ, ຖ້າຜູ້ໃດບໍ່ນຸ່ງຫົ່ມແບບນີ້ກໍຈະຖືກສັງຄົມກ່າວຂວັນນິນທາວ່າບໍ່ຮູ້ຈັກຮີດຄອງປະເພນີ.

**5) ຍຸກສະໄໝໃໝ່**

ຍ້ອນສັງຄົມລາວມີການຍອມຮັບເອົາສິ່ງໃໝ່ເຂົ້າມາຮັບໃຊ້ດ້ວຍຄ່ານິຍົມ "ທັນສະໄໝ" ດັ່ງນັ້ນ, ການນຸ່ງຖືຂອງຜູ້ຊາຍລາວຈຶ່ງມີການປ່ຽນແປງຫຼາຍ ແລະ ຫຼາຍກ່ວາແມ່ຍິງ ຄືການນິຍົມນຸ່ງຖືແບບສາກົນ ເຊັ່ນ: ໃນພິທີການຕ່າງໆຜູ້ຊາຍຈະໃສ່ຊຸດສາກົນ, ມັດກາລາວັດ.

**1.2.2 ການນຸ່ງຫົ່ມຂອງແມ່ຍິງລາວ**

**1) ຕາມຮີດຄອງເດີມ**

ຕາມຮີດຄອງເດີມດັ່ງເດີມແລ້ວ ແມ່ຍິງລາວທຸກຄົນຈະຕ້ອງນຸ່ງສິ້ນມີຫົວ ແລະ ມີຕີນ ການນຸ່ງສິ້ນນັ້ນບໍ່ເຂີນ ແລະ ບໍ່ລ່ວມເກີນໄປ ຄືທາງດ້ານເທິງໃຫ້ຢູ່ພຽງສະບື ແລະ ດ້ານລຸ່ມໃຫ້ຢູ່ເຄິ່ງກາງບີແຄ່ງ ສ່ວນເສື້ອນັ້ນຈະເປັນເສື້ອສີໃດກໍໄດ້ ຈະເປັນແພໄໝ ຫຼື ວ່າແພຝ້າຍກໍບໍ່ຈໍາກັດ.

**2) ເວລາເຮັດວຽກ**

ແມ່ຍິງຈະນຸ່ງສິ້ນ ແລະ ໃສ່ເສື້ອຝ້າຍສີດໍາແຂນຍາວ

**3) ຍຸກສະໄໝໃໝ່**

ຫຼັງຈາກທີ່ສັງຄົມມີການຍອມຮັບເອົາສິ່ງໃໝ່ເຂົ້າມາຮັບໃຊ້ດ້ວຍຄ່ານິຍົມ "ທັນສະໄໝ" ການນຸ່ງຖືຂອງແມ່ຍິງກໍມີການປ່ຽນແປງໂດຍສະເພາະໃນກຸ່ມໄວໜຸ່ມຈະແມ່ນເວລາພັກຜ່ອນໃນເຮືອນ ຫຼື ໄປທ່ຽວຕາມສະຖານທີ່ຕ່າງໆ ຈະພົບເຫັນການນຸ່ງໂສ້ງ ສະເກີດ ແລະ ສິ້ນ ປະສົມປະສານກັນໄປ ເຖິງຢ່າງໃດກໍຕາມການນຸ່ງຫົ່ມຂອງແມ່ຍິງກໍຍັງຄົງຮັກສາໄວ້ເຊິ່ງຂະນົບທໍານຽມປະເພນີການນຸ່ງຫົ່ມແບບແມ່ຍິງລາວ ສະແດງອອກໃນເວລາມີງານບຸນປະເພນີ ງານກິນດອງ ແລະ ພິທີກອນຕ່າງໆ.

**1.2.3 ການເກົ້າຜົມ ແລະ ເອ້ຍ້ອງ**

ໂດຍທົ່ວໄປແລ້ວແມ່ຍິງລາວນິຍົມກັນຈຶ່ງຜົມຍາວ ເພື່ອເອົາໄວ້ເກົ້າ, ການເກົ້າຜົມເປັນເອກະລັກຂອງແມ່ຍິງລາວມາແຕ່ບູຮານນະການ. ນັບແຕ່ປີ ຄ.ສ 1962 ເປັນຕົ້ນມາວັດທະນະທໍາການເກົ້າຜົມຂອງແມ່ຍິງລາວຖືກປ່ຽນແປງໄປແຕ່ກໍຍັງຮັກສາໄວ້ທີ່ຂາດບໍ່ໄດ້ກໍຄື ພິທີງານບຸນປະເພນີ ແລະ ການແຕ່ງງານ ໄປຄຽງຄູ່ກັບການເກົ້າຜົມນັ້ນແມ່ຍິງລາວກໍນິຍົມເອ້ຍ້ອງ ປະດັບດາຕົກແຕ່ງກາຍໃຫ້ມີຄວາມສວຍງາມດ້ວຍ

ການປະດັບເຄື່ອງເອ້ທີ່ເຮັດດ້ວຍເງິນ ແລະ ຄຳເຊັ່ນ: ສາຍສ້ອຍ, ຕຸ້ມຫູ, ສາຍແຂນ, ແຫວນ ແລະ ສາຍແອວເງິນ ຫຼື ທອງນາກ.

### 1.3 ປະເພນີການເຮັດບຸນ

ລາວເຮົາແມ່ນຊາດໜຶ່ງປະກອບດ້ວຍຫຼາຍຊົນເຜົ່າ ແຕ່ລະຊົນເຜົ່າກໍມີປະເພນີການເຮັດບຸນ ສະເພາະຂອງໃຜລາວ ສະເພາະປະເພນີການເຮັດບຸນຂອງເຜົ່າລາວລຸ່ມທີ່ນິຍົມປະຕິບັດກັນ ແມ່ນປະເພນີບຸນຕາມຮີດສິບສອງ ເພາະເປັນວັນບຸນທີ່ກ່ຽວຂ້ອງກັບຄວາມເຊື່ອໃນຊີວິດ ແລະ ພຸດທະສາສະໜາໃນຮອບປີຂອງຊາວລາວໃນປັດຈຸບັນ ໃນແຕ່ລະເຂດ ແຕ່ລະທ້ອງຖິ່ນກໍຍັງຄົງສືບຕໍ່ປະຕິບັດກັນມາບໍ່ໄດ້ຂາດ. ຕ່າງແຕ່ວ່າພິທີກຳໃນການປະຕິບັດ ອາດມີການປ່ຽນແປງເພື່ອໃຫ້ເຂົ້າກັບສະພາບການຂະຫຍາຍຕົວຂອງຍຸກສະໄໝໄປຄຽງຄູ່ກັນນັ້ນຊາວລາວເຮົາຈຳນວນໜຶ່ງກໍຮັບເອົາວັດທະນະທຳຂອງຊາດອື່ນເຂົ້າມາ ເຊັ່ນ ວັນເກີດ, ບຸນຄຣິດສະມາດ, ວັນບຸນແຫ່ງຄວາມຮັກ ແລະ ອື່ນໆ ເຊິ່ງໃນສັງຄົມຂອງໄວໜຸ່ມກຳລັງນິຍົມ.

### 1.4 ວັດທະນະທຳການກິນ

ວັດທະນະທຳການກິນຂອງລາວເປັນແບບຮຽບງ່າຍ, ອາຫານການກິນ ທີ່ເປັນພື້ນຖານໃນຊີວິດປະຈຳວັນແມ່ນເຂົ້າໜຽວ, ປາ, ຊີ້ນ ແລະ ຜັກ. ອາຫານລາວມີຫຼາຍຊະນິດ ເກືອບທຸກຊະນິດມີປາແດກເປັນສ່ວນທີ່ສຳຄັນໃນການປຸງແຕ່ງ. ອາຫານພື້ນເມືອງທີ່ຊາວລາວທົ່ວໄປໃນການບໍລິໂພກ ບໍ່ວ່າງານປົກກະຕິ ຫຼື ງານບຸນຕ່າງໆ ງານລ້ຽງສ້າງສັນ ຫຼື ຕ້ອນຮັບແຂກທີ່ມາຢ້ຽມຢາມແມ່ນລາບ, ຕົ້ມແກງ, ກ້ອຍ, ປີ້ງ ແລະ ອື່ນໆ. ນອກຈາກນີ້ສິ່ງທີ່ຂາດບໍ່ໄດ້ໃນຄາບເຂົ້າກໍຄື ຜັກ ແລະ ເຄື່ອງດື່ມ ຄື ເຫຼົ້າຂາວ.

ແຕ່ໃນປັດຈຸບັນນີ້ ວັດທະນະທຳການກິນຂອງລາວ ກໍມີການປັບປຸງປະສົມປະສານໄປກັບຍຸກສະໄໝບໍ່ວ່າປະເພດອາຫານ ແລະ ສະຖານທີ່ໃນການກິນອາຫານ ໂດຍສະເພາະຄ່ານິຍົມໃນການບໍລິໂພກອາຫານຂອງຄົນໃນຕົວເມືອງສ່ວນໃຫຍ່ ຈະໄປຮັບປະທານກັນຢູ່ຕາມຮ້ານອາຫານ, ພັດຕະຄານຕ່າງໆ, ທາງດ້ານການປຸງແຕ່ງພາຍໃນເຮືອນ ກໍມີລັກສະນະຫຼຸດລົງຫັນໄປຊື້ອາຫານທີ່ມີການປຸງແຕ່ງຂາຍຕາມຮ້ານອາຫານຕ່າງໆ. ແຕ່ເຖິງຢ່າງໃດກໍຕາມລັກສະນະວັດທະນະທຳການກິນແລະການປຸງແຕ່ງອາຫານແບບລາວກໍຍັງຄົງຮັກສາໄວ້ເໝືອນເດີມ.

### 1.5 ພິທີການສູ່ຂວັນ

ພິທີການສູ່ຂວັນ ເປັນປະເພນີຄວາມເຊື່ອໃນເລື່ອງຂວັນທີ່ຕິດພັນກັບວິຖີຊີວິດຂອງຄົນລາວມາແຕ່ບູຮານນະການຈົນກາຍເປັນສິ່ງທີ່ຄົນລາວຕ້ອງໄດ້ປະຕິບັດຢ່າງເປັນປະຈຳ ໃນຊີວິດຂອງຄົນຜູ້ໜຶ່ງ.

ຈຸດປະສົງໃນການສູ່ຂວັນ ແມ່ນເພື່ອເປັນການປອບໃຈ,ໃຫ້ກຳລັງໃຈ ຫຼື ຍົກຍ້ອງຄົນ ຫຼື ສັດ ແລະ ສິ່ງຂອງ ເພື່ອຂໍໃຫ້ຢູ່ເຢັນເປັນສຸກ ແລະ ປະສົບຜົນສຳເລັດໃນຊີວິດການງານທັງເປັນການສະແດງເຖິງຄວາມສາມັກຄີ, ຄວາມເຄົາລົບນັບຖື ແລະ ການໃຫ້ກຽດແຂກບ້ານແຂກເມືອງທີ່ມາຢາມ.

ການສູ່ຂວັນມີຫຼາຍປະເພດຄື ການສູ່ຂວັນຄົນ, ການສູ່ຂວັນສັດ ແລະ ສູ່ຂວັນວັດຖຸສິ່ງຂອງສຳລັບວິທີການສູ່ຂວັນຂອງລາວມີ 2 ວິທີຄື ວິທີການເຮັດແບບພຸດທະສາສະໜາ ແລະ ແບບພາມ. ຂັ້ນຕອນໃນການດຳເນີນກໍສຸດແລ້ວແຕ່ຈະໃຊ້ວິທີການໃດ, ບາງຄັ້ງກໍມີການໃຊ້ແບບປະສົມປະສານໄປທັງແບບພາມ ແລະ ພຸດໄປພ້ອມກັນໃນງານດຽວກັນ.

ວິທີແບບພາມ ເຊິ່ງຄົນທົ່ວໄປຮູ້ຈັກກັນດີແມ່ນ “ໝໍພອນ” ເປັນຜູ້ດຳເນີນພິທີກຳໃນການສູ່ຂວັນ ແລະ ໃຫ້ພອນໃຫ້ແກ່ຄົນທີ່ມາຮ່ວມ. ສຳລັບວິທີການແບບພຸດທະສາສະໜາ ຈະມີການນິມົນພຣະສົງຢ່າງໜ້ອຍ 5 ອົງມາຈະເລີນພອນພະພຸດທະມົນ, ຕັກບາດ ແລະ ສູດໄຊຍະມຸງຄຸນ ຫຼື ຕັກບາດສັງຄະທານອາຫານ.

ສະຫຼຸບແລ້ວ ຮີດຄອງປະເພນີລາວເປັນຮີດຄອງວັດທະນະທຳທີ່ຍຶດໝັ້ນໃນຫຼັກຄຳສອນຂອງພຸດທະສາສະໜາປະສົມປະສານ ຄະຕິຄວາມເຊື່ອແບບມີເຫດມີຜົນຂອງຈາຮີດປະເພນີເຊິ່ງກາຍເປັນພື້ນຖານ

ເຮັດໃຫ້ສັງຄົມລາວມີຄວາມເປັນເອກະພາບ, ບໍ່ມີການຂັດແຍ່ງຂອງກຸ່ມຄົນ. ວັດທະນະທຳລາວເປັນວັດທະນະທຳ ທີ່ມີການປັບປຸງພັດທະນາໃຫ້ສອດຄ່ອງກັບສະພາບຂອງສັງຄົມແຫ່ງການເປີດກ້ວາງ ແລະ ທັນສະໄໝແຕ່ກໍຄຶງຕົວໄວ້ ເຊິ່ງເປັນຄວາມເປັນເອກະລັກຂອງຊາດຕົນ.

# 2 ວັດທະນະທຳຂອງຊາດອາຊຽນ

ຄຸນຄ່າທາດ້ານວັດທະນະທຳ ແມ່ນຊັບພະຍາກອນອັນກ້ວາງໃຫຍ່ ແລະ ເປັນມໍລະດົກອັນອຸດົມຮັ່ງມີເຊິ່ງແຕ່ລະປະເທດສະມາຊິກອາຊຽນກໍລ້ວນແລ້ວແຕ່ມີວັດທະນະທຳຂອງຊາດຕົນ, ມໍລະດົກວັດທະນະທຳແຫ່ງຊາດສະມາຊິກນັ້ນປະກອບເປັນມໍລະດົກອາຊີຕາເວັນອອກສຽງໃຕ້ ການພັດທະນາ ແລະ ການປົກປັກຮັກສາກໍແມ່ນໜ້າທີ່ຂອງອາຊຽນທັງໝົດທີ່ຈະຮ່ວມມືກັນ.

## 2.1 ດ້ານເສດຖະກິດ

ບັນດາປະເທດ ສະມາຊິກອາຊຽນໄດ້ອອກແຮງເຄື່ອນໄຫວຮ່ວມມືກັນເພື່ອສ້າງເສດຖະກິດພາກພື້ນອາຊຽນໃຫ້ມີສະຖຽນລະພາບ ສົມບູນພູນສຸກ ແລະ ມີຄວາມສາມາດໃນການແຂ່ງຂັນສູງ ຄື: ການຈາລະຈອນສິນຄ້າ, ການບໍລິການ ແລະ ການລົງທຶນຢ່າງເສລີ, ມີການຫຼັ່ງໄຫຼຂອງທຶນຢ່າງເສລີພາບກ່ວາເກົ່າ, ການພັດທະນາເສດຖະກິດ ເປັນທີ່ໝັ້ນໃຈໄດ້ ແລະ ຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມແຕກຕ່າງທາງດ້ານເສດຖະກິດ - ສັງຄົມ, ຮັກສາສະຖຽນລະພາບຂອງເສດຖະກິດມະຫາພາກ ແລະ ການເງິນໃນພາກພື້ນ ເລັ່ງໃສ່ໃຫ້ມີການເຊື່ອມເຂົ້າກັນ ແລະ ຮ່ວມມືທາງດ້ານເສດຖະກິດ ໂດຍການປະຕິບັດຍຸດທະສາດລວມດັ່ງນີ້:

- ປະຕິບັດເຂດການຄ້າເສລີຢ່າງເຕັມສ່ວນ ແລະ ເລັ່ງການເປີດກ້ວາງການຄ້າທາງດ້ານບໍລິການເຮັດໃຫ້ອາຊຽນ, ກາຍເປັນເຂດລົງທຶນຢ່າງເສລີ ແລະ ເຂດພັດທະນາໃໝ່.
- ສືບຕໍ່ຮັດແໜ້ນ ແລະ ຂະຫຍາຍການເຊື່ອມຕໍ່ກັບພາກພື້ນທີ່ຢູ່ນອກອາຊຽນທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ຮ່ວມມື ແລະ ເຮັດໃຫ້ລະບົບການຄ້າຫຼາຍຝ່າຍເຂັ້ມແຂງ.
- ສົ່ງເສີມອຸດສາຫະກຳນ້ອຍ ແລະ ຂະໜາດກາງໃນອາຊຽນໃຫ້ທັນສະໄໝ ແລະ ມີຄວາມສາມາດໃນການແຂ່ງຂັນ ເຊິ່ງປະກອບສ່ວນເຂົ້າໃນການພັດທະນາອຸດສາຫະກຳ ແລະ ມີປະສິດທິຜົນຂອງພາກພື້ນ.
- ເລັ່ງເປີດເສລີດ້ານຄວາມຊຳນິຊຳນານ ແລະ ການບໍລິການພາກພື້ນ ສົ່ງເສີມການເປີດກວ້າງດ້ານການເງິນແລະ ການຮ່ວມມືທີ່ໃກ້ຊິດຍິ່ງຂຶ້ນ.
- ເລັ່ງການພັດທະນາດ້ານວິທະຍາສາດ ແລະ ເຕັກໂນໂລຊີ ສ້າງຕັ້ງກົນໄກສຳລັບການເຊື່ອມຕໍ່ໃນຂະແໜງພະລັງງານ ແລະ ການນຳໃຊ້ໄຟຟ້າ, ອາຍແກັດທຳມະຊາດ ແລະ ນ້ຳພາຍໃນອາຊຽນ.
- ເສີມຂະຫຍາຍການຮັບປະກັນດ້ານສະບຽງອາຫານ ແລະ ຄວາມສາມາດໃນການແຂ່ງຂັນໃນລະດັບສາກົນຂອງການຜະລິດ, ສະບຽງອາຫານ, ກະສິກຳ ແລະ ປ່າໄມ້ເຮັດໃຫ້ອາຊຽນກາຍເປັນຜູ້ຜະລິດທີ່ນຳໜ້າໃນຜະລິດຕະພັນເຫຼົ່ານີ້ ເພື່ອຕອບສະໜອງຄວາມຕ້ອງການທີ່ນັບມື້ນັບເພີ່ມຂຶ້ນ.
- ສ້າງໃຫ້ມີໂຄງລ່າງ ແລະ ການຄົມມະນາຄົມທີ່ດີຂຶ້ນ ໂດຍການພັດທະນາ ແລະ ເຊື່ອມຕໍ່, ກົມກຽວກັນໃນຕາໜ່າງການຂົນສົ່ງພາຍໃນອາຊຽນ ແລະ ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝໃນດ້ານໂທລະຄົມມະນາຄົມ ແລະ ເຕັກໂນໂລຊີຂ່າວສານ ພິເສດແມ່ນການເຊື່ອມຕໍ່ຄອມພິວເຕີຂໍ້ມູນຂ່າວສານໃນອາຊຽນ, ສົ່ງເສີມນະໂຍບາຍເປີດນ່ານຟ້າໂດຍພັດທະນາຫຼາຍຮູບແບບຂອງການຂົນສົ່ງ ເພື່ອສ້າງຄວາມສະດວກໃຫ້ແກ່ການສົ່ງເສີມສິນຄ້າຜ່ານແດນ.

## 2.2 ດ້ານສັງຄົມ

ອາຊຽນດຳເນີນການຮ່ວມມືດ້ານການພັດທະນາສັງຄົມໂດຍຜ່ານຄະນະກຳມະການດ້ານການພັດທະນາສັງຄົມເຊິ່ງໄດ້ສ້າງຕັ້ງຂຶ້ນມາ ປີ 1978 ໂດຍໄດ້ຮັບເອົາທິດທາງຊີ້ນຳຈາກກອງປະຊຸມສຸດຍອດຄັ້ງຕ່າງໆ, ຄະນະກຳມະການພັດທະນາສັງຄົມໄດ້ກຳນົດຄຶງເຂດບຸລິມະສິດສຳລັບການຮ່ວມມືຕາມບັນດາອະນຸ

ກຳມະການຕ່າງໆຂອງອາຊຽນ ຄື ອະນຸກຳມະການດ້ານການສຶກສາ, ແຜນການອາຊຽນດ້ານປະຊາກອນ, ອະນຸກຳມະການອາຊຽນດ້ານສຸຂະພາບ ແລະ ອາຫານ,ອະນຸກຳມະການອາຊຽນດ້ານຊາວໜຸ່ມ, ແຜນການອາຊຽນດ້ານແມ່ຍິງ, ອະນຸກຳມະການອາຊຽນດ້ານການຄວບຄຸມໄພພິບັດ.

ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 4 ໄດ້ຢືນຢັນເຖິງຄວາມຕັດສິນໃຈຂອງອາຊຽນທີ່ຈະເລັ່ງລັດການຮ່ວມມືທາງດ້ານການພັດທະນາສັງຄົມ ໂດຍສະເພາະໃນດັ່ງຕໍ່ໄປນີ້:

- ຂະຫຍາຍການສຶກສາກ່ຽວກັບອາຊຽນ ໃຫ້ເປັນພາກສ່ວນໜຶ່ງຂອງວິຊາສຶກສາກ່ຽວກັບອາຊີອາຄະເນຫຼັກສູດການຮຽນຂອງໂຮງຮຽນ ແລະ ມະຫາວິທະຍາໄລ.
- ນຳເອົາແຜນການແລກປ່ຽນນັກສຶກສາມາໃຊ້ ເພື່ອສົ່ງເສີມຄວາມຮູ້ກ່ຽວກັບອາຊຽນໃນການສຶກສາຊັ້ນອຸດົມ ແລະ ຊັ້ນສູງ.
- ເພີ່ມທະວີຂຶ້ນຕື່ມເຄືອຂ່າຍ ທີ່ມີຢູ່ຂອງການຮ່ວມມືລະຫວ່າງມະຫາວິທະຍາໄລທີ່ນຳໜ້າແນໃສ່ໃຫ້ສ້າງຕັ້ງມະຫາວິທະຍາໄລໃນອາຊຽນທີ່ສຸດ.
- ເລັ່ງລັດໃຫ້ມີການຮ່ວມມືໃນແຜນການກ່ຽວກັບແມ່ຍິງ.
- ເປີດກວ້າງການຮ່ວມມືໃນແຜນການພັດທະນາເດັກນ້ອຍ ເພື່ອໃຫ້ເຂົາເຈົ້າໄດ້ສະແດງໝົດຄວາມສາມາດຂອງຕົນ.
- ຊຸກຍູ້ການແລກປ່ຽນຂ່າວສານລະຫວ່າງການຈັດຕັ້ງ ທີ່ບໍ່ແມ່ນຂອງລັດຖະບານໃນພາກພື້ນເພື່ອຊ່ວຍໃຫ້ເຂົາເຈົ້າຂະຫຍາຍການປະກອບສ່ວນຂອງຕົນ ເຂົ້າໃນການຮ່ວມມືອາຊຽນ.
- ສົ່ງເສີມຄວາມພັດທະນາຮ່ວມກັນ ເພື່ອສະກັດກັ້ນການແຜ່ຂະຫຍາຍຂອງພະຍາດຕ່າງໆ.

# 3 ວັດທະນະທຳແບບປະສົມປະສານໃນອາຊຽນ

## 3.1 ວັດທະນະທຳອິນໂດເນເຊຍ

ວັດທະນະທຳອິນໂດເນເຊຍໄດ້ມີຮູບຮ່າງ ໂດຍການກະທົບເຊິ່ງກັນ ແລະ ລະຫວ່ງປະເພນີດັ້ງເດີມ ແລະ ອິດທິພົນຂອງຫຼາຍຊາດຕ່າງດ້າວ, ອິນໂດເນເຊຍເປັນສູນກາງໃນພາກພື້ນອາຊຽນ ເສັ້ນທາງທາງການຄ້າບູຮານລະຫວ່າງຕາເວັນອອກໄກ ແລະ ຕາເວັນອອກກາງ ເຮັດໃຫ້ວັດທະນະທຳ ໄດ້ຮັບອິດທິພົນຢ່າງແຂງແຮງຈາກຫຼາຍສາສະໜາ ມີສາສະໜາຮິນດູ, ພຸດ, ຂົງຈື້, ອິດສະລາມ ມັນແມ່ນວັດທະນະທຳແບບຄົບຊຸດປະສົມຈາກຫຼາຍເຄົ້າຊາວບາຫຼີ 93% ນັບຖືສາສະໜາຮິນດູ

ຮູບແບບສິລະປະໄດ້ສະແດງເຖິງ ວັດທະນະທຳແບບປະສົມ ວາຍັງ (Wayang) ເຊິ່ງເປັນຕົວລະຄອນຕຸກກະຕາພື້ນບ້ານໄດ້ສະແດງເພື່ອຂະຫຍາຍສາສະໜາຮິນດູ ແລະ ອິດສະລາມໃນໝູ່ບ້ານຢາວານ (Javan).

ເຖິງແມ່ນວ່າຈະໄດ້ຮັບອິດທິພົນຈາກຕາເວັນຕົກ ແລະ ຊາດອື່ນໆ ແຕ່ຊາວອິນໂດເນເຊຍທີ່ຢູ່ຫ່າງໄກສອກຫຼີກຍັງຮັກສາວັດທະນະທຳດັ້ງເດີມ.

## 3.2 ວັດທະນະທຳບຣູນາຍ

ວັດທະນະທຳບຣູນາຍ ຄ້າຍຄືກັບວັດທະນະທຳມາເລເຊຍ ເຊິ່ງໄດ້ຮັບອິດທິພົນຈາກສາສະໜາຮິນດູ ແລະ ອິດສະລາມ ສາສະໜາອິດສະລາມເປັນສາສະໜາທາງການຂອງບຣູນາຍ ນອກຈາກນີ້ຊາວບຣູນາຍຈຳນວນໜຶ່ງຍັງນັບຖືສາສະໜາພຸດ (ຊາວຈີນ) ແລະ ສາສະໜາຄຣິດ.

## 3.3 ວັດທະນະທຳຟີລິບປິນ

ວັດທະນະທຳຂອງຟີລິບປິນ ໄດ້ສະແດງເຖິງຄວາມຄົບຊຸດຂອງປະຫວັດສາດ. ຟີລິບປິນຜ່ານການປະສົມປົນກັນລະຫວ່າງຄວາມສີວິໄລຂອງກ່ອນທີ່ສະປານິກອິດສະໂຕຼເນຊຽນ ແລະ ວັດທະນະທຳສະເປນໃນໄລຍະທີ່ເປັນເມືອງຂຶ້ນຂອງສະເປນ 377 ປີ. ການເປັນຫົວເມືອງຂຶ້ນຂອງສະເປນ ເຮັດໃຫ້ວັດທະນະທຳຂອງສະເປນ - ແມັກຊິໂກ ມີອິດທິພົນຕໍ່ວັດທະນະທຳຟີລິບປິນຫຼາຍດ້ານ. ທີສະປານິກ ມີອິດທິພົນອັນພົນເດັ່ນໃນ

ດ້ານວັນນະຄະດີ, ດົນຕີພື້ນບ້ານ, ຟ້ອນພື້ນບ້ານ, ພາສາ, ອາຫານ, ສິລະປະ ແລະ ສາສະໜາ, ງານບຸນປະເພນີໄດ້ສະຫຼອງໂດຍມີພິທີຢູ່ໂບດ, ແຫ່ຕາມຖະໜົນ, ດອກໄມ້ໄຟ, ປະກວດນາງງາມ, ຟ້ອນງາມ ແລະ ຕີໄກ່ ບາງດ້ານກໍໄດ້ຮັບອິດທິພົນຈາກອາເມລິກາ ເຊິ່ງມີພາສາອັງກິດ ເຊັ່ນ ອາຫານໄວ (Fast food ສັ່ງໄວໄດ້ໄວ ຖືເອົາໄປກິນນຳທາງກໍໄດ້) ດົນຕີ, ຮູບເງົາ ແລະ ບານບ້ວງ. ສ່ວນວ່າຄົນຈີນຟີລິບປິນ ທີ່ຢູ່ຕາມຊົນນະບົດ ນັ້ນປະຕິບັດວັດທະນະທຳຂອງເຂົາເອງ.

### 3.4 ວັດທະນະທຳສິງກະໂປ

ເນື່ອງຈາກວ່າສິງກະໂປເປັນປະເທດນ້ອຍ ແລະ ທັນສະໄໝ ປະກອບດ້ວຍຊາວຈີນ, ມາເລ, ອິນເດຍ ແລະ ຊາວຕ່າງດ້າວຈາກຢູໂຣບ, ວັດທະນະທຳສິງກະໂປຈຶ່ງສະແດງອອກເຖິງຄວາມຫຼາກຫຼາຍຂອງປະຊາກອນກໍຄືກຸ່ມເຜົ່າສ່ວນນ້ອຍ ເຊິ່ງຍັງສືບຕໍ່ສະຫຼອງວັດທະນະທຳຂອງເຂົາເອງ.

ນະໂຍບາຍຂອງສະພາພັດທະນາເຄຫະ (Housing Development Board) ຫຼື HDB ໄດ້ພະຍາຍາມເຮັດໃຫ້ອາຄານເຮືອນມວນຊົນມີຫຼາກຫຼາຍເຊື້ອຊາດປົນກັນຢູ່ ເຖິງຢ່າງໃດກໍຕາມສິງກະໂປໄດ້ມີຜົນສຳເລັດໃນລະດັບອັນສຳຄັນຂອງການເຊື່ອມວັດທະນະທຳ, ເປັນການປະສົມບັນດາກຸ່ມຊົນເຜົ່າໃຫ້ເປັນໜຶ່ງດຽວເປັນສິງກະໂປທີ່ອຸດົມຮັ່ງມີ ແລະ ຫຼາກຫຼາຍ.

ກຸ່ມຊົນເຜົ່າ, ເຊື້ອຊາດມີຄວາມຈຳເປັນເຈົ້າຂອງເຊື້ອຊາດເຂົາເອງ ເຊິ່ງມີຄວາມປາຖະໜາຢາກກິນ, ຢາກຊື້ສິ່ງໃດໜຶ່ງສະເພາະວັດທະນະທຳຂອງເຂົາເອງ. ນະໂຍບາຍຂອງສະພາພັດທະນາເຄຫະສະຖານໄດ້ອອກແບບເພື່ອສົ່ງເສີມໃຫ້ມີຫຼາຍເຊື້ອຊາດໃນແຕ່ລະອາຄານເຄຫະ, ນະໂຍບາຍດັ່ງກ່າວສາມາດສັງເກດໄດ້ ເຊັ່ນ: ຢູ່ແປະຮ້ານອາຫານກຸ່ມເຊື້ອຊາດໜຶ່ງ ຈະມີອາຫານສຳລັບອີກເຊື້ອຊາດໜຶ່ງ. ຈຸດປະສົງຂອງນະໂຍບາຍກໍເພື່ອການສົ່ງເສີມການເຊື່ອມໂຕມາເປັນສັງຄົມ ເຊິ່ງແມ່ນ ລີກວນຢູ (Lee Kuan You) ເປັນຜູ້ສະໜັບສະໜູນ.

### 3.5 ວັດທະນະທຳມາເລເຊຍ

ແມ່ນວັດທະນະທຳແບບປະສົມຂອງມາເລເຊຍ, ຈີນ, ອິນເດຍ ແລະ ຊົນເຜົ່າດັ້ງເດີມ ຕ່າງໆທີ່ມີນານກວ່າ 1500 ປີ. ຈາກອານາຈັກ ຄົບາ (Kedkbas ແລມບາ - ບູຢັງ Lembah Bujang) ກັບພໍ່ຄ້າຈີນ ແລະ ອິນເດຍ, ບັນດາວັດທະນະທຳອື່ນໆໃນໄລຍະຜ່ານມາ ເຊັ່ນ: ວັດທະນະທຳເປີຊຽນ, ອາຣັບ ແລະ ຢູໂຣບ ໄດ້ມີອິດທິພົນຕໍ່ວັດທະນະທຳມາເລເຊຍ.

ມາເລເຊຍໄດ້ມີນະໂຍບາຍ " ວັດທະນະທຳແຫ່ງຊາດ 1971 " ໂດຍກຳນົດ 3 ຫຼັກການເປັນສິ່ງແນະນຳສຳລັບ " ວັດທະນະທຳແຫ່ງຊາດ " ມີດັ່ງນີ້:

- ວັດທະນະທຳແຫ່ງຊາດ ຕໍ່ບົນພື້ນຖານວັດທະນະທຳມາເລເຊຍດັ້ງເດີມ.
- ອົງປະກອບທີ່ເໝາະສົມຈາກວັດທະນະທຳອື່ນ ສາມາດຮັບເອົາໄດ້ມາເປັນພາກສ່ວນໜຶ່ງຂອງວັດທະນະທຳແຫ່ງຊາດ.
- ສາສະໜາອິດສະລາມເປັນສ່ວນປະກອບທີ່ສຳຄັນໜຶ່ງ ໃນວັດທະນະທຳແຫ່ງຊາດ.

### 3.6 ວັດທະນະທຳມຽນມາ

ວັດທະນະທຳຂອງມຽນມນໄດ້ຮັບອິດທິພົນຈາກສາສະໜາພຸດ ແລະ ມອນ ທີ່ຢູ່ໃກ້ຄຽງໂດຍສະເພາະ ອິນເດຍ ຈີນ ແລະ ໄທ ໄດ້ປະກອບສ່ວນສຳຄັນໃນການຫຼໍ່ຫຼອມວັດທະນະທຳມຽນມາ ໃນບໍ່ນານມານີ້ການເປັນເມືອງຂຶ້ນຂອງອັງກິດ ແລະ ສັງຄົມຕາເວັນຕົກໄດ້ສົ່ງຜົນສະທ້ອນຕໍ່ ວັດທະນະທຳມຽນມານັບທັງພາສາເວົ້າ ແລະ ການສຶກສາ.

ສິລະປະມຽນມາໄດ້ກຳເນີດຂຶ້ນບົນພື້ນຖານສາສະໜາພຸດ ແລະ ຮິນດູ ອາຫານມຽນມາໄດ້ຮັບອິດທິພົນຈາກອາຫານອິນເດຍ, ຈີນ, ໄທ ແລະ ອາຫານຊົນເຜົ່າພື້ນເມືອງ.

ບຸນປະເພນີມຽນມາສ່ວນໃຫຍ່ກ່ຽວພັນກັບສາສະໜາພຸດ ແລະ ກໍມີ 12 ຄັ້ງກົງກັບ 12 ເດືອນຕາມປະຕິທິນ.

**ຄຳຖາມ :**

1. ລັກສະນະວັດທະນະທຳຂອງລາວມີແນວໃດ?
2. ວັດທະນະທຳຂອງປະເທດສະມາຊິກອາຊຽນດ້ານເສດຖະກິດ ແລະ ສັງຄົມມີແນວໃດ?

# ບົດທີ 8

## ການສຶກສາຂອງລາວ ແລະ ອາຊຽນ

ການສຶກສາເປັນກິດຈະກຳພື້ນຖານຂອງມະນຸດໃນສັງຄົມ. ສັງຄົມຈະດຳລົງຢູ່ໄດ້ກໍ່ຕໍ່ເມື່ອມີການຖ່າຍທອດສິ່ງຕ່າງໆຈາກຄົນຮຸ່ນໃໝ່ ຕະຫຼອດຈົນໃຫ້ມີການປະຕິບັດຕາມທີ່ກຸ່ມໄດ້ຂາດຫ້ອງໄວ້ແຕ່ລະສັງຄົມຈຶ່ງຈຳຕ້ອງມີການອົບຮົມສັ່ງສອນສະມາຊິກຂອງຕົນໃຫ້ໄດ້ຮັບການສຶກສາ.

ສຳລັບການສຶກສາຂອງລາວໃນໄລຍະຜ່ານມານີ້ ພວກເຮົາໄດ້ສຸມໃສ່ພັດທະນາປັດໃຈພື້ນຖານໃນການຕັດສິນຄຸນນະພາບຂອງການສຶກສາ ເຊັ່ນ ໄດ້ ພັດທະນາຄູໃຫ້ມີຄວາມສາມາດດີຂຶ້ນ, ໄດ້ພັດທະນາຫຼັກສູດ, ປຶ້ມແບບຮຽນ, ປຶ້ມຄູ່ມື, ສື່ການຮຽນ - ການສອນ ໃນທຸກຊັ້ນ, ທຸກສາຍໃຫ້ມີມາດຖານຄວາມຮູ້ສູງຂຶ້ນ ແລະ ສອດຄ່ອງກັບຍຸກສະໄໝ, ໄດ້ເພີ່ມທຶນຮອນເຂົ້າໃນການສຶກສາ, ໄດ້ປັບປຸງການບໍລິຫານ ແລະ ຄຸ້ມຄອງການສຶກສາແຕ່ລະຂັ້ນ ເຊິ່ງໃນນັ້ນໄດ້ກັບນົດໂຄງປະ ກອບການຈັດຕັ້ງ ສ້າງລະບຽບການຕ່າງໆ ແລະ ບຳລຸງພະນັກງານ ອັນເຮັດໃຫ້ການຈັດຕັ້ງເປັນເອກະພາບ ແລະ ມີລະບຽບ ແຜນດີຂຶ້ນເທື່ອລະກ້າວ, ສັງຄົມກໍມີການຕື່ນຕົວປະກອບສ່ວນ ເຂົ້າໃນການພັດທະ ນາສຶກສາຫຼາຍຂຶ້ນ. ຈາກ ນັ້ນ, ເຮັດໃຫ້ວຽກ ງານການສຶກສາມີການຂະຫຍາຍຕົວທາງດ້ານ ປະລິມານ ແລະ ຄຸນນະພາບດີຂຶ້ນກ່ວາເກົ່າ.

## 1 ການສຶກສາກັບການພັດທະນາຊັບພະຍາກອນມະນຸດ

ການສຶກສາແມ່ນວິທະຍາສາດໜຶ່ງທີ່ໃຊ້ໃນການສຶກສາຄົນໃນສັງຄົມຕ່າງໆ. ບັນດາຄວາມຮູ້ດ້ານວິທະຍາສາດ - ເຕັກນິກ, ຄຸນສົມບັດ ແລະ ຄວາມຊຳນິຊຳນານ ໃນການອອກແຮງງານນັ້ນບໍ່ ເກີດຂຶ້ນ ຕາມເສັ້ນທາງສືບເຊື້ອເທົ່ານັ້ນ ແຕ່ຫາກກໍ່ຕົວຂຶ້ນຕາມເສັ້ນທາງສິດສອນ - ຮໍ່າຮຽນ ແລະ ນຳໃຊ້ອຸປະກອນການອອກແຮງງານ.

ດັ່ງນັ້ນ, ການສຶກສາຈຶ່ງເປັນພາກສ່ວນສຳຄັນຂອງໂຄງບົນ ເຊິ່ງມີໜ້າທີ່ນຳເອົາລະດັບການ ສຶກສາມາໃຫ້ທຸກຄົນໃນສັງຄົມນັບມື້ນັບສູງຂຶ້ນ, ພ້ອມກັນນັ້ນມັນກໍເປັນພາກສ່ວນສຳຄັນໜຶ່ງ ໃນການກໍ່ສ້າງເສດຖະກິດໂດຍມີພາລະບົດບາດຜະລິດກຳລັງແຮງຂອງສັງຄົມ.

ໃນຕົວຈິງ ບໍ່ວ່າປະເທດໃດກໍ່ຕາມ, ຖ້າຫາກລະດັບວັດທະນະທຳ, ຄວາມຮູ້ຄວາມສາມາດ ຂອງຄົນໂດຍທົ່ວໄປຍັງຕໍ່າ ກໍຈະມີຄວາມຫຍຸ້ງຍາກໃນການພັດທະນາເສດຖະກິດ - ສັງຄົມຢູ່ໃນປະເທດນັ້ນ. ມີແຕ່ວິທີການດຽວຄືໃຫ້ເຂົາເຈົ້າໄດ້ຮັບການສຶກສາໃນລະດັບອັນເໝາະສົມເທົ່ານັ້ນ ຈຶ່ງຈະສາມາດຊ່ວຍໃຫ້ ເຂົາເຈົ້າປັບຕົວໃຫ້ເຂົ້າກັບສະພາບແວດລ້ອມຕ່າງໆ ແລະ ຮູ້ຈັກແກ້ໄຂບັນຫາທີ່ເຂົາເຈົ້າໄດ້ປະສົບພົບພໍ້ດ້ວຍຕົນເອງ.

ເຖິງແມ່ນປະເທດໜຶ່ງຈະມີຊັບພະຍາກອນທຳມະຊາດອຸດົມຮັ່ງມີປານໃດກໍຕາມແຕ່ຖ້າຫາກຂາດຄົນທີ່ມີລະດັບຄວາມຮູ້, ຄວາມສາມາດແລ້ວ ໝາຍຄວາມວ່າຂາດຊັບພະຍາກອນມະນຸດ, ກໍບໍ່ອາດສາມາດຂຸດຄົ້ນເອົາຊັບພະຍາກອນທຳມະຊາດເຫຼົ່ານັ້ນຂຶ້ນມາໃຊ້ຢ່າງມີປະສິດທິຜົນໄດ້.

ດັ່ງນັ້ນ, ການສຶກສາຈຶ່ງມີສ່ວນພົວພັນຢ່າງຊະນິດແໜ້ນກັບການພັດທະນາຄົນໃຫ້ກາຍເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ຄຸນສົມບັດທີ່ດີ, ກາຍເປັນຊັບພະຍາກອນອັນປະເສີດຂອງຊາດນັ້ນຄືຊັບພະຍາກອນມະນຸດ ເຊິ່ງບໍ່ມີວັນບົກແຫ້ງໄປໄດ້ຈັກເທື່ອ, ຖ້າຫາກມີການເອົາໃຈໃສ່ພັດທະນາການສຶກສາເລື້ອຍໆໄປ.

ໃນແງ່ກ່ຽວກັບການພັດທະນາຊັບພະຍາກອນມະນຸດຢູ່ ສປປລາວ ເຮົາ, ການພັດທະນາຊັບພະຍາກອນມະນຸດ ມີຄວາມໝາຍສຳຄັນທີ່ມີລັກສະນະຕັດສິນຕໍ່ການຄົງຕົວ ແລະ ການສືບຕໍ່ຂະຫຍາຍຕົວຂອງປະເທດຊາດ. ສະນັ້ນ, ພັກເຮົາກຳນົດຈຸດໝາຍລວມຂອງການສ້າງຄົນດັ່ງນີ້:

- ສ້າງຄົນໃຫ້ເປັນພົນລະເມືອງດີ ມີນໍ້າໃຈແຫ່ງຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີລະບຽບວິໄນ ແລະ ເຄົາລົບກົດໝາຍ, ຮູ້ຮັບເອົາ ແລະ ຮູ້ສົມທົບ 3 ຜົນປະໂຫຍດຢ່າງກົມກຽວກັນ, ທັງຮູ້ປະຕິບັດພັນທະ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ.

- ສ້າງຄົນໃຫ້ເປັນຜູ້ມີຄວາມຮູ້, ມີວິຊາອາຊີບ ແລະ ມີຄວາມສາມາດ, ດຸໝັ່ນປະດິດສ້າງ ແລະ ຮູ້ປະຢັດມັດທະຍັດ, ມີສຸຂະພາບພະລະນາໄມສົມບູນ ແລະ ມີຄວາມສີວິໄລທາງດ້ານຈິດໃຈ ຄື ມີນໍ້າໃຈມະນຸດສະທຳ, ຍຸດຕິທຳ, ສາມັກຄີ, ເອື້ອເຟື້ອເພື່ອແຜ່ ແລະ ມີຄວາມມັກ, ຄວາມນິຍົມອັນຖືກຕ້ອງ, ການກຳນົດຈຸດໝາຍລວມຄືແນວນີ້ ແມ່ນແນໃສ່ຮັບປະກັນໃຫ້ແກ່ການປະຕິບັດແນວທາງຍຸດທະສາດແຫ່ງການສືບຕໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ສ້າງບັນດາປະຖົມປັດໄຈໃຫ້ແກ່ການກ້າວຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວນັ້ນໃຫ້ປະກົດຜົນເປັນຈິງ.

## 2 ການສຶກສາກັບການພັດທະນາເສດຖະກິດສັງຄົມ

ການສຶກສາຕິດພັນກັບບັນດາຈຸດໝາຍເສດຖະກິດ - ສັງຄົມນັ້ນ ໝາຍເຖິງການເສີມຂະຫຍາຍປະສິດທິຜົນຂອງການສຶກສາຕໍ່ກັບຈຸດໝາຍເສດຖະກິດ - ສັງຄົມ. ພວກເຮົາຄວນຄວນເຂົ້າໃຈວ່າ ຈຸດໝາຍ ແລະ ຄົນ ທີ່ຈະກໍ່ສ້າງໃຫ້ແກ່ຄວາມຕ້ອງການ ທາງດ້ານເສດຖະກິດນັ້ນແມ່ນຈິງ. ດັ່ງນັ້ນ, ໂຮງຮຽນຕັ້ງຢູ່ທ້ອງຖິ່ນໃດ ຄູກໍຕ້ອງນຳເອົາບັນຫາທິດທາງການຜະລິດໃນທ້ອງຖີ່ນັ້ນມາສອນໃຫ້ນັກຮຽນ ເຊັ່ນ ຮູ້ວິທີລ້ຽງສັດ, ວິທີປູກຕົ້ນໄມ້ທີ່ເຄີຍປະຕິບັດໃນທ້ອງຖິ່ນ. ເຮັດໃຫ້ນັກຮຽນໃນໂຮງຮຽນສາມັນມີ ຄວາມ ສາມາດ ແລະ ມີຈິດໃຈກຽມພ້ອມລົງມືປະຕິບັດໜ້າທີ່ເສດຖະກິດເສດຖະກິດ, ສັງຄົມຢູ່ໃນທ້ອງຖິ່ນຕົນໃນເມື່ອຮຽນຈົບແລ້ວ.

ນອກຈາກສິ່ງທີ່ກ່າວມາຂ້າງເທິງແລ້ວ, ພວກເຮົາຍັງເຫັນອີກວ່າ ການສຶກສາໄດ້ມີການຕິດພັນກັບວຽກ ງານ ພັດຖະນາເສດຖະກິດຕົວຈິງຢູ່ພາຍໃນປະເທດຢ່າງຊະນິດແໜ້ນ ເພາະວ່າການພັດທະນາເສດຖະກິດ ໃຫ້ມີການຂະຫຍາຍຕົວ ແລະ ວ່ອງໄວ ນັ້ນມັນຮຽກຮ້ອງໃຫ້ມີການພັດທະ ນາທາງ ດ້ານພື້ນຖານວັດຖຸ, ເຕັກນິກ, ຮັບໃຊ້ການຜະລິດໃຫ້ທັນສະໄໝ ແລະ ທາງດ້ານກຳລັງແຮງງານ ທີ່ມີຄວາມສາ ມາດເພື່ອທຳການ ຜະລິດ ແລະ ຄຸ້ມຄອງການຜະລິດຈຶ່ງເຫັນໄດ້ ວ່າວຽກງານການສຶກສາ ເຊິ່ງມີພາລະບົດ ບາດຜະລິດກຳລັງແຮງງານນັ້ນມັນໄດ້ເປັນພື້ນຖານ ອັນສຳຄັນໃຫ້ແກ່ການຂະ ຫຍາຍຕົວດ້ານເສດຖະກິດ-ສັງຄົມຢູ່ປະເທດເຮົາ

ປັດຈຸບັນນີ້ທ່າອ່ຽງເສດຖະກິດ ແລະ ສັງຄົມຫຼາຍປະການ ເຊັ່ນ ການປ່ຽນແປງໂຄງສ້າງທາງດ້ານເສດຖະກິດຂອງປະເທດເຮົາຈະຄ່ອຍໆຫັນຈາກການກະສິກຳແບບດັ່ງເດີມໄປສູ່ການຜະລິດເຄິ່ງກົງຈັກປະກອບນຳ. ພ້ອມດຽວກັນນັ້ນຂະແໜງການອຸດສະຫະກຳເບົາ ແລະ ຂະແໜງບໍລິການຈະນັບມື້ນັບຫຼາຍຂຶ້ນ. ດັ່ງນັ້ນ, ມັນຈຶ່ງມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງພັດທະນາຄຸນສົມບັດຂອງປະຊາກອນໃຫ້ມີຄວາມຮູ້ ແລະ ຄຸນສົມບັດທີ່ເໝາະສົມສອດຄ່ອງກັບການປ່ຽນແປງດັ່ງກ່າວ ເຊິ່ງວຽກງານການສຶກສາຈະຕ້ອງໄດ້ເຂົ້າມາມີບົດບາດຢູ່ໃນຂະບວນການຈອງຕະຫຼາດແຮງງານ.

ຄູພວກເຮົາຈຶ່ງມີຄວາມຈຳເປັນຈະຕ້ອງສົ່ງເສີມເດັກທີ່ມີຄວາມຖະໜັດໃນດ້ານຕ່າງໆໃຫ້ໄດ້ຮັບການພັດທະນາຢ່າງເຕັມສ່ວນ ເລີ່ມແຕ່ຊັ້ນປະຖົມຂຶ້ນໄປ.

## 3 ການສຶກສາກັບການຂ່າວສານ

ວຽກງານຖະແຫຼງຂ່າວ ແລະ ສື່ມ່ວນຊົນ ແມ່ນພາຫະນະອັນສຳຄັນໃນການເຜີຍແຜ່ ແລະ ປົກປ້ອງແນວທາງແຜນນະໂຍບາຍຂອງພັກ ແລະ ລັດເຮົາຕໍ່ພາຍໃນ ແລະ ຕ່າງປະເທດ. ພາຫະນະສື່ມວນຊົນຂອງພວກເຮົາ ແມ່ນເຄື່ອງມືທາງດ້ານການເມືອງ - ແນວຄິດ ເຊິ່ງປະກອບມີໜັງສືພິມ, ວາລະສານ, ຂ່າວສານ, ລາຍການກະຈາຍສຽງ, ລາຍການໂທລະພາບ, ລາຍການເບິ່ງ ແລະ ຟັງສະຖານະການ ເຊິ່ງໄດ້ຮັບການປະຕິບັດດ້ວຍພາຫະນະ ເຕັກນິກທີ່ແຕກຕ່າງກັນ.

ໃນພາລະກິດແຫ່ງການສືບຕໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນກໍຄືພາລະກິດປ່ຽນແປງໃໝ່ ຮອບດ້ານຢ່າງມີຫຼັກການຂອງພັກເຮົານັ້ນຂອງພັກເຮົານັ້ນ ພາຫະນະສື່ມວນຊົນມີບົດບາດສຳຄັນໃນການເສີມສ້າງຄວາມສາມັກຄີປອງດອງຂອງປະເທດຊາດເຮົາ, ຫັນປ່ຽນເສດຖະກິດທຳມະຊາດເປັນເສດຖະກິດສິນຄ້າ. ໃນການສຶກສາອົບຮົມການເມືອງແນວຄິດ, ສ້າງທັດສະນະຫຼັກໝັ້ນ ແລະ ຄວາມເຊື່ອໝັ້ນ ຕໍ່ຕໍ່ອຸດົມຄະຕິ ແລະ ການນຳພາຂອງພັກໃນການຊຸກຍູ້ ປຸກລະດົມທົ່ວປວງຊົນເຮັດໜ້າທີ່ປ້ອງກັນຊາດປ້ອງກັນຄວາມສະຫງົບ ໃນການໂຄສະນາດຶງດູດເອົາການຮ່ວມມື, ການຊ່ວຍເຫຼືອ ແລະ ການລົງທຶນຈາກຕ່າງປະເທດ ຕະຫຼອດເຖິງການເສີມຂະຫຍາຍປະຊາທິປະໄຕ ແລະ ຕໍ່ສູ້ຕ້ານກັບປະກົດການຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນ ແລະ ອື່ນໆອີກ.

ດັ່ງນັ້ນ, ເພື່ອເຮັດໃຫ້ວຽກງານດັ່ງກ່າວນີ້ໄດ້ດີ ພາຫະນະສື່ມວນຊົນຂອງພວກເຮົາຕ້ອງມີລັກສະນະຕົວຈິງ ແລະ ຈະຕ້ອງໄດ້ເອົາໃຈໃສ່ປັບປຸງ, ຂະຫຍາຍພາຫະນະຂ່າວສານ ເຊັ່ນ ໜັງສືພິມ, ວິທະຍຸກະຈາຍສຽງ, ໂທລະພາບດ້ວຍການບຸລະນະປັວແປງ ເພີ່ມພື້ນຖານວັດຖຸເຕັກນິກ, ຍົກລະດັບຄວາມສາມາດຄວາມຮັບຜິດຊອບຂອງພະນັກງານ ແລະ ຄຸນນະພາບຂອງວຽກງານໃຫ້ດີຂຶ້ນ. ນຳເອົາ ຂ່າວ ສານ ແລະ ວັດທະນະທຳໄປເຖິງປະຊາຊົນ,ນັບທັງຜູ້ທີ່ຢູ່ເຂດພູດອຍຫ່າງໄກສອກຫຼີກ, ບໍລິເວນຊາຍແດນ, ໃຫ້ປະຊາຊົນໄດ້ຜົນປະໂຫຍດຈາກການຟັງ, ການເບິ່ງ, ການອ່ານ.

ມາເຖິງປັດຈຸບັນນີ້, ການຂະຫຍາຍຕົວທາງດ້ານເຕັກໂນໂລຊີ ການຖະແຫຼງຂ່າວ ອັນພາໃຫ້ມີພາຫະນະ ແລະ ພູມປັນຍາໃໝ່ເກີດຂຶ້ນຢ່າງໄວວາ ຖືກນຳໃຊ້ເຂົ້າໃນຂົງເຂດວຽກງານຢ່າງກ້ວາງຂວາງ ຖ້າຫາກ ບໍ່ມີ ລະດັບຄວາມຮູ້ - ຄວາມສາມາດ ຫຼື ນຳໃຊ້ບໍ່ເປັນ ກໍຈະຫຼ້າຫຼັງ ຫຼື ພັດທະນາບໍ່ທັນໝູ່. ດັ່ງນັ້ນ, ການສຶກ ສາ ຈຶ່ງເຂົ້າມາມີບົດບາດສຳຄັນໃຫ້ແກ່ການຂະຫຍາຍຕົວທາງດ້ານຂ່າວສານຂໍ້ມູນຕ່າງໆ.

# 4 ການຮ່ວມມືທາງດ້ານການສຶກສາສຳລັບຊາດອາຊຽນ

ກອງປະຊຸມລັດຖະມົນຕີກະຊວງສຶກສາອາຊຽນ ຄັ້ງທີ I ຈັດຂຶ້ນທີ່ ມະນິລາ ປະເທດ ຟີລິບປິນ ວັນທີ 8 - 9 /12/ 1977 ເຊິ່ງມີຜູ້ອາວຸໂສ ມະນິລາ ເປັນປະທານໃນກອງປະຊຸມດັ່ງກ່າວມີປະທານ ເລຂາທິການໃຫ່ຍອາຊຽນ ໃນສະໄໝນັ້ນກໍໄດ້ເຂົ້າຮ່ວມ, ກອງປະຊຸມໄດ້ພິຈາລະນາບັນດາໂຄງການ ແລະ ກິດຈະກຳກ່ຽວກັບການສຶກສາພາຍໃຕ້ຖະແຫຼງການຮ່ວມມືອາຊຽນ 1967 ອາຊຽນຄອດຂອດ 1976 ດັ່ງນີ້:

1) ວຽກງານການສຶກເພື່ອຊາວໜຸ່ມ ການສຶກສານອກໂຮງຮຽນ ແລະ ໃນໂຮງຮຽນ.
2) ການປະຮູບການກໍ່ສ້າງຄູ.
3) ການພັດທະນາການສອບເສັງ.
4) ການຄຸ້ມຄອງບໍລິຫານ ແລະ ລະບົບຂໍ້ມູນຂ່າວສານ.
5) ການສຶກສາພິເສດສຳລັບຄົນເສຍອົງຄະ.

ອົງການທີ່ເຮັດວຽກສຳລັບການສຶກສາຊັ້ນສູງໂດຍກົງ ແມ່ນອົງການເຄືອຂ່າຍມະຫາໄລອາຊຽນ (AUN) ມີ17 ມະຫາໄລອາຊຽນເປັນສະມາຊິກ. ມະຫາໄລແຫ່ງຊາດລາວເຂົ້າເປັນສະມາຊິກ 1997, ອົງການດັ່ງກ່າວປະກອບດ້ວຍຜູ້ຊົງຄຸນວຸດທິ.

ເລຂາທິການໃຫ່ຍ ຂອງທະບວງມະຫາໄລອາຊຽນຄົນປັດຈຸບັນ ດຣ. ກຼິດ ສະນະພົງກຽດສິການະ ປະເທດໄທ ເຊິ່ງມີສະມາຊິກສະພາອະທິການບໍດີມະໄລເປັນສະມາຊິກ ແລະ ສະພາດັ່ງກ່າວໄດ້ໄຂຂຶ້ນປີໜຶ່ງ 2 ຄັ້ງ ເຊິ່ງມະຫາໄລປ່ຽນກັນເປັນເຈົ້າພາບຕາມລຳດັບບົນພື້ນຖານຄວາມພ້ອມ ຫຼື ເຫັນດີ ມະຫາໄລທີ່ຈະເປັນເຈົ້າພາບ, ເຄືອຂ່າຍດັ່ງກ່າວຈະໄດ້ພິຈາລະນາການຮ່ວມມືດັ່ງລຸ່ມນີ້:

- ບັນຫາການສຶກສາຊັ້ນສູງ.
- ຮັບປະກັນຄຸນນະພາບການສຶກສາ.
- ຄົ້ນຄ້ວາວິທະຍາສາດ, ຊອກຫາແຫຼ່ງທຶນການສຶກສາ.
- ແລກປ່ຽນອາຈານສອນດ້ວຍກັນ ແລະ ນັກສຶກສາດ້ວຍກັນ.

- ດຳເນີນກິດຈະກຳ.

- ແລກປ່ຽນວັດທະນະທຳ ປະກວດການເວົ້າເກັ່ງໜຸ່ມນ້ອຍ ເຊິ່ງມະຫາໄລແຫ່ງຊາດລາວເປັນອັນດັບທີ 3 ໃນປີ 2005.

- ກິດຈະກຳອື່ນໆກ່ຽວກັບການສຶກສາຊັ້ນສູງ. ກອງປະຊຸມລັດຖະມົນຕີສຶກສາຄັ້ງທີ 2 ຢູ່ເກາະ ບາຫຼີ ຮ່ວມກັບກອງປະຊຸມສະພາ ສະພາຊີແມວ ຄັ້ງທີ 42 ຈັດຂຶ້ນທີ 13 -16 ມີນາ 2007

ກອງປະຊຸມມະຫາໄລດັ່ງກ່າວໄດ້ປຶກສາຫາລືກ່ຽວກັບການປັບປຸງຄຸນນະພາບ ແລະ ເຂົ້າສູ່ການສຶກ ສາ ຮັບປະກັນຄຸນນະພາບຂອງການສຶກສາ ຫຼຸດຜ່ອນການທຸກຈົນ ແລະ ພາລະກິດຂອງການສຶກສາ ເພື່ອຄວາມເປັນເອກະລັກຂອງອາຊຽນ, ການແລກປ່ຽນ ແລະ ການນຳໃຊ້ຂໍ້ມູນຂ່າວສານເທັກໂນໂລຊີ (ICP) ເຂົ້າໃນການສຶກສາ.

ກອງປະຊຸມໄດ້ສະເໜີອົງການຜູ້ອາວຸໂສມີຄຳເຫັນກ່ຽວກັບບົດບາດອາຊຽນ, ປຶກສາຫາລືກ່ຽວກັບການສ້າງເຄືອຂ່າຍຄະນິດສາດ ແລະ ວິທະຍາສາດ ສຳລັບມັດທະຍົມ ເພື່ອການຮ່ວມມືກັບອົງການຊີແມວ ແລະ ກັບບັນດາປະເທດພາຄີ ປຶກສາຫາລືຄວາມເປັນໄປໄດ້ການຮ່ວມມືດ້ານຕ່າງໆຄື:

- ເຝິກອົບຮົມຄູ.
- ການຮຽນ - ການສອນພາສາອັງກິດ.
- ການສຶກສາ ແລະ ນຳໃຊ້ (ICP) ເຂົ້າໃນການສຶກສາ

**ຄຳຖາມ :**

1. ຈຸດໝາຍລວມຂອງການສ້າງຄົນມີແນວໃດແດ່?

# ບົດທີ 9

## ການປ່ຽນແປງດ້ານຕ່າງໆ ຂອງສັງຄົມລາວທາງວັດທະນະທຳ

ການປ່ຽນແປງຍ່ອມເກີດຂຶ້ນສະເໝີໃນທຸກສັງຄົມອາດຈະໄວ ຫຼື ຊ້າກໍໄດ້ ຂຶ້ນຢູ່ກັບການເວລາ ບໍ່ມີສັງຄົມໃດຢຸດຢູ່ກັບທີ່ ເພາະການປ່ຽນແປງ ເປັນລັກສະນະທຳມະດາຂອງມະນຸດ, ການທີ່ເຮົາເຫັນຄົນທີ່ນຸ່ງເຄື່ອງແບບແປກໆກໍປຽບເໝືອນວ່າເຮົາກຳເຫັນປະເພນີແບບແປກໆ ເຊິ່ງຕົວມັນເອງອາດຈະສິ້ນສຸດໃນເວອັນສັ້ນໆ ຫຼື ໄລຍະອັນຍາວກໍໄດ້ ເປັນຕົ້ນວ່າອາດຈະໝົດສະໄໝພາຍໃນ 2 - 3 ວັນ ຫຼື ອີກບໍ່ເທົ່າໃດປີກໍໄດ້ ນີ້ຄືລັກສະນະທຳມະດາຂອງສັງຄົມມະນຸດທີ່ມີການປ່ຽນແປງຕະຫຼອດເວລາຢ່າງບໍ່ມີສິ້ນສຸດ.

## 1 ການປ່ຽນແປງທາງດ້ານການສຶກສາ

ເມື່ອເວົ້າເຖິງການສຶກສາເມື່ອກ່ອນແມ່ນບໍ່ຈຳກັດຮັດແຄບບໍ່ເປີດກວ້າງລົງສູ່ມະຫາຊົນ, ເຮັດໃຫ້ມະຫາຊົນບັນດາເຜົ່າໃນໄລຍະນັ້ນມີລະດັບຄວາມຮັບຮູ້ຕ່ຳ, ປະຊາຊົນຊາວຜູ້ອອກແຮງງານສ່ວນຫຼາຍແມ່ນບໍ່ຮູ້ໜັງສື.

ມາເຖິງປັດຈຸບັນ, ພັກເຮົາໄດ້ມີທິດທາງປ່ຽນແປງແລະປັບປຸງວຽກງານການສຶກສາໃໝ່ໃຫ້ສອດຄ່ອງແລະແທດເໝາະກັບສະພາບສັງຄົມໃນປັດຈຸບັນ, ພ້ອມກັນນັ້ນພັກເຮົາຍັງໄດ້ມີແຜນນະໂຍບາຍນຳເອົາການສຶກສາໄປກ່ອນບາດກ້າວໜຶ່ງ, ວຽກງານການສຶກສາໄດ້ຂະຫຍາຍ ແລະ ເປີດກວ້າງໄປໃນທົ່ວປະເທດ ແຕ່ຕົວເມືອງລົງຮອດທ້ອງຖິ່ນເຮັດໃຫ້ປະຊາຊົນທຸກຊົນຊາດ, ຊົນເຜົ່າໄດ້ຮ່ຳຮຽນ, ພ້ອມກັນນັ້ນ ການຜັນຂະຫຍາຍທິດທາງການສຶກສາກໍໄດ້ບັນລຸຜົນສຳເລັດອັນໃຫຍ່ຫຼວງຫຼາຍປະການຄື ໄດ້ລົບລ້າງຄວາມບໍ່ຮູ້ໜັງສື ໃຫ້ປະຊາຊົນຊາວຜູ້ອອກແຮງງານ ແລະ ກຳມະກອນໃຫ້ສູງຂຶ້ນກ້າວໜຶ່ງ ເຮັດໃຫ້ໂສມໜ້າຂອງວັດທະນະທຳສັງຄົມມີການປ່ຽນແປງໃໝ່.

ເຖິງຢ່າງໃດກໍຕາມພັກລັດເຮົາຍັງເຫັນວ່າ ວຽກງານການສຶກສາກໍຍັງມີຂໍ້ຂາດຕົກບົກພ່ອງຢູ່ ເຊັ່ນ:

- ຄຸນນະພາບການສຶກສາຍັງຕ່ຳ.
- ການຂະຫຍາຍການສຶກສາໃນເຂດພູດອຍຍັງບໍ່ທັນທົ່ວເຖິງ.
- ປະຊາຊົນຍັງມີການກຶກໜັງສືຄືເປັນຈຳນວນຫຼວງຫຼາຍ.
- ເນື້ອໃນການສຶກສາຍັງບໍ່ແທດເໝາະກັບສະພາບຄວາມເປັນຈິງ, ການຮຽນ - ການສອນຍັງບໍ່ທັນປະຕິບັດໄດ້ຕາມຫຼັກສູດການສຶກສາຂອງພັກຢ່າງເຕັມສ່ວນ.

ເມື່ອສັງເກດເຫັນໄດບັນຫາຄືແນວນັ້ນ, ໃນມະຕິກອງປະຊຸມໃຫ່ຍຂອງພັກ ຈຶ່ງໄດ້ຕົກລົງປ່ຽນແປງໃໝ່ໃນຂົງເຂດວຽກງານການສຶກສາ ເຊັ່ນ:

- ການປະຕິບັດການສຶກສາຂັ້ນປະຖົມແບບບັງຄັບ.
- ການຂະຫຍາຍການສຶກສາໃຫ້ແທດເໝາະກັບຄວາມສາມາດຕົວຈິງທາງດ້ານການເງິນ ແລະ ການຄຸ້ມຄອງ.
- ການກໍ່ສ້າງພະນັກງານບໍ່ແມ່ນເພື່ອສັງກັດລັດເທົ່ານັ້ນ ແຕ່ເພື່ອຕອບສະໜອງໃນທຸກພາກສ່ວນເສດຖະກິດ - ສັງຄົມ.
- ຍົກສູງຄຸນນະພາບການສຶກສາແຫ່ງຊາດໃຫ້ຫຍັບໄດ້ມໍ່ກັບມາດຕະຖານຂອງສາກົນເທື່ອລະກ້າວ.
- ຂະຫຍາຍການສຶກສາແບບຮູບທາດ, ມີການສອບຄັດເລືອກເຂົ້າຮຽນ.
- ຊຸກຍູ້ການສ້າງຕັ້ງໂຮງຮຽນເອກະຊົນຂຶ້ນ ໃນຕົວເມືອງຕ່າງໆ.
- ຈຸດໝາຍການສຶກສາແມ່ນສ້າງຄົນໃຫ້ມີຄວາມຮູ້, ມີຄວາມສາມາດທາງດ້ານສີມື ແລະ ແນວຄິດການກະທຳ.

## 2 ການປ່ຽນແປງດ້ານສັງຄົມ

ການປ່ຽນແປງທາງດ້ານສັງຄົມ ໝາຍເຖິງການປ່ຽນແປງບັນດາການພົວພັນທາງສັງຄົມ, ການປ່ຽນແປງບັນດາຮູບການພົວພັນລະຫວ່າງມະນຸດດ້ວຍກັນ. ເປັນການປ່ຽນແປງທີ່ເຫັນດ້ວຍສາຍຕາໃນລັກສະນະຕ່າງໆຂອງວິທີການດຳລົງຊີວິດ. ນອກຈາກນີ້ ການປ່ຽນແປງທາງສັງຄົມບໍ່ໄດ້ເກີດຈາກສາເຫດດຽວກັນເພາະມີຫຼາຍປັດໃຈທີ່ເກີດການປ່ຽນແປງ ເຊັ່ນ ອຸດົມຄະຕິ, ເຕັກໂນໂລຊີ, ສາສະໜາເສດຖະກິດ ແລະ ອື່ນໆ.

ມາຮອດປັດຈຸບັນນີ້ ການແກ້ໄຂນະໂຍບາຍທາງດ້ານສັງຄົມ ເປັນບັນຫາພື້ນຖານຂອງລະບອບປະຊາທິປະໄຕ, ພ້ອມນັ້ນ ພັກກໍໄດ້ມີນະໂຍບາຍແຈ້ງກ່ຽວກັບວຽກງານສັງຄົມ ເຊັ່ນ ການສຶກສາ, ສາທາລະນະສຸກ ແລະ ວັດທະນະທຳ.

### 2.1 ດ້ານສາທາລະນະສຸກ

ຄົນລາວໃນເມື່ອກ່ອນບໍ່ຮູ້ຈັກຄຳວ່າສາທາລະນະສຸກ, ຖ້າເຈັບໄຂ້ໄດ້ປ່ວຍກໍມີແຕ່ໄປຫາໝໍຢາພື້ນເມືອງ, ຫາເກັບຢາຕາມປ່າມາຕົ້ມ, ແຊ່ກິນ, ຝົນຢາຖົ່ງກິນຕາງນ້ຳ, ຫາໝໍເປົ່າ, ໝໍມໍ, ໝໍວິຊາ ຫຼື ໝໍຜີສາງນາງໄມ້ຕ່າງໆເປັນທີ່ເພິ່ງ. ການບໍລິການສາທາລະນະສຸກຫາກໍເລີ່ມສະໄໝຝຣັ່ງປົກຄອງ ແຕ່ກໍຢູ່ໃນວົງຈຳກັດ, ບໍລິການສະເພາະໃນວົງການປົກຄອງຫົວເມືອງເປັນຈຸດໜັກ.

ມາຮອດປັດຈຸບັນນີ້, ວຽກງານສາທາລະນະສຸກມີບົດບາດສຳຄັນໃນການພັດທະນາຊັບພະຍາກອນມະນຸດ ແນ່ໃສ່ໃຫ້ຄົນໃນຊາດມີການສຶກສາສູງ, ມີສຸຂະພາບສົມບູນດີ ເພື່ອເປັນກຳລັງສ້າງສາປະເທດຊາດດ້ວຍການຮ່ວມມືຊ່ວຍເຫຼືອຈາກສາກົນ, ຕົກມາເຖິງປັດຈຸບັນປະເທດກໍສາມາດລົບລ້າງພະຍາດຮ້າຍແຮງໄດ້ຫຼາຍຢ່າງເຊັ່ນ ພະຍາດໝາກສຸກ, ຄໍຕີບ, ໂປລີໂອ ແລະ ກຳລັງບຸກບືນຈຳກັດຫຼາຍພະຍາດຕື່ມອີກ ເຊັ່ນພະຍາດຂີ້ທູດ ແລະ ອື່ນໆ.

ປັດຈຸບັນຕາໜ່າງສາທາລະນະສຸກ ໄດ້ຂະຫຍາຍຕົວຢ່າງກ້ວາງຂວາງລົງສູ່ເຂດຊົນນະບົດຂອງແຕ່ລະທ້ອງຖິ່ນ, ຮັບປະກັນຄຸນນະພາບຂອງພະນັກງານ, ກຳມະກອນ ແລະ ປະຊາຊົນບັນດາເຜົ່າໃຫ້ ມີກຳລັງວັງຊາເຂັ້ມແຂງ, ອີກດ້ານໜຶ່ງ ກໍແມ່ນແນໃສ່ລົບລ້າງການເຊື່ອຖືງົມງວາຍທີ່ຝືນກັບວິທະຍາສາດ ເຊັ່ນ ມີສຸກສາລາປະຈຳເຂດຂອງແຕ່ລະທ້ອງຖິ່ນໃນທົ່ວປະເທດ, ສ້າງສູນບໍລິການສຸຂະພາບ ແລະ ສະໜອງບໍລິການທາງດ້ານສຸຂະພາບໃຫ້ແກ່ສັງຄົມ.

ສິ່ງທີ່ເກີດຂຶ້ນໃນໄລຍະນີ້ ແມ່ນການປົກປັກຮັກສາສິ່ງແວດລ້ອມເປັນເປົ້າໝາຍສຳຄັນທີ່ສຸດທີ່ທຸກຄົນຈະຕ້ອງເອົາໃຈໃສ່. ສະພາບແວດລ້ອມເຊື່ອມໂຊມນັ້ນ ໄດ້ສົ່ງຜົນສະທ້ອນອັນ ບໍ່ດີຕໍ່ສຸຂະ ພາບຂອງຄົນເຮົາ ຄື ເກີດພະຍາດທາງລະບົບຫາຍໃຈ, ການໄດ້ຮັບອົກຊີແຊນບໍ່ໄດ້ເຕັມເມັດເຕັມໜ່ວຍ, ເປັນສາ ເຫດກໍ່ໃຫ້ເກີດການເຈັບເປັນ ແລະ ຕາຍ ອີກອັນໜຶ່ງສະພາບຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອຢູ່ຕາມອາຄານສະຖານ ທີ່ພັກອາໄສ, ຮ້ານຄ້າ ແລະ ແຫ່ງຕ່າງໆ ໄດ້ເກີດມີເພີ່ມຂຶ້ນຢ່າງຫຼວງຫຼາຍ ດັ່ງນັ້ນ, ພວກເຮົາທຸກຄົນຕ້ອງໄດ້ຮັກສາອະນາໄມໃຫ້ສະອາດງາມຕາ, ໃນນັ້ນແມ່ຍິງກໍ່ແມ່ນສ່ວນໜຶ່ງທີ່ມີບົດ ບາດໃນການແກ້ ບັນຫາ ສິ່ງແວດລ້ອມຈະຕ້ອງໄດ້ສ້າງພາບອັນໂດດເດັ່ນເພື່ອກະຕຸ້ນໃຫ້ຄົນໃນຄອບຄົວຊຸມຊົນຕະຫຼອດຈົນສັງຄົມໃຫ້ເກີດການປ່ຽນແປງພຶດຕິກຳ ໃນຖານະຜູ້ບໍລິໂພກ ທີ່ມີສ່ວນຮ່ວມໃນການປ້ອງກັນບັນຫາ.

### 2.2 ດ້ານວັດທະນະທຳ

ການປ່ຽນແປງດ້ານວັດທະນະທຳ ໝາຍເຖິງການປ່ຽນແປງດ້ານວັດຖຸ ແລະ ຈິດໃຈຂອງຜະລິດຕະພັນທັງໝົດທີ່ມະນຸດສ້າງຂຶ້ນ ເຊິ່ງປ່ຽນຈາກຄຸນນະພາບນີ້ໄປ ສູ່ຄຸນນະພາບໃໝ່ທີ່ມີລັກສະນະສູງກວ່າ.

ດ້ານວັດທະນະທຳ ແມ່ນປົກປັກຮັກສາເສີມຂະຫຍາຍມູນເຊື້ອລວມຂອງຊາດ ແລະ ມູນເຊື້ອຂອງຊົນເຜົ່າຕ່າງໆ ທີ່ມີລັກສະນະຊາດ ແລະ ກ້າວໜ້າ. ດ້ານກຳລັງແຮງງານແມ່ນປະຕິບັດສະເໝີພາບຄວາມປອງດອງຊາດລະຫວ່າງຊົນເຜົ່າຕ່າງໆ ພ້ອມນັ້ນກໍຍົກລະດັບຄວາມຮູ້ - ຄວາມສາມາດຂອງພະນັກງານບັນດາເຜົ່າ ແລະ ທຸກຊັ້ນຄົນໃຫ້ສູງຂຶ້ນເທື່ອລະກ້າວ.

ເຖິງວ່າສັງຄົມຈະມີການແກ້ໄຂໃຫ້ດີຂຶ້ນປານໃດກໍຕາມ ແຕ່ກໍຍັງປາສະຈາກບໍ່ໄດ້ ຮ່ອງຮອຍສັງຄົມທີ່ເປື່ອຍເຍື່ອຍ ທີ່ມີຜົນສະທ້ອນຈາກສັງຄົມເກົ່າ ແລະ ສັງຄົມພາຍນອກ ໄດ້ແຜ່ລາມເຂົ້າມາເບື່ອເມົາແນວຄິດຂອງຊາວໜຸ່ມ ເຮັດໃຫ້ຊາວໜຸ່ມຈຳນວນໜຶ່ງມີແນວຄິດເສລີ ຫຼົ້ນກິນຟຸມເຟືອຍ ແລະ ສ້າງຄວາມ ປັ່ນປ່ວນທາງສັງຄົມ, ຊາວໜຸ່ມຈຳນວນໜຶ່ງຍັງຂາດສະຕິຫຼົງລືມຕົວ, ນຳເອົາແບບວິທີຊີວິດ, ການປະພຶດປະຕິບັດ, ການນຸ່ງຫົ່ມ, ການເວົ້າຈາ ແລະ ອື່ນໆ ມາປະພຶດປະຕິບັດທີ່ບໍ່ຖືກຕ້ອງຢູ່ພາຍໃນປະເທດເຮົາ, ເຮັດໃຫ້ຂະນົບທຳນຽມຮີດຄອງປະເພນີລາວເສົ້າໝອງລົງ, ຮ້າຍແຮງໄປກ່ອນນັ້ນມັນ ຈະເຮັດໃຫ້ພາຍໃນສັງຄົມລາວເກີດມີຄວາມແບ່ງແຍກຄວາມສາມັກຄີລະຫວ່າງເຜົ່າຕ່າງໆ ຍຸຍົງສົ່ງເສີມແນວຄິດເຜົ່າເອກະລາດ ແລະ ແນວຄິດເສລີນິຍົມປະຊາທິປະໄຕແບບຕາເວັນຕົກເຂົ້າມາໃນໝູ່ມະຫາຊົນ ແລະ ຊາວໜຸ່ມ.

ເວົ້າລວມແລ້ວໃນເມື່ອສະພາບທາງສັງຄົມພາຍໃນປະເທດຍັງມີຄວາມສັບສົນຄືແນວນີ້ ພວກເຮົາເປັນຊາວໜຸ່ມເປັນນັກຮຽນ - ນັກສຶກສາ ຄວນປະຕິບັດແນວໃດຈຶ່ງ ຈະສົມກັບວ່າ ຊາວໜຸ່ມ ເປັນກະດູກສັນຫຼັງຂອງຊາດ ພ້ອມນັ້ນຊາວໜຸ່ມຄົນລາວຄວນມີໜ້າທີ່ປົກປັກຮັກສາ ແລະ ເສີມຂະຫຍາຍ ວັດທະນະທຳຂະນົບທຳນຽມ ແລະ ຮີດຄອງປະເພນີຂອງລາວໄວ້ໃຫ້ໝັ້ນຄົງສືບຕໍ່ໄປ ແລະ ສະກັດກັ້ນທຸກວິທີການທີ່ຈະນຳເອົາວັດທະນະທຳຂອງຕ່າງຊາດເຂົ້າມາເມື່ອເມົາຊາວໜຸ່ມລາວຂອງພວກເຮົາ. ສະນັ້ນ, ການແກ້ໄຂບັນຫາສັງຄົມ ແມ່ນເປັນເລື່ອງລະອຽດອ່ອນ ແລະ ກໍເປັນໜ້າທີ່ຂອງປວງຊົນ ທົ່ວສັງຄົມຕ້ອງຊ່ວຍກັນແກ້ໄຂໃຫ້ດີຂຶ້ນ.

- **ກິດຈະກຳທາງດ້ານວັດທະນະທຳ ແລະ ຮີດຄອງປະເພນີລາວ**



**(ຮູບພາບ ວິທີຕັກບາດຢູ່ເດີ່ນພະທາດຫຼວງວຽງຈັນ)**

# 3 ການປ່ຽນແປງດ້ານເສດຖະກິດ

ໃນເບື້ອງຕົ້ນ ເຖິງສະພາບສັງຄົມໃນປະເທດໃນເວລານັ້ນມີບາງອັນຍັງສັບສົນຢູ່ກໍຕາມ, ແຕ່ຮູບການທາງດ້ານເສດຖະກິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນພາຍໃນປະເທດກໍມີການປ່ຽນແປງໃໝ່, ໄດ້ຫັນການຜະລິດເອກະເທດ, ເອກະຊົນ, ກະແຈກກະຈາຍໃນເມື່ອກ່ອນ ຫັນໄປສູ່ການຜະລິດແບບລວມໝູ່ເທື່ອລະກ້າວ.

ຕໍ່ມາກໍໄດ້ແລກປ່ຽນແຮງງານ ຈັດຕັ້ງເປັນສະຫະກອນກະເສດ
ເພື່ອເປີດກ້ວາງການຜະລິດຮັບໃຊ້ຊີວິດການເປັນຢູ່ໃຫ້ແກ່ປະຊາຊົນຢ່າງກ້ວາງຂວາງ.

ມາເຖິງປັດຈຸບັນນີ້ ສະພາບດ້ານເສດຖະກິດ, ການເມືອງ ແລະ ສັງຄົມພາຍໃນປະເທດມີການປ່ຽນແປງໃໝ່ ເຊັ່ນ ການຫັນຈາກເສດຖະກິດວັດຖຸພັນມາເປັນເສດຖະກິດສິນຄ້າ ຫຼື ຫັນເສດຖະກິດທຳມະ ຊາດ ກຸ້ມຕົນເອງພໍໃຜພໍລາວໄປເປັນເສດຖະກິດສິນຄ້າ ໝາຍຄວາມວ່າເຮັດການຜະລິດ, ການແລກປ່ຽນຜ່ານເງິນ

ຜ່ານຕະຫຼາດ, ເອົາການພົວພັນສິນຄ້າເງິນຕາຊຸກຍູ້ການຜະລິດຂະຫຍາຍຕົວ ແລະ ເຮັດໃຫ້ເກີດມີ ການແບ່ງງານສັງຄົມ, ດັດ ແປງເຕັກນິກຍົກສະມັດຖະພາບຂອງງານ. ນອກຈາກນັ້ນແລ້ວ ພັກກໍຍັງໄດ້ສ້າງໂຄງສ້າງປະກອບເສດຖະກິດສິນຄ້າທີ່ມີຫຼາຍລະດັບ ແລະ ຫຼາຍຂະໜາດຕ່າງກັນ. ຍ້ອນແນວນັ້ນໃນພື້ນຖານເສດຖະກິດຂອງລະບອບປະຊາທິປະໄຕປະຊາຊົນຈຶ່ງມີຫຼາຍຮູບການກຳມະສິດ ແລະ ມີຫຼາຍພາກສ່ວນເສດຖະກິດ ເຊັ່ນ ເສດຖະກິດຂອງລັດ, ເສດຖະກິດເອກະເທດຂອງຄອບຄົວ, ເສດຖະກິດຮ່ວມມືຂອງປະຊາຊົນ, ເສດຖະກິດຮ່ວມທຸລະກິດກັບຕ່າງປະເທດ...

ບັນດາພາກສ່ວນເສດຖະກິດເຫຼົ່ານີ້ສຳພັນກັນ ກາຍເປັນລະບົບເສດຖະກິດ - ສັງຄົມດ້ວຍຄົງປະກອບກຳມະສິດ ຫຼາຍຮູບຫຼາຍແບບ ເຊິ່ງພາກສ່ວນເສດຖະກິດຂອງລັດເປັນຫຼັກແຫຼ່ງ ແລະ ແຊກຊ້ອນໃນຂົງເຂດຕ່າງໆ

ປັດຈຸບັນພັກໄດ້ມີແນວທາງ ນະໂຍບາຍເປີດກວ້າງການພົວພັນເສດຖະກິດ ກັບຕ່າງປະ ເທດເຂົ້າມາລົງທຶນຫຼາຍຂຶ້ນເຊັ່ນ ການຂຸດຄົ້ນບໍ່ຄຳ ແລະ ທອງ ຢູ່ແຂວງສະຫັວນນະເຂດ, ໂຮງງານປຸງແຕ່ງຢາ ຢູ່ແຂວງຈຳປາສັກ ແລະ ແຫ່ງອື່ນໆ

ການລົງທຶນຂອງຕ່າງປະເທດກໍນັບມື້ນັບເພີ່ມຂຶ້ນ ໃນປີ 1992 ຕ່າງປະເທດເຂົ້າມາລົງທຶນໃນ 104 ໂຄງການມີມູນຄ່າ 176 ລ້ານໂດລາ, ໃນປີ 2005 ມີ 585 ໂຄງການ ຈຳນວນທຶນທັງໝົດ 2,8 ຕື້ໂດລາ, ຈາກການປ່ຽນແປງດັ່ງກ່າວໄດ້ເຮັດໃຫ້ເສດຖະກິດເຮົາມີການຂະຫຍາຍຕົວ, ສັງຄົມກໍໄດ້ມີການ ຂະຫຍາຍຕົວຄືກັນ.



**(ຮູບພາບ ໂຮງງານຜະລິດຢາເລກ 2)**

# 4 ປະກົດການຫຍໍ້ທໍ້ຈາກການປ່ຽນແປງດ້ານຕ່າງໆ ທາງສັງຄົມ ແລະ ວັດທະນະທຳ ແລະ ການຕ້ານ - ສະກັດກັ້ນປະກົດການຫຍໍ້ທໍ້

## 4.1 ອິດທິພົນທີ່ສົ່ງຜົນກະທົບຈາກພາຍນອກ

ສະພາບສັງຄົມລາວປັດຈຸບັນໄດ້ມີການພັດທະນາປ່ຽນແປງຢ່າງໄວວາ ເປັນຕົ້ນແມ່ນເລີ່ມແຕ່ປະເທດຂອງເຮົາມີນະໂຍບາຍເປີດກ້ວາງຄວາມຈະເລີນກ້າວໜ້າທາງດ້ານເຕັກໂນໂລຊີ ແລະ ວັດທະນະທຳທາງຕາເວັນຕົກໄດ້ຄ່ອຍໆຫຼັ່ງໄຫຼເຂົ້າມາຢ່າງຕໍ່ເນື່ອງ, ສິ່ງຜົນສະທ້ອນໃຫ້ສັງຄົມລາວກາຍເປັນສັງຄົມທີ່ມີລັກສະນະຄວາມຈະເລີນທາງດ້ານວັດຖຸ ຍຶດຄ່ານິຍົມທີ່ບໍ່ເພິ່ງປະສົງ ເຊັ່ນ ມີຄົນຈຳນວນໜຶ່ງຫຼົງກົບຟຸມເຟືອຍ ອວດຄວາມຮັ່ງມີ, ວັດຄວາມດີ, ຄວາມສາມາດ, ອວດຖານະທາງເສດຖະກິດ ແລະ ລາຍໄດ້ ສະພາບດັ່ງກ່າວໄດ້ສົ່ງຜົນສະທ້ອນໂດຍກົງຕໍ່ຊີວິດຂອງບຸກຄະລາກອນທຸກລະດັບ ເຮັດໃຫ້ເກີດມີບັນຫາຫຍໍ້ທໍ້ ເຊັ່ນ ສໍ້ລາດບັງຫຼວງ ແລະ ອື່ນເກີດຂຶ້ນ.

ອິດທິພົນພາຍນອກຕໍ່ກັບສັງຄົມລາວ ສັງລວມແລ້ວສະແດງອອກ 2 ດ້ານ ຄື ດ້ານການສຶກສາ ແລະ ດ້ານສັງຄົມ ເຊິ່ງລວມມີລັກສະນະຕັ້ງໜ້າ ແລະ ລັກສະນະຫຍໍ້ທໍ້ໄປພ້ອມໆກັນ.

### 4.2 ອິດທິພົນພາຍນອກຕໍ່ກັບການສຶກສາ

ປະຊາຊົນຜົນລະເມືອງລາວແຕ່ດຶກດໍາບັນ ມີພາສາ ແລະ ວັດທະນະທໍາເປັນຂອງປະຈໍາຊາດລາວ ການປາກເວົ້າ, ການປະພຶດ, ການກະທໍາຂອງຄົນລາວ ລ້ວນແຕ່ສະແດງເຖິງເອກະລັກຂອງຊາດລາວເຮົາ ມາໄລຍະໜຶ່ງ ຍ້ອນອິດທິພົນ ແລະ ອໍານາດຂອງຕ່າງຊາດໄດ້ເຂົ້າມາຄອບງໍາເຮັດໃຫ້ປະຊາຊົນຜົນລະເມືອງລາວມີແນວຄິດຕີຖອຍຕໍ່ວັດທະນະທໍາລາວ, ຫັນໄປປະພຶດປະຕິບັດວັດທະນະທໍາຂອງຕ່າງຊາດ. ພ້ອມທັງນໍາເອົາວັດທະນະທໍາຂອງຕ່າງຊາດມາຊົມໃຊ້ຢູ່ພາຍໃນປະເທດເຮົາ ເຊັ່ນ ພາສາປາກເວົ້າ, ພາສາຂຽນ, ການຮ້ອງລໍາທໍາເພງ, ຟ້ອນ ແລະ ອື່ນໆ ນອກຈາກນັ້ນ ການປະພຶດການກະທໍາກໍໄດ້ນໍາເອົາຂອງຕ່າງຊາດມາໃຊ້ ເຮັດໃຫ້ເອກະລັກປະຈໍາຊາດຫຼຸດໜ້ອຍຖອຍລົງ ພາສາຊອດກະຈາໄດ້ລະບາດຂຶ້ນພາຍໃນປະເທດ ແລະ ສັງຄົມ.

ໄລຍະປັດຈຸບັນນີ້ ພັກໄດ້ມີທິດທາງນະໂຍບາຍປັບປຸງ ແລະ ເສີມຂະຫຍາຍວຽງ ງານການສຶກສາແຕ່ຕົວເມືອງລົງສູ່ທ້ອງຖິ່ນໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ, ປະຊາຊົນລາວຕ້ອງຊົມໃຊ້ພາສາລາວເປັນພາສາປະຈໍາຊາດ, ພ້ອມກັນນັ້ນ ຢາກພັດທະນາການສຶກສາໃຫ້ມີຄຸນນະພາບເທົ່າທຽມກັບມາດຕະຖານສາກົນຕ້ອງອີງໃສ່ :

1) ບົດຮຽນຈາກຫຼາຍປະເທດ ໃນປັດຈຸບັນລາວເຮົາກໍໄດ້ມີທິດທາງໃຫ້ທ້ອງຖິ່ນ ມີບົດບາດພັດທະນາຫຼັກສູດຂຶ້ນ, ຫຼັກສູດຮັບໃຊ້ສະເພາະທ້ອງຖິ່ນນັ້ນ ເຊັ່ນ ຫຼັກສູດການສຶກສານອກລະບົບ.

2) ການຜະລິດອຸປະກອນ ການຮຽນ - ການສອນ ໃຫ້ແທດເໝາະແຕ່ລະທ້ອງຖິ່ນ ໂດຍນໍາໃຊ້ວັດຖຸທີ່ຫາໄດ້ງ່າຍໃນທ້ອງຖິ່ນ.

3) ນະວັດຕະກໍາ ແລະ ເຕັກໂນໂລຊີທາງການສຶກສາບາງຊະນິດເຊັ່ນ ຄອມພິວເຕີໄດ້ຄ່ອຍໆເລີ່ມມີບົດບາດຕໍ່ການຮຽນ - ການສອນຫຼາຍຂຶ້ນ ໂດຍສະເພາະໃນຂະແໜງອາຊີວະສຶກສາ.

### 4.3 ອິດທິພົນພາຍນອກຕໍ່ກັບສັງຄົມ

1) ມີການຮັບເອົາວັດທະນະທໍາຕ່າງປະເທດຫຼາຍຂຶ້ນເຊັ່ນ: ການທັກທາຍ, ການກິນຢູ່, ການນຸ່ງຖື, ຟ້ອນ, ເຕັ້ນລໍາ ແລະ ອື່ນໆ

2) ຄົນຮຸ່ນໃໝ່ໂດຍສະເພາະແມ່ນຊາວໜຸ່ມມີລັກສະນະຫຼົງລືມຕໍ່ວັດທະນະທໍາລາວຫຼາຍຂຶ້ນ

3) ທີ່ຢູ່ອາໄສ ຮ້ານຄ້າສະຖານທີ່ລື່ນເລີງຕ່າງໆ ມີການພັດທະນາຮຽນແບບວັດທະນະທໍາພາຍນອກຫຼາຍຂຶ້ນ ເຮືອນຈະມີລັກສະນະເປັນເຮືອນພັກ, ເຮືອນແຖວ, ເລີ່ມມີສູນການຄ້າ ແລະ ສະ ຖານທີ່ລື່ນເລີງຍາມລາຕີຫຼາຍຂຶ້ນ.

4) ໃນຕົວເມືອງໃຫຍ່ມີເຄື່ອງອໍານວຍຄວາມສະດວກ ຫຼື ອໍານວຍຄວາມສຸກຫຼາຍຂຶ້ນ ໂທລະທັດ ໂທລະສັບ, ເຄື່ອງປັບອາກາດ, ເຄື່ອງປະດັບ, ແຟຊັນແຕ່ງກາຍມີການພັດທະນາທັງຮູບແບບ ແລະ ປະສິດທິພາບໃນການໃຊ້ສອຍ ດຶງດູດການຊື້ - ຂາຍຫຼາຍຂຶ້ນ.

5) ເສັ້ນທາງຄົມມະນາຄົມ, ການຕິດຕໍ່ສື່ສານ, ມີຄວາມສະດວກຫຼາຍຂຶ້ນ.

6) ການປ່ຽນແປງດາງດ້ານອາຊີບ ອາຊີບອຸດສາຫະກໍາ ພານິດຊະການ (ການຄ້າ) ແລະ ບໍລິການມີຫຼາຍຂຶ້ນ ສ່ວນອາຊີບກະສິກໍາທີ່ກວມເອົາສ່ວນໃຫຍ່ໃນການປະກອບອາຊີບ ກໍມີການປ່ຽນແປງໃນ 2 ລັກສະນະ ຄື ການນໍາໃຊ້ເຕັກໂນໂລຊີຊັ້ນສູງມາໃຊ້ໃນກະເສດ, ມີຟາມຂະໜາດໃຫຍ່ຈໍານວນໜຶ່ງເກີດຂຶ້ນ.

7) ການເຄື່ອນໄຫວຂອງປະຊາກອນມີປະກົດການເຄື່ອນຍ້າຍຂອງປະຊາຊົນຈາກຊົນນະບົດເຂົ້າຕົວເມືອງ ເພື່ອຊອກຫາວຽກເຮັດງານທໍາ.

8) ຄອບຄົວ ແລະ ຊຸມຊົນ ລັກສະນະຂອງຄອບຄົວຈະແຍກເປັນຄອບຄົວດ່ຽວຫຼາຍຂຶ້ນ ພໍ່ແມ່ຜູ້ປົກຄອງ ອອກໄປເຮັດວຽກຂ້າງນອກຫຼາຍຂຶ້ນ.

- **ຄ່ານິຍົມ**

ເພື່ອແກ້ໄຂບັນຫາຂອງສັງຄົມທີ່ມີລັກສະນະຫຍໍ້ທໍ້ ເຊິ່ງພວມເກີດຂຶ້ນໃນປັດຈຸບັນ, ການສຶກສາກໍມີບົດບາດສູງພໍສົມຄວນ ໃນການປູກຝັງຄຸນນະທຳໃຫ້ແກ່ນັກຮຽນ ເຊິ່ງໄດ້ແກ່ຮັກສາສັດຈະການຮູ້ຈັກບັງຄັບໃຈຕົນເອງ, ການອົດທົນ, ອົດກັ້ນ, ອົດອອມ ແລະ ການຫຼີກເວັ້ນການທຳຄວາມຊົ່ວ.

ຕ້ອງຮູ້ຈັກການປູກຄ່ານິຍົມພື້ນຖານເຊິ່ງໄດ້ແກ່ການເພິ່ງຕົນເອງ, ຂະຫຍັນໝັ່ນພຽນ, ຄວາມຮັບຜິດຊອບ, ການປະຢັດ, ການມີວິໄນ ແລະ ເຄົາລົບກົດໝາຍ.

ນອກນີ້ຍັງມີຄ່ານິຍົມອື່ນໆ ເຊິ່ງໄດ້ແກ່ການຮັກຄວາມເປັນລາວ, ຄວາມຊື່ສັດສຸດຈະລິດ, ຄວາມຂະຫຍັນຂັນແຂງ,ມານະອົດທົນ, ການຍົກຍ້ອງຜູ້ທຳຄວາມດີ, ການໃຊ້ເຫດຜົນ, ການຢຶດໝັ້ນ ໃນອຸດົມການຫຼາຍກວາບຸກຄົນ ການນິຍົມຂອງລາວ ຄວາມຮັກສ່ວນລວມ ການເອື້ອເຟື້ອເພື່ອແຜ່ ການເຄົາລົບຜູ້ອາວຸໂສ, ຄວາມເສຍສະຫຼະ, ຄວາມສຸພາບຮຽບຮ້ອຍ, ການຊື່ຕົງຕໍ່ເວລາ ແລະ ການເຮັດຫຼາຍກ່ວາເວົ້າ.

**ຄຳຖາມ :**

1. ການປ່ຽນແປງທາງດ້ານວັດທະນະທຳປະເພນີສະແດງອອກຈັກດ້ານຄືດ້ານໃດແດ່? ຈົ່ງອະທິບາຍ ແລະ ຍົກເຫດຜົນ ເຖິງການປ່ຽນແປງໃນແຕ່ລະດ້ານ?
2. ໃນການປ່ຽນແປງໃນແຕ່ລະດ້ານ ພວກເຮົາເປັນນັກຮຽນຮູ້, ນັກສຶກສາຄວນປະຕິບັດແນວໃດ?

# ບົດທີ10

# ການຮ່ວມມືພາຍໃນອາຊຽນ ແລະ ອາຊຽນກັບສາກົນ

## 1 ການຮ່ວມມືຂອງບັນດາປະເທດອາຊຽນ

### 1.1 ການຮ່ວມມືດ້ານການເມືອງ ແລະ ຄວາມໝັ້ນຄົງ

ການຮ່ວມມືດ້ານການເມືອງ ແລະ ຄວາມໝັ້ນຄົງອາຊຽນໄດ້ເລີ່ມຕົ້ນແຕ່ຊຸມປີທຳອິດຫຼັງຈາກການສ້າງຕັ້ງອາຊຽນ. ໃນຈຳນວນສັນຍາສຳຄັນທີ່ອາຊຽນຮັບຮອງເອົາລວມມີຖະແຫຼງການວ່າດ້ວຍ "ການກຳນົດອາຊີອາຄະເນເປັນເຂດສັນຕິພາບ, ອິດສະຫຼະພາບ ແລະ ເປັນກາງ" ປີ ຄ.ສ 1971, ສົນທິສັນຍາໄມຕຣີຈິດ ແລະ ການຮ່ວມມືໃນອາຊີອາຄະເນ ແລະ ຖະແຫຼງການວ່າດ້ວຍຄວາມປອງດອງອາຊຽນ ໃນປີ 1976 ຖະແຫຼງການວ່າດ້ວຍສັນຕິພາບ, ອິດສະຫຼະພາບ ແລະ ເປັນກາງໄດ້ປະກາດເຖິງເຈດຈຳນົງຕໍ່ສັນຕິພາບ ແລະ ການຍຶດໝັ້ນຂອງອາຊຽນເພື່ອເສີມສ້າງຄວາມເຂັ້ມແຂງພາກພື້ນໂດຍປາສະຈາກທຸກຮູບການ ຫຼື ການກະທຳແຊກແຊງຂອງມະຫາອຳນາດພາຍນອກ. ສົນທິສັນຍາໄມຕຣີຈິດ ແລະ ການຮ່ວມມືແມ່ນລະບຽບການສາກົນເພື່ອຄຸ້ມຄອງການພົວພັນ ໂດຍສັນຕິລະຫວ່າງປະເທດໃນພາກພື້ນໃຫ້ສອດຄ່ອງກັບບັດສະຫະປະຊາຊາດ. ສັນຍານີ້ຍັງຖືກຮັບຮອງຈາກກອງປະຊຸມສະມັດຊາໃຫຍ່ສະຫະປະຊາຊາດ.

ການເຄື່ອນໄຫວເຂົ້າໄປມີບົດບາດທາງດ້ານການເມືອງຂອງອາຊຽນຄັ້ງໜຶ່ງໄລຍະຕົ້ນໄດ້ແກ່ການຊອກສະແຫວງຫາວິທີການແກ້ໄຂ ບັນຫາກຳປູເຈຍ ທາງການເມືອງແບບຄົບຊຸດ.

ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 4 ໃນປີ 1992 ໄດ້ຖະແຫຼງວ່າ "ອາຊຽນຈະຊອກຫາຊ່ອງທາງໃນການດຶງເອົາສະມາຊິກເຂົ້າໃນຂົງເຂດໃໝ່ ແຫ່ງການຮ່ວມມືກ່ຽວກັບບັນຫາຄວາມໝັ້ນຄົງ". ຈາກນັ້ນ, ໃນເດືອນ ກໍລະກົດ 1993, ອາຊຽນໄດ້ລິເລີ່ມການສ້າງຕັ້ງເວທີປຶກສາຫາລືແບບຫຼາຍຝ່າຍທີ່ແນໃສ່ສິ່ງເສີມທາງດ້ານການທູດເພື່ອປ້ອງກັນ ແລະ ການສ້າງມາດຕະການແຫ່ງຄວາມໄວ້ເນື້ອເຊື່ອໃຈກັນລະຫວ່າງບັນດາປະເທດໃນພາກພື້ນອາຊີ - ປາຊີຟິກ. ປັດຈຸບັນ ເວທີປຶກສາຫາລືດັ່ງກ່າວປະກອບດ້ວຍ 7 ປະເທດສະມາຊິກອາຊຽນ, 10 ປະເທດຄູ່ເຈລະຈາ ແລະ 4ປະເທດສັງເກດການ. ກອງປະຊຸມບັນດາເຈົ້າໜ້າທີ່ທີ່ອາວຸໂສຂອງເວທີປຶກສາຫາລືພາກພື້ນອາຊຽນໄດ້ຖືກຈັດຕັ້ງຂຶ້ນເພື່ອຊ່ວຍງານ ແລະ ຜັນຂະຫຍາຍການເຄື່ອນໄຫວຂອງເວທີປຶກສາຫາລືດັ່ງກ່າວ.ຈາກນັ້ນມາໃນເດືອນ ກໍລະກົດ 1994 ກອງປະຊຸມປຶກສາຫາລືພາກພື້ນອາຊຽນລະດັບລັດຖະມົນຕີຄັ້ງທຳອິດໄດ້ຖືກຈັດຂຶ້ນທີ່ບາງກອກ. ຂອບເຂດແຫ່ງການເຄື່ອນໄຫວຂອງປະຊຸມດັ່ງກ່ວໄດ້ຖືກຮັບຮອງເອົາໃນປະຊຸມຄັ້ງທີ 2 ໃນເດືອນສິງຫາ ປີ 1995 ກອງປະຊຸມ ຄັ້ງທີ 2 ຍັງໄດ້ຕົກລົງກ່ຽວກັບ 3 ຂັ້ນຕອນໃນການຮ່ວມມືກັນ ຄື:

- ການສົ່ງເສີມການສ້າງຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ.
- ການເສີມຂະຫຍາຍການທູດເພື່ອການປ້ອງກັນ.
- ການກຳນົດວິທີການເພື່ອແກ້ໄຂຄວາມຂັດແຍ່ງ.

ເພື່ອເຮັດໃຫ້ແຜນຖືກປະຕິບັດບັນດາເຈົ້າໜ້າທີ່ອາວຸໂສຂອງອາຊຽນໄດ້ພິຈາລະນາ ແລະ ນຳສະເໜີຄຳຄິດຄຳເຫັນຕໍ່ກອງປະຊຸມ ລະດັບລັດຖະມົນຕີກ່ຽວກັບການຜັນຂະຫຍາຍການເຄື່ອນໄຫວຮ່ວມມືກັນໄດ້ດ້ານຕ່າງໆ ທີ່ໄດ້ມີການສະເໜີຂຶ້ນມາໃນເມື່ອກ່ອນ.

ຈາກນັ້ນມາບັນດາເຈົ້າໜ້າທີ່ອາວຸໂສ ກໍໄດ້ໄຂກອງປະຊຸມ ສະໄໝພິເສດຂຶ້ນເຊິ່ງປະກອບດ້ວຍເຈົ້າໜ້າທີກະຊວງການຕ່າງປະເທດຂອງບັນດາປະເທດສະມາຊິກ. ກອງປະຊຸມບັນດາເຈົ້າໜ້າທີ່ອາວຸໂສສະໄໝພິເສດນີ້ແມ່ນເພື່ອປຶກສາຫາລືກັນກ່ຽວກັບບັນຫາສົດໆຮ້ອນໆ ແລະ ກ່ຽວກັບຂົງເຂດການຮ່ວມມືອື່ນໆ ທີ່ມີ

ຄວາມສາມາດເປັນໄປໄດ້ ເຊິ່ງໃນນັ້ນ ລວມທັງມາດຕະການຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ, ແຜນການຮ່ວມມືທາງດ້ານຄວາມໝັ້ນຄົງ. ການສົ່ງເສີມຄວາມເຂົ້າໃຈຕໍ່ນະໂຍບາຍກ່ຽວກັບຄວາມໝັ້ນຄົງຂອງອາຊຽນ, ການຮ່ວມມືກັນບັນເທົາທຸກໃນພາວະສຸກເສີນ ແລະ ການປະສານສົມທົບດ້ານຈຸດຢືນຂອງອາຊຽນ ຕໍ່ບັນຫາເອກະສານທາງສາກົນທີ່ກ່ຽວພັນເຖິງຄວາມໝັ້ນຄົງ, ໃນເວລາດຽວກັນນັ້ນ ການຮ່ວມມືດ້ານຄວາມໝັ້ນຄົງ ແລະ ດ້ານການເມືອງແບບ 2 ຝ່າຍລະຫວ່າງບັນດາປະເທດສະມາຊິກອາຊຽນດ້ວຍກັນ ແລະ ລະຫວ່າງແຕ່ລະປະເທດສະມາຊິກອາຊຽນກັບບັນດາປະເທດ ທີ່ ບໍ່ແມ່ນສະມາຊິກອາຊຽນໄດ້ສືບຕໍ່ພົວພັນຮ່ວມມືກັນ ດ້ວຍຫຼາຍຮູບການ ແລະ ໃນຫຼາຍລະດັບທີ່ແຕກຕ່າງກັນ.

ນອກຈາກການຮ່ວມມືຂອງລັດຖະບານແລ້ວ ເພື່ອເຮັດໃຫ້ຂົງເຂດນີ້ມີສະຖຽນລະພາບ, ມີສັນຕິພາບ ແລະ ວັດທະນະຖາວອນ ບັນດາປະເທດອາຊຽນຍັງມີການພົວພັນກັບສະຖາບັນຕ່າງໆ ທີ່ບໍ່ຂຶ້ນກັບລັດຖະບານເຊິ່ງມີປະຈໍາຢູ່ໃນແຕ່ລະປະເທດ.

ອາຊຽນຍັງໄດ້ໃຫ້ການສະໜັບສະໜູນບົດບາດເປັນໃຈກາງ ຂອງອົງການສະຫະປະຊາຊາດໃນການຮັກສາສັນຕິພາບ ແລະ ຄວາມໝັ້ນຄົງສາກົນ. ກ່ຽວກັບບັນຫານີ້, ກອງປະຊຸມຊຸດຍອດອາຊຽນ ປີ 1992 ໄດ້ຕົກລົງກັນວ່າ

1) ການສະເໜີຈັດກອງປະຊຸມສຸດຍອດ ຂອງບັນດາສະມາຊິກສະພາຄວາມໝັ້ນຄົງສະຫະປະຊາຊາດ (ສປຊ) ນັ້ນຈະຊ່ວຍຍົກບົດບາດຂອງສະຫະປະຊາຊາດຂຶ້ນ ເພື່ອສົ່ງເສີມໃຫ້ລະບຽບການເມືອງ ແລະ ເສດຖະກິດສາກົນ ມີຄວາມທ່ຽງທໍາກວ່າເກົ່າ ແລະ ເພື່ອປັບປຸງໃຫ້ລະບົບການຕັດສິນບັນຫາໃນສະຫະປະຊາຊາດມີປະຊາທິປະໄຕອັນຈະເຮັດໃຫ້ອົງການ ສປຊ ເປັນອົງການທີ່ມີປະສິດທິພາບຢ່າງແທ້ຈິງ ໃນການປະຕິບັດພັນທິຂອງຕົນ.

2) ອາຊຽນຈະປະກອບສ່ວນຢ່າງຫ້າວຫັນໃນຄວາມພະຍາຍາມ ເພື່ອຮັບປະກັນໃຫ້ ສປຊ ເປັນເຄື່ອງມືທີ່ເປັນຂໍກຸນແຈ ເພື່ອການຮັກສາສັນຕິພາບ ແລະ ຄວາມໝັ້ນຄົງສາກົນ.

3) ອາຊຽນຈະຊຸກຍູ້ທຸກຄວາມພະຍາຍາມ ເພື່ອເຮັດໃຫ້ອົງການສະຫະປະຊາຊາດມີຄວາມເຂັ້ມແຂງຮວມທັງບົດບາດ ແລະ ຄວາມສາມາດໃນການຮັກສາສັນຕິພາບ ແລະ ການສ້າງສັນຕິພາບ ໂດຍ ສອດ ຄ່ອງກັບ ກົດບັດສະຫະປະຊາຊາດ ອາຊຽນເຫັນວ່າ "ແຜນການເພື່ອສັນຕິພາບ" ຂອງເລຂາທິການໃຫຍ່ຂອງສະຫະປະຊາຊາດເປັນການລິເລີ່ມສ້າງສັນເພື່ອກ້າວເຂົ້າສູ່ການປັບປຸງບົດບາດຂອງ( ສປຊ) ໃຫ້ໜັກແໜ້ນໃນການທູດ ເພື່ອການປ້ອງກັນການສ້າງສັນຕິພາບ, ການຮັກສາສັນຕິພາບ ພາຍຫຼັງໄດ້ເກີດກໍລະນີວິວາດຕໍ່ສູ້ກັນ.

ມາໃນວັນທີ 29 ພະຈິກ ຄ.ສ 2004 ບັນດາປະມຸກລັດ ແລະ ຫົວໜ້າລັດຖະບານຂອງແຕ່ລະປະເທດໃນອາຊຽນໄດ້ມີການຕົກລົງຮັບເອົາແຜນປະຕິບັດງານວຽງຈັນ ໃນກອງປະຊຸມຊຸດຍອດອາຊຽນຄັ້ງທີ 10.

ກ່ຽວກັບແຜນປະຕິບັດງານວຽງຈັນນີ້ກອງປະຊຸມໄດ້ຮັບຮອງເອົາແຜນປະຕິບັດງານປະຊາຊົນອາຊຽນເພື່ອຄວາມໝັ້ນຄົງຂອງປະຊາຄົມອາຊຽນ ສັງຄົມ - ວັດທະນະທໍາ ເພື່ອຊ່ວຍເຫຼືອເຊິ່ງກັນແລະກັນຢ່າງໃກ້ຊິດ, ແນໃສ່ຮັບປະກັນສັນຕິພາບ,ສະຖຽນລະພາບອັນ ໝັ້ນຄົງ,ແບ່ງສັນປັນສ່ວນ ຄວາມ ອຸດົມສົມບູນພູນສຸກ ໃນຂົງເຂດ. ກ່ຽວກັບບັນຫານີ້ ກອງປະຊຸມຍັງໃຫ້ຄໍາໝັ້ນສັນຍາກັນ ເພື່ອເຮັດໃຫ້ຈຸດປະສົງຂອງປະຊາຄົມອາຊຽນບັນລຸຜົນສໍາເລັດໂດຍຜ່ານຂໍ້ລິເລີ່ມ ແລະ ມາດຕະການໃນການເລັ່ງລັດການ ເຊື່ອມ ໂຍງເສດຖະກິດ.

ກ່ຽວກັບການຮ່ວມມື ໃນການຕໍ່ຕ້ານອາດສະຍາກໍາຂ້າມຊາດ, ກອງປະຊຸມໄດ້ຮັບຮອງເອົາຖະແຫຼງການອາຊຽນວ່າດ້ວຍການຕ້ານການຄ້າຂາຍມະນຸດໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ.

ກອງປະຊຸມໄດ້ປະເມີນຜົນ ກ່ຽວກັບການປະຕິບັດແຜນປະຕິບັດການຮ່າໂນ້ຍ ເຊິ່ງໄດ້ເປັນເອກະພາບກັນຕໍ່ ຜົນສໍາເລັດຂອງການປະຕິບັດງານດັ່ງກ່າວ ເຊິ່ງມີຄວາມສໍາຄັນໃນການປະ ກອບສ່ວນບັນ ລຸເປົ້າໝາຍສຸດທ້າຍວິໄສທັດ ປີ 2020 ແລະ ຖະແຫຼງການອາຊຽນຄອນຂອດ ສອງ (ASEAN Concord II ຫຼື Bali Concord II) ເຊິ່ງຈະເປັນການນໍາໄປສູ່ການສ້າງຕັ້ງປະຊາຄົມອາຊຽນໃນປີ 2020.

## 1.2 ການຮ່ວມມືດ້ານເສດຖະກິດ

ຈຸດສຸມຂອງການຮ່ວມມືດ້ານເສດຖະກິດອາຊຽນ ໃນຊຸມປີ 1990 ລວມມີ:

- ພັດທະນາພາກພື້ນໃຫ້ກາຍເປັນຖານລວມແຫ່ງໜຶ່ງຂອງໂລກ ສຳລັບການຜະລິດສິນຄ້າທີ່ມີມູນຄ່າເພີ່ມ ແລະ ດ້ວຍເຕັກໂນໂລຊີ ອັນທັນສະໄໝ ແນໃສ່ສະໜອງແກ່ການຕະຫຼາດໃນພາກພື້ນ ແລະ ຕະຫຼາດໂລກ.
- ເພີ່ມປະສິດທິພາບອຸດສາຫະກຳຂອງພາກພື້ນ ໂດຍຜ່ານການນຳໃຊ້ຄວາມໄດ້ປຽບທາງດ້ານທີ່ຕັ້ງເພີ່ມເສີມໃຫ້ແກ່ກັນ ໂດຍອີງໃສ່ຫຼັກການຮ່ວມຕະຫຼາດກັນ ແລະ ການສົບທົບກັບຊັບພະຍາກອນເຂົ້າກັນ
- ສົ່ງເສີມການດຶງດູດ ເອົາການລົງທຶນ ແລະ ການທ່ອງທ່ຽວເຂົ້າໃນພາກພື້ນ.
- ການຮ່ວມມືກັນໃນການສົ່ງເສີມການພັດທະນາໂຄງລ່າງ ໃຫ້ມີຂະໜາດໃຫຍ່ຂຶ້ນອັນຈະເປັນການປະກອບສ່ວນສ້າງບັນຍາກາດທຸລະກິດທີ່ມີປະສິດທິພາບກວ່າເກົ່າ.
- ຮັບປະກັນໃຫ້ຊັບພະຍາກອນອັນອຸດົມຮັ່ງມີເຊັ່ນ ແຮ່ທາດ, ພະລັງງານ, ປ່າໄມ້ ແລະ ອື່ນໆຂອງພາກພື້ນຖືກນຳໃຊ້ຢ່າງມີປະສິດທິພາບ.

ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 4 ທີ່ສິງກະໂປ ໃນປີ 1992 ໄດ້ຢ້ຳວ່າ ອາຊຽນຈະເລັ່ງລັດຄວາມພະຍາຍາມໃນການເພີ່ມທະວີການຮ່ວມມືດ້ານເສດຖະກິດ ລະຫວ່າງອາຊຽນດ້ວຍກັນ ແລະ ຈະຮັບຮອງເອົາມາດຕະການເສດຖະກິດໃໝ່ໃຫ້ເໝາະສົມ ດັ່ງທີ່ລະບຸໄວ້ໃນສັນຍາວ່າດ້ວຍການເພີ່ມທະວີການຮ່ວມມືດ້ານເສດຖະກິດອາຊຽນ ແນໃສ່ເຮັດໃຫ້ການເຕີບໂຕດ້ານເສດຖະກິດ ແລະ ການພັດທະນາຂອງອາຊຽນມີຄວາມໝັ້ນຄົງ ເຊິ່ງມີຄວາມໝາຍສຳຄັນຍິ່ງ ສຳລັບສະຖຽນລະພາບ ແລະ ຄວາມວັດທະນະຖາວອນຂອງພາກພື້ນ.

ລວມຍອດຜະລິດຕະພັນສະເລ່ຍຕໍ່ຄົນຕໍ່ປີ 2004 ລາວປະມານ 500$, ຟີລິບປິນປະມານ 1055$, ມາເລເຊຍ ປະມານ 4245$, ໄທ ປະມານ 2538$, ຫວຽດນາມ 543$, ອິນໂດເນເຊຍ 44587$, ພະມ້າ 1800$ (2005).

ນອກຈາກການຮ່ວມມືດ້ານເສດຖະກິດຂອງບັນດາປະເທດອາຊຽນ ດ້ວຍກັນນີ້ແລ້ວໃນລະຫວ່າງວັນທີ 28/11/2004 ນີ້ ກໍມີກອງປະຊຸມຊຸດຍອດກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມທີ່ໄດ້ຈັດຂຶ້ນທີ່ສູນຮ່ວມມືສາກົນ ນະຄອນຫຼວງວຽງຈັນ ໂດຍແມ່ນບັນດານາຍົກລັດຖະມົນຕີທັງ 4 ປະເທດເຂົ້າຮ່ວມ.

ໃນກອງປະຊຸມບັນດາຜູ້ນຳ 4 ປະເທດໄດ້ປຶກສາຫາລືຮ່ວມກັນ ແລະ ພ້ອມກັນຢັ້ງຢືນກັນຄືນກ່ຽວກັບການພົວພັນໃນຖານເພື່ອນມິດໃກ້ຄຽງທີ່ດີ ບົນຫຼັກການ ການພົວພັນຕ່າງຝ່າຍຕ່າງມີຜົນ, ບໍ່ແຊກແຊງກິດຈະການພາຍໃນຂອງກັນແລະກັນ ແລະ ຮ່ວມກັນສ້າງຂົງເຂດ ຫຼື ພາກພື້ນໃຫ້ເປັນເຂດສັນຕິພາບທີ່ຖາວອນ.ກອງປະຊຸມຍັງຕົກລົງເຫັນດີນຳກັນ ຄື:

- ເພີ່ມທະວີຄວາມເຂັ້ມແຂງໃນການປະສານງານ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນລະຫວ່າງປະເທດກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມ. ໃນເວທີອະນຸພາກພື້ນ ແລະ ສາກົນ ໂດຍຮັດແໜ້ນການປະ ສານງານດ້ານນະໂຍບາຍການເຊື່ອມຕໍ່ທາງເສດຖະກິດຕໍ່ທາງເສດຖະກິດ ແລະ ເພີ່ມທະວີການເຈລະຈາການ ປຶກສາຫາລື ແລະ ການແລກປ່ຽນຂໍ້ມູນຂ່າວສານ ໃນຂະ ແໜງການທີ່ມີຜົນປະໂຫຍດຮ່ວມກັນ.
- ເສີມຂະຫຍາຍການຮ່ວມມືດ້ານເສດຖະກິດ ລະຫວ່າງກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມ, ແນໃສ່ເພື່ອນຳໃຊ້ທ່າແຮງ ແລະ ຂໍ້ໄດ້ປຽບຮ່ວມກັນ ຂອງ 4 ປະເທດເຂົ້າໃນຂົງເຂດ ທີ່ເປັນບຸລິມະສິດ ເຊັ່ນ: ການຄ້າ ແລະ ການລົງທຶນ, ການຮ່ວມມືດ້ານການຂົນສົ່ງ, ດ້ານພະລັງງານ, ດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ສື່ສານ.

ນອກຈາກນັ້ນບັນດາຜູ້ນຳຍັງຢັ້ງຢືນວ່າ ຈະພ້ອມກັນຕັ້ງໜ້າໃຫ້ຫຼາຍກວ່າເກົ່າເຂົ້າໃນວຽກງານການພັດທະນາລຸ່ມແມ່ນ້ຳຂອງຂັ້ນອະນຸພາກພື້ນໂດຍຜ່ານການປະສານງານທີ່ໄດ້ຮັບການສົ່ງເສີມໃນການ

ກຳນົດ ແລະ ຈັງຕັ້ງປະຕິບັດບັນດາໂຄງການທີ່ຈຳເປັນ ແລະ ເປັນບຸລິມະສິດໂດຍການສົມທົບບັນດາປະເທດ ກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມຂັ້ນອະນຸພາກພື້ນທີ່ພ້ອມປະຕິບັດ.

ບັນດາຜູ້ນຳໄດ້ລົງນາມໃນຖະແຫຼງການວຽງຈັນວ່າ ດ້ວຍການເສີມຂະຫຍາຍການຮ່ວມມື ແລະ ການເຊື່ອມໂຍງທາງດ້ານເສດຖະກິດຂອງ 4 ປະເທດ. ຖະແຫຼງການດັ່ງກ່າວ ໄດ້ໃຊ້ເປັນທິດຊີ້ນຳໃນການເພີ່ມທະວີການປະສານງານ ແລະ ການຊ່ວຍເຫຼືອເຊິ່ງກັນແລະກັນ ລະຫວ່າງບັນດາປະເທດ ກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມ, ເສີມຂະຫຍາຍການຮ່ວມມືລະຫວ່າງປະເທດ ໃນຂົງເຂດທີ່ທຸກຝ່າຍຈະໄດ້ຮັບຜົນປະໂຫຍດ.




**(ຮູບ ກອງປະຊຸມສຸດຍອດ ກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມ)**

## 1.3 ການຮ່ວມມືທາງດ້ານວິຊາການ

ການຮ່ວມມືທາງດ້ານວິຊາການຂອງອາຊຽນກວມເອົາຂົງເຂດວິທະຍາສາດ ແລະ ເຕັກໂນໂລຊີ, ສິ່ງແວດລ້ອມວັດທະນະທຳ ແລະ ການຖະແຫຼງຂ່າວ, ການພັດທະນາສັງຄົມ, ການຄວບຄຸມຢາເສບຕິດ, ຢາເບື່ອເມົາ ແລະ ລັດຖະການພົນລະເມືອງ, ພື້ນຖານຂອງການຮ່ວມມືນີ້ໄດ້ຖືກວາງອອກໃນ ວັນທີ 8 ສິງຫາ1976 ໂດຍການລົງນາມ ໃນຖະແຫຼງການບາງກອກ ເຊິ່ງໃນຈຳນວນຈຸດປະສົງ ແລະ ເປົ້າໝາຍໃຫຍ່ໃນອາຊຽນນັ້ນໄດ້ກຳນົດບາງຢ່າງດັ່ງນີ້

- ເລັ່ງລັດການຈະເລີນເຕີບໂຕດ້ານເສດຖະກິດ ຄວາມກ້າວໜ້າທາງສັງຄົມ ແລະ ການພັດທະນາດ້ານວັດທະນະທຳໃນພາກພື້ນ
- ສົ່ງເສີມການປະສານສົມທົບກັນຢ່າງຫ້າວຫັນ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນບັນຫາທີ່ເປັນຜົນປະໂຫຍດລວມໃນດ້ານເສດຖະກິດ ສັງຄົມ ວັດທະນະທຳ ເຕັກນິກ ວິທະຍາສາດ ແລະ ການປົກຄອງ
- ໃຫ້ການ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ດ້ວຍຮູບການແຫ່ງການເຝິກອົບຮົມ ແລະ ການອຳນວຍຄວາມ ສະດວກໃຫ້ແກ່ການຄົ້ນຄວ້າໃນຂົງເຂດການສຶກສາ ວິຊາຊີບ ເຕັກນິກ ແລະ ການປົກຄອງ
- ສົ່ງເສີມການຄົ້ນຄວ້າກ່ຽວກັບອາຊີອາຄະເນ

ກອງປະຊຸມສຸດຍອດອາຊຽນ ຄັ້ງປະຖົມມະລຶກ ທີ່ເກາະບາຫຼີ ໃນປີ 1976 ໄດ້ກຳນົດອອກຢ່າງຊັດເຈນ, ບັນດາຫຼັກການຂອງການຮ່ວມມື ເພື່ອບັນລຸບັນດາເປົ້າໝາຍຂອງອາຊຽນລວມທັງການກຳນົດຈຸດຢືນຮ່ວມກັນຂອງອາຊຽນໃນເວທີສາກົນ ກ່ຽວກັບບັນຫາທີ່ຈະມີຜົນກະທົບຕໍ່ພາກພື້ນ. ສົ່ງເສີມການພົວພັນມິດຕະພາບ ແລະ ການຮ່ວມມືກັບປະເທດອື່ນໆ ບົນພື້ນຖານການເຄົາລົບນັບຖືເຊິ່ງກັນ ແລະ ກັນ ຕ່າງຝ່າຍ

ໄດ້ຮັບຜົນປະໂຫຍດ, ເພີ່ມທະວີຄວາມພະຍາຍາມຂອງອົງການຈັດຕັ້ງຂອງລັດຖະບານ ແລະ ທີ່ບໍ່ຂຶ້ນກັບລັດຖະບານເຂົ້າໃນການພັດທະນາຄວາມເປັນເອກະລັກຂອງພາກພື້ນ.

ກອງປະຊຸມສຸດຍອດຄັ້ງທີ່ 2 ທີ່ກົວລາລຳເປີ ໃນປີ 1977 ໄດ້ສະເໜີໃຫ້ມີການຂະຫຍາຍການຮ່ວມມືການພັດທະນາຊັບພະຍາກອນມະນຸດ, ການເອົາແມ່ຍິງ ແລະ ຊາວໜຸ່ມເຂົ້າຮ່ວມໃນຂະບວນການພັດທະນາ ການລົບລ້າງຄວາມທຸກຍາກ, ພະຍາດໂລຄາ ແລະ ການກຶກໜັງສື, ການເອົາປະຊາຊົນເຂົ້າຮ່ວມກັບນະໂຍບາຍພັດທະນາຊົນນະບົດ, ການສະໜອງໂອກາດແກ່ກຸ່ມຄົນຜູ້ມີລາຍໄດ້ຕໍ່າໃຫ້ມີວຽກເຮັດງານທຳເຂົ້າໃນການຜະລິດ ໂດຍສະເພາະຢູ່ໃນເຂດຊົນນະບົດ ແລະ ປະສານງານກັນໃນການປະຕິບັດງານ ເພື່ອກຳຈັດການເສບ ແລະ ການຄ້າຢາເສບຕິດ.

ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 3 ທີ່ມະນີລາ ໃນປີ 1981 ໄດ້ຍໍາເຖິງຄວາມສຳຄັນຂອງການຮ່ວມມືດ້ານວິຊາການ ເພື່ອສິ່ງເສີມໃນການເພີ່ມທະວີສະຕິແຫ່ງຄວາມເປັນອາຊຽນໃຫ້ມີພັນທະກວ້າງອອກ. ໃຫ້ມີການປະກອບສ່ວນ ແລະ ການຮ່ວມມືຫຼາຍຂຶ້ນໃນໝູ່ປະຊາຊົນອາຊຽນດ້ວຍ ແລະ ໃຫ້ມີການພັດທະນາຊັບພະຍະກອນມະນຸດຂອງຕົນ.

ກອງປະຊຸມສຸດຍອດ ຍັງໄດ້ຢັ້ງຢືນ ຄວາມຕັດສິນໃຈຢ່າງແຮງກ້າ ຂອງອາຊຽນທີ່ຈະລົບລ້າງການເສບ ແລະ ການຄ້າຢາເສບຕິດ ທີ່ຜິດກົດໝາຍເຊິ່ງເປັນໄພຂົ່ມຂູ່ຕໍ່ໂຄງປະກອບດ້ານສັງຄົມຂອງອາຊຽນ ແລະ ເຮັດໃຫ້ປະຊາຊົນ ຂອງຕົນອ່ອນເພຍ ເປ້ຍລ່ອຍ.

ກອງປະຊຸມສຸດຍອດ ຄັ້ງທີ 4 ທີ່ສິງກະໂປໃນປີ 1992 ໄດ້ຍໍ້າເຖິງບັນດາຈຸດປະສົງ ແລະ ຮູບແບບຕ່າງໆ ຂອງການຮ່ວມມືດ້ານວິຊາການ, ຮວມທັງການຂະຫຍາຍການສຶກສາ. ຄວາມຮູ້ກ່ຽວກັບອາຊຽນເຂົ້າໃນຫຼັກສູດການສິດສອນໃນໂຮງຮຽນ ແລະ ການນຳເອົາແຜນການແລກປ່ຽນນັກສຶກສາເຂົ້າມາປະຕິບັດ, ການເພີ່ມທະວີການ ການປະກອບສ່ວນ ແລະ ບົດບາດຂອງອົງການທີ່ບໍ່ສັງກັດລັດ, ແມ່ຍິງ ແລະ ເດັກນ້ອຍ, ການສືບຕໍ່ ແລະ ການເພີ່ມມາດຕະການໃນການຕໍ່ຕ້ານການເສບ ແລະ ການຄ້າຢາເສບຕິດ ທີ່ຜິດກົດໝາຍໃນລະດັບຊາດ, ລະດັບພາກພື້ນ ແລະ ລະດັບສາກົນ. ການປົກປັກຮັກສາສະພາບແວດລ້ອມ ສົ່ງເສີມຫຼັກການພັດທະນາອັນຍືນຍົງ.

ກອງປະຊຸມສຸດຍອດໄດ້ມອບໝາຍໃຫ້ອາຊຽນສະກັດກັ້ນ ການແຜ່ລາມຂອງພະຍາດເອດສ໌ເປັນຕົ້ນ ໂດຍຜ່ານການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບພະຍາດດັ່ງກ່າວ.

## 2 ການແລກປ່ຽນວັດທະນະທຳ

ບັນດາປະເທດສະມາຊິກອາຊຽນ ຮູ້ຄວາມໝາຍຂອງຄຳວ່າ "ວັດທະນະທຳ" ໝາຍເຖິງສິ່ງປະກອບທັງໝົດຂອງບັນດາລັກສະນະສະເພາະທາງດ້ານຈິດໃຈ, ສະຕິປັນຍາ, ຄວາມຮູ້ສຶກ ແລະ ທາງດ້ານວັດຖຸທີ່ເປັນເອກະລັກໃຫ້ສັງຄົມ ຫຼື ກຸ່ມສັງຄົມໃດໜຶ່ງມັນປະກອບດ້ວຍສິລະປະ, ອັກສອນສາດ, ວັນນະຄະດີ, ແບບແຜນການດຳລົງຊີວິດ, ລະບົບຄຸນຄ່າ, ຫົວຄິດປະດິດສ້າງ, ລະບົບພູມປັນຍາ, ປະເພນີ ແລະ ຄວາມເຊື່ອຖື.

ດັ່ງນັ້ນ, ອົງການຕາມຕົກລົງຂອງກອງປະຊຸມບັນດາຫົວໜ້າລັດຖະບານອາຊຽນທີ່ໄດ້ຈັດຂຶ້ນທີ່ກົວລາລຳເປີ ປີ 1977 ໄດ້ຕົກລົງເຫັນດີໃຫ້ຄະນະກຳມະການຖາວອນ ດ້ານການເຄື່ອນໄຫວທາງສັງຄົມ ແລະ ວັດທະນະທຳ ແລະ ຄະນະກຳມະການຖາວອນດ້ານສື່ມວນຊົນ ຮ່ວມເຂົ້າກັນໃນປີ 1978 ເປັນອັນໜຶ່ງອັນດຽວ ເອີ້ນວ່າ : ຄະນະກຳມະການດ້ານວັດທະນະທຳ ແລະ ຖະແຫຼງຂ່າວ.

ເພື່ອປະຕິບັດໜ້າທີ່ຂອງຕົນ ຄະນະກຳມະການດ້ານວັດທະນະທຳ ແລະ ຖະແຫຼງຂ່າວໄດ້ກະກຽມບັນດາແຜນການດຳເນີນງານ ໂດຍກຳນົດທ່າແຮງ, ວາງຍຸດທະສາດ ແລະ ຮວບຮວມບັນດາໂຄງການຕ່າງໆ ກ່ຽວກັບວັດທະນະທຳ ແລະ ຖະແຫຼງຂ່າວ. ບັນດາແຜນການດຳເນີນງານດັ່ງກ່າວແນໃສ່ຈຸດປະສົງດັ່ງຕໍ່ໄປນີ້:

- ສົ່ງເສີມການຮ່ວມມື ໃຫ້ມີປະສິດທິຜົນ ໃນດ້ານວັດທະນະທຳ ແລະ ຖະແຫຼງຂ່າວ ເພື່ອຊຸກຍູ້ ໃຫ້ເກີດຄວາມເຂົ້າໃຈເຊິ່ງກັນ ແລະ ກັນ, ຄວາມສາມັກຄີລະຫວ່າງປະເທດສະມາຊິກອາຊຽນ ກໍຄືເພື່ອ ຊຸກຍູ້ພັດທະນາຂອງພາກພື້ນ.

- ເລັ່ງລັດການພັດທະນາວັດທະນະທຳ ໃນພາກພື້ນຜ່ານການເຄື່ອນໄຫວຮ່ວມກັນ ເພື່ອສ້າງພື້ນຖານ ອັນໜັກແໜ້ນໃຫ້ວົງຄະນະຍາດອາຊຽນ ທີ່ມີ ວັດທະນາຖາວອນ ແລະ ມີສັນຕິພາບ.

- ສົ່ງເສີມໃຫ້ເກີດການເຂົ້າໃຈ ແລະ ຄວາມນິຍົມຊົມຊອບດີຂຶ້ນຕໍ່ວັດທະນະທຳອາຊຽນດຄວາມ ຄ້າຍຄືກັນ, ຄວາມຫຼາກຫຼາຍ ແລະ ສາຍພົວພັນອັນເກົ່າແກ່ ກໍຄືໃນປັດຈຸບັນລະຫວ່າງປະຊາຊົນອາຊຽນ ແລະ ເຮັດແນວໃດ ໃຫ້ປະຊາຊົນເຫຼົ່ານັ້ນໄດ້ຮ່ວມກັນໃຊ້ຄວາມພະຍາຍາມດັ່ງກ່າວ.

- ສົ່ງເສີມການສະໜອງແຫຼ່ງຂ່າວ ທີ່ນຳໄປສູ່ການພັດທະນາຄວາມມີສະຕິສູງຂຶ້ນຕໍ່ຄວາມເປັນພາກ ພື້ນອັນດຽວລະຫວ່າງປະຊາຊົນອາຊຽນ.

- ສົ່ງເສີມພາກພົດອັນດີ ແລະ ອັນຖືກຕ້ອງຂອງອາຊຽນຕໍ່ສາກົນ. ບັນດາແຜນການຂອງຄະນະ ກຳມະການດ້ານວັດທະນະທຳ ແລະ ຖະແຫຼງຂ່າວໃຫ້ການອຸ້ມຊູດ້ານເງິນຈາກກອງທຶນວັດທະນະທຳອາຊຽນ ແລະ ໄດ້ຮັບການຜັນຈະຫຍາຍ ໂດຍ 4 ໜ່ວຍງານດ້ານວັດທະນະທຳ ແລະ ການສຶກສາກ່ຽວກັບອາຊຽນ, ໜ່ວຍງານສິລະປະແສງສີ ແລະ ການສະແດງເຖິງເວທີ, ໜ່ວຍງານດ້ານວິທະຍຸ, ໂທລະພາບ ແລະ ຮູບເງົາ, ວີດີໂອ, ໜ່ວຍງານດ້ານການພິມ ແລະ ການສື່ສານລະຫວ່າງບຸກຄົນ.

- ໂຄງການເດັ່ນອັນໜຶ່ງໄດ້ແກ່ການພິມ ເຜີຍແຜ່ປື້ມຫຼາຍຫົວເປັນຊຸດ ພາຍໃຕ້ຫົວເລື່ອງ “ປະມວນ ບົກຊຽນຄັດເລືອກຈາກວັນນະຄະດີຂອງອາຊຽນ” ເຊິ່ງແມ່ນຮວບຮວມເອົາບັນດາຜົນງານຂອງແຕ່ລະປະ ເທດສະມາຊິກອາຊຽນ. ການເຄື່ອນໄຫວທີ່ໄດ້ຮັບນິຍົມຊົມຊອບ ແລະ ໄດ້ຮັບຜົນສຳເລັດແມ່ນງານມະຫາກຳ ເພງອາຊຽນປະຈຳປີເຊິ່ງໄດ້ຈັດຂຶ້ນທີ່ນະຄອນຫຼວງຂອງບັນດາປະເທດອາຊຽນ ຕາມການຜັດປ່ຽນກັນເປັນ ເຈົ້າພາບ. ການເຄື່ອນໄຫວທີ່ຮູ້ຈັກກັນດີ, ອີກອັນໜຶ່ງແມ່ນການຈັດງານມະຫາກຳຮູບເງົາອາຊຽນເຊິ່ງໄດ້ ຢຸດຕິລົງ ໃນປີ 1996 ແລະ ໄດ້ປ່ຽນມາເປັນງານປະຈຳປີແຫ່ງສັບປະດາຮູບເງົາອາຊຽນ ແລະ ການແລກປ່ຽນ ບຸກຄົນໃນວົງການຮູບເງົາ.

## 3 ການຮ່ວມມືກັບບັນດາປະເທດອາຊີຕາເວັນອອກ

ການຮ່ວມມືກັບບັນດາປະເທດອາຊີຕາເວັນອອກຂອງອາຊຽນ ໂດຍທົ່ວໄປແລ້ວແມ່ນການພົວພັນ ຮ່ວມກັບປະເທດ ເຊັ່ນ ຍີ່ປຸ່ນ, ຈີນ ແລະ ເກົາຫຼີ. ການຮ່ວມມືທີ່ເປັນທາງການຂອງອາຊຽນກັບປະເທດ ດັ່ງກ່າວນີ້ ເລີ່ມຕົ້ນໃນເດືອນ ທັນວາ ຄ.ສ 1997 ທີ່ກົວລາລຳເປີ ເຊິ່ງເອີ້ນວ່າ “ການຮ່ວມມືອາຊຽນ ບວກ3”. ຈາກນັ້ນມາ ໃນປີ 1999 ທີ່ມະນິລາປະເທດບັນດາ ຟີລິບປິນ ຜູ້ນຳອາຊຽນບວກ 3 ໄດ້ຮັບຮອງ ເອົາຖະແຫຼງການຮ່ວມ “ວ່າດ້ວຍການຮ່ວມມືອາຊີຕາເວັນອອກແນໃສ່ຮັດແໜ້ນການຮ່ວມມືໃນຂົງເຂດບູລິ ມະສິດຕ່າງໆ ທີ່ສອງຝ່າຍມີຜົນປະໂຫຍດ ແລະ ມີຄວາມສົນໃຈຮ່ວມກັນ” ນັບແຕ່ນັ້ນມາຂະບວນການຮ່ວມ ມືອາຊຽນບວກ 3 ໄດ້ເຕີບໃຫຍ່ຂະຫຍາຍຕົວແຕກດອກອອກຜົນຢ່າງໄວວາ ແລະ ກວມເອົາຫຼາຍຂະແໜງ ການ. ຢູ່ໃນກອງປະຊຸມສຸດຍອດອາຊຽນບວກ 3 ໃນປີ 2002 ທີ່ພະນົມເປັນ, ຜູ້ນຳອາຊຽນ ແລະ ບວກ 3 ໄດ້ຮັບຮອງເອົາແຜນການໄລຍະສັ້ນ ແລະ ຍາວ ທີ່ສະເໜີໂດຍໜ່ວຍງານສຶກສາຄົ້ນຄວ້າອາຊີຕາເວັນອອກ. ຈາກນັ້ນມາກໍໄດ້ ມີການຈັດຕັ້ງປະຕິບັດແຜນການເຫຼົ່ານັ້ນ ໃຫ້ມີຄວາມຄືບໜ້າຢ່າງເພິ່ງພໍໃຈ.

ປີ ຄ.ສ 2004 ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ບວກ 3 ໄດ້ໄຂຂຶ້ນທີ່ສູນຮ່ວມມືສາກົນ ແລະ ເຝິກອົບຮົມນະຄອນຫຼວງວຽງຈັນ ກອງປະຊຸມຄັ້ງນີ້ ໄດ້ມີການປຶກສາຫາລືກັນ 4 ບັນຫາໃຫຍ່ ເຊັ່ນ ການ ຮ່ວມມືລະຫວ່າງ 10 ປະເທດອາຊຽນ ກັບ 3 ປະເທດ ຄື ສປຈີນ, ຍີ່ປຸ່ນ ແລະ ເກົາຫຼີ. ຜ່ານການປຶກສາຫາລື ແມ່ນໄດ້ຕີລາຄາຕໍ່ການຮ່ວມມືອາຊຽນບວກ 3 ເຊິ່ງໄດ້ຂະຫຍາຍຕົວຢ່າງໄວວາທັງທາງກວ້າງ ແລະ ທາງເລິກ. ອັນນີ້ແມ່ນການຕີລາຄາຂອງບັນດາສະມາຊິກ ເຊິ່ງຖືວ່າເປັນຄຸນນະພາບອັນໃໝ່ສຳລັບອາຊຽນບວກ 3.

- ບັນຫາການສະເໜີຮັບເອົາ 3 ປະເທດຄື ຈີນ ຍີ່ປຸ່ນ ແລະ ເກົາຫຼີ ເຂົ້າເປັນພາຄີຂອງສົນທິສັນຍາມິດຕະພາບ ແລະ ການຮ່ວມມື.

- ບັນຫາການຮ່ວມມືເພື່ອຄວາມໝັ້ນຄົງໃນການຕໍ່ຕ້ານການກໍ່ການຮ້າຍ ແລະ ບັນຫາການປ້ອງກັນຄວາມໝັ້ນຄົງທາງທະເລ (ການຕໍ່ຕ້ານໂຈນສະລັດ)

ບັນຫາການຮ່ວມມືທາງດ້ານເສດຖະກິດລະຫວ່າງອາຊຽນກັບ 3 ປະເທດ ເຊິ່ງມີເຖິງ 48 ກົນໄກ ຖືວ່າການຮ່ວມມືທີ່ຄຸນນະພາບສູງ ແລະ ກົນໄກການຮ່ວມມື 48 ກົນໄກນີ້ແມ່ນໄດ້ສຸມໃສ່ຂະຫຍາຍການຮ່ວມມືລະຫວ່າງອາຊຽນກັບປະເທດບວກ 3 ແມ່ນກວມເອົາທັງດ້ານເສດຖະກິດ - ສັງຄົມ ແລະ ອື່ນໆ ທີ່ສໍາຄັນ ທັງ 3 ປະເທດຈີນ, ຍີ່ປຸ່ນ ແລະ ເກົາຫຼີ ຍັງສືບຕໍ່ໃຫ້ຄວາມຊ່ວຍເຫຼືອອາຊຽນຢ່າງຫຼວງຫຼາຍໃນການເລັ່ງລັດການເຊື່ອມໂຍງລະຫວ່າງ 4 ປະເທດສະມາຊິກໃໝ່ກັບ 6 ປະເທດສະມາຊິກເກົ່າຂອງອາຊຽນ ສະນັ້ນ, ໃນເງື່ອນໄຂນີ້ ຖືວ່າເອົາອາຊຽນໄດ້ມີກ້ອນທຶນມະຫາສານ ຈາກ 3 ປະເທດທີ່ຈະຊ່ວຍເຫຼືອໂດຍສະເພາະຈາກຍີ່ປຸ່ນກໍມີທຶນຮອນເຖິງ 3000 ລ້ານໂດລາ ທີ່ຈະກຽມໃຫ້ການຊ່ວຍເຫຼືອໂດຍແບ່ງອອກເປັນ 2 ພາກຄືການຊ່ວຍເຫຼືອດ້ານຊັບພະຍາກອນມະນຸດ 1500 ລ້ານໂດລາ ແລະ ການຊ່ວຍເຫຼືອທີ 2 ແນໃສ່ການພັດທະນາອ່າງແມ່ນໍ້າຂອງ 1500 ລ້ານໂດລາ ທາງຝ່າຍເກົາຫຼີ ກໍຈະໃຫ້ການຊ່ວຍເຫຼືອ 2 ໂຄງການ ເປັນເງິນເກືອບ 2ລ້ານໂດລາເຂົ້າໃນໂຄງການ ເຊື່ອມໂຍງປະເທດອາຊຽນຂອງພວກເຮົາ.

ສະເພາະຈີນ ເຊິ່ງເປັນປະເທດໜຶ່ງທີ່ໃກ້ຄຽງກັບອາຊຽນກໍໃຫ້ການຊ່ວຍເຫຼືອຫຼາຍໂຄງການຄິດເປັນເງິນຈໍານວນກວ່າ 10 ລ້ານໂດລາ ເພື່ອຊຸກຍູ້ເຂົ້າໃນການເຊື່ອມໂຍງອາຊຽນໃຫ້ເກີດຜົນຢ່າງໄວວາ.




## 4 ການຮ່ວມມືກັບປະເທດອື່ນໆ

ເພື່ອເຮັດໃຫ້ການພົວພັນພາຍນອກ ຂອງອາຊຽນກວ້າງຂວາງອອກບັນດາຜູ້ນໍາຂອງອາຊຽນ ໄດ້ຕົກລົງກັນຂະຫຍາຍການຮ່ວມມືກັບປະເທດອື່ນໆໃນໂລກແບບຄູ່ເຈລະຈາ ເຊິ່ງໄດ້ປະກາດອອກໃນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 1 ຄ.ສ 1976 ວ່າ (ອາຊຽນກຽມພ້ອມທີ່ຈະຂະ ຫຍາຍສາຍພົດ ພັນທີ່ ເປັນປະໂຫຍດ ແລະ ການຮ່ວມມືແບບຕ່າງຝ່າຍມີຜົນກັບບັນດາປະເທດຕ່າງໆໃນພາກພື້ນ) ນະໂຍບາຍດັ່ງກ່າວນີ້ໄດ້ຮັບການ ປະຕິບັດ ແລະ ຊຸກຍູ້ຂຶ້ນຕົ້ນຕັ້ງແຕ່ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 2 ຄ.ສ 1977 ມາ.

ກຸ່ມປະເທດທໍາອິດທີ່ອາຊຽນສຸມໃສ່ ໃນການພົວພັນພາຍນອກຂອງຕົນ ແມ່ນບັນດາປະເທດຄູ່ການຄ້າທີ່ສໍາຄັນຂອງອາຊຽນ ອາຊຽນໄດ້ສ້າງຕັ້ງສາຍພົວພັນ ແບບຄູ່ເຈລະນາກັບອົດສະຕາລີ, ຍີ່ປຸ່ນ, ນິວຊີແລນ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາໃນປີ 1976 ກັບສະຫະລັດອາເມຣິກາ ໃນປີ 1977 ສະຫະພາບເອີຣົບ ໃນປີ 1980 ການາດາ ໃນປີ 1981 ຣັດເຊຍ ແລະ ອິນເດຍ ໃນປີ 1996.

## 4.1 ການພົວພັນອາຊຽນ - ອົດສະຕາລີ

ການຮ່ວມມືກັບອົດສະລີ ແມ່ນອີງໃສ່ແຜນການຮ່ວມມືດ້ານເສດຖະກິດລະຫວ່າງອາຊຽນ - ອົດສະຕາລີ ເຊິ່ງໄດ້ເລີ່ມຕົ້ນປະຕິບັດມາແຕ່ 1974. ແຜນການດັ່ງກ່າວໄດ້ໃຫ້ຮັບການສະໜັບສະໜູນອັນສຳຄັນໄດ້ແກ່ໂຄງການຕ່າງໆ ດ້ານວິທະຍາສາດ ແລະ ເຕັກໂນໂລຊີສະພາບແວດລ້ອມ, ປະຊາກອນ, ການສຶກສາ ແລະ ການເຝິກອົບຮົມ ໂດຍສະເພາະແລ້ວ ແມ່ນດ້ານການພັດທະນາວິທະຍາສາດ - ເຕັກໂນໂລຊີ ແລະ ການພັດທະນາສັງຄົມ. ພາກເອກະຊົນຂອງອາຊຽນ ແລະ ອົດສະຕາລີ ກໍໄດ້ພ້ອມກັນສ້າງຕັ້ງສະພາທຸລະກິດອັນໜຶ່ງຂຶ້ນ ເພື່ອສົ່ງເສີມສາຍພົວພັນດ້ານການຄ້າ ແລະ ການລົງທຶນ ໃນສະພາປຶກສາຫາລື ອາຊຽນ - ອົດສະຕາລີ.

ໃນກອງປະຊຸມວົງແຄບ ລັດຖະມົນຕີເສດຖະກິດອາຊຽນ ຄັ້ງທີ 10 ທີ່ສິງກະໂປ ໃນເດືອນເມສາ2004 ບັນດາລັດຖະມົນຕີເສດຖະກິດໄດ້ສະໜັບສະໜູນ ໃຫ້ຈັດກອງປະຊຸມສຸດຍອດອາຊຽນ - ອົດສະຕາລີ ແລະ ນິວຊີແລນໃນໄລຍະດຽວທີ່ ສປປລາວ ຈະເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 10 ໃນເດືອນ ພະຈິກ 2004.

ໃນກອງປະຊຸມລັດຖະມົນຕີອາຊຽນ ຄັ້ງ 37 ທີ່ ຈາກາຕາ ໄດ້ຕົກລົງເຫັນດີໃຫ້ຈັດກອງປະຊຸມສຸດຍອດອາຊຽນ - ອົດສະຕາລີ ແລະ ນິວຊີແລນ ທີ່ວຽງຈັນໃນທ້າຍເດືອນພະຈິກ ແລະ ໃຫ້ຖືໂອກາດສະເຫຼີມສະຫຼອງຄົບຮອບ 30 ປີ ແຫ່ງການພົວພັນອາຊຽນ - ອົດສະຕາລີ.

- ການຮ່ວມມືດ້ານການເມືອງ. ລະຫວ່າງອາຊຽນກັບອົດສະຕາລີ ແມ່ນມີຄວາມຄືບໜ້າເປັນກ້າວໆ ໂດຍສະເພາະແມ່ນການຮ່ວມມືໃນເລື່ອງ ການຮັກສາຄວາມປອດໄພໃນພາກພື້ນ ແລະ ການຮ່ວມມືຕໍ່ຕ້ານການກໍ່ການຮ້າຍສາກົນ. ພິເສດໃນກອງປະຊຸມລັດຖະມົນຕີອາຊຽນ ຄັ້ງທີ 37 ອາຊຽນ ແລະ ອົດສະຕາລີ ວ່າດ້ວຍການຮ່ວມມື, ວ່າດ້ວຍການກໍ່ການຮ້າຍສາກົນ ເຊິ່ງເປັນປະເທດທີ່ 4 ຕາມລຳດັບ ຫຼັງຈາກສະຫະລັດອາເມລິກາ, ສະຫະພາບເອີລົບ ແລະ ອິນເດຍ ທີ່ໄດ້ລົງນາມໃນຖະແຫຼງການດັ່ງກ່າວ.
- ການຮ່ວມມືດ້ານເສດຖະກິດຂອງອາຊຽນ ແລະ ອົດສະຕາລີໃນປັດຈຸບັນແມ່ນເຫັນຄວາມສຳຄັນໃນການພົວພັນດ້ານການຄ້າ ແລະ ການລົງທຶນຫຼາຍເປັນພິເສດເຊິ່ງລັດຖະບານທັງ 2 ຝ່າຍ ເຫັນພ້ອມທີ່ຈະໃຫ້ຜູ້ນຳຂອງຕົນລົງນາມໃນເອກະສານສຳຄັນ ໃນດ້ານເສດຖະກິດ ກໍຄືເອກະສານທີ່ຈະນຳໄປສູ່ການລົງນາມໃນການເປີດເຂດການຄ້າເສລີລະຫວ່າງອາຊຽນ ແລະ ກຸ່ມປະເທດອົດສະຕາລີ ແລະ ນິວຊີແລນໃນກອງປະຊຸມສຸດຍອດອາຊຽນທີ່ວຽງຈັນໃນປີ 2004 ນີ້.

ສຳລັບໂຄງການພາຍໃຕ້ໂຄງການການຮ່ວມມືພັດທະນາອາຊຽນ - ອົດສະຕາລີມີ ຄື:

- **ໂຄງການສຶກສາເພື່ອວາງແຜນ ນະໂຍບາຍເສດຖະກິດໃນພາກພື້ນ**

ໂຄງການນີ້ໄດ້ເລີ່ມຕົ້ນປະຕິບັດ ມາຕັ້ງແຕ່ເດືອນ ມີນາ 2003 ເຊິ່ງປະຈຸບັນມີ 8 ໂຄງການຍ່ອຍໄດ້ຮັບການອະນຸມັດໄປແລ້ວ.

- **ໂຄງການຮ່ວມມືໃນພາກພື້ນ**

ໂຄງການນີ້ໄດ້ເລີ່ມຕົ້ນປະຕິບັດມາ ໃນປີ 2004 ເຊິ່ງໄລຍະທຳອິດນັບແຕ່ເດືອນກຸມພາ 2004 ໄດ້ຮັບອະນຸຍາດປະຕິບັດໄປແລ້ວ 4 ໂຄງການຍ່ອຍ ແລະ ໄລຍະທີ່ 2 ເລີ່ມແຕ່ ເດືອນ ເມສາ 2004 ໄດ້ຮັບອະນຸຍາດ ປະຕິບັດຕື່ມອີກ 3 ໂຄງການຍ່ອຍ.

## 4.2 ການພົວພັນອາຊຽນ - ການາດາ

ເຖິງວ່າສາຍພົວພັນແບບຄູ່ເຈລະຈາ ໄດ້ດຳເນີນມາແຕ່ປີ 1977 ແຕ່ສາຍພົວພັນອາຊຽນ - ການາດາ ໄດ້ມີຂຶ້ນແບບເປັນຮູບເປັນຮ່າງໃນປີ 1981 ດ້ວຍການສ້າງຕັ້ງຄະນະກຳມະການຮ່ວມມືອາຊຽນ - ອານາດາ ເພື່ອເຮັດໃຫ້ແຜນການ ການຮ່ວມມືອາຊຽນ - ການາດາ ຖືກປະຕິບັດ ຄະນະ ກຳມະການຮ່ວມມື ຈຶ່ງໄດ້ວາງແຜນການ ແລະ ຈັດຕັ້ງປະຕິບັດໃນຫຼາຍໂຄງການ ເຊັ່ນ ໂຄງການຊ່ວຍເຫຼືອທາງດ້ານວິທະຍາສາດ - ເຕັກນິກ ໂຄງການພັດທະນາຊັບພະຍາກອນມະນຸດ, ໂຄງການຖະແຫຼງຂ່າວວັດທະນະທຳ, ໂຄງການແມ່ຍິງກັບການພັດທະນາ ແລະ ໂຄງການຂະຫຍາຍການຄ້າ ແລະ ການລົງທຶນ.

## 4.3 ການພົວພັນອາຊຽນ - ສະຫະພາບເອີຣົບ

ສະຫະພາບເອີຣົບ ໄດ້ເປັນຄູ່ເຈລະຈາຂອງອາຊຽນທີ່ເກົ່າແກ່ກວ່າໝູ່, ສາຍພົວພັນໄດ້ເລີ່ມຕົ້ນຢ່າງບໍ່ເປັນທາງການ ໃນປີ 1972 ແຕ່ໄດ້ຖືກຈັດຕັ້ງໃຫ້ເປັນຮູບເປັນຮ່າງຂຶ້ນ ໃນປີ 1980 ໂດຍສັນຍາວ່າດ້ວຍການຮ່ວມມືລະຫວ່າງອາຊຽນ ແລະ ປະຊາຄົມເອີຣົບ ໂດຍຜ່ານຄະນະກຳມະການຮ່ວມມືອາຊຽນ - ປະຊາຄົມເອີຣົບ, ສະຫະພາບເອີຣົບໄດ້ໃຫ້ການຊ່ວຍເຫຼືອແກ່ແຜນການຕ່າງໆຂອງອາຊຽນກ່ຽວກັບການພົວພັນລະດັບສະຖາບັນດ້ວຍກັນ, ສະພາບແວດລ້ອມ, ການພັດທະນາຊັບພະຍາກອນມະນຸດ, ການແລກປ່ຽນວິທະຍາສາດ - ເຕັກນິກ ແລະ ການຄວບຄຸມຢາເສບຕິດ.

ການເພີ່ມທະວີການຮ່ວມມືລະຫວ່າງອາຊຽນ - ສະຫະພາບເອີຣົບ ໄດ້ກວມເອົາມາດຕະການຕ່າງໆ ເພື່ອສົ່ງເສີມອຸດສະຫະກຳທີ່ເພີ່ມເສີມໃຫ້ກັນ ແລະ ກັນ, ເພີ່ມທະວີການເຂົ້າຮ່ວມຂອງສະຖາບັນການເງິນຂອງສະຫະພັນເອີຣົບໃນໂຄງການຕ່າງໆຂອງອາຊຽນ ແລະ ເພື່ອໃຫ້ອາຊຽນສາມາດນຳໃຊ້ເຕັກໂນໂລຊີຂອງເອີຣົບ ຫຼາຍກວ່າເກົ່າ. ກອງປະຊຸມຢ່າງເປັນປົກກະຕິ ລະຫວ່າງບັນດາລັດຖະມົນຕີການຕ່າງປະເທດອາຊຽນ ແລະ ຄູ່ຮ່ວມຕຳແໜ່ງຂອງຕົນຈາກສະຫະພາບເອີຣົບໄດ້ຖືກຈັດຂຶ້ນເພື່ອດູແລສາຍພົວພັນລະຫວ່າງອາຊຽນ - ສະຫະພັນເອີຣົບ ໃນຂົງເຂດເຫຼົ່ານັ້ນ ໃນຂົງເຂດຕ່າງໆນັ້ນ.

## 4.4 ການພົວພັນອາຊຽນ - ນິວຊີແລນ

ການເຄື່ອນໄຫວຮ່ວມມືລະຫວ່າງອາຊຽນ - ນິວຊີແລນ ໄດ້ເລີ່ມມາແຕ່ປີ 1975 ແຕ່ນັ້ນມາ ນິວຊີແລນ ໄດ້ໃຫ້ການສະໜັບສະໜູນໂຄງການຕ່າງໆ ກ່ຽວກັບການພົວພັນຕິດຕໍ່ລະຫວ່າງ ສະຖາບັນສຶກສາຄົ້ນຄ້ວາພະລັງງານວິທະຍາສາດ ແລະ ເຕັກໂນໂລຊີ ການສືບຫາຢາເສບຕິດ ແລະ ການພັດທະນາສັງຄົມ ໂຄງການພັດທະນາທີ່ສຳ ຄັນ 2 ໂຄງການ ພາຍໃຕ້ການຮ່ວມມືອາຊຽນ - ນິວຊີແລນ ໄດ້ແກ່ໂຄງການພົວພັນຕິດຕໍ່ລະຫວ່າງສະຖາບັນສຶກສາຄົ້ນຄ້ວາ ແລະ ໂຄງການສົ່ງເສີມການຄ້າ ແລະ ການລົງທຶນ. ການເພີ່ມທະວີຄວາມສຳຄັນຂອງການຮ່ວມມືດ້ານວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ຮັບການເອົາໃຈໃສ່ດ້ວຍການປະກອບສ່ວນ ຂອງນິວຊີແລນເຂົ້າໃນກອງທຶນວິທະຍາສາດຂອງອາຊຽນ.

## 4.5 ການພົວພັນອາຊຽນ - ສະຫະລັດອາເມຣິກາ

ການພົວພັນອາຊຽນ - ອາເມຣິກາໄດ້ເລີ່ມຕົ້ນເປັນຮູບປະທຳ ແຕ່ປີ ຄ.ສ 1977 ການ ເຈລະຈາລະຫວ່າງອາຊຽນ - ສະຫະລັດອາເມຣິກາໄດ້ສົ່ງເສີມການເຂົ້າຮ່ວມ ຢ່າງຫ້າວຫັນຂອງ ພາກເອກະຊົນໃນການຊຸກຍູ້ການຮ່ວມມືໂດຍຜ່ານໂຄງການເປີດໂອກາດສຳລັບການລົງທຶນ ແລະ ການຄ້າຂອງພາກເອກະຊົນ ແລະ ຂອງອາຊຽນ.

ການຮ່ວມມືເພື່ອການພັດທະນາ, ການຮ່ວມມືດ້ານການຄ້າ ແລະ ການລົງທຶນ ໄດ້ຮັບການເສີມຂະຫຍາຍ ຢ່າງແຂງແຮງ, ສະຫະລັດອາເມຣິກາ ຍັງໄດ້ໃຫ້ການຊ່ວຍເຫຼືອດ້ານການຖ່າຍທອດເຕັກໂນໂລຊີ, ການພັດທະນາດ້ານຊັບພະຍາກອນມະນຸດ, ສະພາບແວດລ້ອມ, ວິທະຍາສາດ ແລະ ເຕັກໂນໂລຊີ ແລະ ການຄວບຄຸມຢາເສບຕິດ.

ກອງປະຊຸມເຈລະຈາຍັງປຽບສະເໝືອນກັບສະພາປຶກສາຫາລືໜຶ່ງ ເພື່ອແລກປ່ຽນຄຳຄິດຄຳເຫັນກັນ ກ່ຽວກັບບັນຫາການ ເມືອງສາກົນ ແລະ ພາກພື້ນ ແລະ ບັນຫາຄວາມໝັ້ນຄົງ.

## 4.6 ການພົວພັນອາຊຽນ - ອິນເດຍ

ການປຶກສາຫາລືຕາມຂະແໜງການລະຫວ່າງອາຊຽນ ແລະ ອິນເດຍ ໄດ້ຖືກຈັດຕັ້ງຂຶ້ນໃນເດືອນມີນາ 1993 ໃນ 3 ຂົງເຂດ ຄື ການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ. ໃນປີ 1994 ຄະນະກຳມະການຮ່ວມອາຊຽນ - ອິນເດຍ ເພື່ອການຮ່ວມມືຕາມຂະແໜງການໄດ້ເອົາວິທະຍາສາດ ແລະ ເຕັກໂນໂລ

ຊີ ເຂົ້າເປັນຂົງເຂດໃໝ່ສຳລັບການຮ່ວມມື. ແຜນການ ແລະ ໂຄງການຂົງເຂດຕ່າງໆຈະໄດ້ຮັບຜັນຂະຫຍາຍ ພາຍໃຕ້ແຜນການຂອງໂຄງການຮ່ວມມືດ້ານເຕັກນິກ ແລະ ເສດຖະກິດຂອງອິນເດຍກໍໄດ້ຖືກສ້າງຕັ້ງຂຶ້ນ ເພື່ອສະໜອງການເງິນໃຫ້ແກ່ການປະຕິບັດ ແຜນດັ່ງກ່າວ ໃນປີ 1996 ອິນເດຍໄດ້ກາຍເປັນປະເທດຄູ່ ເຈລະຈາສົມບູນປະເທດໜຶ່ງຂອງອາຊຽນ.

**ຄຳຖາມ :**

1. ການຮ່ວມມືກັບສາກົນຂອງບັນດາປະເທດອາຊີອາຄະເນມີການພົວພັນດ້ານໃດແດ່ ແລະ ພົວພັນແນວໃດ?
2. ການພົວພັນແບບຄູ່ເຈລະຈາສາກົນມີປະເທດໃດແດ່ ແລະ ແຕ່ລະປະເທດມີການພົວພັນຊ່ວຍເຫຼືອອາຊຽນ ແນວໃດ?

# ບົດທີ 11

## ການພັດທະນາ ກັບ ວັດທະນະທຳປະເພນີ

## 1 ວິທະຍາສາດ ແລະ ເຕັກໂນໂລຊີ

ໃນສະຕະວັດທີ 20 ມະນຸດເຮົາໄດ້ສ້າງພື້ນຖານດ້ານເຕັກໂນໂລຊີໃໝ່ໆຂຶ້ນຫຼາຍຢ່າງ ເຊິ່ງໄດ້ຊ່ວຍໃຫ້ມະນຸດ ຂ້າມເຂດແດນສີວິໄລຂອງສັງຄົມອຸດສາຫະກຳ ໄປສູ່ເຂດແດນແຫ່ງຄວາມສີວິໄລຂອງສັງຄົມຂ່າວສານ ເຊິ່ງມີຄວາມຮູ້ ແລະ ສະຕິປັນຍາເປັນພື້ນຖານ

ກ້າວເຂົ້າສູ່ສະຕະວັດທີ 21 ວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝຈະສືບຕໍ່ພັດທະນາ ແລະ ຫັນປ່ຽນດ້ວຍຄວາມໄວສູງ

ສະນັ້ນ, ພັກລັດເຮົາຈຶ່ງໄດ້ໃຫ້ທັດສະນະຊີ້ນຳຈະແຈ້ງວ່າ ຕັ້ງໜ້າຄົ້ນຄ້ວາວິໄຈ ແລະ ນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດເຕັກໂນໂລຊີ ເຂົ້າໃນການພັດທະນາປະເທດຊາດ ຢ່າງປະດິດສ້າງ ແລະ ມີໝາກຜົນ. ເພື່ອບັນລຸຈຸດມຸ້ງໝາຍດັ່ງກ່າວ ໃນຊຸມປີຕໍ່ໜ້ານີ້ຕ້ອງປະຕິບັດວຽກງານທີ່ສຳຄັນຄື :

- ເຊີດຊູຄວາມເປັນເຈົ້າການໃນການຄົ້ນຄ້ວາວິໄຈ ທາງດ້ານວິທະຍາສາດດ້ວຍຕົນເອງ, ປະດິດສ້າງໃນການນຳໃຊ້ຜົນສຳເລັດແຫ່ງຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີໃໝ່ເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງປະເທດ ແລະ ປັບປຸງຄຸນນະພາບຊີວິດຂອງປະຊາຊົນປະສົມປະສານລະຫວ່າງເຕັກໂນໂລຊີທີ່ເປັນມູນເຊື້ອຂອງຊາດກັບອັນທັນສະໄໝ.
- ປັບປຸງການເຄື່ອນໄຫວດ້ານການຄົ້ນຄ້ວາວິທະຍາສາດໃນທຸກລະດັບ
- ລົງທຶນໃສ່ການສົ່ງເສີມວຽກງານຄົ້ນຄ້ວາວິໄຈຂອງມະຫາວິທະຍາໄລ ແລະ ສະຖາບັນຄົ້ນຄ້ວາຕ່າງໆໂດຍສຸມໃສ່ຫົວຂໍ້ບັນຫາທີ່ສອດຄ່ອງກັບຄວາມຕ້ອງການຂອງການພັດທະນາປະເທດໃນໄລຍະໃໝ່.
- ສົ່ງເສີມ ແລະ ຊຸກຍູ້ວຽກງານຄົ້ນຄ້ວາວິໄຈຂອງບຸກຄົນ, ຂອງຫົວໜ່ວຍການຜະລິດ, ທຸລະກິດ ແລະຫົວໜ່ວຍວິຊາການຕ່າງໆ
- ເພີ່ມຄວາມເອົາໃຈໃສ່ຕໍ່ການບຳລຸງສ້າງນັກຄົ້ນຄ້ວາ, ນັກວິທະຍາສາດ ແລະ ປົກປ້ອງຊັບສິນທາງປັນຍາ

## 2 ການພັດທະນາສັງຄົມ

ການພັດທະນາສັງຄົມຈະຕ້ອງໄປພ້ອມໆກັນຫຼາຍດ້ານ ເຊັ່ນ ການສຶກສາ ແລະ ວິທະຍາສາດ, ສາທາລະນະສຸກ ແລະ ກິລາກາຍະກຳ ໂຄສະນາຖະແຫຼງຂ່າວ ແລະ ວັດທະນະທາ, ການຄຸ້ມຄອງແຮງງານ ແລະ ສະຫັວດດີການສັງຄົມ.

ການພັດທະນາເສດຖະກິດ ເປັນພື້ນຖານໃຫ້ແກ່ການພັດທະນາສັງຄົມ - ວັດທະນະທຳ ເສດຖະກິດຂະຫຍາຍຕົວ ແລະ ມີປະສິດທິຜົນສູງເທົ່າໃດຍິ່ງເພີ່ມຄວາມສາມາດໃນການພັດທະນາສັງຄົມ, ວັດທະນະທຳໃຫ້ສູງຂຶ້ນເທົ່ານັ້ນ. ໃນຂະນະດຽວກັນນັ້ນຖ້າສັງຄົມໄດ້ຮັບການພັດທະນາຄົນໃຫ້ໄດ້ຮັບການສຶກສາດີ, ມີສຸຂະພາບ ແລະ ພະລານາໄມດີ, ມີວິຊາອາຊີບ ແລະ ມີສີມື, ມີຄູນສົມບັດສິນທຳດີ...ສ້າງເງື່ອນໄຂ ແລະ ຄວາມອາດສາມາດໃຫ້ການພັດທະນາເສດຖະກິດຂະຫຍາຍຕົວໄວ ແລະ ມີປະສິດທິຜົນສູງຂຶ້ນ.

### 2.1 ພັດທະນາລະບົບການສຶກສາແຫ່ງຊາດໃຫ້ມີຄຸນນະພາບ ແລະ ມີການຫັນປ່ຽນອັນຕັ້ງໜ້າສູ່ຄວາມທັນສະໄໝ

- ໃນຍຸກປັດຈຸບັນ ການສຶກສາວິທະຍາສາດ ແລະ ເຕັກໂນໂລຊີໄດ້ກາຍເປັນປັດໄຈຕັດສິນການພັດທະນາ ສະນັ້ນ, ການສຶກສາຈຶ່ງມີບົດບາດສຳຄັນ, ການສຶກສາມີຄຸນນະພາບຈະຊ່ວຍພັດທະນາຄົນໃຫ້ມີຄຸນນະພາບບ, ຄົນທີ່ມີຄຸນນະພາບຈຶ່ງສາມາດພັດທະນາເສດຖະກິດ - ສັງຄົມຂອງປະເທດໃຫ້ມີບາດກ້າວຂະຫຍາຍຕົວດ້ວຍ ຈັງຫວະໄວຂຶ້ນ ແລະ ປະເທດເຮົາຈະກ້າວໄປທັນກັບກະແສລວມຂອງການພັດທະນາໃນໂລກ.

- ການສຶກສາ ແລະ ກໍ່ສ້າງຄົນຕ້ອງເອົາໃຈໃສ່ທັງສອງດ້ານໄປພ້ອມໆກັນ ຄື

- **ດ້ານທີ 1**

ເອົາໃຈໃສ່ດ້ານການເມືອງແນວຄິດ ແລະ ອຸດົມຄະຕິສັງຄົມນິຍົມ, ສ້າງສະຕິເຄົາລົບກົດໝາຍ ແລະ ລະບຽບວິໄນ.

- **ດ້ານທີ 2**

ສ້າງຄົນໃຫ້ເກັ່ງທາງດ້ານວິຊາສະເພາະ, ວິຊາການໃຫ້ທຽບທັນກັບນາໆຊາດເປັນກ້າວໆ ການສຶກສາກໍ່ສ້າງຄົນຢູ່ປະເທດເຮົາແມ່ນເນັ້ນທາງດ້ານຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ, ກາຍະສຶກສາ ແລະ ແຮງງານສຶກສາສົມທົບການສຶກສາໃນໂຮງຮຽນກັບການສຶກສາໃນຄອບຄົວ ແລະ ສັງຄົມ.

ເພື່ອປັບປຸງການສຶກສາໃຫ້ມີຄຸນນະພາບດີຂຶ້ນໃນແນວທາງຂອງພັກໄດ້ກຳນົດໄວ້ວ່າ:

- ປັບປຸງຫຼັກສູດການສອນ - ການຮຽນ
- ເຊີດຊູບົດບາດ ແລະ ປະຕິບັດນະໂຍບາຍຕໍ່ຄູອາຈານຢ່າງເໝາະສົມ ຕິດພັນກັບການຍົກສູງຄວາມຮັບຜິດຊອບໃນການເຮັດໜ້າທີ່ວຽກງານຂອງຄູ
- ປັບປຸງວຽກງານຫໍສະໝຸດ, ການສະໜອງຂໍ້ມູນຂ່າວສານ, ສະໜອງປຶ້ມຫຼັກສູດການຮຽນ - ການສອນ.
- ຄົ້ນຄ້ວາ ແລະ ນຳໃຊ້ບົດຮຽນການ - ສອນການຮຽນທີ່ກ້າວໜ້າ
- ລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງຂອງການສຶກສາ ເຊັ່ນ ສູນຝຶກງານ, ຫ້ອງທົດລອງ, ອຸປະກອນເຕັກນິກ ຕຶກອາຄານສະຖານທີ່ອັນຈຳເປັນ
- ອອກແຮງຂະຫຍາຍການສຶກສາຂັ້ນພື້ນຖານຢ່າງກ້ວາງຂວາງໂດຍສະເພາະປະຕິບັດການສຶກສາຂັ້ນປະຖົມແບບບັງຄັບ, ດຳເນີນການລົບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບການສຶກສາຂອງປະຊາຊົນຕິດພັນກັບການອົບຮົມວິຊາຊີບຂັ້ນພື້ນຖານ.
- ສ້າງໂອກາດ ແລະ ເງື່ອນໄຂໃຫ້ລູກຫຼານຂອງພະນັກງານ ແລະ ປະຊາຊົນທີ່ທຸກຍາກຂາດເຂີນ, ເພດຍິງ, ຊົນເຜົ່າໄດ້ເຂົ້າໂຮງຮຽນຫຼາຍຂຶ້ນໃນທຸກໆຊັ້ນຮຽນ
- ເອົາໃຈໃສ່ກໍ່ສ້າງພະນັກງານວິຊາການຊັ້ນກາງ ແລະ ຊັ້ນຕົ້ນ ສຳເຣັດວຽກຢູ່ຂັ້ນເມືອງ ແລະ ບ້ານ
- ຂະຫຍາຍຕາໜ່າງໂຮງຮຽນວິຊາຊີບໃນຫຼາຍຂະແໜງ, ຫຼາຍລະດັບ ເພື່ອຕອບສະໜອງກຳລັງແຮງງານ ແລະ ນັກວິຊາການພັດທະນາເສດຖະກິດສັງຄົມ
- ສືບຕໍ່ປະຕິບັດນະໂຍບາຍສົ່ງເສີມໃຫ້ທົ່ວສັງຄົມເຂົ້າຮ່ວມໃນວຽກງານການສຶກສານັບມື້ນັບກ້ວາງຂວາງຕື່ມອີກ
- ສ້າງເງື່ອນໄຂ ແລະ ຊຸກຍູ້ໃຫ້ພາກສ່ວນເອກະຊົນ, ພໍ່ແມ່ນັກຮຽນ ແລະ ທຸກຄົນມີສ່ວນຮ່ວມໃນການພັດທະນາສຶກສານັບມື້ນັບຫຼາຍກ່ວາເກົ່າ
- ຂະຫຍາຍໂຮງຮຽນພາກເອກະຊົນ ແລະ ຖືໂຮງຮຽນດັ່ງກ່າວເປັນສ່ວນໜຶ່ງທີ່ສຳຄັນຂອງລະບົບການສຶກສາແຫ່ງຊາດ.

## 2.2 ການພັດທະນາຂະແໜງສາທາລະນະສຸກ

ໃນເມື່ອກ່ອນປະຊາຊົນລາວເຮົາມີການນັບຖືຜີ, ເທວະດາຟ້າແຖນ ຫຼື ສິ່ງສັກສິດຕ່າງໆທີ່ຢູ່ຕາມປ່າເຂົາລຳເນົາໄພ, ແມ່ຍິງໃນຂົງເຂດຊົນນະບົດ ຍັງນັບຖືຮີດຄອງປະເພນີອັນເກົ່າແກ່ ເຊັ່ນ ເວລາເກີດລູກຕ້ອງໄປເກີດຢູ່ປ່າ. ດັ່ງນັ້ນ, ຈຶ່ງເປັນການຮັບປະກັນຊີວິດຂອງແມ່ ແລະ ລູກ ເມື່ອມີການເຈັບໄຂ້ໄດ້ພະຍາດຕ່າງໆກໍມີການເຢົາ ຫຼື ເປົ່ານ້ຳມົນຕ່າງໆ

ແຕ່ມາເຖິງປັດຈຸບັນນີ້ ວຽກງານສາທາລະນະສຸກໄດ້ມີບົດບາດສຳຄັນໃນການພັດທະນາຊັບພະຍາກອນມະນຸດ, ແນໃສ່ໃຫ້ຄົນໃນຊາດ, ມີການສຶກສາສູງ, ມີສຸຂະພາບສົມບູນດີ, ເຮັດໃຫ້ອາຍຸຍືນສະເລ່ຍພົນລະເມືອງສູງຂຶ້ນ. ປີ 2005 ອາຍຸຍືນສະເລ່ຍ ຜູ້ຍິງ 63 ປີ, ຜູ້ຊາຍ 61 ປີ, ເພື່ອເປັນກຳລັງແຮງໃນການສ້າງສາປະເທດຊາດຊາດ. ດັ່ງນັ້ນ, ເມື່ອບັນລຸຈຸດໝາຍດັ່ງກ່າວຕ້ອງເອົາໃຈໃສ່ຕໍ່ການພັດທະນາຂະແໜງສາທາລະນະສຸກ ຄື:

- ເອົາໃຈໃສ່ສຶກສາອົບຮົມໃຫ້ປະຊາຊົນ ຮູ້ຈັກຮັກສາສຸຂະພາບ ໂດຍເອົາການປ້ອງກັນພະຍາດເປັນອັນຕົ້ນຕໍ ສົມທົບການປິ່ນປົວດ້ວຍຢາຫຼວງກັບຢາພື້ນເມືອງ
- ຂະຫຍາຍວຽກງານສາທາລະນະສຸກຂັ້ນພື້ນຖານໄປສູ່ຮາກຖານປະຊາຊົນໃຫ້ທົ່ວເຖິງປຸກລະດົມຂະບວນການອະນາໄມ, ສະອາດຢ່າງຕັ້ງໜ້າ, ຄວບຄຸມພະຍາດທີ່ເປັນອັນຕະລາຍທີ່ລະບາດຕາມລະດູການ ແລະ ພື້ນທີ່ຕ່າງໆໃຫ້ໄດ້ ສືບຕໍ່ເປີດກ້ວາງໂຄງການສຸຂະພາບຈະເລີນພັນແມ່ ແລະ ເດັກ, ວຽກງານໂພຊະນາການໃຫ້ກ້ວາງຂວາງ.
- ສ້າງ ແລະ ປັບປຸງການເຄື່ອນໄຫວຂອງຄັງປະກັນສຸຂະພາບໃຫ້ສາມາດຮັບປະກັນການປະຕິບັດນະໂຍບາຍປິ່ນປົວໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ.
- ປະຕິບັດນະໂຍບາຍບໍລິການສາທາລະນະສຸກແບບບໍ່ມີເສຍຄ່າສຳລັບຜູ້ທຸກຍາກຂາດເຂີນ ເດັກກຳພ້າອະນາຖາ
- ຍົກລະດັບຄວາມທັນສະໄໝ ແລະ ຄຸນນະພາບດ້ານການບໍລິການຂອງໂຮງໝໍໃນຕົວເມືອງໃຫ້ຍຂຶ້ນຕື່ມ, ເພີ່ມຄວາມເອົາໃຈໃສ່ຕໍ່ການສ້າງ ແລະ ບຳລຸງຍົກລະດັບແພດໝໍໃຫ້ທຽມທັນກັບຄວາມກ້າວໜ້າຂອງວິທະຍາສາດດ້ານສາທາລະນະສຸກ ຍົກລະດັບຈັນຍາບັນຂອງແພດໃຫ້ສູງຂຶ້ນ.
- ເພີ່ມທະວີການຄຸ້ມຄອງອາຫານ ແລະ ຢາ ສະຖານທີ່ບໍລິການຕ່າງ ເພື່ອຮັບປະກັນສຸຂະພາບ ປຸກລະດົມການປະກອບສ່ວນຂອງສັງຄົມ, ຍາດແຍ່ງການຊ່ວຍເຫຼືອຈາກຕ່າງປະເທດ ເຂົ້າໃນການພັດທະນາ ຂະແໜງສາທາລະນະສຸກຢ່າງຕັ້ງໜ້າກ່ວເກົ່າ.
- ເອົາໃຈໃສ່ຊຸກຍູ້ສົ່ງເສີມຂະບວນການກິລາກາຍະກຳ ຂອງມະຫາຊົນດ້ວຍການຈັດກິດຈະກຳ ແລະ ເທດສະການແຂ່ງຂັນກິລາປະເພດຕ່າງໆຢ່າງເປັນປະຈຳ ສູ້ຊົນເຮັດໃຫ້ແຕ່ລະໂຮງຮຽນ ແລະ ຊຸມຊົນມີບ່ອນຫຼິ້ນກິລາ
- ສົ່ງເສີມບາງປະເພດກິລາ ໃຫ້ເປັນວິຊາຊີບ ແລະ ຍົກລະດັບຄວາມສາມາດຂອງນັກກິລາໃຫ້ສູງຂຶ້ນສາມາດເຂົ້າຮ່ວມຢ່າງສົມກຽດໃນການແຂ່ງຂັນລະດັບນາໆຊາດ
- ໂຄສະນາປຸກລະດົມຂະບວນການຕ້ານຢາເສບຕິດ ການອະນາໄມສິ່ງແວດລ້ອມ, ບູລະນະ ແລະ ຂະຫຍາຍສວນສາທາລະນະ, ສະຖານທີ່ພັກຜ່ອນຂອງປະຊາຊົນ.

# 3 ວັດທະນະທຳ ແລະ ຂ່າວສານ

ຊາດລາວເຮົາ ແມ່ນຊາດມີອະລິຍະທຳ ມີວັດທະນະທຳອັນດີງາມມາຕັ້ງແຕ່ດົນນານ, ຊາດລາວເຮົາປະກອບດ້ວຍຫຼາຍຊົນເຜົ່າ, ແຕ່ລະຊົນເຜົ່າລ້ວນແຕ່ມີຂະນົບທຳນຽມ, ປະເພນີ ແລະ ມູນເຊື້ອວັດທະນະທຳທີ່ເປັນເອກະລັກຂອງຕົນ ເຊິ່ງໂຮມເຂົ້າເປັນວັດທະນະທຳຂອງວົງຄະນະແຫ່ງຊາດ ອັນແມ່ນມູນມໍລະດົກອັນລ້ຳຄ່າ ເປັນພື້ນຖານດ້ານຈິດໃຈຂອງສັງຄົມ ແລະ ເປັນປັດໃຈສຳຄັນຄ້ຳປະກັນການຍືນຍົງຄົງຕົວຂອງຊາດລາວ

ເຮົາ ຊາວລາວບໍ່ວ່າເວລາໃດກໍເອກອ້າງທະນົງໃຈ ແລະ ຫວງແຫນວັດທະນະທຳປະຈຳຊາດຂອງຕົນ ປົກປັກຮັກສາ ແລະ ເສີມຂະຫຍາຍໃຫ້ຄົງຢູ່ຄູ່ຊາດລາວມາຈົນເຖິງທຸກວັນນີ້.

- **ທິດນຳກ່ຽວກັບການພັດທະນາວັດທະນະທຳ**

 ແມ່ນ "ທັງປົກປັກຮັກສາ, ທັງສ້າງ ແລະ ເສີມຂະຫຍາຍມູນມໍລະດົກ ແລະ ຄຸນຄ່າຂອງວັດທະນະທຳແຫ່ງຊາດ ທັງສະກັດກັ້ນກະແສວັດທະນະທຳທີ່ສ້າງຄວາມເຊື່ອມເສຍໃຫ້ວັດທະນະທຳອັນດີງາມຂອງຊາດລາວເຮົາ"

- **ຈຸດໝາຍຂອງການພັດທະນາວັດທະນະທຳ ແລະ ສ້າງຄວາມສີວິໄລທາງດ້ານຈິດໃຈ**

- ແມ່ນການເຮັດໃຫ້ຄົນໃນສັງຄົມມີໂລກະທັດ ມີຄ່ານິຍົມທີ່ຖືກຕ້ອງ ແລະ ມີຊີວິດອັນສົດໃສ

- ກໍ່ສ້າງ ແລະ ເສີມຂະຫຍາຍວັດທະນະທຳທີ່ມີລັກສະນະຊາດ ລັກສະນະປະຊາຊົນ ແລະ ກ້າວໜ້າ

- ຕ້ອງສືບຕໍ່ຄົ້ນຄ້ວາຄຸນຄ່າທີ່ດີໃນວັດທະນະທຳຂອງເຜົ່າຕ່າງໆ ແລະ ສິ່ງທີ່ປະກອບເປັນວັດທະນະທຳລວມຂອງວົງຄະນະແຫ່ງຊາດ ສົ່ງເສີມການຄົ້ນຄ້ວາ ການເຜີຍແຜ່ ແລະ ການກໍ່ສ້າງຄຸນຄ່າທີ່ດີງາມຂອງວັດທະນະທຳແຫ່ງຊາດ ສົ່ງເສີມມະຫາຊົນເຂົ້າຮ່ວມໃນພາລະກິດວັດທະນະທຳຢ່າງກ້ວາງຂວາງ ປະກອບສ່ວນສ້າງອະລິຍະທຳລວມຂອງມະນຸດ

- ເປີດກ້ວາງການແລກປ່ຽນທາງດ້ານວັດທະນະທຳກັບນາໆຊາດ ດ້ວຍຫຼາຍຮູບການຫຼາຍລະດັບເຜີຍແຜ່ຜົນສຳເລັດການກໍ່ສ້າງວັດທະນະທຳໃນລະບອບໃໝ່ ໃຫ້ຊາວໂລກຮັບຮູ້

- ເລືອກເຟັ້ນ ແລະ ຮັບເອົາວັດທະນະທຳຂອງປະເທດຕ່າງໆ ສະກັດກັ້ນແນວຄິດວັດທະນະທຳ ແລະຄ່ານິຍົມທີ່ເປື່ອຍເຍື່ອຍເສື່ອມໂຊມ ຄຸ້ມຄອງວັດທະນະທຳໃຫ້ແທດເໝາະກັບເງື່ອນໄຂເສດຖະກິດຕະຫຼາດ

- ປົກປັກຮັກສາ ຟື້ນຟູບູລະນະ ແລະ ນຳໃຊ້ຄຸນຄ່າຂອງມໍລະດົກວັດທະນະທຳ ແລະ ສິ່ງສວຍງາມຂອງທຳມະຊາດເຂົ້າໃນການພັດທະນາເສດຖະກິດ - ສັງຄົມ ນັບທັງອັນທີ່ຖືກຮັບຮອງເຂົ້າໃນບັນຊີມໍລະດົກວັດທະນະທຳຂອງໂລກ.

- ສົ່ງເສີມການປະດິດສ້າງທາງດ້ານສິລະປະວັດທະນະທຳ, ການປະດິດຄິດແຕ່ງ, ການອ່ານ, ການຂຽນ, ການພິມຈຳໜ່າຍປຶ້ມ ແລະ ສິ່ງພິມຕ່າງໆ ເພື່ອພັດທະນາຄວາມຮູ້ໃນສັງຄົມ.

- ເພີ່ມທະວີວຽກງານສື່ມວນຊົນ ຂະຫຍາຍພື້ນຖານວັດຖຸ ເຕັກນິກໃຫ້ມີອັນທັນສະໄໝ

- ສົ່ງເສີມບົດບາດວຽກງານຖະແຫຼງຂ່າວໂຄສະນາ ແລະ ສື່ມວນຊົນ ໃນການເຮັດໃຫ້ທົ່ວສັງຄົມມີມານາຈິດ ແລະ ອຸດົມຄະຕິລວມອັນດຽວກັນໃນການສ້າງສາພັດພັດທະນາປະເທດຊາດ.

- ຂະແໜງການຂ່າວ ແລະ ສື່ມວນຊົນຕ້ອງຢຶດໝັ້ນໃນທັດສະນະຂອງພັກ ຢຶດໝັ້ນໃນຄວາມເປັນຈິງ ແລະ ເປັນເຄື່ອງມືອັນແຫຼມຄົມທາງດ້ານການເມືອງ - ແນວຄິດ, ເປັນທັງນັກໂຄສະນາ ນັກຂົນຂວາຍມະຫາຊົນ ເປັນຈັດຕັ້ງລວມໝູ່ ແລະ ເປັນເວທີແຫ່ງການເສີມຂະຫຍາຍປະຊາທິປະໄຕຂອງມະຫາຊົນ ທັງເປັນແຫຼ່ງສະໜອງຂໍ້ມູນຂ່າວສານ.

## ຄຳຖາມ :

1. ຄາດໝາຍສູ້ຊົນໃນຕໍ່ໜ້າກ່ຽວກັບວຽກງານວິທະຍາສາດເຕັກໂນໂລຊີມີແນວໃດ ?
2. ການພັດທະນາສັງຄົມຕ້ອງພັດທະນາດ້ານໃດແດ່ ?ຈົ່ງອະທິບາຍແຕ່ລະດ້ານ ?
3. ຖ້າຢູ່ໃນໂຮງຮຽນ ພວກນັກຈະພັດທະນາທາງດ້ານວັດທະນະທຳ ແລະ ຂ່າວສານຄືແນວໃດ ?

# ບົດທີ 12

# ຊີວິດທາງສາສະໜາທີ່ສຳຄັນໃນອາຊຽນ

ສາສະໜາ ໝາຍເຖິງການຄຳສັ່ງສອນ ເຊິ່ງໄດ້ແກ່ຫຼັກທຳ ຄຳສອນ ຂໍ້ຫ້າມ ແລະ ຂໍ້ປະຕິບັດຕ່າງໆ ໂດຍທົ່ວໄປແລ້ວຄວາມເຊື່ອກ່ອນຈະເອີ້ນວ່າເປັນສາສະໜາໄດ້ກໍຕ້ອງປະກອບດ້ວຍຜູ້ກໍ່ຕັ້ງ ຫຼື ພະສາສະດາ ປັດຊະຍາ ຫຼື ແນວທາງຄຳສອນ ແລະ ຜູ້ເຜີຍແຜ່ ໃນສັງຄົມໂລກປັດຈຸບັນນີ້ ມີຫຼາຍສາສະໜາ ແຕ່ສາສະໜາ ທີ່ສຳຄັນ ແລະ ມີຄົນນັບຖືຫຼາຍກ່ວາໝູ່ໄດ້ແກ່ສາສະໜາພຸດ ຄຣິດ ອິດສະລາມ ບັນດາສາສະໜເຫຼົ່ານີ້ມີລັກ ສະນະຄ້າຍຄືກັນຄືສອນໃຫ້ຄົນປະຕິບັດໃນສິ່ງທີ່ດີເພື່ອສັງຄົມ ແຕ່ສິ່ງທີ່ແຕກຕ່າງກັນຄືພິທີກຳໃນການປະຕິ ບັດ ແລະ ຄວາມເຊື່ອ.

## 1 ສາສະໜາພຸດ

### 1.1 ຄວາມເປັນມາ

ຄຳວ່າ "ພຸດທະ" ໝາຍເຖິງຜູ້ຮູ້, ຜູ້ຕື່ນຫຼືວ່າຜູ້ສະຫວ່າງດ້ວຍເຫດນັ້ນ, ພຸດສາສະໜາຈຶ່ງເປັນຄຳ ສອນຂອງຜູ້ຮູ້ ເຊິ່ງຜ່ານການພິສູດໄດ້ແລ້ວ ບຸກຄົນທີ່ນັບຖືສາສະໜາພຸດນັ້ນເອີ້ນວ່າ ພຸດທະສາສະນິກະຊົນ ຫຼື ວ່າຊາວພຸດ ພຸດທະສາສະໜາເປັນສາສະໜາທີ່ເກົ່າແກ່ມີອາຍຸກ່ວາ 2500 ປີ ແລະ ມີຜູ້ນັບຖືເປັນຈຳນວນ ຫຼວງຫຼາຍ, ຜູ້ນັບຖືສ່ວນຫຼາຍຢູ່ໃນທະວີບອາຊີໄດ້ແກ່ ໄທ, ຈີນ, ຮົງກົງ, ໄຕ້ຫວັນ, ເກົາຫຼີ, ຍີ່ປຸ່ນ, ສີລັງກາ, ພະມ້າ, ຂະເໝນ, ລາວ, ມົງໂກເລຍ ແລະ ຍັງມີຢູ່ທົ່ວໂລກໃນປະເທດຕ່າງໆ ເຊັ່ນ ອິນເດຍ, ເນປານ, ສິງກະ ໂປ, ມາເລເຊຍ, ອິນໂດເນເຊຍ.

ພຸດທະສາສະໜາເກີດໃນປະເທດອິນເດຍ ແລະ ຮຸ່ງເຮືອງສູງສຸດໃນອາດີດ ປັດຈຸບັນຊາວພຸດໃນ ອິນເດຍມີນ້ອຍເພາະສາສະໜາພຸດໄດ້ເສື່ອມໄປຈາກສັງຄົມອິນເດຍ ດ້ວຍເຫດຈາກການປ່ຽນແປງທາງດ້ານ ການເມືອງ ການປົກຄອງ ແລະ ການເຜີຍແຜ່ຂອງສາສະໜາອື່ນ ໃນສະໄໝຕໍ່ມາປະກອບກັບການແຕກຕ່າງ ແລະ ຂາດຄວາມໝັ້ນຄົງພາຍໃນຂອງຄະນະສົງ ເຖິງວ່າສາສະໜາພຸດໄດ້ເສື່ອມຈາກດິນແດນທີ່ກຳເນີດແລ້ວ ກໍຕາມ ແຕ່ສາສະໜາພຸດຍັງໄດ້ໄປຈະເລີນຮຸ່ງເຮືອງໃນດິນແດນຕ່າງໆ ທີ່ສາສະໜາພຸດເຂົ້າສາສະໜາໄວ້ກ່ອນ ແລ້ວ.

ສາສະໜາພຸດ ເປັນສາສະໜາເທວະນິຍົມຄືບໍ່ນັບຖືບູຊາເທບພະເຈົ້າເປັນສິ່ງສູງສຸດ, ເປັນສາສະໜາ ແຫ່ງການຄິດຫາເຫດຜົນ ມີເຫດປັດໃຈປຸ່ງແຕ່ງແລ້ວຈຶ່ງເກີດຜົນ.

ການນັບຖືສາສະໜາພຸດ ບໍ່ມີການທຳພິທີເຂົ້າເປັນສະມາຊິກແຕ່ຢ່າງໃດ ພຽງແຕ່ຍອມຮັບນັບຖື ສືບຕໍ່ກັນມາຈາກບັນພະບຸລຸດບິດາມານດາ ແລະ ປະພຶດຕາມຫຼັກທຳຄຳສັ່ງສອນຂອງສາສະໜາ. ຊາວພຸດ ສ່ວນຫຼາຍຈະທຳບຸນຕັກບາດຟັງທຳເປັນຄັ້ງຄາວແລ້ວແຕ່ຄວາມພ້ອມ ແລະ ເກີດສັດທາຄິດຢາກບຳເພັນກຸສົນ ເນື່ອງໃນໂອກາດສຳຄັນ ເຊັ່ນ ວັນເກີດ, ວັນແຕ່ງດອງ, ການຂຶ້ນເຮືອນໃໝ່, ເປີດອາຄານຮ້ານຄ້າ ແລະ ວັນ ສຳຄັນທາງສາສະໜາ.

### 1.2 ພະສາສະດາ, ຄຳພີ ແລະ ຫຼັກຄຳສອນ

#### ກ. ພະສາສະດາ

ພະສາສະດາຂອງສາສະໜາພຸດ ຄື ພະສຳມາສຳພຸດທະເຈົ້າ ມີພະນາມເດີມວ່າ ສິດທັດຖະ ເປັນໂອລົດຂອງພະເຈົ້າສຸດໂທທະນະ ແລະ ນາງ ສິລິມະຫາມາຍາ ແຫ່ງເມືອງກະບິນລະພັດ ປະເທດອິນເດຍ.

#### ຂ. ຄຳພີສາສະໜາພຸດ

ຄຳພີໃນພຸດທະສາສະໜາ ເອີ້ນວ່າ "ຄຳພີພະໄຕປິດົກ" ປະກອບມີ 3 ໝວດທີ່ຮວບຮວມບັນທຶກເອົາຫຼັກທຳຄຳສອນຂອງພະພຸດທະເຈົ້າ ແລະ ວິໄນຕ່າງໆຂອງພະພຸດທະສາສະໜາ ຄຳພີພະປິດົກປະກອບມີ 3 ໝວດ ຄື

- **ວິໄນປິດົກ** : ເປັນຄຳພີວ່າດ້ວຍວິໄນ, ສິນສຳລັບໃຫ້ພິກຂຸ, ສາມະເນນປະຕິບັດ ແລະ ຫຼັກການໃນການປະກອບພິທີກະທຳທາງສາສະໜາ.
- **ພະສຸຕັນປິດົກ** : ເປັນຄຳພີພະສູດວ່າດ້ວຍຫຼັກທຳຄຳສອນຂອງພຸດສາສະໜາ ໂດຍສະເພາະແມ່ນສັດຈະທຳ.
- **ພະອະພິທຳປິດົກ** : ເປັນຄຳພີກ່າວເຖິງທຳມະລະດັບສູງ.

**ຄ. ຫຼັກຄຳສອນ**

ຫຼັກຄຳສອນຂອງພະພຸດທະເຈົ້າແບ່ງອອກເປັນສອງລະດັບ ຄື ສິນທຳ ແລະ ລະດັບປະຣະມັດທຳ ໂດຍທົ່ວໄປແລ້ວຫຼັກທຳຄຳສອນຂອງສາສະໜາພຸດແມ່ນ (ສິ່ງໃດກໍຕາມທີ່ເກີດຂຶ້ນ ແລະ ມີຢູ່ຕາມທຳມະຊາດຕ້ອງຕົກຢູ່ພາຍໃຕ້ກົດ 3 ປະການ ຄື ອະນິດຈັງ ທຸກຂັງ ແລະ ອະນັດຕາ ອະນິຈັງ) ໝາຍເຖິງຄວາມບໍ່ທ່ຽງ ທຸກສິ່ງທຸກຢ່າງໃນໂລກນີ້ບໍ່ຄົງທີ່ມັນມີການປ່ຽນແປງ ທຸກຂັງ ຫຼື ທຸກຂະຕາ ຄືໂລກເຮົານີ້ມີພື້ນເປັນຄວາມທຸກ, ຄວາມສຸກມີຊົ່ວຄາວ, ອະນັດຕາ ຄື ຄວາມບໍ່ມີຕົນຕົວໝາຍເຖິງສັບພະສິ່ງໃນໂລກນີ້ບໍ່ແມ່ນຂອງເຮົາ

ສັງລວມແລ້ວ ຄຳສອນຂອງພຸດທະສາສະໜາ ແມ່ນຢຶດໝັ້ນປັດຊະຍາທີ່ວ່າ ໂລກເປັນສິ່ງທີ່ມີຢູ່ຕາມທຳມະຊາດ. ເກີດຂຶ້ນເປັນໄປຕາມອຳນາດ ແລະ ເຫດປັດໄຈໃນທຳມະຊາດ. ບໍ່ໄດ້ເກີດຂຶ້ນຈາກການສ້າງສັນ ຫຼື ການດົນບັນດານຂອງເທບພະເຈົ້າແຕ່ຢ່າງໃດ. ອຸດົມຄະຕິຂອງມະນຸດຕາມຫຼັກທຳຄຳສອນຂອງພຸດທະສາສະໜາ "ຄວາມສຸກ" ຄວາມສຸກຂອງມະນຸດນັ້ນ ຄືການຫຼຸດພົ້ນຈາກຄວາມທຸກ, ຄວາມທຸກ ຫຼື ຄວາມສຸກນັ້ນ ແມ່ນເກີດມາຈາກ " ກຳ "ຄືການກະທຳ ການກະທຳຂອງມະນຸດເກີດຈາກ 3 ທາງ ຄື ທາງກາຍ, ວາຈາ ແລະ ຈິດໃຈ.

ດ້ວຍເຫດນັ້ນ, ພຸດທະສາສະນິກະຊົນຈຶ່ງມີການນັບຖືໃນຄຳສັ່ງສອນອັນເປັນຫຼັກຄຳພີຂອງພຸດທະສາສະໜາໃນຖານະເປັນຄູຜູ້ປະເສີດທີ່ຈິງໃນຫຼັກແຫ່ງຄວາມຈິງ 4 ຢ່າງເອີ້ນວ່າ "ອະລິຍະສັດສີ່" ຫຼື "ອະລິຍະສັດຈະທຳທັງສີ່" ເຊິ່ງເປັນກົດຂອງທຳມະຊາດແທ້ ຄື:

- ທຸກຂະ ຄວາມເປັນທຸກ
- ສະມຸໄທ ເຫດພາໃຫ້ທຸກ
- ນິໂຣດ ການດັບທຸກ ຫຼື ດັບກິເລດຕັນຫາ
- ມັກຄະ ແນວທາງປະຕິບັດເພື່ອໃຫ້ພົ້ນທຸກ

## 1.3 ນິກາຍພຸດທະສາສະໜາ

**ກ. ເຖຣະວາດ**

ນິກາຍເຖຣະວາດເປັນນິກາຍທີ່ຢຶດຖື ຕົນເດີມຂອງຄຳສັ່ງສອນດັ້ງເດີມຂອງພະພຸດທະເຈົ້າ ໂດຍບໍ່ມີການດັດແປງແຕ່ຢ່າງໃດ ຄື ຖືຕາມແນວທາງອັນທີ່ເຄີຍປະຕິບັດມາແຕ່ຄັ້ງພະພຸດທະເຈົ້າຕໍ່ມາຄະນະສາວົກທັງຫຼາຍໄດ້ແຍກກັນອອກເປັນກຸ່ມ ແລະ ມີຄວາມເຫັນບໍ່ຄືກັນ ແຕ່ລະກຸ່ມກໍມີການກ່າວຫາກັນວ່າເປັນກຸ່ມທີ່ກ້າວໜ້າ ແລະ ຫຼ້າສະໄໝກຸ່ມທີ່ຖືແນວທາງອັນເກົ່າທີ່ປະຕິບັດກັນມາແຕ່ໃດໆ ນັ້ນຫຼ້າສະໄໝແລ້ວເປັນພາຫະນະບໍ່ສົມບູນບໍ່ໂຜດມະນຸດໄດ້ຫຼາຍ ເປັນຍານນ້ອຍແລ້ວກໍມີຄຳເວົ້າໃຫ້ພວກທີ່ຖືຄຳພີຕາຍໂຕນັ້ນວ່າ (ຫີນະຍານ) ຫີນະຍານ ເປັນນິກາຍທີ່ຖືຕາມຄຳພີຢ່າງເຄັ່ງຄັດ ແລະ ເຄັ່ງຄັດທັງພາຍນອກ ແລະ ພາຍໃນຈິດໃຈໃຈອັນມີຄຳອະທິບາຍວ່າ ເມື່ອໄດ້ບວດເປັນພະພິຂຸນແລ້ວຊຸນພຽງແຕ່ຄິດໃນໃຈວ່າຮັກຜູ້ຍິງ ຫຼື ຕ້ອງ

ຊຸນຜູ້ຍິງກໍເປັນບາບແລ້ວອັນນີ້ເອີ້ນວ່າ ນິກາຍຫີນະຍານ ຫຼື ເຖຣະວາດ ນິກາຍຫີນະຍານມີການນັບຖືໃນປະເທດສີລັງກາ, ໄທ, ພະມ້າ, ລາວ ແລະ ຂະເໝນ (ກຳປູເຈຍ)

**ຂ. ນິກາຍມະຫາຍານ**

ນິກາຍມະຫາຍານເປັນນິກາຍທີ່ຍຶດຖືຕາມຄຳພີທີ່ໄດ້ດັດແປງໃໝ່ໃຫ້ທັນສະໄໝໃຫ້ຖືກກັບສະພາບແວດລ້ອມ ແລະ ໃຫ້ຖືວ່າເປັນຍານໃຫຍ່ (ສິ່ງມະນຸດຂ້າມຝັ່ງໄດ້ຫຼາຍກ່ວາ) ພິທີກຳໃນການປະຕິບັດກໍແຕກຕ່າງຄືຖືເອົາດ້ານຈິດໃຈເປັນສິ່ງສຳຄັນ ຈະຊຸນຕ້ອງຜູ້ຍິງໂດຍບໍ່ເຈດຕະນານັ້ນຖືວ່າເປັນທຳມະດາ ບໍ່ຕ້ອງອາບັດຖ້າຈິດໃຈບໍ່ຝັກໄຝ່ນຳ ນິກາຍມະຫາຍານມີການນັບຖືຫຼາຍຢູ່ປະເທດຈີນ, ຫວຽດນາມ, ຍີ່ປຸ່ນ, ເກົາຫຼີ ແລະ ທິເບດ.

# 2 ສາສະໜາອິດສະລາມ

## 2.1 ຄວາມເປັນມາ

ສາສະໜາອິດສະລາມ ເປັນສາສະໜາຜູ້ທີ່ນັບຖືຫຼາຍຊາດ ຫຼາຍພາສາທົ່ວໂລກ. ສາສະໜາອິດສະລາມແມ່ນໜຶ່ງໃນຈຳນວນສາສະໜາໃຫ່ຍໃນໂລກທີ່ມີຄົນນັບຖືບໍ່ຕ່ຳກ່ວາ 500 ລ້ານຄົນຢູ່ຕາມສ່ວນຕ່າງໆຂອງໂລກ

ປະເທດທີ່ນັບຖືສາສະໜາອິດສະລາມ ເປັນສາສະໜາປະຈຳຊາດໄດ້ແກ່ກຸ່ມປະເທດ ອາຣັບ ແລະ ອີຣານ, ປາກິດສະຖານ, ບັງກາລາເທດ, ອິນໂດເນເຊຍ, ເອຢິບ, ຕຸລາກີ.

ນອກຈາກນີ້ ປະເທດທີ່ມີປະຊາກອນນັບຖືອິດສະລາມ ເປັນຈຳນວນຫຼາຍໄດ້ແກ່ອິນເດຍ, ຈີນ, ໄທ, ສະເປນ, ສາສະໜາອິດສະລາມເປັນສາສະໜາເອກະເທວະນິຍົມຄືນັບຖືສັດທາໃນພະເຈົ້າສູງສຸດພຽງອົງດຽວເທົ່ານັ້ນ.

ຄຳວ່າ: ອິດສະລາມ ເປັນພາສາອາຣັບ ແປວ່າ ສັນຕິ ການຍອມຮັບ ການນອບນ້ອມ ສຳລັບຜູ້ທີ່ນັບຖືສາສະໜາອິດສະລາມເອີ້ນວ່າ: ມຸດສະລີມ ແປວ່າ ຜູ້ນອບນ້ອມຕົນ ຜູ້ສະແຫວງສັນຕິສາສະໜາອິດສະລາມເກີດໃນດິນແດນທະເລຊາຍໃນທະວີບອາຊີ ໂດຍທົ່ວໄປເອີ້ນວ່າຕາເວັນອອກກາງ ເຊິ່ງເປັນດິນແດນຖິ່ນຖານຂອງຊາວອາຣັບ.

## 2.2 ພະເຈົ້າ ແລະ ພະສາສະດາຂອງອິດສະລາມ

ສາສະໜາອິດສະລາມ ເປັນສາສະໜາເອກະເທວະນິຍົມ ຄື ນັບຖືພະເຈົ້າອົງດຽວວ່າເປັນເທບພະເຈົ້າສູງສຸດ, ເປັນຜູ້ສ້າງໂລກ, ເທບພະເຈົ້າຂອງສາສະໜາອິດສະລາມ ຊື່ວ່າ: ອັນເລາະ ຫຼື ວ່າ ອາຫຼ່າ ຊາວມຸດສະລີມ ທີ່ເຄັ່ງຄັດໃນສາສະໜາຈະບໍ່ນິຍົມກັນເອີ້ນຊື່ຂອງພະເຈົ້າ ແຕ່ມີການເອີ້ນຊື່ກໍຈະມີຖ້ອຍຄຳທີ່ສະແດງເຖິງຄວາມເຄົາລົບມາຕໍ່ທ້າຍປະໂຫຍກໃຫ້ມີສຳນວນສະແດງຄວາມເຄົາລົບສູງສຸດ

ສຳລັບສາສະໜາ ເຊິ່ງໝາຍເຖິງຜູ້ກໍ່ຕັ້ງສາສະໜານັ້ນ ມີຊື່ວ່າ "ອັນອະມີນ ມູຮຳໝັດ" ເກີດເມື່ອວັນທີ 29 ສິງຫາ ຄ.ສ 570.

## 2.3 ຄຳພີ ແລະ ຫຼັກທຳຄຳສອນ ຂອງສາສະໜາອິດສະລາມ

ຄຳພີຂອງສາສະໜາອິດສະລາມເອີ້ນວ່າ ກຸຣະອ່ານ ເຊິ່ງຂຽນໃນພາສາອາຣັບວ່າ "ກາຣ-ອາ" ມີຄວາມໝາຍວ່າ ການອ່ານ, ການທ່ອງຂຶ້ນໃຈ ຖືເປັນຄຳພີສັກສິດ ເຊິ່ງລວມເອົາຄຳສອນຂອງພະມະຫະມັດໄວ້ທັງໝົດເຖິງ 114 ບົດ (114 ຊູເຣາະ).

ຫຼັກຄຳສອນຂອງສາສະໜາອິດສະລາມປະກອບມີຫຼັກຄວາມເຊື່ອ ຫຼື ສັດທາ 6 ປະການ ແລະ ຫຼັກປະຕິບັດ 5 ປະການ.

- **ສັດທາ 6 ປະການປະກອບມີ**

- ສັດທາໃນພະອັນເລາະ
- ສັດທາໃນຄຳພີກຸຣະອ່ານ
- ສັດທາໃນຄຳເຊື່ອທີ່ວ່າ ເທບພະເຈົ້າເປັນຜູ້ນຳຄຳສອນມາໃຫ້ມູຮຳໝັດ
- ສັດທາເຊື່ອ ໃນວັນທີພະເຈົ້າພິພາກສາໂລກໃຫ້ເປັນວັນທີ່ວິນຍານຈະຕ້ອງຮັບຜົນກຳການກະທຳເມື່ອມີຊີວິດ.
- ສັດທາ ແລະ ເຊື່ອວ່າ ທຸກສິ່ງໃນໂລກເປັນໄປຕາມກົດຂອງພະເຈົ້າ

- **ຫຼັກການປະຕິບັດ 5 ປະການ**

- ການປະຕິຍານຕໍ່ພະເຈົ້າຢ່າງໜ້ອຍໜຶ່ງຄັ້ງໃນຊີວິດ
- ການສູດມົນ ເຊິ່ງຊາວມຸດສະລິມ ເອີ້ນວ່າ: ລະມາດ ຢ່າງໜ້ອຍ 3 ຄັ້ງ ຕໍ່ມື້ ຕາມກົດແລ້ວແມ່ນປະຕິບັດ 5 ຄັ້ງຕໍ່ມື້.
- ການບໍລິຈາກທານ ໝາຍເຖິງການຊ່ວຍເຫຼືອຜູ້ທີ່ຍາກຈົນ
- ການຖືສິນອົດເຊິ່ງຊາວມຸດສະລິມ ເອີ້ນວ່າ "ການຖືບວດ" ເຊິ່ງເວລາ 1 ເດືອນເລີ່ມປະຕິບັດໃນມື້ທຳອິດຂອງເດືອນ 9 ແຫ່ງປະຕິທິນອິດສະລາມ ເຊິ່ງເອີ້ນວ່າ ເດືອນລໍມາດອນ
- ການເຮັດພິທີສະແຫວງບຸນ ຄື ຊາວມຸດສະລິມທຸກຄົນຈະຕ້ອງໄດ້ເດີນທາງໄປສະແຫວງບຸນທີ່ເມືອງ ເມກະ ຢ່າງໜ້ອຍໜຶ່ງຄັ້ງໃນຊີວິດ.

## 2.2 ບົດບາດ ແລະ ຄວາມສຳຄັນຂອງສາສະໜາອິດສະລາມ

ເມື່ອມູຮຳໝັດສິ້ນພະຊົນ ສາສະໜາອິດສະລາມເປັນທີ່ຍອມຮັບຢ່າງກ້ວາງຂວາງທີ່ ກວມເອົາດິນແດນອາລາເບຍ ບັນດາປະຊາຊາດອາຣັບທີ່ກະຈາຍຢູ່ທົ່ວໄປ ໃນດິນແດນທະເລຊາຍອາຣັບນັ້ນໄດ້ລວມຕົວກັນເປັນຊາດອິດສະລາມນັບຖືພະເຈົ້າອົງດຽວກັນຄື ພະອັນເລາະ ແລະ ຄຳສອນຂອງມູຮຳໝັດທີ່ວ່າ "ມູສະລິມທຸກຄົນເປັນພີ່ນ້ອງກັນ" ມີສ່ວນສຳຄັນໃນການສ້າງຄວາມສາມັກຄີໃຫ້ແກ່ບັນດາພວກອາຣັບທັງຫຼາຍ.

ໃນຕອນຕົ້ນ ມູຮຳໝັດໄດ້ປະກາດສາສະໜາ ອິດສະລາມໃຊ້ສອນດ້ວຍວາຈາບໍ່ທັນເປັນຄຳພີຕໍ່ມາເມື່ອມູຮຳໝັດສິ້ນພະຊົນ ສາວົກທັງຫຼາຍໂດຍມີອາບູ, ບາກ ເປັນຜູ້ນຳໃນການລວບລວມຄຳສອນເປັນຄຳພີເອີ້ນວ່າ ຄຳພີໂກຫຼານເປັນຄຳພີສັກສິດທີ່ຂຽນດ້ວຍພາສາອະໜະບິດຫ້າມແປເປັນພາສາອື່ນ ເຊິ່ງມີຜົນດີທາງດ້ານວິທະຍາການເພາະເປັນການກະຕຸ້ນໃຫ້ມີການຮຽນຮູ້, ເຮັດໃຫ້ຊາດອາຣັບທັງຫຼາຍ ທີ່ເວົ້າພາສາອາຣະບິດທ້ອງຖິ່ນຕ່າງໆສາມາດອ່ານຄຳພີໂກຫຼ່ນ ແລະ ເຮັດໃຫ້ມີຄວາມເປັນອັນໜຶ່ງອັນດຽວກັນທາງພາສາ.

## 2.3 ນິກາຍໃນສາສະໜາອິດສະລາມ

ສາສະໜາອິດສະລາມແບ່ງອອກເປັນ 2 ນິກາຍໃຫ່ຍໆ ຄື:

**ກ. ນິກາຍສຸນນີ**

ເປັນນິກາຍທີ່ມີສາສະນິກະຊົນຫຼາຍທີ່ສຸດ ຄຳວ່າ: ສຸນນີ  ແປວ່າ ຖືຕາມແບບສະບັບເດີມ ແລະບໍ່ເຫັນດ້ວຍກັບການແກ້ໄຂດັດແປງພວກສຸນນີ ນອກຈາກນັບຖືຄຳພີໂກຫຼານຢ່າງເຄັ່ງຄັດ ແລ້ວຍັງນັບຖືຄຳສອນສຸນນີທີ່ສາວົກລຸ້ນທຳອິດຂອງມູຮຳໝັດລວບລວມໄວ້  ພວກສຸນນີຖືເອົາຄຳພີໂກຫຼານເປັນສື່ກາງລະຫວ່າງພະເຈົ້າກັບມະນຸດ ພວກສຸນນີເຫັນວ່າຫົວໜ້າສາສະໜາ ແລະ ການເມືອງຄວນຈະໄດ້ຮັບເລືອກຈາກຜູ້ນັບຖືສາສະໜາຕາມປະເພນີເດີມ ແລະໄດ້ຮັບການຍິນຍອມຈາກຊຸມຊົນອິດສະລາມ.

**ຂ. ນິກາຍຊີອະ**

ນິກາຍ ຊີອະເປັນນິກາຍສາສະນິກະຊົນ ປະມານຮ້ອຍລະ 10 ຂອງນິກາຍສຸນນີ ໄດ້ແກ່ພວກ

ອີຣານ, ອີລັກ ແລະ ຊາອຸດິດອາຣະເບຍ ພວກຊີອະນັບຖືແຕ່ສະເພາະຄຳພີໂກຫຼານ ບໍ່ຍອມຮັບຄຳສອນສຸນນີ ແລະ ຖືວ່າອີຫຼານເປັນຜູ້ຮັບອຳນາດທັງທາງໂລກ ແລະ ວິນຍານ ເຊິ່ງເປັນສື່ກາງລະຫວ່າງພະເຈົ້າກັບມະນຸດ.

# 3 ສາສະໜາຄຣິດ

## 3.1 ຄວາມເປັນມາ

ສາສະໜາຄຣິດ ເປັນສາສະໜາທີ່ສືບເນື່ອງມາຈາກສາສະໜາຊາວຢິວ ເພາະສາສະໜາຜູ້ຕັ້ງກໍ່ເປັນຊາວຢິວ ແລະ ນັບຖືສາສະໜາຈູດາມາກ່ອນພຽງແຕ່ມີການປັບປຸງ ແລະ ແກ້ໄຂໃຫ້ມີຄວາມລະອຽດເລິກເຊິ່ງຮອບຄອບ ແລະ ເໝາະສົມຂຶ້ນ.

ສາສະໜາຄຣິດ ເປັນສາສະໜາແບບເອກະເທວະນິຍົມ ຄືຍຶດຖືພະເຈົ້າອົງດຽວເປັນຫຼັກ ແລະ ເປັນສາສະໜາທີ່ເນັ້ນໜັກໃນຄວາມຮັກຂອງມະນຸດຊາດ ແລະ ຄວາມສັດທາໝັ້ນຄົງ.

ຜູ້ທີ່ເປັນສາສະດາໃນສາສະໜານີ້ ແມ່ນພະເຍຊູ ທີ່ເກີດເມື່ອ ວັນທີ 21 ທັນວາ ພ.ສ 543 ກົງກັບ ວັນສຸກ ທີ່ກຸງເຢຣູຊາເລມ ປະເທດອິດສະລາມ, ພະເຍຊູຄືຕົວແທນຂອງພະເຈົ້າທີ່ສົ່ງລົງມາຊ່ວຍຊາວຢິວ ແລະ ມວນມະນຸດ.

## 3.2 ຄຳພີຄຣິດ

ຄຳພີໃນສາສະໜາຄຣິດ ຄື ພະຄຳພີໄບເບິນ ເຊິ່ງເປັນຄຳພີທີ່ສຳຄັນ ແລະ ສັກສິດຂອງຊາວຢິວ ແລະ ຄຣິດ ຄຳພີດັ່ງກ່າວຖືເປັນການບັນທຶກຮວບຮວມປະມານ 1400 ປີ ກ່ອນ ຄ.ສ ປະກອບມີ 2 ພາກເກົ່າ ແລະ ພາກໃໝ່.

- **ພາກເກົ່າ ຫຼື ພາກເດີມ**
  ເວົ້າເຖິງການສ້າງໂລກ, ການສ້າງມະນຸດ, ການສ້າງຊົນຊາດ ແລະ ເລື່ອງຂອງຊາວຢິວ.
- **ພາກໃໝ່**
  ເວົ້າເຖິງການພະຍາກອນຂອງພສາສະດາໃນແຕ່ລະຍຸກແຕ່ລະສະໄໝຂອງໂລກ.

## 3.3 ພິທີກຳ

ພິທີກຳທາງສາສະໜາມີຄວາມສຳຄັນຫຼາຍຕໍ່ກັບຊາວຄຣິດໂດຍສົມບູນ ຊາວຄຣິດຕ້ອງສະແດງສັດທາຢ່າງແທ້ຈິງຕໍ່ພະເຈົ້າດ້ວຍການເຂົ້າຮັບສິນສັກສິດ 7 ປະການ ສິນລ້າງບາບ, ສິນກຳລັງ, ສິນມະຫາສະນິດ, ສິນແກ້ບາບ, ສິນເຈີມຄົນໄຂ້, ສິນອະນຸກົມ, ເປັນສິນທີ່ຮັບໄດ້ພຽງຄັ້ງດຽວໃນຊີວິດ.

## 3.4 ປະຫັວດຂອງເຍຊູ

ຜູ້ກໍ່ຕັ້ງສາສະໜາຄຣິດຂຶ້ນໃນໂລກຄື ພະເຍຊູຄຣິດ ພະອົງປະສູດໃນປີ ພ.ສ 543 ທີ່ປະເທດອິດສະຣະແອນ (ISRAEL) ເປັນບຸດຂອງນາງ ມາເລຍ ແລະ ໂຢເຊບ. ເມື່ອ ນາງ ມາເລຍມີທ້ອງແກ່ໃກ້ຈະຄອດ, ໂຢເຊບໄດ້ພານາງໄປເມືອງເບເລໂຮມ ເຊິ່ງເປັນພູມລຳເນົາເດີມ ເພື່ອຈົດທະບຽນສຳມະໂນຄົວຕາມຄຳສັ່ງຂອງລັດຖະບານຕໍ່ມາກໍກັບມາຢູ່ເມືອງ ນາຊາເລ ແລະ ໄດ້ຮັບການສຶກສາຕາມສົມຄວນ. ໃນເຍົາໄວ ພະເຍຊູສົນໃຈສຶກສາພະຄຳພີເກົ່າ ເມື່ອອາຍຸໄດ້ປະມານ 30 ປີ ໄດ້ເລີ່ມສັ່ງສອນຕາມລຳພັງ ແລະ ເອີ້ນຕົນເອງວ່າເປັນບຸດຂອງພະເຈົ້າ, ພວກຊາວຍິວທີ່ນັບຖືສາສະໜາຄຣິດພາກັນເຊື່ອວ່າ ພະເຍຊູຄືເມຊີອາທີ່ພະຍາໂລວາໄດ້ໂປດໃຫ້ລົງມາເພື່ອໄຖ່ບາບໃຫ້ມວນມະນຸດ ແລະ ສອນຫຼັກທຳທີ່ແທ້ຈິງ ເພື່ອໄປສູ່ສະຫວັນ ພະເຍຊູຊ່ວຍຜູ້ທຸກຍາກ ແລະ ຮັກສາຜູ້ເຈັບປ່ວຍໃຫ້ດີຈາກການເຈັບເປັນຢ່າງປະຫຼາດ ເປັນຜົນທຳໃຫ້ເກີດການລວມກັນຂອງກຸ່ມຄົນຂຶ້ນເປັນ ກຸ່ມນ້ອຍໆເຮັດໃຫ້ພວກຍິວທີ່ເຄັ່ງຄັດໃນສາສະໜາເດີມໂກດແຄ້ນວ່າ ພະເຍຊູ ຈະທຳການແຍກສາສະໜາ. ນອກຈາກນີ້ພວກຂ້າຫຼວງໂຣມັນ ທີ່ມາປົກຄອງບໍ່ພໍໃຈ ຢ້ານວ່າພະເຍຊູຈະສຸມກຳລັງຜູ້ຄົນ ແລະ ປະຕິຮູບສັງຄົມ ດ້ວຍເຫດນີ້ພະເຍຊູຈຶ່ງຖືກຈັບກຸມຕົວ ແລະ ແຂນເທິງໄມ້ກາງແຂນ.

ໃນ ຄ.ສ 33 ທີ່ເນີນເຂົາໂກນໂສທາ ນອກເມືອງ ເຢຣູຊາເລັມ ເຫດການຄັ້ງນີ້ຖືວ່າມີຄວາມສຳຄັນຫຼາຍໃນປະຫວັດສາດຂອງສາສະໜາຄຣິດ ເນື່ອງຈາກເມື່ອພະເຍຊູເສຍຊີວິດ ເພາະຖືກຄຶງໄມ້ກາງແຂນນັ້ນ ບັນສິດສານຸສິດພາກັນໝົດຫວັງ ຕໍ່ມາມີຂ່າວລືກັນໄປທົ່ວວ່າພະເຍຊູກັບຟື້ນຄືນຊີບ ແລະ ປະກົດຕົວໃຫ້ອະນຸສິດທີ່ຈົ່ງຮັກພັກພັກດີໄດ້ເຫັນມີຜົນເຮັດໃຫ້ບັນດາສາວົກມີກຳລັງໃຈ ຈຶ່ງໄດ້ຈັດຕັ້ງກຸ່ມ ເພື່ອສອນສາສະໜາຕາມແນວທາງຂອງພະຄຣິດເພີ່ມຂຶ້ນເຮັດໃຫ້ການປາບປາມຂອງພວກໂຣມັນ ບໍ່ມີຜົນໃນເວລາຕໍ່ມາສາສະໜາຄຣິດກາຍເປັນສາສະໜາສຳຄັນ ແລະ ຈະເລີ່ນຮຸ່ງເຮືອງ.

**ຄຳຖາມ :**

1. ສາສະໜາແມ່ນຫຍັງ?

- ຈົ່ງເລົ່າໂດຍຫຍໍ້ກ່ຽວກັບປະຫວັດສາດຂອງຜູ້ທີ່ກໍ່ຕັ້ງສາສະໜາພຸດ ຄຣິດ ແລະ ອິດສະລາມ?

2. ນິກາຍເຖຣະວາດ ແລະ ມະຫາຍານມີຄວາມແຕກຕ່າງກັນແນວໃດ ແລະ ປະຊາກອນລາວເຮົານັບຖືນິກາຍແນວໃດ?

# ປະມວນຄຳສັບ

| | |
|---|---|
| **ຄຸນນະທຳ** | ຄວາມດີ, ສິ່ງທີ່ຊົງໄວ້ເຊິ່ງຄວາມດີ. |
| **ສະຖາປັດຕະຍະກຳ** | ການກໍ່ສ້າງ, ການສ້າງສາ |
| **ສຳປະຊັນຍະ** | ຄວາມມີສະຕິ, ຄວາມຮູ້ສຶກຕົວ |
| **ສະມັດຊາ** | ການປະຊຸມເພື່ອປະໂຫຍດສ່ວນໜຶ່ງໂດຍຈຳເພາະ ທີ່ປະຊຸມ |
| **ສັງຄາທິເສດ** | ວິໄນຂອງພະສົງຢູ່ໃນບົດຂອງສັງຄາທິເສດມີຂໍ້ຫ້າມຢູ່ 3 ຂໍ້ |
| **ສະຫະປະຊາຊາດ** | ອົງການລະຫວ່າງປະເທດທີ່ຖືກສ້າງຕັ້ງຂຶ້ນພາຍຫຼັງສົງຄາມໂລກຄັ້ງທີ 2 ເພື່ອຮ່ວມກັນແກ້ໄຂບັນຫາຫຍຸ້ງຍາກທາງເສດຖະກິດ ສັງຄົມ - ວັດທະນະທຳ ແລະ ມະນຸດສະທຳ |
| **ຕັດສະຣູ້** | ເຫັນແຈ້ງໃນທຳ (ບັນລຸທຳມະ) |
| **ທົດສະວັດ** | ສິບປີ |
| **ແຖນ** | ຊື່ຂອງເທບພະເຈົ້າປະຈຳທ້ອງຟ້າຕາມຄວາມເຊື່ອຖືຂອງຊາວບູຮານ |
| **ນິເວດວິທະຍາ** | ວິຊາສຶກສາກ່ຽວກັບຄວາມສຳພັນລະຫວ່າງສິ່ງທີ່ມີຊີວິດກັບຖິ່ນຢູ່ ແລະ ແວດລ້ອມ |
| **ປະຕິມາກຳ** | ການປັ້ນ, ການຫຼໍ່ |
| **ປູຊະນີຍະສະຖານ** | ສະຖານທີ່ສັກກະລະບູຊາເກົ່າແກ່ເຊັ່ນ ທາດຫຼວງ ວັດພູ ແລະ ອື່ນໆ |
| **ປະຊຸມສຸດຍອດ** | ການປະຊຸມລະຫວ່າງປະເທດຂອງເຈົ້າໜ້າທີ່ ຝ່າຍບໍລິຫານ ລະດັບສູງຂອງລັດຖະບານ ກອງປະຊຸມລະຫວ່າງປະມຸກລັດ |
| **ປະສູດ** | ການເກີດ |
| **ປະລິນິພານ** | ຕາຍ (ໃຊ້ສຳລັບພະພຸດທະເຈົ້າເທົ່ານັ້ນ) |
| **ພາຄີ** | ຜູ້ມີສວ່ນ |
| **ພິທີກຳ** | ການບູຊາ, ການທຳບຸນ, ການທຳບຸນຕາມລັດທິສະໜາ. |
| **ພິທີການ** | ວຽກງານກ່ຽວກັບພິທີ ແລະ ແບບໜັງສືທາງການທູດ |
| **ນະວັດຕະກຳ** | ເຕັກນິກ ຫຼື ວິທີໃໝ່ໆ |
| **ພະພຸດທະອົງ** | ພະພຸດທະເຈົ້າໃນສາສະໜາພຸດ |
| **ພະອໍລະຫັນ** | ຊື່ ຫຼື ນາມມະຍົດຂອງພະ ທີ່ໄດ້ບວດນຳພະພຸດທະເຈົ້າ ແລະ ເປັນຜູ້ທີ່ໄດ້ປະຕິບັດທຳມະ |
| **ລິຂະສິດ** | ສິດທິທາງວັນນະກຳ ແລະ ສິລະປະກຳເຊິ່ງຜູ້ເປັນເຈົ້າຂອງຜົນງານ ຫຼືບົດປະພັນໄດ້ຮັບການຄຸ້ມຄອງຕາມກົດໝາຍ, ເຈົ້າຂອງຜົນງານທີ່ໄດ້ປະດິດສ້າງຂຶ້ນ |
| **ລັດຖະພິທີ** | ພິທີທາງການ |
| **ວິຈິດຕະກຳ** | ແຕ້ມ, ຄວັດລາຍ |
| **ວິຖີຊີວິດ** | ເສັ້ນທາງເດີນແຫ່ງຊີວິດ |
| **ອິລິຍະບົດ** | ການເຄື່ອນໄຫວ (ຢືນ ເດີນ ນັ່ງ ນອນ) |
| **ອະລິຍະທຳ** | ມີຄວາມຈະເລີນຮຸ່ງເຮືອງ ທາງດ້ານວັດທະນະທຳ |
| **ອຸປະນິໄສ** | ຄວາມປະພຶດທີ່ເຄີຍຊິນເປັນພື້ນຖານຍັ້ງເລິກມາໃນສັນດານຕັ້ງແຕ່ເກີດ |

**ມະໂນພາບ** ຄວາມສຳນຶກລວມ
**ທຳພິພິດທະພັນ** ບ່ອນເກັບມ້ຽນວັດຖຸທີ່ມີຄ່າຕ່າງໆ

## ເອກະສານອ້າງອີງ


- ກະຊວງສຶກສາທິການ ແລະ ກິລາ (2009). *ວັດທະນະທຳສັງຄົມລາວ-ອາຊຽນ ລະບົບ 11+3 ປີທີ 2.* ນະຄອນຫຼວງວຽງຈັນ: ພິມ ທີ່ Nhan Dan Printing House HCMC.
- ກະຊວງສຶກສາທິການ ແລະ ກິລາ (2009). *ເຕັກໂນໂລຢີການສຶກສາ ລະບົບ 11+3 ປີທີ 2.* ນະຄອນຫຼວງວຽງຈັນ: ພິມທີ່ Nhan Dan Printing House HCMC.
- ການປະຊຸມສຸດຍອດອາຊຽນ (*Asean Sumit*) https://th.wikipedia.org/wiki.

# ສາລະບານ

ໜ້າທີ


**ບົດທີ 1 ປະຫວັດ ແລະ ຄວາມເປັນມາຂອງອາຊຽນ**

1 ປະຫວັດຄວາມເປັນມາຂອງອາຊຽນ ........ 6

2 ໂຄງຮ່າງການຈັດຕັ້ງຂອງອາຊຽນ ........ 10

3 ຖະແຫຼງການ - ສັນຍາ ........ 10

4 ບັນດາປະເທດສະມາຊິກອາຊຽນ ........ 12

**ບົດທີ 2 ມະໂນພາບກ່ຽວກັບວັດທະນະທຳລາວ ແລະ ອາຊຽນ**

1 ຄວາມສຳນຶກກ່ຽວກັບວັດທະນະທຳລາວ ແລະ ອາຊຽນ ........ 15

2 ປະເພດວັດທະນະທຳທີ່ຄົງຕົວໃນສັງຄົມລາວ ແລະ ອາຊຽນ ........ 15

3 ໂຄງສ້າງທາງດ້ານວັດທະນະທຳສັງຄົມລາວ ແລະ ອາຊຽນ ........ 16

**ບົດທີ 3 ປະເພນີລາວບູຮານ ແລະ ອາຊຽນ**

1 ຄວາມເປັນມາຂອງປະເພນີລາວ ແລະ ອາຊຽນ ........ 18

2 ຮີດຄອງປະເພນີລາວ ........ 19

**ບົດທີ 4 ມາລະຍາດໃນສັງຄົມຂອງລາວ ແລະ ອາຊຽນ**

1 ມາລະຍາດແມ່ນຫຍັງ? ........ 24

2 ມາລະຍາດໃນການທັກທາຍ ........ 24

3 ມາລະຍາດທາງດ້ານຈິດໃຈ ........ 25

4 ມາລະຍາດດ້ານການປະພຶດ ........ 26

5 ມາລະຍາດໃນການຕ້ອນຮັບແຂກ ........ 28

6 ມາລະຍາດໃນການສຳພັດມື ຈາມ ໄອ ຫາວ ........ 29

7 ມາລະຍາດໃນຫ້ອງການ ແລະ ຄອບຄົວ ........ 29

8 ມາລະຍາດທາງດ້ານຄຸນສົມບັດ ........ 30

**ບົດທີ 5 ການແຕ່ງກາຍ (ການນຸ່ງຫົ່ມຂອງສັງຄົມລາວ ແລະ ອາຊຽນ)**

1 ການແຕ່ງກາຍຂອງລາວ ........ 32

2 ການແຕ່ງກາຍຂອງຊາດຕ່າງໃນອາຊຽນ ........ 36

**ບົດທີ 6 ໜ້າທີ່ຂອງພົນລະເມືອງລາວຕໍ່ກັບວັດທະນະທຳ**

1 ໜ້າທີ່ການປົກປັກຮັກສາວັດທະນະທຳຮີດຄອງປະເພນີ ........ 39

2 ໜ້າທີ່ໃນການເສີມຂະຫຍາຍວັດທະນະທຳຮີດຄອງປະເພນີ ........ 40

3 ໜ້າທີ່ໃນການພັດທະນາວັດທະນະທຳ ........ 40

**ບົດທີ 7 ວັດທະນະທຳສັງຄົມລາວ ແລະ ອາຊຽນໃນປັດຈຸບັນ**

1 ລັກສະນະຂອງວັດທະນະທຳລາວ ........ 42

2 ວັດທະນະທຳຂອງຊາດອາຊຽນ ........ 45

3 ວັດທະນະທຳແບບປະສົມປະສານໃນອາຊຽນ ........ 46

**ບົດທີ 8 ການສຶກສາຂອງລາວ ແລະ ອາຊຽນ**

1 ການສຶກສາກັບການພັດທະນາຊັບພະຍາກອນມະນຸດ ........ 49

2 ການສຶກສາກັບການພັດທະນາເສດຖະກິດສັງຄົມ ........ 50

3 ການສຶກສາກັບການຂ່າວສານ ........ 50
4 ການຮ່ວມມືທາງດ້ານການສຶກສາສຳລັບຊາດອາຊຽນ ........ 51
**ບົດທີ 9 ການປ່ຽນແປງດ້ານຕ່າງໆ ຂອງສັງຄົມລາວທາງວັດທະນະທຳ**
1 ການປ່ຽນແປງທາງດ້ານການສຶກສາ ........ 53
2 ການປ່ຽນແປງດ້ານສັງຄົມ ........ 54
3 ການປ່ຽນແປງດ້ານເສດຖະກິດ ........ 55
4 ປະກົດການຫຍໍ້ທໍ້ຈາກການປ່ຽນແປງດ້ານຕ່າງໆ ........ 56
**ບົດທີ 10 ການຮ່ວມມືພາຍໃນອາຊຽນ ແລະ ອາຊຽນກັບສາກົນ**
1 ການຮ່ວມມືຂອງບັນດາປະເທດອາຊຽນ ........ 59
2 ການແລກປ່ຽນວັດທະນະທຳ ........ 63
3 ການຮ່ວມມືກັບບັນດາປະເທດອາຊີຕາເວັນອອກ ........ 64
4 ການຮ່ວມມືກັບປະເທດອື່ນໆ ........ 65
**ບົດທີ 11 ການພັດທະນາ ກັບ ວັດທະນະທຳປະເພນີ**
1 ວິທະຍາສາດ ແລະ ເຕັກໂນໂລຊີ ........ 69
2 ການພັດທະນາສັງຄົມ ........ 69
3 ວັດທະນະທຳ ແລະ ຂ່າວສານ ........ 71
**ບົດທີ 12 ຊີວິດທາງສາສະໜາທີ່ສຳຄັນໃນອາຊຽນ**
1 ສາສະໜາພຸດ ........ 73
2 ສາສະໜາອິດສະລາມ ........ 75
3 ສາສະໜາຄຣິດ ........ 77
**ເອກະສານອ້າງອີງ** ........ 75